# ການແບ່ງປັນ

ການບໍລິຫານຈັດການນ້ຳຂ້າມຜ່ານຊາຍແດນ



ການແບ່ງປັນ ການບໍລິຫານຈັດການນ້ຳຂ້າມຜ່ານຊາຍແດນ

IUCN

ການແບ່ງປັນ-ການບໍລິຫານຈັດການນ້ຳຂ້າມຜ່ານຊາຍແດນ

ແມ່ນນ້ຳຂ້າມຜ່ານຊາຍແດນໄດ້ເພີ່ມຂຶ້ນເລື້ອຍໆ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການແຂ່ງຂັນ. ການພິມປຶ້ມເຫຼັ້ມນີ້ໄດ້ສະແດງໃຫ້ເຫັນພາບລວມຂອງການແບ່ງປັນຊັບພະຍາກອນນ້ຳຂອງໂລກ ແລະ ແນະນຳໃຫ້ຮູ້ເຖິງການຈັດການຊັບພະຍາກອນເຫຼົ່ານີ້ຮ່ວມກັນ. ມັນໄດ້ອະທິບາຍເຖິງຄວາມສຳຄັນຂອງການຈ່າຍ ແລະ ຜົນກຳໄລຈາກການຮ່ວມມື ແລະ ບໍ່ຮ່ວມມື, ກົດເກນ ແລະ ກົນໄກການແບ່ງປັນຜົນກຳໄລທີ່ໄດ້ຮັບຈາກນ້ຳ. ການນຳໃຊ້ກໍລະນີສຶກສາຈາກທົ່ວໂລກເພື່ອສ້າງໂຄງຮ່າງທາງກົດໝາຍ, ສະຖາບັນ, ການຈັດການຂະບວນການ ແລະ ການເງິນ ເຊິ່ງຕ້ອງການ ການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນທີ່ເປັນທຳ ແລະ ຍືນຍົງ.

ກ່ຽວກັບອົງການ IUCN

IUCN ອົງການສາກົນເພື່ອການອະນຸລັກຊັບພະຍາກອນທຳມະຊາດ, ຊ່ວຍໃນການຊອກຫາວິທີການແກ້ໄຂທີ່ແທ້ຈິງ ຕໍ່ກັບສິ່ງທ້າທາຍຂອງການພັດທະນາ ແລະ ສິ່ງແວດລ້ອມທີ່ກຳລັງເປັນສິ່ງກົດດັນທີ່ສຸດຕໍ່ພວກເຮົາໃນລະດັບໂລກ. IUCN ເຮັດວຽກດ້ານຊີວະນາໆພັນ, ການປ່ຽນແປງຂອງດິນຟ້າອາກາດ, ພະລັງງານ, ການດຳລົງຊີວິດຂອງຄົນ ແລະ ເສດຖະກິດໃນລະດັບໂລກ ໂດຍໃຫ້ການຊ່ວຍເຫຼືອທາງດ້ານການຄົ້ນຄ້ວາວິທະຍາສາດ, ຄຸ້ມຄອງໂຄງການພາກສະໜາມຕ່າງໆໃນທົ່ວໂລກ. ແລະພ້ອມທັງນຳເອົາຫຼາຍຝ່າຍເຊັ່ນ: ລັດຖະບານ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ, ອົງການສະຫະປະຊາຊາດ ແລະ ບໍລິສັດອື່ນໆ ເພື່ອສ້າງນະໂຍບາຍ, ກົດໝາຍ ແລະ ຮູບແບບການຈັດຕັ້ງປະຕິບັດທີ່ດີທີ່ສຸດ.

www.iucn.org

Water & Nature Initiative ຂອງອົງການ IUCN

ກ່ຽວກັບແຜນການລິເລີ່ມ Water & Nature Initiative ຂອງອົງການ IUCN ແມ່ນແຜນງານການຈັດຕັ້ງປະຕິບັດປະຈຳ 5 ປີ ເພື່ອສາທິດວ່າການຄຸ້ມຄອງລະບົບນິເວດ ແລະ ການເຂົ້າຮ່ວມຈາກຜູ້ທີ່ມີສ່ວນຮ່ວມຈະຊ່ວຍແກ້ໄຂປະກົດການຕ່າງໆກ່ຽວກັບນ້ຳໃນປັດຈຸບັນ-ຟື້ນຊີວິດແມ່ນ້ຳຄືນມາ ແລະ ບຳລຸງຮັກສາຮາກຖານຊັບພະຍາກອນໃຫ້ແກ່ຫຼາຍຊົ່ວຄົນ

www.waterandnature.org

IUCN

# ການແບ່ງປັນ

ການບໍລິຫານຈັດການນ້ຳຂ້າມຜ່ານຊາຍແດນ

Water & Nature Initiative

ສະບັບພາສາອັງກິດ

ໂຄຼເດຍ ຊາດອຟ, ໂທມາສ ແກຼເບີ,
ມາກ ສະມິດທ ແລະ ແກ ແບກແກມ

IUCN

ການສະເໜີທີ່ທາງພູມີປະເທດໃນປຶ້ມຫົວນີ້ ແລະ ການນຳສະເໜີເນື້ອໃນຕ່າງໆແມ່ນບໍ່ໄດ້ໝາຍເຖິງສະເພາະແນວຄິດຂອງຜູ້ໃດຜູ້ໜຶ່ງ ແຕ່ IUCN ມີຄວາມສົນໃຈກ່ຽວກັບສະພາບການທາງ ກົດໝາຍ ຂອງແຕ່ລະປະເທດ, ຂອບເຂດອຳນາດ ອະທິປະໄຕ ຫຼື ພື້ນທີ່ໜຶ່ງ, ຫຼືການຈັດຕັ້ງບໍລິຫານໃດໜຶ່ງ, ຫຼື ຂອບເຂດຊາຍແດນຂອງປະເທດດັ່ງກ່າວນັ້ນ.

ບັນດາແນວຄວາມຄິດທັດສະນະຕ່າງໆທີ່ສະແດງອອກໃນປຶ້ມຫົວນີ້ກໍ່ບໍ່ໄດ້ໝາຍຄວາມວ່າເປັນທັດສະນະຂອງ ອົງການ IUCN. IUCN ບໍ່ໄດ້ຮັບຜິດຊອບສຳລັບທຸກຂໍ້ຜິດພາດ ທີ່ອາດເກີດຂຶ້ນໃນການແປ ຫຼືສິ່ງທີ່ຄາດເຄື່ອນຈາກເອກະສານສະບັບເດີມ. ໃນກໍລະນີຂອງບາງຂໍ້ຄວາມທີ່ບໍ່ສອດຄ່ອງ ກະລຸນານຳໃຊ້ເອກະສານເດີມ.


| | |
|---|---|
| ຈັດພິມໂດຍ: | IUCN ປະຈຳລາວ |
| ສະຫງວນລິຂະສິດ: | 2012 ອົງການສາກົນເພື່ອການອະນຸລັກທຳມະຊາດ ແລະ ຊັບພະຍາກອນ ທຳມະຊາດ ອະນຸຍາດໃຫ້ຜະລິດປຶ້ມຫົວນີ້ຄືນໄດ້ສຳລັບ ຈຸດປະສົງທາງດ້ານການສຶກສາ ຫຼື ຈຸດປະສົງທີ່ບໍ່ແມ່ນທາງການຄ້າ ໂດຍທີ່ບໍ່ມີການອະນຸຍາດ ເປັນລາຍລັກອັກສອນຈາກຜູ້ຖືລິຂະສິດ ຖ້າຫາກວ່າມີການສະແດງຄວາມຂອບໃຈ ນຳແຫລ່ງຂໍ້ມູນທີ່ມາ.<br>ການຜະລິດປຶ້ມຫົວນີ້ຄືນສຳລັບ ຈຸດປະສົງທາງດ້ານການຂາຍ ຫລື ການຄ້າອື່ນໆແມ່ນບໍ່ໄດ້ຮັບອະນຸຍາດ ຖ້າບໍ່ມີການອະນຸຍາດ ເປັນລາຍລັກອັກສອນຈາກຜູ້ຖືລິຂະສິດ |
| ອ້າງອີງເຖິງ: | Sadoff, C., Greiber, T., Smith, M. And Bergkamp, G.(2012). ການແບ່ງປັນການບໍລິຫານຈັດການນ້ຳຜ່ານຊາຍແດນ. Gland, Switzerland |
| ແປໂດຍ: | ທ່ານ ບຸນສະໜອງ ຟອງນາລີ |
| ລະຫັດ ISBN | 978-2-8317-1448-6 |
| ອອກ-ແບບ-ໂດຍ: | IUCN ປະຈຳລາວ |
| ພິມໂດຍ: | |
| ຕິດຕໍ່ໄດ້ທີ່: | ອົງການ IUCN Lao<br>082/01 ຖະໜົນຟ້າງຸ່ມ, ບ້ານວັດຈັນ<br>P.O.Box 4340, ວຽງຈັນ, ສປປລາວ<br>ໂທ: +856(21) 216401, 222167, 219009<br>ໂທລະສານ: +856(21) 216127<br>E-mail: info@iucnlao.org<br>http://www.iucn.org<br>IUCN Asia Regional Water & Wetlands Programme<br>63, Sukhumvit Soi 39, Wattana<br>Bangkok 10110, Thailand<br>E-mail: iucnsiawater@iucnt.org<br>http://www.waterandnature.org |

ເນື້ອໃນສຳຄັນ.....6
ບົດນຳ.....11
ບັນນາທິການ ແລະ ຜູ້ຂຽນ.....12
ການສະແດງຄວາມຂອບໃຈ.....13
ໝວດທີ 1 ສະພາບລວມຂອງຊັບພະຍາກອນນ້ຳທີ່ໃຊ້ຮ່ວມກັນຢູ່ໃນໂລກ.....15
1.1 ຊັບພະຍາກອນນ້ຳຂ້າມຜ່ານຊາຍແດນ.....15
1.2 ການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ.....16
1.3 ການນຳໃຊ້ນ້ຳຂ້າມຜ່ານຊາຍແດນຮ່ວມກັນ.....18
1.4 ການແບ່ງປັນ.....18
ໝວດທີ2 ເປັນຫຍັງຈຶ່ງແບ່ງປັນ? ຜົນປະໂຫຍດ (ແລະ ຄ່າໃຊ້ຈ່າຍ) ຈາກການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ.....23
2.1 ການແບ່ງປັນນ້ຳ ຕໍ່ກັບ ການແບ່ງປັນຜົນປະໂຫຍດຈາກນ້ຳ......23
2.2 ຜົນປະໂຫຍດຂອງການຮ່ວມມື.....25
2.3 ເມື່ອໃດຈຶ່ງສົມຄວນແບ່ງປັນ.....29
2.4 ການແບ່ງປັນຜົນປະໂຫຍດທີ່ຍຸດຕິທຳ.....33
2.5 ກົນໄກສຳລັບການແບ່ງປັນຜົນປະໂຫຍດ.....34
2.6 ການນຳໃຊ້ ການແບ່ງປັນຜົນປະໂຫຍດ ໃນທຸກລະດັບ......39
2.7 ການແບ່ງປັນຜົນປະໂຫຍດໃນທາງປະຕິບັດ.....40
ໝວດທີ3 ຜູ້ມີສ່ວນຮ່ວມໃນການ ແບ່ງປັນຜົນປະໂຫຍດ ແລະ ຂະບວນການຄຸ້ມຄອງ.....43
3.1 ໃຜ ຄື ຜູ້ມີສ່ວນຮ່ວມ?.....43
3.2 ເວລາ ແລະ ວິທີການໃນການດຶງດູດຜູ້ມີສ່ວນຮ່ວມ......50
3.3 ເສັ້ນທາງສຳລັບການມີສ່ວນຮ່ວມ.....56
ໝວດທີ 4 ກອບກົດໝາຍກ່ຽວກັບການຮ່ວມມືລະຫວ່າງຊາຍແດນ.....59
4.1 ກົດໝາຍພື້ນຖານ ສຳຫຼັບການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ.....59
4.2 ການຈັດຕັ້ງປະຕິບັດກົດໝາຍລະຫວ່າງປະເທດ:ຄວນເຮັດແບບໃດໃຫ້ມີການຈັດຕັ້ງປະຕິບັດ ກົດໝາຍລະຫວ່າງປະເທດໃນທຸກລະດັບກໍ່ຄື ລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບສາກົນ.....67
4.3 ການຈັດຕັ້ງສົນທິສັນຍາລະຫວ່າງປະເທດສະບັບໃໝ່ທີ່ໃຊ້ຮ່ວມກັບການຄຸ້ມຄອງນ້ຳ.....69
4.4 ກົດໝາຍ: ເປັນເຄື່ອງມື ການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ.....75

**ໝວດທີ 5 ສະຖາບັນການຈັດຕັ້ງ ສຳລັບອ່າງແມ່ນ້ຳຂ້າມຜ່ານຊາຍແດນ..........................................77**
5.1 ການພັດທະນາອ່າງແມ່ນ້ຳຂ້າມຜ່ານຊາຍແດນ ແລະ ການຄຸ້ມຄອງສະຖາບັນການຈັດຕັ້ງ: ພາລະໜ້າທີ່, ການອອກແບບ ແລະ ຄວາມມີປະສິດທິພາບ. ....................................................................77
5.2 ການພັດທະນາອົງການຈັດຕັ້ງຄຸ້ມຄອງອ່າງແມ່ນ້ຳຂ້າມຜ່ານຊາຍແດນ ..............................................87
5.3 ການລະດົມທາງດ້ານການເງິນ ....................................................................................92
**ໝວດທີ 6 ການຈັດຕັ້ງປະຕິບັດ ການຮ່ວມມື ໃນການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ..........................99**
6.1. ບົດບາດຂອງການຈັດຕັ້ງປະຕິບັດການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ...........................................99
6.2 ການບໍລິຫານ ການຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ ..............................................................100
6.3 ອົງປະກອບຫລັກຂອງການຈັດຕັ້ງປະຕິບັດທີ່ມີປະສິດທິພາບ ......................................................101
6.4 ການຈັດຕັ້ງປະຕິບັດ ແລະ ການແບ່ງປັນຜົນປະໂຫຍດ..............................................................108
**ກໍລະນີ ແລະ ບົດອະທິບາຍ ..........................................................................................110**
**ຕາຕະລາງ ແລະ ແຜນວາດ.............................................................................................111**
**ເອກະສານອ້າງອີງ:**.......................................................................................................112
**ຜູ້ປະກອບຮູບພາບ** .......................................................................................................115

# ເນື້ອໃນສຳຄັນ

## 1. ສະພາບລວມຂອງ ຊັບພະຍາກອນນ້ຳ ທີ່ໃຊ້ຮ່ວມກັນ ຢູ່ໃນໂລກ.

*ແມ່ນ້ຳສາກົນໄດ້ສະໜອງ ປະມານ 60 ເປີເຊັນຂອງປະລິມານນ້ຳໄຫຼ ທີ່ເປັນນ້ຳຈືດຢູ່ໃນໂລກ.*
ຢູ່ໃນໂລກມີ ແມ່ນ້ຳສາກົນຢູ່ 260ສາຍ ຊຶ່ງກວມເອົາເກືອບເຄິ່ງໜຶ່ງຂອງເນື້ອທີ່ດິນໃນໂລກ ແລະ ປະມານ 40 ເປີເຊັນຂອງປະຊາກອນໂລກ ແມ່ນອາໃສແມ່ນ້ຳເຫຼົ່ານີ້.

*ການເພີ້ມຂື້ນຄວາມຕ້ອງການ ໃນການນຳໃຊ້ນ້ຳຈະໄດ້ບັງຄັບໃຫ້ ບັນດາປະເທດຕ່າງໆສ້າງແຜນການນຳໃຊ້ຊັບພະຍາກອນ ຮ່ວມກັນ* ການເພີ້ມຂຶ້ນຂອງປະຊາກອນ ແລະ ການເຕີບໂຕທາງດ້ານເສດຖະກິດ ເຮັດໃຫ້ມີການນຳໃຊ້ນ້ຳຫຼາຍຂຶ້ນເລື້ອຍໆ. ການເພີ້ມຂື້ນດັ່ງກ່າວ ໄດ້ຮຽກຮ້ອງໃຫ້ຫລາຍປະເທດ ໄດ້ຄຳນຶງເຖິງການແບ່ງປັນນ້ຳໃຫ້ເໝາະສົມກັບຄວາມຕ້ອງການ ສຳລັບ ນ້ຳດື່ມນ້ຳໃຊ້, ການຜະລິດກະສິກຳ, ພະລັງງານ ແລະ ອຸດສາຫະກຳ ເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ຂໍ້ຂັດແຍ່ງ ແລະ ການນຳໃຊ້ນ້ຳເກີນຂະໜາດ ແລະ ຜົນກະທົບທີ່ຈະເກີດຂຶ້ນ ຕໍ່ລະບົບນິເວດວິທະຍາ.

*ການຄຸ້ມຄອງນ້ຳຕາມຂອບເຂດອ່າງແມ່ນ້ຳ ເປັນກອບແນວທາງທີ່ດີທີ່ສຸດໃນການຄຸ້ມຄອງນ້ຳ ກວ່າການຄຸ້ມຄອງນ້ຳ ຕາມຂອບເຂດຊາຍແດນ.* ຍຸດທະສາດການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານແມ່ນຂະບວນການທີ່ສົ່ງເສີມການປະສານງານໃນການ ພັດທະນາ ແລະ ການຄຸ້ມຄອງນ້ຳ, ດິນ ແລະ ຊັບພະຍາກອນອື່ນໆທີ່ກ່ຽວຂ້ອງ ໃນອ່າງແມ່ນ້ຳ ຊຶ່ງໄດ້ຮັບຮອງຢ່າງກ້ວາງ ຂວາງ ເຊັ່ນ: ໃນດ້ານການນຳໃຊ້ ການນຳໃຊ້ແບບຍືນຍົງ, ປະສິດທິຜົນ ແລະ ແບ່ງປັນຜົນປະໂຫຍດ.

*ທຸກໆອ່າງແມ່ນ້ຳ ມີຂອບເຂດຊາຍແດນ, ແລະທຸກໆອ່າງ ສາມາດໄດ້ຮັບຜົນປະໂຫຍດຈາກການຮ່ວມມື.*
ຂອບເຂດຊາຍແດນແມ່ນມີ ລະຫວ່າງປະເທດ, ຕົວເມືອງ, ແລະ ລະຫວ່າງຜູ້ຊົມໃຊ້ພາຍໃນບ້ານ. ຈາກລະດັບສາກົນຫາທ້ອງຖິ່ນ, ໄດ້ມີຫລາຍໆຄວາມຕ້ອງການທີ່ຂັດແຍ່ງກັນ ສຳລັບການນຳໃຊ້ຊັບພະຍາກອນນ້ຳ. ດັ່ງນັ້ນຈິ່ງເຫັນຄວາມຈຳເປັນ ໃນການປະເມີນ ຄວາມຕ້ອງການດັ່ງກ່າວ ແລະ ການແກ້ໄຂຢ່າງແທດເໝາະ.

## 2.ເປັນຫຍັງຈຶ່ງແບ່ງປັນ? ບັນດາຜົນປະໂຫຍດ (ແລະຄ່າໃຊ້ຈ່າຍ) ຈາກການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ.

*ຫຼາຍປະເທດຈະໃຫ້ຄວາມຮ່ວມມື ໃນເມື່ອວ່າເຂົາເຈົ້າເຊື່ອ ໃນສິ່ງດັ່ງກ່າວ ເປັນທີ່ໜ້າສົນໃຈ*
ການທີ່ຈະຮ່ວມມື ຫຼື ບໍ່ຮ່ວມມືນັ້ນ ແມ່ນຈະຂຶ້ນກັບປັດໃຈທີ່ວ່າ ທາງເລືອກໃດຈະໃຫ້ຜົນປະໂຫຍດສູງສຸດ. ຜົນປະໂຫຍດດັ່ງກ່າວ ສາມາດສະແດງອອກໃນດ້ານສິ່ງແວດລ້ອມ (ຜົນປະໂຫຍດຕໍ່ນ້ຳ), ເສດຖະກິດ (ຜົນປະໂຫຍດຈາກນ້ຳ), ທາງການເມືອງ (ຜົນປະໂຫຍດຍ້ອນນ້ຳ) ຫຼື ຜົນປະໂຫຍດອື່ນໆ (ຜົນປະໂຫຍດນອກເໜືອຈາກນ້ຳ).

*ຄວາມຮ່ວມມືທີ່ມີປະໂຫຍດຮ່ວມກັນ*

ຄວາມຮ່ວມມືໃນແມ່ນ້ຳສາກົນ ສາມາດດຳເນີນໄດ້ຈາກການແລກປ່ຽນຂໍ້ມູນຂ່າວສານ, ການຄຸ້ມຄອງ ແລະ ພັດທະນາອ່າງແມ່ນ້ຳຮ່ວມກັນ. ມັນໄດ້ນຳຫລາຍຜົນປະໂຫຍດມາໃຫ້ບໍ່ພຽງແຕ່ປະເທດດຽວ ເພາະການຮ່ວມມື ໄດ້ເອື້ອອຳນວຍໃຫ້ອ່າງແມ່ນ້ຳ ໄດ້ເປັນຂໍ້ຕົກລົງສາກົນຢ່າງເຕັມຮູບແບບ ເຊິ່ງໄດ້ມີເປົ້າໝາຍຫລັກຂອງການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ.

*ການຮ່ວມມືສາມາດເພີ່ມປະສິດທິພາບ ແລະ ຄວາມສະເໝີພາບ.*

ການຮ່ວມມື ແລະ ໂດຍສະເພາະການແບ່ງປັນຄ່າໃຊ້ຈ່າຍ ແລະ ຜົນປະໂຫຍດສາມາດສົ່ງເສີມການຄຸ້ມຄອງອ່າງແມ່ນ້ຳໃຫ້ມີປະສິດທິພາບ ແລະ ມີຄວາມເທົ່າທຽມກັນຫຼາຍຂຶ້ນໂດຍການແບ່ງເຂດຂອງການພັດທະນາແມ່ນ້ຳ (ບັນດາກິດຈະກຳຈະຈັດຂຶ້ນຢູ່ໃສ), ການກະຈາຍທາງເສດຖະກິດ ຂອງຜົນປະໂຫຍດ/ຄ່າໃຊ້ຈ່າຍ (ໃຜຈະໄດ້ຮັບຜົນປະໂຫຍດ/ໃຜຈະເປັນຄົນຈ່າຍຄ່າກິດຈະກຳຕ່າງໆ).

*ຄວາມຮ່ວມມື ເປັນສິ່ງທີ່ທ້າທາຍໃນທຸກລະດັບ, ຕັ້ງແຕ່ລະດັບບ້ານ ຈົນຮອດລະດັບຊາດ.*

ປະສິດທິພາບ, ກົນໄກການປັບຕົວ ສຳລັບການກະຈາຍຜົນປະໂຫຍດຢ່າງທ່ຽງທຳ ລະຫວ່າງ ຜູ້ມີສ່ວນຮ່ວມໃນທຸກລະດັບແມ່ນມີຄວາມສຳຄັນ ແລະ ຈຳເປັນເພື່ອຮັກສາການຮ່ວມມື. ການແບ່ງປັນຜົນປະໂຫຍດຢູ່ໃນລະດັບທ້ອງຖິ່ນ, ໂດຍສະເພາະກັບຜູ້ທີ່ໄດ້ຮັບຜົນກະທົບໂດຍກົງ ຈາກບັນດາຂໍ້ຕົກລົງໃນການຄຸ້ມຄອງນ້ຳສາມາດຖືເປັນສິ່ງທີ່ທ້າທາຍ ໃນການແບ່ງປັນຜົນປະໂຫຍດໃນລະດັບສາກົນ.

## 3. ຜູ້ມີສ່ວນຮ່ວມ ໃນຂະບວນການ ການຄຸ້ມຄອງ ແລະ ແບ່ງປັນຜົນປະໂຫຍດ

*ຄວາມຫລາກຫລາຍຂອງຜູ້ທີ່ມີສ່ວນຮ່ວມ ສາມາດປະກອບສ່ວນເຂົ້າໃນການ ຄຸ້ມຄອງແມ່ນ້ຳຂ້າມຜ່ານຊາຍແດນ*

ຜູ້ມີສ່ວນຮ່ວມທີ່ພົວພັນກັບ ການຄຸ້ມຄອງແມ່ນ້ຳຂ້າມຜ່ານຊາຍແດນສາມາດເປັນ ບຸກຄົນ, ກຸ່ມຄົນ ຫຼື ອົງການຈັດຕັ້ງ ທີ່ກ່ຽວຂ້ອງທັງທາງກົງ ແລະ ທາງອ້ອມ. ການກຳນົດ ແລະ ການເຂົ້າຮ່ວມຂອງ ຜູ້ມີສ່ວນຮ່ວມຈະເປັນການສ້າງຈຸດປະສົງຂອງການຄຸ້ມຄອງ ຮັບປະກັນວ່າມີການແບ່ງປັນຜົນປະໂຫຍດ ແລະ ຄ່າໃຊ້ຈ່າຍຢ່າງສະເໝີພາບ ແລະ ຫຼີກລ້ຽງຂໍ້ຂັດແຍ່ງທີ່ກໍ່ໃຫ້ເກີດຜົນເສຍຫາຍ.

*ການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ ໃນເວລາທີ່ເໝາະສົມ ເປັນສິ່ງສຳຄັນ*

ການເຂົ້າຮ່ວມທີ່ມີຫລາຍຮູບແບບ ແມ່ນຈຳເປັນສຳລັບ ຜູ້ທີ່ມີສ່ວນຮ່ວມຈາກຫລາຍພາກສ່ວນ, ການກຳນົດຄວາມຫລາກຫລາຍຂອງຜູ້ທີ່ມີສ່ວນຮ່ວມ ຕາມຮູບແບບຄົບຊຸດ ແລະ ການບັນທຶກຄວາມສົນໃຈຄວາມສາມາດ ແລະ ສິ່ງທີ່ເຂົາເຈົ້າສາມາດເຮັດໄດ້ໃນຫລາຍລະດັບ ຂະບວນການຄຸ້ມຄອງສາມາດຊ່ວຍ ໃນການກຳນົດເວລາ ແລະ ວິທີການທີ່ເຂົາເຈົ້າສາມາດ ເຂົ້າຮ່ວມໄດ້ເປັນຢ່າງດີ.

*ການເຂົ້າຮ່ວມຂອງ ຜູ້ມີສ່ວນຮ່ວມ ຕ້ອງໄດ້ເບິ່ງ ເພື່ອການເຂົ້າຮ່ວມໃນໄລຍະຍາວ*

ການຄຸ້ມຄອງແມ່ນ້ຳຂ້າມຜ່ານຊາຍແດນ ເປັນຂະບວນການທີ່ມີເປົ້າໝາຍໃນໄລຍະຍາວ, ການເຂົ້າຮ່ວມຂອງຜູ້ທີ່ມີ ສ່ວນຮ່ວມຕ້ອງໄດ້ເບິ່ງທັງໃນເວລາ ທີ່ມີຄວາມຕ້ອງການທາງດ້ານວິທີທາງທີ່ແທດເໝາະກັບການປ່ຽນແປງ ຂອງຜູ້ມີສ່ວນຮ່ວມ ແລະ ຄວາມຕ້ອງການ ແລະ ສິນໃຈ ອີງຕາມການເວລາ.

*ການຈັດການດ້ານການເງິນຕ້ອງການໃຫ້ລວມເອົາທັງມູນຄ່າໃຊ້ຈ່າຍສຳລັບການເຂົ້າຮ່ວມຂອງຜູ້ທີ່ມີສ່ວນຮ່ວມ*

ການເຂົ້າຮ່ວມຂອງຜູ້ທີ່ມີສ່ວນຮ່ວມ ຄວນລວມເຂົ້າໃນແຜນການເງິນໃນໄລຍະຂັ້ນຕອນເລີ້ມຕົ້ນ ຂອງການສ້າງແຜນໂຄງການຈັດຕັ້ງປະຕິບັດ ແລະ ກວດກາ. ການວາງແຜນການເງິນຄວນສ້າງເປັນຫລາຍບາດກ້າວໂຄງການ ແລະ ສາມາດ ປັບໄດ້ ຕາມຄວາມເໝາະສົມ ເພື່ອແທດເໝາະກັບຄວາມຕ້ອງການ ແລະ ໂອກາດທີ່ປ່ຽນແປງ.

## 4. ກອບນະໂຍບາຍ ທາງດ້ານກົດໝາຍ ສຳລັບ ການປະສານງານ ແມ່ນ້ຳຂ້າມຜ່ານຊາຍແດນ.

*ຫຼັກການກົດໝາຍສາກົນ ໃນການຄຸ້ມຄອງແມ່ນ້ຳຂ້າມຜ່ານຊາຍແດນ.*

ກອບນະໂຍບາຍດ້ານການຈັດຕັ້ງ ແລະ ລະບຽບການຂ້າມຜ່ານຊາຍແດນເປັນເສົາຫລັກສຳລັບ ລະບົບການຄຸ້ມຄອງທີ່ມີການປະສານງານ. ໃນຂະນະທີ່ສິ່ງດັ່ງກ່າວບໍ່ໄດ້ປ້ອງກັນທຸກໆການຜິດຖຽງ ແຕ່ສິ່ງດັ່ງກ່າວເປັນສິ່ງຈຳເປັນໃນການ ໃຫ້ຄວາມກະຈ່າງແຈ້ງ ຄືກັນກັບ 'ຫັກເກນພື້ນຖານ' ສະນັ້ນ ໄດ້ເສີມສ້າງຄວາມໝັ້ນຄົງທາງດ້ານກົດໝາຍ ແລະ ຫລຸດຜ່ອນຂໍ້ຜິດພາດທີ່ມັກຈະເກີດຂື້ນ ລະຫວ່າງລັດຕ່າງໆທີ່ໄດ້ນຳໃຊ້ນ້ຳຮ່ວມກັນ

*ກອບການປົກຄອງສາກົນ ຕ້ອງການໃຫ້ມີຄວາມສອດຄ່ອງໃນລະດັບຊາດ ແລະ ທ້ອງຖິ່ນ.*

ກົດໝາຍສາກົນ ກ່ຽວກັບນ້ຳຈືດ ຕ້ອງໄດ້ຖືກນຳໄປຜັນຂະຫຍາຍເຂົ້າໃນສິດທິ ແລະ ພາກບັງຄັບຢ່າງລະອຽດ ສຳລັບນິຕິບຸກຄົນ ແລະ ສະຖາບັນການຈັດຕັ້ງພາຍໃນລັດໜຶ່ງໆ. ສິ່ງດັ່ງກ່າວສາມາດບັນລຸໄດ້ ຜ່ານຂະບວນການກົດໝາຍ ແລະ ການຄຸ້ມຄອງ ໃນລະດັບຊາດ ແລະ ທ້ອງຖິ່ນ.

*ລັດມີສິດໃນການນຳໃຊ້ ຊັບພະຍາກອນນ້ຳ ຂອງພວກເຂົາເຈົ້າ, ແຕ່ຕ້ອງບໍ່ກະທົບ ຫຼື ມີອັນຕະລາຍຕໍ່ຜູ້ອື່ນ*

**"ການຊົມໃຊ້ທີ່ມີຄວາມເທົ່າທຽມກັນ"** ເປັນໜຶ່ງໃນກົດປະເພນີທີ່ສຳຄັນທີ່ສຸດ ສຳລັບການໃຊ້ແຫຼ່ງ ຊັບພະຍາກອນນ້ຳຮ່ວມກັນ. ສິ່ງດັ່ງກ່າວ ໄດ້ອີງໃສ່ຂໍ້ຕົກລົງຂອງ ສິດທິທີ່ມີຄວາມເທົ່າທຽມກັນ ຊຶ່ງຮຽກຮ້ອງໃຫ້ເອົາໃຈໃສ່ໃນການສົມດູນ ໃສ່ການຄຸ້ມຄອງການນຳໃຊ້ທີ່ມີເຫດຜົນທັງໝົດ ກວ່າການແບ່ງປັນນ້ຳ ຢ່າງເທົ່າທຽມກັນ.

*ກົນໄກການແກ້ໄຂຂໍ້ຖົກຖຽງເປັນອົງປະກອບສຳຄັນຂອງ ລະບອບການປົກຄອງທາງກົດໝາຍ*

ເພື່ອເຮັດໃຫ້ກົດໝາຍນ້ຳສາກົນ ມີຜົນບັງຄັບໃນທາງປະຕິບັດ, ລັດຈະຕ້ອງເຫັນດ້ວຍ ດ້ານວິທີການໃນການລຽງລະດັບຄວາມສຳຄັນ ຂອງຂໍ້ຖົກຖຽງຢ່າງທ່ຽງທຳ ແລະ ນຳໃຊ້ເຄື່ອງມືການຈັດຕັ້ງປະຕິບັດລະບຽບການ ເພື່ອຕອບສະໜອງຕໍ່ຂໍ້ຂັດຂ້ອງທີ່ໄດ້ນຳສະເໜີ.

## 5. ສະຖາບັນການຈັດຕັ້ງ ສຳລັບ ການຄຸ້ມຄອງ ອ່າງແມ່ນ້ຳຂ້າມຜ່ານຊາຍແດນ

*ສະຖາບັນການຈັດຕັ້ງ ທີ່ປະກອບເປັນ ຫລັກການໃນການຄຸ້ມຄອງ ທັງເປັນທາງການ ແລະ ບໍ່ເປັນທາງການ*
ສະຖາບັນຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ສາມາດເພີ້ມໂອກາດ ແລະ ແກ້ໃຂບັນຫາທີ່ເກີດຂື້ນ ຈາກນ້ຳໄຫລຜ່ານຂອບເຂດຫລາຍຊາຍແດນ. ສິ່ງດັ່ງກ່າວສາມາດສະແດງອອກໃນຮູບແບບໆບໍ່ເປັນທາງການ ຄືກັນກັບບົດບັນທຶກທີ່ບໍ່ໄດ້ລົງນາມ ຫຼື ຂໍ້ຕົກລົງໃນວຽກງານໃດໜຶ່ງ; ຫລືເປັນທາງການ, ທີ່ປະກອບເຂົ້າໃນສົນທິສັນຍາທີ່ ຜູກພັນຕາມກົດໝາຍ ຫລືໃນການຄຸ້ມຄອງອ່າງແມ່ນ້ຳສາກົນ.

*ບໍ່ມີ ຮູບແບບສະຖາບັນການຈັດຕັ້ງ ໃນການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ*
ສະຖາບັນການຈັດຕັ້ງຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ມີຫຼາຍໜ້າທີ່ຕັ້ງແຕ່ການແລກປ່ຽນຂໍ້ມູນຂ່າວສານ ເພື່ອດຳເນີນພາລະບົດບາດທີ່ສຳຄັນເຊັ່ນ: ການສ້າງເຂື່ອນ, ເພື່ອການຄຸ້ມຄອງໂດຍລວມ ຂອງບັນຫານ້ຳພາຍໃນອ່າງຂອງ ພວກເຂົາ. ສິ່ງທີ່ສະຖາບັນການຈັດຕັ້ງຄວນເຮັດຄືການກຳນົດໜ້າທີ່ ແລະ ເປົ້າໝາຍ.

*ສະຖາບັນການຈັດຕັ້ງຂ້າມຜ່ານຊາຍແດນ ຕ້ອງມີຄວາມຍືດຍຸ່ນໃນການປັບຕົວ*
ຂໍ້ຕົກລົງທີ່ເປັນທາງການ ແລະ ສະຖາບັນການຈັດຕັ້ງ ເປັນເລື່ອງຍາກທີ່ຈະແກ້ໄຂ, ສະນັ້ນ ຄວນມີການອອກແບບເພື່ອສາມາດປັບປຸງ ແລະ ປ່ຽນແປງຂໍ້ມູນເງື່ອນໄຂ ແລະ ບູລິມະສິດ ທີ່ບໍ່ໄດ້ຄາດກະໄວ້ອີງຕາມເວລາ. ສິ່ງທ້າທາຍດັ່ງກ່າວ ອາດແກ້ໃຂໄດ້ ໃນເວລາການເລີ້ມສ້າງສະຖາບັນ ການ ຈັດຕັ້ງ.

*ຮັບປະກັນວ່າ ມີຊັບພະຍາກອນມະນຸດ ແລະ ການເງິນ ພຽງພໍ ເພື່ອແກ້ໃຂສິ່ງທ້າທາຍ*
ບາງສະຖາບັນການຈັດຕັ້ງ ສາມາດເຊື່ອມໂຍງໂດຍກົງດ້ານການເງິນຂອງພວກເຂົາ ໄປສູ່ການພັດທະນາ ແລະ ຈັດການດ້ານຊັບສິນເຊັ່ນ ເຂື່ອນ; ສຳລັບອື່ນໆ ຍັງເປັນບັນຫາທີ່ຍາກຫລາຍ. ເພື່ອຮັກສາຄວາມຫລາກຫລາຍ ທີ່ແທດເໝາະ ແລະ ຄວາມອາດສາມາດຂອງຊັບພະຍາກອນມະນຸດ ແມ່ນຍັງເປັນສິ່ງຊັບຊ້ອນ ເຊັ່ນ: ສະຖານະການ, ຄວາມຮູ້ ແລະ ບູລິມະສິດ ທີ່ໄດ້ມີການວິວັດຢ່າງໄວ.

## 6. ການຈັດຕັ້ງປະຕິບັດໃນການຮ່ວມມື ການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ

*ການຈັດຕັ້ງປະຕິບັດ ເປັນຫຼາຍກວ່າ ການປະກາດຫຼັກການ ແລະ ກົດລະບຽບ*
ການຈັດຕັ້ງປະຕິບັດ ຂໍ້ຕົກລົງສາກົນໂດຍທົ່ວໄປໄດ້ຖືກກຳນົດຄື ກິດຈະກຳທີ່ລັດໜຶ່ງໆ ໄດ້ດຳເນີນເພື່ອປະຕິບັດພັນທະຂອງຕົນ ແລະເພື່ອບັນລຸໄດ້ເປົ້າໝາຍຂອງສົນທິສັນຍາສາກົນເຊັ່ນ: ການຜັນຂະຫຍາຍຂໍ້ຕົກລົງດັ່ງກ່າວເຂົ້າເປັນກົດໝາຍແຫ່ງຊາດ, ຈັດຕັ້ງສະຖາບັນການຈັດຕັ້ງທີ່ ເໝາະສົມ ແລະ ການປະຕິບັດລະບຽບການ.

*ການສ້າງຄວາມເຂັ້ມແຂງດ້ານການປົກຄອງ ແມ່ນມີຄວາມຈຳເປັນຫລາຍສຳລັບການຈັດຕັ້ງປະຕິບັດ*

ການຈັດຕັ້ງປະຕິບັດທີ່ມີປະສິດທິພາບ ຮຽກຮ້ອງໃຫ້ມີພັນທະທີ່ແທ້ຈິງ ຈາກພາກລັດ ແລະ ຜູ້ມີສ່ວນຮ່ວມ, ແລະ ມີຄວາມຫຍຸ້ງຍາກທີ່ຈະມີຄວາມສົມດູນລະຫວ່າງ ການດຳເນີນການອີງໃສ່ຄວາມຕັ້ງໃຈ ແລະ ອີງໃສ່ພາກບັງຄັບໃດໜຶ່ງໃນຂໍ້ຕົກລົງ, ໃນຂະນະທີ່ສ້າງຮູບແບບເພື່ອການຈັດຕັ້ງປະຕິບັດ ແລະ ປັບຕົວຕໍ່ກັບສະຖານະພາບທີ່ປ່ຽນແປງ.

*ຄວາມຮູ້ ແລະ ການເຂົ້າຮ່ວມ ອາດໃຫ້ທິດທາງສຳລັບຂັ້ນຕອນການຈັດຕັ້ງປະຕິບັດ*

ຄວາມຮູ້ ແລະ ການມີສ່ວນຮ່ວມໄດ້ສ້າງໃຫ້ມີຄວາມເຊື່ອໝັ້ນ, ເປັນເຈົ້າການ ແລະ ຄວາມເຂົ້າໃຈເປັນເອກະພາບລະຫວ່າງຜູ້ມີສ່ວນຮ່ວມ, ພວກເຂົາໄດ້ຊ່ວຍຊີ້ແຈງເປົ້າໝາຍ, ເພີ່ມປະສິດທິພາບ, ລົດຄວາມຂັດແຍ່ງ ແລະ ຮັກສາການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ໃຫ້ມີການປະສານງານ.

*ການຄຸ້ມຄອງແບບປັບປ່ຽນໄດ້ ສາມາດປັບປ່ຽນໄດ້ໃນການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ.*

ຂະບວນການຄຸ້ມຄອງແບບປັບປ່ຽນ - ລວມມີການປະສານງານແບບຕໍ່ເນື່ອງ, ການທົບທວນ ແລະ ການປະເມີນຄືນ - ມີຄວາມຈຳເປັນສຳລັບການຈັດຕັ້ງປະຕິບັດ ການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ຄຽງຄູ່ກັບຄວາມຕ້ອງການທີ່ເພີ້ມຂຶ້ນຄວາມກົດດັນ ແລະ ຄວາມບໍ່ແນ່ນອນ ຂອງສະພາບພູມິອາກາດ.

# ບົດນຳ

ແມ່ນ້ຳຂ້າມຜ່ານຊາຍແດນແມ່ນກຳລັງເພີ່ມຄວາມສົນໃຈ ເພື່ອໃຫ້ບັນລຸໄດ້ຄວາມຕ້ອງການຂອງການຂະຫຍາຍຕົວຂອງປະຊາກອນ ແລະ ເສດຖະກິດ-ການເພີ່ມຄວາມກົດດັນດັ່ງກ່າວ ຕໍ່ການມີຢູ່ຂອງຊັບພະຍາກອນນ້ຳ ໄດ້ເຮັດໃຫ້ເຫັນໄດ້ຊັດເຈນຄວາມຕ້ອງການທີ່ຊ່ວງຊ້າກັນລະຫວ່າງປະເທດ, ເຂດຊົນນະບົດ ແລະ ເຂດຕົວເມືອງລະຫວ່າງກຸ່ມ ນຳໃຊ້ນ້ຳ ທີ່ແຕກຕ່າງກັນ, ແລະ ລະບົບນິເວດ. ສິ່ງທ້າທາຍນີ້ແມ່ນຄວາມດຸນດ່ຽງຄວາມຕ້ອງການ ທີ່ຊ່ວງຊີງກັນໃນຮູບແບບທີ່ສະເໝີພາບ ແລະ ຍືນຍົງສຳລັບຍຸກສະໄໝປະຈຸບັນ ແລະ ອະນາຄົດ.

ບໍ່ມີສະຖານທີ່ໃດ ທີ່ມີສິ່ງທ້າທາຍຂອງການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ຫຼາຍກວ່າທີ່ໄດ້ປະກາດໃນອາຟຼິກກາ. ເຫດການທາງປະຫວັດສາດຂອງທະວີບນີ້ໄດ້ຊີ້ໃຫ້ເຮົາເຫັນການນຳໃຊ້ແມ່ນ້ຳຮ່ວມກັນ ໃນລະດັບສາກົນ ຫຼາຍຂື້ນ (ມີຫຼາຍກວ່າ 60 ແມ່ນ້ຳຂ້າມຜ່ານຊາຍແດນ ແລະ ອ່າງແມ່ນ້ຳໃນອາຟຼິກກາ ກັບອີກເກືອບສອງສ່ວນສາມຂອງຈຳນວນປະຊາກອນຂອງທະວີບດັ່ງກ່າວ). ອາຟຼິກກາໄດ້ຕອບສະໜອງກັບບາງຄວາມຄິດລິເລີ່ມ ກ່ຽວກັບການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ, ຕົວຢ່າງ ຢູ່ອ່າງແມ່ນ້ຳໄນເກີ, ນາຍ ແລະ ເຊນາການ. ແຕ່ວ່າສິ່ງທ້າທາຍດັ່ງກ່າວ ແມ່ນວິທີ ເອກະລັກ ສະເພາະສຳລັບອາຟຼິກກາ.

ການສະໜັບສະໜູນການຮ່ວມມືແບບສັນຕິ ແລະ ສ້າງຄວາມເຊື່ອມໂຍງລະຫວ່າງການນຳໃຊ້ນ້ຳ ທີ່ແຕກຕ່າງກັນໃນແຕ່ລະລະດັບພາຍໃນ ແລະ ລະຫວ່າງລັດ ຫຼື ປະເທດຕ່າງໆ ແມ່ນສິ່ງທ້າທາຍລະດັບໂລກ. ຄວາມສຳຄັນຂອງການສ້າງສາຍພົວພັນລະຫວ່າງປະເທດຢູ່ແຄມແມ່ນ້ຳ ແລະ ຄວາມຕ້ອງການສຳລັບການຮ່ວມມື ໃນການຄຸ້ມຄອງຂອງຊັບພະຍາກອນນ້ຳທີ່ໃຊ້ຮ່ວມກັນໄດ້ເພີ່ມຂື້ນ, ແລະ ທັງໝົດນີ້ ໄດ້ເປັນສິ່ງທີ່ບໍ່ແນ່ນອນທີ່ພົວພັນກັບສະພາບພູມີອາກາດ ທີ່ຄວນພິຈາລະນາ.

ເອກະສານສະບັບນີ້ໄດ້ສະເໜີ ຄູ່ມືທີ່ນຳໃຊ້ໄດ້ສຳລັບ ປະກອບເປັນແນວຄວາມຄິດ, ການຮ່ວມມື ໃນການຈັດຕັ້ງ ປະຕິບັດ, ການເຂົ້າຮ່ວມໃນການຄຸ້ມຄອງຊັບພະຍາກອນນ້ຳຮ່ວມກັນ. ສິ່ງດັ່ງກ່າວໄດ້ເນັ້ນໃຫ້ເຫັນເຖິງຄວາມສຳຄັນຂອງຂໍ້ມູນ, ການສື່ສານ, ສະຖາບັນການຈັດຕັ້ງ ແລະ ສະພາບການປັບຕົວ. ມັນໄດ້ສະແດງໃຫ້ເຫັນຄວາມຫຼາກຫຼາຍຂອງຜົນປະໂຫຍດ ຈາກການຄຸ້ມຄອງນ້ຳ ແລະ ການພັດທະນາທີ່ໄດ້ມາຈາກການຮ່ວມມື, ແລະ ຕ້ອງມີ ການແບ່ງປັນ ຢ່າງທ່ຽງທຳ.

ບົດຮຽນໃນທີ່ນີ້ ໄດ້ສະແດງໃຫ້ເຫັນຄວາມຄິດທີ່ມີຄຸນຄ່າສຳລັບລັດຕ່າງໆ, ອົງການສາກົນ ແລະ ໝົດທຸກຄົນ, ຜູ້ທີ່ແບ່ງປັນ ແລະ ຮູ້ຄຸນຄ່າຂອງອົງປະກອບຕ່າງໆຂອງນ້ຳ.

**Hon. Maria Mutagamba**
Minister of Water and Environment &
Chairperson Nile Council of Ministers
Uganda

# ບັນນາທິການ ແລະ ຜູ້ຂຽນ

*ກວດແກ້ໂດຍ ທ່ານ Claudia Sadoff, ທ່ານ Thomas Greibe, ທ່ານ Mark Smith ແລະ ທ່ານ Ger Bergkamp*

ໝວດທີ 1 ດຣ Claudia Sadoff, IUCN ແລະ ສະຖາບັນຄຸ້ມຄອງນ້ຳສາກົນ (IWMI)

ໝວດທີ 2 ດຣ Claudia Sadoff, ດຣ David Grey, ທະນາຄານໂລກ

ໝວດທີ 3 ດຣ Alan Nicol, ສະຖາບັນການພັດທະນາຕ່າງປະເທດ (ODI), ດຣ Sobona Mtisi ມະຫາວິທະຍາໄລ ແມນເຊັດສເຕີ

ໝວດທີ 4 ທ່ານ Thomas Grieber, ດຣ Alejandro Iza ອີງການ IUCN

ໝວດທີ 5 ດຣ Mark Giordano ສະຖາບັນຄຸ້ມຄອງນ້ຳສາກົນ (IWMI), Aaron Wolf ມະຫາວິທະຍາໄລ ລັດອໍລິກອນ, ດຣ Meredith Giordano ສະຖາບັນຄຸ້ມຄອງນ້ຳ ສາກົນ (IWMI)

ໝວດທີ 6 ທ່ານ Sokhem Pech ຜູ້ຮ່ວມໃຫ້ຄຳປຶກສາພາກສະໜາມ

# ການສະແດງຄວາມຂອບໃຈ

ປຶ້ມແນະນຳທາງປະຕິບັດດັ່ງກ່າວນີ້ ແມ່ນຄວາມຮ່ວມມືລະຫວ່າງແຜນງານເບື້ອງຕົ້ນຂອງ IUCN ດ້ານນ້ຳ ແລະ ທຳມະຊາດ (IUCN Water and Nature Initiative ແລະ ສູນກົດໝາຍສິ່ງແວດລ້ອມຂອງ IUCN ເພື່ອສ້າງຄວາມເຂັ້ມແຂງ ດ້ານການປົກຄອງນ້ຳຂ້າມຜ່ານຊາຍແດນ. ສິ່ງດັ່ງກ່າວນີ້ ໄດ້ສ້າງຂື້ນພາຍໃຕ້ກອບຂອງ ກິດຈະກຳ ການສ້າງຄວາມສາມາດ ຂອງ IUCN ໃນອີງການຄຸ້ມຄອງນ້ຳ ຕັງການິອິກາ ເຊິ່ງໄດ້ຈັດຕັ້ງປະຕິບັດໂດຍ IUCN WANI ແລະ ຫ້ອງການ IUCN ພາກພື້ນ ອາຟຼິກາຕາເວັນອອກ.

ຫລາຍໆຄົນໄດ້ປະກອບສ່ວນ ໂດຍການໃຫ້ຄຳແນະນຳ ແລະເປັນຜູ້ຊ່ວຍໃນການຂຽນ ແລະກວດແກ້ ໂດຍການແລກປ່ຽນປະສົບການ ແລະໃຫ້ຄຳຕອບຕໍ່ບາງຄຳຖາມສະເພາະ ບໍ່ວ່າໃຫຍ່ ຫລືນ້ອຍ. ການປະກອບສ່ວນດັ່ງກ່າວ ເປັນປັດບາດສຳຄັນໃນການວາງແຜນ ແລະ ສຳເລັດປຶ້ມຂຽນນີ້ເຊັ່ນ ຮັບຮູ້ຢ່າງຫລວງຫລາຍຕໍ່ ການປະກອບສ່ວນທັງ ເວລາ ແລະ ການຊ່ວຍເຫລືອ ຂອງພວກເຂົາເຈົ້າ.

ໂດຍສະເພາະ ພວກເຮົາຂໍຂອບໃຈ ບັນດາຜູ້ຊ່ຽວຊານທີ່ໄດ້ຂໍ້ມູນ, ແນວຄວາມຄິດ ຜ່ານການສ້າງກໍລະນີການສຶກສາ ກ່ຽວກັບການປົກຄອງນ້ຳຂ້າມຜ່ານຊາຍແດນ ເຊັ່ນ ຄຼິສຕີນາ ເລບ, ຈານ ຊາບ, ໂຊເຄມ ເພັດ ແລະ ມາດິໂອດີໂອນິອາຊ.

ພວກເຮົາຍັງຂໍຂອບໃຈ ດຣ ແຕສແຟ ຕາແຟຊ (ມະຫາວິທະຍາໄລ ອາດິຊ ອາບາບາ, ເອທິໂອເປຍ), ທ່ານ ດາຣິລ ຟິລ (ທະນາຄານໂລກ), ນິໂກລາດ ໄບເອກຼີນ ໂນໂມວິກ (ມະຫາວິທະຍາໄລ ກົດສະຕາລິກາ) ແລະ ແມກູເລຍ ຕາແຟສ (ຜູ້ບໍລິຫານງານ ຫ້ອງການວິຊາການພາກພື້ນຂອງ ແມ່ນ້ຳ ນາຍທາງຕາເວນອອກ, ອາດິສ ອາບາບາ, ເອທິໂອເປຍ) ສຳລັບເວລາຂອງທ່ານເພື່ອທົບທວນ ແລະໃຫ້ຄຳແນະນຳ ໃນບາງປຶດ.

ພວກເຮົາຂໍຂອບໃຈຕໍ່ ດຣ ແຄລລີ ແວຊ ຈາກ IUCN ຜູ້ທຳອິດທີ່ໄດ້ນຳສະເໜີ ໃນການສ້າງປຶ້ມແນະນຳ ດ້ານການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ເຂົ້າໃນຊຸດເອກະສານຄູ່ມືຂອງ WANI, ແລະຜູ້ທີ່ປະກອບສ່ວນແນວຄິດ ແລະທິດຊີ້ນຳທີ່ມີຄຸນຄ່າ ຢູ່ໃນເວລາການສ້າງເອກະສານສະບັບນີ້. ພວກເຮົາຍັງຂໍຂອບໃຈຕໍ່ ທ່ານ ແມລີ ປາເດນ ແລະ ຕີນາ ຮາຢາເມັດ ສຳລັບການຊ່ວຍເຫລືອໃນການກວດແກ້, ແລະ ທ່ານ ແມແກນ ກາກຕິນ ແລະ ຊານດຼາ ໂຟລເນີ ຈາກ IUCN ສຳລັບການຊ່ວຍເຫລືອທີ່ມີຄຸນຄ່າຂອງພວກເຂົາເຈົ້າ.

ສຸດທ້າຍ ຂໍຂອບໃຈຢ່າງຫລວງຫລາຍຕໍ່ ລັດຖະບານ ແນເດີແລນ ທີ່ໃຫ້ງົບປະມານ ຜ່ານແຜນງານ IUCN ດ້ານນ້ຳແລະທຳມະຊາດ WANI.


VOLTA RIVER
INDUS RIVER
GANGES RIVER
MEKONG RIVER
PARANA RIVER
NILE

# ໝວດທີ 1

## ສະພາບລວມຂອງຊັບພະຍາກອນນ້ຳທີ່ໃຊ້ຮ່ວມກັນຢູ່ໃນໂລກ.

### *1.1 ຊັບພະຍາກອນນ້ຳຂ້າມຜ່ານຊາຍແດນ*

ມີຫຼາຍປະເທດ ທີ່ໃຊ້ອ່າງແມ່ນ້ຳສາກົນຮ່ວມກັນ ຫຼາຍກວ່າ 260 ສາຍ ຊຶ່ງກວມເອົາເກືອບເຄິ່ງໜຶ່ງຂອງເນື້ອທີ່ນ້ຳໜ້າດິນໃນໂລກ (ເບິ່ງຮູບ1.1) ແລະ ປະມານ 60% ຂອງເນື້ອທີ່ນ້ຳຈືດຢູ່ໃນໂລກ ແລະ ການດຳລົງຊີວິດຂອງ ປະຊາກອນ ຂອງໂລກເກືອບ 40% ແມ່ນຕິດພັນກັບສາຍນ້ຳດັ່ງກ່າວ[1]. ດັ່ງທີ່ຮັບຮູ້ກັນວ່າ ຄວາມຕ້ອງການນຳໃຊ້ນ້ຳໄດ້ເພີ່ມຂຶ້ນໃນທຸກປະເທດ, ຄວາມຕ້ອງການໃນແບ່ງປັນຊັບພະຍາກອນນ້ຳ ຈະໄດ້ເພີ້ມຄວາມເອົາໃຈໃສ່ຂື້ນເຊັ່ນດຽວກັນເພື່ອບັນລຸໄດ້ ຄວາມຕ້ອງການຂອງປະຊາກອນຫລາຍຕື້ ສຳລັບການຜະລິດນ້ຳດື່ມ, ອາຫານ, ພະລັງງານໄຟຟ້າ ແລະ ອຸດສາຫະກຳ ເພື່ອຮັກສາ ລະບົບນິເວດວິທະຍາ ແລະ ເພື່ອຕອບສະໜອງຄວາມຕ້ອງການຂອງຄົນໃນອານາຄົດ - ຖ້າປະໃຫ້ນ້ຳໜ້ອຍລົງ ສ່ວນຫລາຍແມ່ນມີຄຸນນະພາບໜ້ອຍຫລາຍ. ເຖິງແມ່ນວ່າ ການຄຸ້ມຄອງອ່າງແມ່ນ້ຳ ແລະ ການແບ່ງປັນນ້ຳໄດ້ຖືກ ຈັດຕັ້ງປະຕິບັດ ແຕ່ຄວາມບໍ່ແນ່ນອນ ຂອງການປ່ຽນແປງດິນຟ້າອາກາດ ແມ່ນໄດ້ກາຍເປັນຄວາມສ່ຽງໃໝ່ ທີ່ຈະເປັນສິ່ງທ້າທາຍ ສຳລັບບັນດາປະເທດໃກ້ຄຽງ ທີ່ໄດ້ນຳໃຊ້ນ້ຳຮ່ວມກັນເພື່ອເພີ່ມການຮ່ວມມື.

*"ການໃຊ້ຊັບພະຍາກອນນ້ຳຮ່ວມກັນ ຈະໄດ້ເພີ້ມຄວາມຮຽກຮ້ອງຕ້ອງການ ເພື່ອບັນລຸໄດ້ຕາມຄວາມ ຕ້ອງການ ຂອງຄົນຈຳນວນຫລາຍຕື້ຄົນ"*

ແມ່ນ້ຳສາກົນ ບໍ່ໄດ້ມີເອກະລັກຕາບຕົວ ເພື່ອກໍ່ໃຫ້ເກີດສິ່ງທ້າທາຍຂອງ ການນຳໃຊ້ຊັບພະຍາກອນນ້ຳຮ່ວມກັນ. ຊັບພະຍາກອນນ້ຳຂ້າມຜ່ານຊາຍແດນ ແລະ ຄວາມກົດດັນລະຫວ່າງຜູ້ຊົມໃຊ້ນ້ຳ ແມ່ນໄດ້ພົບເຫັນໃນ ທຸກລະດັບເຊັ່ນ: ລະດັບຊາດ, ພາກພື້ນ, ແຂວງ ແລະ ນະຄອນຫລວງ ທີ່ຕ້ອງການການແບ່ງປັນ ແລະ ຮ່ວມມືກັນ ໃນການຄຸ້ມຄອງນ້ຳທີ່ໄຫຼຜ່ານລະຫວ່າງປະເທດຂອງເຂົາເຈົ້າ. ເຖິງແມ່ນວ່າຈະຢູ່ໃນທັງລະດັບຂະໜາດນ້ອຍ, ພາຍໃນຕົວເມືອງ ຫລືບ້ານ, ທັງໃນສະຖານທີ່ໆບໍ່ມີບັນຫາທາງການເມືອງ ແລະ ຊາຍແດນ ເຫັນວ່າໂດຍທົ່ວໄປ ແມ່ນສິ່ງທ້າທາຍ ສຳລັບການ ນຳໃຊ້ນ້ຳຮ່ວມກັນ ໃນຮູບແບບທີ່ທ່ຽງທຳ ແລະ ມີເຫດຜົນ. ຈາກລະດັບສາກົນຫາທ້ອງຖິ່ນ, ໂອກາດ ແລະ ຄວາມກົດດັນ ຕ່າງໆທີ່ຄ້າຍຄືກັນ ຈະເພີ້ມຂື້ນໃນເມື່ອຜູ້ຊົມໃຊ້ ໄດ້ແບ່ງປັນຊັບພະຍາກອນນ້ຳ ທີ່ໄດ້ໃຊ້ນ້ຳຮ່ວມກັນ ທີ່ມີຜົນກະທົບທັງຄຸນນະພາບ ແລະ ປະລິມານ, ແລະ ສິ່ງດັ່ງກ່າວກໍ່ໄດ້ສົ່ງຜົນກະທົບຕໍ່ ຜູ້ຊົມໃຊ້ນ້ຳໝົດທຸກຄົນ.

ບົດອະທິບາຍ 1.1 ຄວາມໝາຍຂອງ ຄຳສັບ ແມ່ນ້ຳຂ້າມຜ່ານຊາຍແດນ

ຄຳສັບສາມາດມີຫລາຍຄວາມໝາຍ. ຄຳວ່າ 'ແມ່ນ້ຳສາກົນ' ສາມາດສະແດງເຖິງນ້ຳພາຍໃນແມ່ນ້ຳສາຍດຽວ (ຄຳວ່າ ການ ໄຫຼຂອງແມ່ນ້ຳແມ່ນສ່ວນຫລາຍມັກໃຊ້ໃນຈຸດປະສົງນີ້), ຫຼື ລະບົບຄອງລະບາຍນ້ຳທັງສາຍ ແລະ/ຫຼື ພົວພັນກັບລະບົບ ນ້ຳ ໃຕ້ດິນ. ຄຳວ່າ 'ອ່າງແມ່ນ້ຳສາກົນ' ໂດຍທົ່ວໄປໝາຍເຖິງ ພື້ນທີ່ການໄຫລຂອງນ້ຳ, ນ້ຳໃຕ້ດິນ, ປະລິມານນ້ຳຝົນ ແລະ ເນື້ອ ທີ່ປຽກຊຸ່ມພາຍໃນອ່າງໂຕ່ງແມ່ນ້ຳ. ໃນກົດໝາຍກ່ຽວກັບທະເລ ຄຳວ່າ 'ແມ່ນ້ຳສາກົນ' ແມ່ນຄຳສັບ ທາງກົດໝາຍ ສຳລັບ ນ້ຳທະເລ ທີ່ນອນຢູ່ນອກເຂດກົດໝາຍແຫ່ງຊາດໃດໜຶ່ງ, ໃນເວລາດຽວກັນ ຖ້າຄຳດັ່ງກ່າວຫາກໄດ້ຖືກນຳໃຊ້ເພື່ອອະທິບາຍ ການຄຸ້ມຄອງນຳໃຊ້ອ່າງໂຕ່ງຮ່ວມກັນ ແລະ ສິ່ງດັ່ງກ່າວກໍສາມາດມີຄວາມໝາຍດຽວກັນກັບແມ່ນ້ຳສາກົນ. ໃນທີ່ນີ້ ພວກເຮົາ ໃຊ້ຄຳສັບ ຊັບພະຍາກອນນ້ຳຂ້າມຜ່າຍຊາຍແດນຫຼືເອີ້ນວ່າ: ຊັບພະຍາກອນນ້ຳທີ່ໃຊ້ຮ່ວມກັນໂດຍມີ ການແລກປ່ຽນເພື່ອ ສາມາດອ້າງອີງເຖິງນ້ຳຈືດ (ເນື້ອທີ່ໜ້ານ້ຳ ແລະ ນ້ຳໃຕ້ດິນ) ທີ່ໄຫຼຜ່ານຊາຍແດນປະເທດໜຶ່ງ ຫຼື ທ້ອງຖິ່ນໜຶ່ງໆ.

ແຜນວາດທີ 1.1 ແຜນວາດທີ່ກວມເອົາຫຼາຍປະເທດ




© Transboundary Freshwater Dispute Database Oregon State University, 2008.

"ສະພາບຄວາມເຄັ່ງຄຽດ ລະຫວ່າງຫລາຍຜູ້ຊົມໃຊ້ທີ່ແຂ່ງຂັນກັນ ໄດ້ພົບເຫັນໃນທຸກລະດັບ"

## *1.2 ການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ*

ຍອມຮັບຢ່າງກວ້າງຂວາງວ່າ ວິທີການປະຕິບັດທີ່ດີທີ່ສຸດໃນການຄຸ້ມຄອງຊັບພະຍາກອນນ້ຳແມ່ນ ໄດ້ດຳເນີນໃນຮູບແບບການຄຸ້ມຄອງອ່າງແມ່ນ້ຳແບບປະສົມປະສານ.[2] ການຄຸ້ມຄອງອ່າງແມ່ນ້ຳທັງໝົດ ແມ່ນການຄຸ້ມຄອງທີ່ດີທີ່ສຸດ ເພື່ອຮັບປະກັນການປະສົມປະສານຂອງລະບົບນິເວດ. ນອກຈາກນີ້ ມັນເປັນວິທີການທີ່ດີທີ່ສຸດທີ່ຍົກສູງຜະລິດຕະພາບ ແລະ ເພີ້ມຜົນປະໂຫຍດສູງສຸດຍ້ອນວ່າ ສິ່ງດັ່ງກ່າວໄດ້ເອື້ອອຳນວຍໃຫ້ນັກວາງແຜນສາມາດເຫັນໄດ້ ສະຖານທີ່ໆແທດເໝາະທີ່ສຸດສຳລັບກິດຈະກຳທີ່ແຕກຕ່າງກັນ (ເຊັ່ນ ການປະມົງ, ການຜະລິດອາຫານ ແລະ ພືດພັນອື່ນໆ, ຜະລິດພະລັງງານໄຟຟ້າ, ສະຖານທີ່ທ່ອງທ່ຽວ ແລະ ການເດີນເຮືອ) ແລະ ການຄຸ້ມຄອງບັນດາກິດຈະການ ທີ່ມີການພົວພັນກັນ ແລະ ຈຸດຂາຍທີ່ແລກປ່ຽນທົດແທນ.

*“ການຄຸ້ມຄອງຊັບພະຍາກອນນ້ຳທີ່ດີທີ່ສຸດ ຄືການດຳເນີນການໃນທັງລະບົບອ່າງແມ່ນ້ຳ ແບບປະສົມປະສານ”*

ການຄຸ້ມຄອງນ້ຳ ໃນລະດັບອ່າງແມ່ນ້ຳ ໃນອ່າງນ້ຳຂ້າມຜ່ານຊາຍແດນ ແມ່ນ ຕ້ອງອາໃສ ຄວາມຮ່ວມມື ຂ້າມຜ່ານຊາຍແດນ. ເນື່ອງຈາກວ່າທຸກໆອ່າງແມ່ນ້ຳ ໄດ້ຖືກແບ່ງປັນຫລືນຳໃຊ້ໂດຍຫລາຍຜູ້ນຳໃຊ້ຈາກຫຼາຍພາກສ່ວນ ເຊິ່ງເປັນ ສິ່ງທ້າທາຍໃນການຄຸ້ມຄອງລະບົບທັງໝົດ ຂອງອ່າງແມ່ນ້ຳ ໃນເວລາດຽວກັນ ກໍເປັນສິ່ງທີ່ພຶ່ງພໍໃຈຈາກ ຜູ້ມີສ່ວນຮ່ວມທີ່ມີຄວາມຫລາກຫລາຍ ແລະ ຄວາມແຕກຕ່າງທາງດ້ານຜົນປະໂຫຍດ. ຄວາມຕຶງຄຽດເຫຼົ່ານີ້ ຈະສະແດງໃຫ້ເຫັນໄດ້ຊັດເຈນໃນທຸກລະດັບ, ຈາກປະເທດ ໄປຫາ ໝູ່ບ້ານ.

ຄວາມເຄັ່ງຄຽດລະຫວ່າງຄວາມຕັ້ງໃຈ ສຳລັບການສ້າງຄວາມສະເໝີພາບ ແລະ ຄວາມເປັນຈິງໃນການປະຕິບັດ ຍັງຈະເກີດຂື້ນໃນທຸກຮູບແບບຂອງການແບ່ງປັນ. ຂໍ້ມູນທາງເສດຖະກິດ, ການເມືອງ ແລະ ອຸທົກກະສາດ, ໄດ້ເປັນອົງປະກອບຂອງແມ່ນ້ຳທີ່ປະກອບເປັນ ການຄຸ້ມຄອງອ່າງແມ່ນ້ຳ.

ລັກສະນະທາງກາຍະພາບຂອງແມ່ນ້ຳ. ແມ່ນ້ຳທີ່ມີຄວາມອຸດົມສົມບູນ ຫລື ຫຼາຍກວ່າທີ່ຄາດໄວ້, ຄົງທີ່ ຫຼື ໄຫຼແຮງ, ສົມບູນ ຫຼື ເສື່ອມໂຊມ, ສາມາດເດີນເຮືອໄດ້ ຫຼື ບໍ່ໄດ້, ເຊິ່ງທັງໝົດຈະກໍ່ໃຫ້ເກີດໂອກາດ ແລະ ຄວາມຕຶງຄຽດ ແຕກຕ່າງກັນ. ຄວາມສຳພັນທີ່ພົວພັນກັບພູມີສາດຂອງ ບັນດາປະເທດຢູ່ອ່າງແມ່ນ້ຳຈະເປັນປະເດັນທີ່ສຳຄັນ. ບົດບາດ ແລະ ອິດທິພົນ ລະຫວ່າງປະເທດທີ່ຢູ່ແຕ່ລະຟາກຝັ່ງ (ຜູ້ທີ່ອາໃສຢູ່ອີກຝັ່ງຂອງແມ່ນ້ຳທີ່ໃຊ້ຮ່ວມກັນ) ແມ່ນມັກຈະມີຄວາມແຕກຕ່າງກັນຢ່າງຫລວງຫລາຍ ຈາກບັນດາປະເທດທີ່ນຳໃຊ້ນ້ຳຮ່ວມກັນ (ຜູ້ທີ່ອາໃສຢູ່ເໜືອ ຫລື ໃຕ້ກັບອີກປະເທດໜຶ່ງ) ໃນທາງ ວິທີການ ເຊິ່ງເຂົາເຈົ້າມີຄວາມສົນໃຈ ແລະ ທາງເລືອກຂອງເຂົາເຈົ້າເພື່ອການຮ່ວມມືໃນການຄຸ້ມຄອງນ້ຳ.

ນອກຈາກນັ້ນລັກສະນະທາງກາຍະພາບ, ການເມືອງ ແລະ ເສດຖະກິດຂອງບັນດາປະເທດ ທີ່ຢູ່ໃນອ່າງແມ່ນ້ຳແມ່ນມີຄວາມກ່ຽວຂ້ອງກັບການປ່ຽນແປງ ຂອງການແບ່ງປັນນ້ຳ. ຖ້າຫາກແມ່ນ້ຳໄດ້ຖືກນຳໃຊ້ຮ່ວມກັນກັບຫລາຍປະເທດຫລືຢ່າງໜ້ອຍສອງ, ຖ້າຫາກວ່າ ສິ່ງດັ່ງກ່າວ ໄດ້ຖືກພົວພັນດ້ານປະຫວັດສາດ ຫລື ຄວາມເຄັ່ງຄຽດ ລະຫວ່າງບັນດາປະເທດ, ຖ້າຫາກວ່າປະເທດໜຶ່ງ ມີຄວາມຮູ້ກ່ຽວກັບລະບົບແມ່ນ້ຳຢ່າງກ້ວາງຂວາງ, ທັງໝົດນີ້ຈະມີຜົນຕໍ່ວິທີການເຈລະຈາໃນການໃຊ້ນ້ຳຮ່ວມກັນ. ໂດຍສະເພາະ ຖ້າຫາກມີການພົວພັນກັບອິດທິພົນທາງການເມືອງ, ການທະຫານ ແລະ/ຫຼື ເສດຖະກິດໃນແມ່ນ້ຳ ອິດທິພົນທີ່ບໍ່ເທົ່າທຽມກັນຈະສະແດງໃຫ້ເຫັນຊັດເຈນໃນຂໍ້ຕົກລົງທັງໝົດ.[3]

*“ກອບຂອງການຄຸ້ມຄອງອ່າງແມ່ນ້ຳ ໄດ້ແກ່ ອຸທົກກະສາດ, ການເມືອງ ແລະ ເສດຖະກິດ”*

## *1.3 ການນຳໃຊ້ນ້ຳຂ້າມຜ່ານຊາຍແດນຮ່ວມກັນ*

ຕາມປະເພນີ, ຈຸດເລັ່ງສຳລັບການເຈລະຈາດ້ານການນຳໃຊ້ນ້ຳຮ່ວມກັນແມ່ນ ເພື່ອໃຫ້ໄດ້ຜົນປະໂຫຍດໃນການແບ່ງປັນນ້ຳ. ໃນເມື່ອນ້ຳໄດ້ຖືກແບ່ງປັນທຸກປະເທດ (ຫຼືກຸ່ມຂອງຜູ້ໃຊ້) ພະຍາຍາມຊອກຫາ ເພື່ອເພີ້ມປະສິດທິພາບການຄຸ້ມຄອງ ພາຍໃນເຂດແດນຂອງໃຜມັນຫຼາຍກວ່າ ໃນເຂດອ່າງນ້ຳທີ່ໃຊ້ຮ່ວມກັນ. ການເຈລະຈາໃນໄລຍະອັນໃກ້ນີ້ໃນບາງແມ່ນ້ຳໄດ້ເລັ່ງໃສ່ການແບ່ງປັນຜົນປະໂຫຍດ ການຈັດສັນຜົນປະໂຫຍດທີ່ໄດ້ຈາກຫລາຍການນຳໃຊ້ນ້ຳ ທາງກົງ (ແລະການນຳໃຊ້ທາງອ້ອມ) ຫຼາຍກວ່ານ້ຳໂດຍລວມ.[4] ຢູ່ໃນເນື້ອຫາດັ່ງກ່າວນີ້ ຮູບແບບທີ່ເປັນທາງເລືອກໃນການນຳໃຊ້ນ້ຳເພື່ອບໍລິໂພກ ແລະ ອື່ນໆ ແມ່ນໄດ້ຖືກພິຈາລະນາ, ແລະ ຂໍ້ຕົກລົງຕ່າງໆ ທີ່ເປັນເອກະພາບດ້ານວິທີການນຳໃຊ້ຊັບພະຍາກອນຮ່ວມກັນ ແລະ ຈັດສັນຜົນປະໂຫຍດ ແລະ ຄ່າໃຊ້ຈ່າຍຂອງການພັດທະນານັ້ນ.

ການແບ່ງປັນຜົນປະໂຫຍດ ຊ່ວຍໃຫ້ມີແນວຄວາມຄິດການວາງແຜນ ໃນລະດັບອ່າງແມ່ນ້ຳຊຶ່ງບໍ່ພຽງຈະຊ່ວຍໃຫ້ມີການຄຸ້ມຄອງຊັບພະຍາກອນດີຂື້ນເທົ່ານັ້ນ, ແຕ່ຍັງປະກອບໃຫ້ມີ ກອບວິທີການກວ້າງຂື້ນສຳລັບການກຳນົດ ການບໍລິຫານຈັດການດ້ານການຮ່ວມມື ທີ່ຮັບຮອງໄດ້ກັບທຸກຝ່າຍ. ຈຸດເລັ່ງສຳລັບການແບ່ງປັນຜົນປະໂຫຍດ ສາມາດສະເໜີຕໍ່ບັນດາຜູ້ເຈລະຈາໃນຫລາຍຮູບແບບ ແທນທີ່ຈະເບິ່ງແຕ່ບໍລິມາດນ້ຳ. ມັນຍັງສາມາດເປັນຮູບແບບທີ່ປັບປຸງໄດ້ ທີ່ມີທ່າແຮງທີ່ເປັນຜົນດີ - ຜົນປະໂຫຍດລວມສູນທີ່ນຳມາຈາກຫລາຍທາງເລືອກ ແລະ ການຮ່ວມມືໃນການນຳໃຊ້ນ້ຳ. ການແບ່ງປັນຜົນປະໂຫຍດ ຍັງເປັນສິ່ງຂັບເຄື່ອນສຳລັບການສ້າງຕັ້ງ ແລະ ການກະຈາຍຜົນປະໂຫຍດ ແລະ ຄ່າໃຊ້ຈ່າຍທີ່ຈຳເປັນ ເພື່ອບັນລຸໄດ້ຄວາມເປັນໄປໄດ້ ແລະ ຄວາມເປັນທຳ. ນອກຈາກນີ້ ກໍສາມາດເຮັດໃຫ້ມີຄວາມໂປ່ງໃສຫຼາຍ ຂຶ້ນໃນການເຈລະຈາ ໂດຍໃຫ້ມີຄວາມຊັດເຈນ ດ້ານຮູບແບບຂອງສິ່ງຈູງໃຈທົດແທນ ແລະ ເພື່ອຫລຸດຜ່ອນ ຄວາມຫຍຸ້ງຍາກໃນການເຂົ້າເຖິງຂໍ້ມູນ ທີ່ມັກຈະເຫັນເລື້ອຍໃນການເຈລະຈາ.[5]

ເຖິງແມ່ນວ່າ, ເອກະສານສະບັບນີ້ບໍ່ໄດ້ເນັ້ນຢ່າງຊັດເຈນກ່ຽວກັບຄວາມສຳພັນລະຫວ່າງ ອຳນາດຂອງບັນດາປະເທດໃກ້ຄຽງ, ມັນຍັງໄດ້ຢັ້ງຢືນວ່າ ທຸກການເຈລະຈາດ້ານການແບ່ງປັນນ້ຳເປັນແນວທາງການເມືອງຢ່າງເຂັ້ມຂຸ້ນ. ການແບ່ງປັນຜົນປະໂຫຍດ ໂດຍທົ່ວໄປແລ້ວສາມາດລົດຄວາມບໍ່ຊັດເຈນທາງດ້ານຂໍ້ມູນ ຜ່ານການກວດສອບຮູບແບບທາງເລືອກຂອງການໃຊ້ນ້ຳ ແລະ ການກະຈາຍຜົນປະໂຫຍດ ແລະ ຄ່າໃຊ້ຈ່າຍຢ່າງຊັດເຈນ. ການແບ່ງປັນຜົນປະໂຫຍດຍັງສາມາດເປັນວິທີທາງສຳລັບ ນຳສະເໜີຜົນປະໂຫຍດຂອງການປະສານງານໃນຮູບແບບທາງອ້ອມ ຫລື ບໍ່ເປັນທາງການ, ເຊັ່ນ ການຄ້າ, ຄວາມປອດໃພ ແລະ ຖານະໃນລະດັບສາກົນ ເຊິ່ງອາດມີບົດບາດທີ່ມີອິດທິພົນ ຫລື ສະທ້ອນເຖິງແນວຄວາມຄິດທີ່ມີອຳນາດແຕກຕ່າງກັນ. ແຕ່ເຖິງຢ່າງໃດກໍຕາມ ການແບ່ງປັນຜົນປະໂຫຍດ ຈະບໍ່ເປັນປະເດັນສຳລັບການເມືອງ ແຕ່ອາດດຳເນີນການພາຍໃນຫົວຂໍ້ທີ່ພົວພັນທາງການເມືອງ.

*"ການເຈລະຈາ ໃນການແບ່ງປັນນ້ຳ ເປັນແນວທາງການເມືອງທີ່ເຂັ້ມຂຸ້ນ"*

## *1.4 ການແບ່ງປັນ*

ແນວທາງສຳລັບ ນ້ຳຂ້າມຜ່ານຊາຍແດນທີ່ໄດ້ຄຸ້ມຄອງ ແລະ ໃຊ້ຮ່ວມກັນ ຈະມີຜົນຢ່າງໜັກແໜ້ນຕໍ່ສິ່ງແວດລ້ອມ, ເອກະພາບ ຄວາມທຸກຍາກ, ຄວາມຈະເລີນຮຸ່ງເຮືອງ ແລະ ສາຍພົວພັນທາງການເມືອງ ແລະ ພູມີສາດ. ການນຳໃຊ້ຊັບພະຍາກອນນ້ຳຮ່ວມກັນ ໃນທິດທາງການຂະຫຍາຍຕົວຂອງປະຊາກອນມີຜົນທັງທາງເສດຖະກິດ, ຄວາມບໍ່ແນ່ນອນຂອງການປ່ຽນແປງດິນຟ້າອາກາດ - ຈິ່ງກໍ່ໃຫ້ເກີດຄວາມທ້າທາຍສຳລັບສັດຕະວັດທີ 21 ນີ້. ເອກະສານສະບັບນີ້ ມີຈຸດເລັ່ງໃສ່ໃຫ້ຜູ້ທີ່ຈະສາມາດ ປະກອບສ່ວນເພື່ອບັນລຸໄດ້ສິ່ງທ້າທາຍນີ້: ຜູ້ຊີ້ນຳວາງແຜນ, ຜູ້ຈັດຕັ້ງປະຕິບັດ ແລະ ຜູ້ມີ

ສ່ວນຮ່ວມອື່ນໆ ທີ່ກຳລັງຊອກຫາວິທີການດຳເນີນງານ ການຄຸ້ມຄອງຊັບພະຍາກອນນ້ຳຂ້າມຜ່ານຊາຍແດນ ໃຫ້ມີຄວາມເປັນທຳ, ປະສິດທິພາບ ແລະ ຍືນຍົງຫຼາຍຂຶ້ນ ໂດຍຜ່ານແນວທາງການແບ່ງປັນຜົນປະໂຫຍດ .

ການແບ່ງປັນ ພະຍາຍາມອະທິບາຍເນື້ອຄວາມ ວິທີທາງການແບ່ງປັນຜົນປະໂຫຍດສຳລັບການຄຸ້ມຄອງນ້ຳ ຂ້າມຜ່ານຊາຍແດນ ແລະ ໃຫ້ແຜນງານຂອງຂະບວນການ. ຂະບວນດັ່ງກ່າວມີສາມຂັ້ນຕອນ ເພື່ອພິຈາລະນາ: (1) ການປຶກສາຫາລື ແລະ ສ້າງແຮງຈູງໃຈ, (2) ການອອກແບບ, (3) ການຈັດຕັ້ງປະຕິບັດ. ລັກສະນະຄົບຊຸດຂອງນ້ຳຂ້າມຜ່ານ ຊາຍແດນນັ້ນຕ້ອງການຄວາມຫຼາກຫຼາຍຂອງຜູ້ຊ່ຽວຊານລວມມີ ອຸທົກກະສາດ, ເສດຖະກິດ, ກົດໝາຍ, ລະບົບນິເວດ, ສັງຄົມ,ການເຈລະຈາ ແລະ ການບໍລິຫານພົວພັນ, ແລະ ລວມທັງສິ່ງຕ່າງໆທີ່ພົວພັນກັນ ແລະ ມັນຈຳເປັນທີ່ຜູ້ຊ່ຽວຊານເຫຼົ່ານັ້ນຕ້ອງໄດ້ເຮັດວຽກຮ່ວມກັນ. ໂດຍລວມແລ້ວ ຂະບວນດັ່ງກ່າວນີ້ມີຄວາມສຳຄັນຢ່າງຫລວງຫຼາຍ ສະນັ້ນການສ້າງຄວາມເຊື່ອໝັ້ນ ຄວາມຮູ້ ແລະ ຄວາມເປັນເຈົ້າການຂອງອົງການຈັດຕັ້ງຕ່າງໆ6 ແມ່ນເປັນສິ່ງຈຳເປັນສຳລັບຜົນສຳເລັດ.

"ຄວາມຄົບຊຸດ ຂອງນ້ຳຂ້າມຜ່ານຊາຍແດນ ຕ້ອງການຄວາມຫລາກຫລາຍ ຂອງຜູ້ຊ່ຽວຊານ"



ຮູບທີ 1.1 ໂຕອູດຫລາຍໂຕໄດ້ອາໃສຮົ່ມຈາກຊາກກຳປັ່ນ ຢູ່ໃກ້ ບ້ານຊາມບູລ, ແຕ່ກ່ອນເປັນບ້ານ ຊາວປະມົງ ທີ່ຢູ່ໃນແຄມທະເລ ອາຣາລ Aral (ກາຊັກສະຖານ)

ບົດຕໍ່ໄປຈະໄດ້ຈັດໃນຮູບແບບຕາມລະດັບ ຂັ້ນຕອນໄລຍະໂຄງການ ທີ່ໄດ້ສະແດງໃນ ຕາຕະລາງທີ 1.1. ບົດທີ 2 ເນັ້ນໃສ່ຕົ້ນຕໍ ການສ້າງແຮງຈູງໃຈ, ທີ່-ໄດ້ອະທິບາຍ ການສ້າງຮູບ-ແບບ ການແບ່ງປັນຜົນປະໂຫຍດ ແລະ ທ່າແຮງ ຂອງການຮ່ວມມື ດ້ານຜົນປະໂຫຍດ ແລະ ຄ່າໃຊ້ຈ່າຍ ຊຶ່ງເປັນພື້ນຖານສິ່ງຊຸກຍູ້ສຳລັບ ການຄຸ້ມຄອງແມ່ນ້ຳຂ້າມຜ່ານ ຊາຍແດນ. ບົດທີ 3, 4 ແລະ 5 ໄດ້ພົວພັນໂດຍກົງກັບໄລຍະການອອກແບບ. ບົດທີ3 ໄດ້ເລັ່ງໃສ່ການເຂົ້າຮ່ວມຂອງ ຜູ້ມີ

ສ່ວນຮ່ວມ ຊຶ່ງເປັນສິ່ງທີ່ຈຳເປັນ ສຳລັບການກຳນົດ ຜົນປະໂຫຍດ ແລະ ຄ່າໃຊ້ຈ່າຍທີ່ເປັນທ່າແຮງ, ຮູບແບບຂອງສິ່ງຈູງໃຈທົດແທນ ແລະ ເພື່ອຮັບປະກັນຄວາມສະເໝີພາບ ແລະ ຄວາມຍືນຍົງ. ບົດທີ4 ອະທິບາຍເຖິງກອບນະໂຍບາຍ ທາງກົດໝາຍ ທີ່ໄດ້ໃຫ້ຂໍ້ແນະນຳທາງກົດໝາຍ ແລະ ທິດທາງສຳລັບການເຈລະຈາ ໃນຄວາມຮ່ວມມືຂ້າມຜ່ານຊາຍແດນ, ທັງເປັນວິທີທາງທີ່ສຳຄັນຂອງການ ຊີ້ນຳ ແລະ ຈັດຕັ້ງປະຕິບັດ ບັນດາຂໍ້ຕົກລົງ. ບົດທີ5 ອະທິບາຍເຖິງ ສະຖາບັນຈັດຕັ້ງ ແລະ ລັກສະນະ ຂອງສະຖາບັນການຈັດຕັ້ງທີ່ຈຳເປັນໃນການສ້າງ ແລະຮັກສາການຮ່ວມມື. ສຸດທ້າຍ, ບົດທີ6 ອະທິບາຍເຖິງຄວາມທ້າທາຍໃນໂລກແຫ່ງຄວາມເປັນຈິງ ຂອງການດຳເນີນການຮ່ວມມືດ້ານ ນ້ຳຂ້າມຜ່ານຊາຍແດນ ແລະ ໃຫ້ບາງຕົວຢ່າງ ແຜນດຳເນີນງານ ເພື່ອຕິດຕາມໝາກຜົນທີ່ເປັນສິ່ງທ້າທາຍອັນໃຫຍ່ນີ້.

*ຕາຕະລາງທີ 1.1 ການລຽງລະດັບຂອງບົດຕ່າງໆ ຕໍ່ກັບຂັ້ນຕອນຂອງການພັດທະນາ ວິທີທາງການແບ່ງປັນຜົນປະໂຫຍດຂອງການຄຸ້ມຄອງນ້ຳ ຂ້າມຜ່ານຊາຍແດນ*

| | ໄລຍະທີ 1<br>**ການກະຕຸ້ນ** | ໄລຍະທີ 2<br>**ການອອກແບບ** | ໄລຍະທີ 3<br>**ການຈັດຕັ້ງປະຕິບັດ** |
|---|---|---|---|
| **ການແບ່ງປັນຜົນປະໂຫຍດ**<br>ບົດທີ 2 | ●● | | |
| **ການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍ**<br>ບົດທີ 3 | | ●● | |
| **ກົດໝາຍ**<br>ບົດທີ4 | | ●● | |
| **ສະຖາບັນ**<br>ບົດທີ 5 | | ●● | |
| **ການຈັດຕັ້ງປະຕິບັດ**<br>ບົດທີ 6 | | | ●● |



# ໝວດທີ2

## ເປັນຫຍັງຈຶ່ງແບ່ງປັນ? ຜົນປະໂຫຍດ (ແລະ ຄ່າໃຊ້ຈ່າຍ) ຈາກການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ.

ຜູ້ໃຊ້ນ້ຳທັງໝົດ ຈະແບ່ງປັນນ້ຳຮ່ວມກັນເມື່ອພວກເຂົາເຈົ້າເຊື່ອວ່າ ມັນເປັນທາງເລືອກທີ່ດີທີ່ສຸດ ຂອງພວກເຂົາເຈົ້າ. ນີ້ເປັນກິດເກມທີ່ມີເຫດຜົນ-ໃນເມື່ອທັງໝົດທຸກຮູບແບບ ແລະ ມູນຄ່າຕົວຈິງຂອງຜົນປະໂຫຍດ ແລະ ຄ່າໃຊ້ຈ່າຍໄດ້ຖືກພິຈາລະນາເຂົ້າໃນການປະເມີນຜົນທາງເລືອກທີ່ເປັນໄປໄດ້.

*"ຜູ້ໃຊ້ນ້ຳຈະແບ່ງປັນກັນໃຊ້ນ້ຳ ໃນເມື່ອພວກເຂົາເຈົ້າເຊື່ອວ່າ ມັນເປັນທາງເລືອກທີ່ດີທີ່ສຸດຂອງພວກເຂົາເຈົ້າ"*

### *2.1 ການແບ່ງປັນນ້ຳ ຕໍ່ກັບ ການແບ່ງປັນຜົນປະໂຫຍດຈາກນ້ຳ.*

ຕາມປະເພນີ, ການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ໄດ້ລວມເອົາທັງ ການຈັດສັນການ ແບ່ງປັນນ້ຳ ລະຫວ່າງປະເທດ. ແຕ່ການຈັດສັນນ້ຳແບບຕົບຊຸດ ສາມາດລວມເອົາທຸກປະເທດ ໃນກອບແຜນງານ ຜູ້ໄດ້-ຜູ້ເສຍ ກັບບາງໂອກາດເພື່ອການປະນີປະນອມ ແລະ ບໍ່ມີສິ່ງທົດແທນ ສຳລັບການຄຸ້ມຄອງເຂດອ່າງນ້ຳ. ການແບ່ງປັນຜົນປະໂຫຍດ ໃຫ້ກອບນະໂຍບາຍ ທີ່ມີຄວາມດັດປັບໄດ້ຫຼາຍຂຶ້ນ ທີ່ສາມາດເພີ້ມຄວາມເປັນໄປໄດ້ ໃນການຮ່ວມມືຫລາຍແບບ.

*"ຈຸດສູມ ໃນດ້ານການຈັດສັນນ້ຳ ໄດ້ລວມເອົາທັງ ການຈັດສັນການແບ່ງປັນນ້ຳ ລະ ຫວ່າງປະເທດ. ແຕ່ການຈັດສັນນ້ຳແບບຕົບຊຸດ ສາມາດລວມເອົາ ທຸກປະເທດໃນກອບ ແຜນງານ ຜູ້ໄດ້-ຜູ້ເສຍ ກັບບາງໂອກາດ ເພື່ອການປະນີປະນອມ ແລະ ບໍ່ມີສິ່ງທົດແທນ ສຳລັບການຄຸ້ມຄອງເຂດອ່າງນ້ຳ.*

ການແບ່ງປັນນ້ຳຜ່ານການຮັບຮອງສິດທີ່ໄດ້ມອບໝາຍ ຍັງຄົງເປັນວິທີທີ່ໄດ້ຮັບການຍອມຮັບ ຢ່າງກ້ວາງຂວາງທີ່ສຸດ ເຊິ່ງລັດຕ່າງໆໄດ້ເຈລະຈາການແບ່ງປັນແມ່ນ້ຳລະຫວ່າງປະເທດ. ການຈັດສັນນ້ຳມີການຮັບຮູ້ໂດຍທົ່ວໄປ ຕາມວິທີການທີ່ບໍ່ຊັດເຈນ ເຊິ່ງຊັບພະຍາກອນນ້ຳ ທີ່ມີການຈຳກັດ ແລະ ສ່ວນໃຫຍ່ຜູ້ໜຶ່ງ ໃຊ້ຈະບໍ່ໄດ້ນຶກເຖິງຜູ້ອື່ນ. ນອກຈາກນີ້, ສິດທິໃນນ້ຳ ແມ່ນເປັນພຽງວິທີທາງໜຶ່ງສຳລັບການສົນທະນາ. ຖ້າການເຈລະຈາສິດທິດ້ານນ້ຳ ຖືກຢຸດສະງັກອາດເປັນເລື່ອງຍາກທີ່ຈະແກ້ໄຂ ເພາະບໍ່ມີສິ່ງອື່ນທີ່ສາມາດນຳມາເພື່ອຈະເຈລະຈາ.

ໃນຄວາມເປັນຈິງ, ເຖິງແມ່ນວ່າ ແຫຼ່ງຊັບພະຍາກອນນ້ຳທາງກາຍະພາບ ແມ່ນບໍ່ຈຳກັດ, ປະລິມານຂອງແຫຼ່ງນ້ຳທີ່ມີຢູ່ ສາມາດເພີ່ມໂດຍການຈັດຕັ້ງປະຕິບັດຫລາຍກິດຈະກຳ ຕົວຢ່າງເຊັ່ນ ການຄຸ້ມຄອງອ່າງໂຕ່ງນ້ຳ ຢ່າງມີ ປະສິດທິພາບ ສາມາດເພີ້ມຊັບພະຍາກອນນ້ຳ ໂດຍການ ຫຼຸດການເຊາະເຈື່ອນ, ເພີ່ມການດູດຊຶມຂອງນ້ຳລົງໄປໃນດິນ ແລະ ເຮັດໃຫ້ການນ້ຳໄຫຼຂອງນ້ຳຊ້າລົງ, ໂດຍການ ເກັບກັກນ້ຳຕະຫຼອດປີ ເພື່ອຮັກສາການປ່ຽນແປງປະລິມານນ້ຳຝົນ ແລະ ເກັບນ້ຳໃນປີທີ່ມີຝົນທີ່ອຸດົມສົມບູນທີ່ອາດເສຍໄປ; ແລະ ໂດຍການ ຮັກສາໄວ້ໃນອ່າງນ້ຳເຫຼົ່ານີ້ ເພື່ອໃຫ້ຫລຸດ ຜ່ອນການສູນເສຍຍ້ອນການລະເຫີຍ ແລະ ການປ່ຽນແປງທາງສິ່ງແວດລ້ອມ.

ເຂດແຫຼ່ງນ້ຳທີ່ມີການຄຸ້ມຄອງທີ່ດີ ຍັງໃຫ້ຜົນປະໂຫຍດທາງບໍລິໂພກທາງອ້ອມຢ່າງຫລວງຫຼາຍເຊັ່ນ: ການປະມົງ, ການເດີນເຮືອ, ການພັກຜ່ອນຢ່ອນໃຈ, ຖິ່ນທີ່ຢູ່ອາໄສຂອງຊີວະນາໆພັນ, ແລະ ໃນຫລາຍກໍລະນີ ການຜະລິດໄຟຟ້າ

ນ້ຳຕົກ. ການໃຊ້ນ້ຳເພື່ອຫລາຍຈຸດປະສົງ ເຫຼົ່ານີ້ຈະບໍ່ຈຳເປັນຕ້ອງຫລຸດຜ່ອນນ້ຳທີ່ມີຢູ່ໃນ ລະບົບສຳລັບການໃຊ້ໃນຈຸດປະສົງອື່ນໆ.

ເມື່ອນັກເຈລະຈາ ໄດ້ເນັ້ນໃສ່ພຽງແຕ່ ໃນການຈັດສັນແບ່ງປັນນ້ຳ, ມັນເປັນສິ່ງຈູງໃຈພຽງໜ້ອຍດຽວ ໃນການນຳສະເໜີທາງເລືອກເຫຼົ່ານີ້ ແລະ ອາດເປັນທ່າແຮງດ້ານປະໂຫຍດຫຼາຍຂຶ້ນ - ນຳໃຊ້ຫລາຍຮູບແບບ. ໃນທາງກົງກັນ, ຈຸດເລັ່ງໃສ່ ດ້ານການແບ່ງປັນຜົນປະໂຫຍດໄດ້ສະແດງ ໃຫ້ເຫັນຢ່າງຊັດເຈນວິທີການຕ່າງໆເຊິ່ງໃຫ້ຄວາມຮ່ວມມືສາມາດເພີ່ມຜົນປະໂຫຍດຂອງແມ່ນ້ຳ ແລະ ຖ້າປະຕິບັດແບບນີ້ ສິ່ງເສີມຄວາມຍືນຍົງ ແລະ ປະສິດທິພາບ ພຽງແຕ່ມີການຄຸ້ມຄອງ ຊັບພະຍາກອນນ້ຳທີ່ດີສາມາດເພີ່ມບໍລິມາດນ້ຳທັງລະບົບແມ່ນ້ຳ, ໃນການຄຸ້ມຄອງອ່າງແມ່ນ້ຳ ແລະ ການພັດທະນາ ສາມາດເພີ້ມໂດຍລວມຄຸນນະພາບ ແລະ ຜົນຜະລິດຂອງລະບົບແມ່ນ້ຳ. ໃນບາງກໍລະນີ ທ່າແຮງຂອງຜົນປະໂຫຍດທີ່ບໍ່ແມ່ນດ້ານບໍລິໂພກ ສາມາດພົບເຫັນໄດ້ ໂດຍບໍ່ຕ້ອງປ່ຽນຮູບແບບຂອງການນຳໃຊ້ນ້ຳ. ຫລາຍອົງປະກອບໃນການຄຸ້ມຄອງເຂດອ່າງນ້ຳ ໃນການນຳໃຊ້ນ້ຳເພື່ອການບໍລິໂພກ ແລະອື່ນໆ ສາມາດນຳໃຊ້ເພື່ອຊອກຫາບັນດາທາງເລືອກ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງນ້ຳ ແລະ ທຸກປະເທດທີ່ມີຊາຍຝັ່ງແຄມແມ່ນ້ຳ.

*"ວິທີການແບ່ງປັນຜົນປະໂຫຍດ ສະແດງໃຫ້ເຫັນເຖິງວິທີການຮ່ວມມື ຈຶ່ງສາມາດເພີ່ມ ປະໂຫຍດ ຂອງແມ່ນ້ຳ"*

ຫລາຍຝ່າຍເຈລະຈາ ໄດ້ມີຄວາມສົນໃຈກ່ຽວກັບນ້ຳເທົ່ານັ້ນ, ແທນທີ່ຈະເບິ່ງບັນດາໂອກາດທາງດ້ານເສດຖະກິດ ແລະການໃຫ້ການບໍລິການຂອງລະບົບນິເວດ ທີ່ສາມາດໄດ້ຮັບຫລາຍຈາກການເຂົ້າເຖິງ ພຽງແຕ່ນ້ຳ. ໃນເວລາສອງຊາດ ເຈລະຈາການຄຸ້ມຄອງ ແລະ ການພັດທະນາຂອງການແບ່ງປັນນ້ຳຮ່ວມກັນ, ເຂົາເຈົ້າອາດເນັ້ນໃສ່ພຽງແຕ່ ການຈັດສັນສິດທິດ້ານນ້ຳ ຫລື, ປັບຕົວຫລາຍຂຶ້ນໂດຍເນັ້ນໜັກໃສ່ການພັດທະນາ ແລະ ການກະຈາຍຜົນປະໂຫຍດ ຈາກການໃຊ້ນ້ຳ (ເບິ່ງຕາຕະລາງ 2.1).

ການແບ່ງປັນຜົນປະໂຫຍດ ໃຫ້ບັນດາປະເທດໃກ້ຄຽງ ໃນການປັບປ່ຽນ ເພື່ອແບ່ງແຍກ ການກະຈາຍຜົນປະໂຫຍດນ້ຳ ທາງດ້ານກາຍະພາບ ຂອງການພັດທະນາແມ່ນ້ຳ (ໃນກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດ), ຈາກການກະຈາຍ ຜົນປະໂຫຍດທາງເສດຖະກິດ (ຜູ້ທີ່ໄດ້ຮັບຜົນປະໂຫຍດ ຈາກກິດຈະກຳເຫຼົ່ານັ້ນ). ຕາມທິດສະດີການແບ່ງແຍກນີ້ ໄດ້ເອື້ອອຳນວຍ ໃຫ້ປະເທດທີ່ຢູ່ແຄມແມ່ນ້ຳໄດ້ເນັ້ນໃສ່ ກ່ອນອື່ນໝົດການສ້າງລາຍໄດ້ໃນຂອບອ່າງແມ່ນ້ຳໂດຍລວມ, ຕໍ່ມາແມ່ນການແບ່ງປັນຜົນປະໂຫຍດ ໃນວິທີທາງທີ່ໄດ້ຕົກລົງກັນຢ່າງເປັນທຳ. ດັ່ງນັ້ນ, ບັນດາປະເທດໃກ້ຄຽງ ສາມາດ ຄຸ້ມຄອງອ່າງນ້ຳ ຢ່າງລວມສູນ ແລະ ມີປະສິດທິພາບທັງອະນຸລັກ ລະບົບນິເວດທີ່ສຳຄັນ ແລະ ເລືອກສະຖານທີ່ໆເໝາະສົມສຳລັບການສ້າງພະລັງງານໄຟຟ້າ, ອຸດສະຫະກຳ ແລະ ການພັດທະນາກະສິກຳ ເພື່ອໃຫ້ມີປະສິດທິຜົນຫຼາຍທີ່ສຸດ ແລະ ຜົນກະທົບທັງ ທາງ ສິ່ງແວດລ້ອມ ແລະ ສັງຄົມໜ້ອຍທີ່ສຸດ.

ນັກເຈລະຈາໄດ້ເນັ້ນໜັກໃສ່ການ ແບ່ງປັນຜົນປະໂຫຍດທີ່ສາມາດນຳໃຊ້ຫລາຍກົນໄກເພື່ອເຈລະຈາ ການກະຈາຍຜົນປະໂຫຍດທີ່ໄດ້ຄາດກະໄວ້ໃຫ້ມີຄວາມໂປ່ງໃສ ໃຫ້ແທດເໝາະກັບທຸກຝ່າຍ (ເບິ່ງຕາຕະລາງທີ່ 2.2). ທຸກຝ່າຍ ຈະມີໂອກາດຫລາຍຂຶ້ນ ເພື່ອຊອກຫາວິທີການແກ້ໄຂອັນເປັນທີ່ຍອມຮັບ ແລະ ເປັນເອກະພາບ ຖ້າໄດ້ເຈລະຈາເຊິ່ງໜ້າ. ການປ່ຽນແປງຈຸດສູມໂດຍທີ່ບໍ່ພົວພັນກັບ ຜົນປະໂຫຍດຂອງຊັບພະຍາກອນ ຈາກອົງປະກອບທາງກາຍະພາບສາມາດນຳໃຊ້ເປັນກອບນະໂຍບາຍ ທີ່ດັດປັບໄດ້ເພີ້ມຂຶ້ນສຳລັບການເຈລະຈາ ໃນຂະນະດຽວກັນນັ້ນຍັງຮັກສາໂຄງສ້າງຂອງ ການ ກະຈາຍ ຜົນປະໂຫຍດຢ່າງເປັນທຳຢູ່.

*ກໍລະນີ 2.1 ແມ່ນ້ຳ ອິນດັສ-ເສີມຂະຫຍາຍການສື່ສານ, ພ້ອມທັງເຕົ້າໂຮມປະເທດທີ່ຢູ່ໃກ້ຄຽງກັນ*

ສົນທິສັນຍາແມ່ນ້ຳ ອິນດັສ (IWT) ໄດ້ລົງນາມໃນປີ 1960, ໄດ້ເຮັດໃຫ້ການສື່ສານ ແລະ ການຄຸ້ມຄອງຮ່ວມມືຂ້າມຜ່ານຊາຍແດນ ລະຫວ່າງປະເທດອິນເດຍ ແລະ ປາກິດສະຖານ ໄດ້ປະສົບຜົນສຳເລັດເກືອບ 50 ປີ - ໂດຍທີ່ຍັງມີສະພາບທາງຊາຍແດນ ແລະ ການສູ້ລົບ.

ການແບ່ງແຍກລະຫວ່າງ ອິນເດຍ ແລະ ປາກິສຖານ ໃນປີ 1947 ໄດ້ເຮັດໃຫ້ໃນແມ່ນ້ຳ ອິນດັສ ກາຍເປັນແມ່ນ້ຳສາກົນ. ການພຶ່ງພາອາໃສຂອງສອງປະເທດດ້ານແມ່ນ້ຳຂອງຕົນ ຈຶ່ງໄດ້ມີຄວາມຈຳເປັນຕ້ອງມີ ຂໍ້ຕົກລົງຮ່ວມມື ເພື່ອແກ້ໄຂ ຄວາມຮຽກຮ້ອງຕ້ອງການທີ່ຂັດແຍ້ງກັນ. ຫຼັງຈາກຫລາຍປີ ຂອງການເຈລະຈາ ສອງຝ່າຍ ທະນາຄານໂລກໄດ້ຖືກຂໍໃຫ້ເປັນສື່ກາງ ແລະ ເພື່ອຕິດຕາມການປຶກ ສາຫາລືພາຍໃນຢ່າງຈິງຈັງ ເພື່ອເຮັດບົດສະເໜີ ເພື່ອແບ່ງປັນລະບົບແມ່ນ້ຳ ລະຫວ່າງ ສອງປະເທດ. ບົດສະເໜີໄດ້ຈັດສັນ ແມ່ນ້ຳທາງຕາເວັນຕົກ ໃຫ້ແກ່ປະກິສຖານ ແລະ ແມ່ນ້ຳທາງຕາເວັນອອກ ໃຫ້ປະເທດອິນເດຍ.

ສົນທິສັນຍາ ໄດ້ສ້າງຕັ້ງ ຄະນະກຳມາທິການ ແມ່ນ້ຳ ອິນດັສ ທີ່ໄດ້ອອກແບບການສື່ສານ ເຊັ່ນ ການລາຍງານ ປະຈຳປີດ້ານສະຖານະພາບຂອງນ້ຳ ແລະ ຄວາມຕ້ອງການທີ່ຕ້ອງແຈ້ງໃຫ້ຮູ້ລ່ວງໜ້າສຳລັບ ແຜນພັດທະນາແມ່ນ້ຳ ແລະ ວາງກົນໄກການແກ້ໃຂຄວາມຂັດແຍ້ງ ທີ່ຊັດເຈນ.

IWT ໄດ້ພິສູດໃຫ້ເຫັນວ່າເປັນ ຂໍ້ຕົກລົງທີ່ໃຫຍ່ ໃນດ້ານບົດບາດການເມືອງທີ່ຄົບຊຸດຢ່າງຫລວງຫຼາຍ. ແຕ່ ຢ່າງໃດກໍຕາມ, ຈຸດອ່ອນຂອງ IWT ແມ່ນການຂາດກົນໄກ ສຳຫຼັບການມີສ່ວນຮ່ວມຂອງມວນຊົນ ແລະ ການ ຂາດວິທີ ການປະສົມປະສານ ໃນການຄຸ້ມຄອງນ້ຳ ທີ່ອາດນຳປະໂຫຍດຫຼາຍຂຶ້ນໃຫ້ແກ່ທຸກຄົນ. ທັງສອງປະເທດ ຍັງມີຄວາມກັງວົນຕໍ່ກັບ ຄວາມຕ້ອງການໃນການພັດທະນາ ແລະ ຄວາມກົດດັນ ໃນແມ່ນ້ຳ ລວມທັງ ຄຸນະພາບນ້ຳ ແລະ ຄວາມຕ້ອງການ ການໄຫຼວຽນ ຂອງສິ່ງແວດລ້ອມ ທີ່ບໍ່ໄດ້ຖືກແກ້ໃຂ ໃນເມື່ອ IWT ໄດ້ຖືກເຈລະຈາ. ອິນເດຍ ແລະ ປາກິສຖານ ກຳລັງສົນທະນາກ່ຽວກັບທາງເລືອກ ໃນການທົບທວນສົນທິສັນຍາ ແຕ່ມາຮອດປະຈຸບັນ ຍັງບໍ່ສາມາດຕົກລົງໄດ້ວ່າ ຜົນຂອງການທົບທວນຈະເປັນ ຂໍ້ຕົກລົງອີງໃສ່ພື້ນຖານຂອງວິທີການ ການຄຸ້ມຄອງອ່າງແມ່ນ້ຳແບບປະສົມປະສານ.

## *2.2 ຜົນປະໂຫຍດຂອງການຮ່ວມມື*

ຜົນປະໂຫຍດກະຕຸ້ນໃຫ້ເກີດການຮ່ວມມື, ດັ່ງນັ້ນ ເປັນສິ່ງທີ່ສຳຄັນ ໃນການກຳນົດຮູບແບບຄົບຊຸດ ຂອງທ່າແຮງ ຜົນປະໂຫຍດໃນການຮ່ວມມື. ສີ່ປະເພດຂອງຜົນປະໂຫຍດໃນການຮ່ວມມື ໄດ້ອະທິບາຍໃນຕາຕະລາງ 2.1.[7] ຜົນປະໂຫຍດທຳອິດ ແມ່ນການຮ່ວມມືທີ່ສ້າງຄວາມເຂັ້ມແຂງດ້ານການຄຸ້ມຄອງ ລະບົບນິເວດໃນເຂດອ່າງໂຕ່ງ, ການໃຫ້ຜົນປະໂຫຍດກັບແມ່ນ້ຳເອງ ແລະ ຜົນປະໂຫຍດອື່ນໆທັງໝົດ ທີ່ສາມາດຍາດໄດ້. ຜົນປະໂຫຍດທີສອງຄື ການຄຸ້ມຄອງ ແລະ ການພັດທະນາທີ່ມີລັກສະຮ່ວມມື ແລະ ປະສິດທິພາບ ໃນແມ່ນ້ຳທີ່ໃຊ້ຮ່ວມກັນໄດ້ໝາກຜົນໆປະໂຫຍດຫລັກຈາກແມ່ນ້ຳເຊັ່ນ: ການຜະລິດອາຫານ ແລະ ພະລັງງານທີ່ເພີ້ມຂຶ້ນ. ຄວາມເຄັ່ງຄຽດ ລະຫວ່າງ ການຮ່ວມມື ບັນດາລັດໃນປະເທດໃກ້ຄຽງຈະຖືກນຳສະເໜີເລື້ອຍໆໃນລະດັບໃຫຍ່ ຫຼືນ້ອຍ, ແລະ ຄວາມຕຶ່ງຄຽດທີ່ສ້າງຄ່າໃຊ້ຈ່າຍ. ຜົນປະໂຫຍດທີສາມ ຄື ການຮ່ວມມືຫລຸດຜ່ອນຄວາມຕຶ່ງຄຽດ ລະຫວ່າງບັນດາປະເທດໃກ້ຄຽງທີ່ມີ ການແຂ່ງຂັນກັນເຊິ່ງຈະຫລຸດຜ່ອນຄ່າໃຊ້ຈ່າຍ ຍ້ອນແມ່ນ້ຳ. ແລະໃນທີ່ສຸດ, ຄວາມຮ່ວມມື ທີ່ໄດ້ຮັບຜົນປະໂຫຍດຈາກແມ່ນ້ຳ ແລະ ຫຼຸດຄ່າໃຊ້ຈ່າຍ ຈາກແມ່ນ້ຳສາມາດເຫັນໝາກຜົນໃນຜົນປະໂຫຍດການຮ່ວມມື ປະເພດທີສີ່: ຄວາມຮ່ວມມືໂດຍລວມຫຼາຍຂຶ້ນ, ການລວມສູນດ້ານເສດຖະກິດ ລະຫວ່າງ ບັນດາລັດຕ່າງໆເຊິ່ງໄດ້ ອະທິບາຍຄືກັນກັບຜົນປະໂຫຍດ *ນອກເໜືອຈາກແມ່ນ້ຳ*

*"ຜົນປະໂຫຍດ ສ້າງໃຫ້ຄວາມຮ່ວມມື, ສະນັ້ນ ມັນຈຶ່ງເປັນສິ່ງສຳຄັນ ເພື່ອກຳນົດ ຜົນປະໂຫຍດທີ່ຄົບຊຸດ ທີ່ເປັນທ່າແຮງ ທາງດ້ານສິ່ງແວ້ດລ້ອມ ເສດຖະກິດ ແລະ ການເມືອງ"*

*ຕາຕະລາງ 2.1 ປະເພດຂອງຜົນປະໂຫຍດທີ່ໄດ້ຈາກການຮ່ວມມື ແຫລ່ງຂໍ້ມູນ: ປັບຈາກ* Sadoff & Grey (2002).

| | ສິ່ງທ້າທາຍ | ໂອກາດ |
|---|---|---|
| ***ປະເພດ1*** *ໃຫ້ຜົນປະໂຫຍດ* ***ແກ່ແມ່ນ້ຳ*** | ຄຸນະພາບນ້ຳ, ແຫຼ່ງ ນ້ຳ, ດິນບໍລິເວນນ້ຳ ແລະ ຊີວະນາໆພັນ ເສື່ອມໂຊມ | • ການຈັດການຕໍ່ກັບ ນ້ຳຖ້ວມ ແລະ ແຫ້ງ ແລ້ງ<br>• ການຄຸ້ມຄອງ ດ້ານການເຊາະເຈື່ອນ ແລະ ຕະກອນ<br>• ອະນຸລັກ ດິນບໍລິເວນນ້ຳ ແລະ ຊີວະນາໆ ພັນ<br>• ອະນຸລັກນ້ຳ ແລະ ການໄຫຼຂອງນ້ຳ |
| ***ປະເພດ2*** *ຜົນປະໂຫຍດທີ່ ໄດ້ ຮັບ* ***ຈາກ ແມ່ນ້ຳ*** | ຄວາມຕ້ອງການໃຊ້ນ້ຳ ເພີ້ມຂື້ນ ທາງ ດ້ານ ການພັດທະນາ ແລະ ການຄຸ້ມຄອງ | • ການຂະຫຍາຍເຂື່ອນໄຟຟ້າ, ກະສິກຳ ແລະ ການປະມົງ<br>• ປັບປຸງການດຳລົງຊີວິດ ແລະ ຮັບປະກັນດ້ານສະບຽງ ອາຫານ<br>• ການເດີນເຮືອ, ທ່ອງທ່ຽວ/ພັກຜ່ອນ<br>• ການໃຊ້ຈ່າຍສຳລັບການບໍລິການ ລະບົບນິເວດທີ່ພົວພັນກັບນ້ຳ |
| ***ປະເພດ3*** *ຫຼຸດຜ່ອນຄ່າໃຊ້* ***ຍ້ອນແມ່ນ້ຳ*** | ການພົວພັນລະດັບ ພາກພື້ນ ແລະ ຜົນກະທົບທາງດ້ານ ເສດຖະກິດ, ການເມືອງ | • ການຮ່ວມມື ແລະເພີ້ມຄວາມໝັ້ນຄົງທາງການ ເມືອງ<br>• ນະໂຍບາຍໄດ້ປ່ຽນຈາກການພຽງພໍ-ກຸ້ມຕົວເອງທາງດ້ານອາຫານ/ ພະລັງງານ ເຖິງ ຄວາມໝັ້ນຄົງ ທາງ ດ້ານ ອາຫານ ແລະ ພະລັງງານ |
| ***ປະເພດ4*** *ສ້າງຜົນປະໂຫຍດ* ***ນອກເໜືອຈາກແມ່ນ້ຳ*** | ສະພາບແບ່ງແຍກ ໃນພາກພື້ນ | • ການຮ່ວມມືກັນໃນພາກພື້ນ<br>• ການລົງທຶນ ແລະ ການພັດທະນາ ທາງດ້ານ ການຄ້າ ແລະ ອຸດສະຫະກຳ ໃນພາກພື້ນ<br>• ການຄ້າໃນພາກພື້ນ ແລະ ການເພີ້ມການ ເຂົ້າເຖິງການ ຕະຫຼາດ (ສົ່ງອອກ)<br>• ຄວາມຫລາກຫລາຍທາງເສດຖະກິດ |

*ຜົນປະໂຫຍດຕໍ່ແມ່ນ້ຳ* ທີ່ສາມາດເພີ້ມຂື້ນຈາກ ການຮ່ວມມືໃນຄຸ້ມຄອງອ່າງແມ່ນ້ຳ ຂອງລະບົບນິເວດທາງນ້ຳ. ການຮ່ວມມືໃນການຄຸ້ມຄອງອ່າງແມ່ນ້ຳ ສາມາດເປັນຄຸນຄ່າ ແລະຈຸດເລີ້ມທີ່ເຫັນວ່າ ບໍ່ເປັນບັນຫາສຳລັບ ຄວາມຮ່ວມມື ລະຫວ່າງປະເທດ. ການຄຸ້ມຄອງສິ່ງແວດລ້ອມ ເປັນຮາກຖານທີ່ສຳຄັນຂອງ ການຄຸ້ມຄອງ ແລະພັດທະນາ ອ່າງແມ່ນ້ຳ, ແລະ ສາມາດນຳຜົນປະໂຫຍດຫລາຍຢ່າງ ໃຫ້ກັບທຸກການນຳໃຊ້ແມ່ນ້ຳ ແລະ ຜູ້ນຳໃຊ້. ເຖິງແມ່ນວ່າ ແມ່ນ້ຳແມ່ນລະບົບນິເວດທີ່ອ່ອນໄຫວ ທີ່ມັກສາມາດຟື້ນຕົວຈາກທຳມະຊາດ ແລະ ການກະທຳຂອງມະນຸດ, ການເພີ້ມຂື້ນຂອງ ປະຊາກອນ ແລະ ອຸດສະຫະກຳ ຊຶ່ງມັນຈະກໍ່ໃຫ້ເກີດຄວາມເສຍຫາຍ ຕົວຢ່າງ ເຮັດໃຫ້ການໄຫຼຂອງນ້ຳຫຼຸດລົງ, ທຳລາຍຄຸນະພາບ ນ້ຳ ແລະ ຈຳນວນປາຫລຸດລົງ. ການຈັດຫາກິດຈະກຳເພື່ອປົກປັກຮັກຮັກສາແມ່ນ້ຳ ທີ່ເປັນຮູບແບບທີ່ດີ ແລະຮ່ວມມື, ແມ້ແຕ່ໃນພາຍໃນປະເທດດຽວ ສາມາດຢັ້ງຢືນວ່າເປັນ ສິ່ງທີ່ຄົບຊຸດ ແລະ ທ້າທາຍຢ່າງໃຫຍ່ຫລວງ ໃນການປົກປ້ອງ ແມ່ນ້ຳທີ່ຂ້າມຜ່າຍຊາຍແດນ. ໃນບາງສະຖານະການ, ໂດຍສະເພາະໃນເຂດທີ່ມີຄວາມທຸກຍາກທີ່ສຸດ ສ່ວນຫລາຍແມ່ນ ໄດ້ໃຫ້ຄວາມສຳຄັນຢ່າງຊັດເຈນໃສ່ ການພັດທະນາແມ່ນ້ຳສຳລັບຄວາມຕ້ອງການຂອງຄົນຫລາຍກວ່າການຄຸ້ມຄອງລະບົບນິເວດ. ຜ່ານມາ ແມ່ນ້ຳມີລະບົບດຸ່ນດ່ຽງ ທີ່ໄດ້ຖືກລົບກວນໂດຍ ການພັດທະນາທີ່ບໍ່ມີການຄຸ້ມຄອງທີ່ດີ

ທີ່ໄດ້ສິ່ງຜົນກະທົບ ທາງສັງຄົມ ແລະສິ່ງແວດລ້ອມ. ການປ້ອງກັນສິ່ງແວດລ້ອມ ແລະ ພັດທະນາທາງເສດຖະກິດ ບໍ່ສາມາດແຍກອອກຈາກກັນໄດ້ຢ່າງງ່າຍດາຍ. ການຮ່ວມມືກັນໃນການ ຄຸ້ມຄອງດິນ ແລະ ນ້ຳພາຍໃນລະບົບນິເວດ ອ່າງແມ່ນ້ຳເປັນການນຳຜົນປະໂຫຍດໃຫ້ແມ່ນ້ຳ ແລະ ອາດເປັນສິ່ງຈຳເປັນສຳລັບ ໄດ້ຮັບ *ຜົນປະໂຫຍດຈາກນ້ຳ.*

*ຜົນປະໂຫຍດຈາກແມ່ນ້ຳ* ສາມາດເພີ້ມຂື້ນ ໂດຍການຄຸ້ມຄອງອ່າງແມ່ນ້ຳ ຈາກຮູບແບບໃດໜຶ່ງ ເພື່ອເພີ້ມທັງຄຸນນະພາບ ບໍລິມາດທີ່ມີ ແລະ ຜົນຜະລິດທາງເສດຖະກິດຂອງ ແມ່ນ້ຳ. ການຄຸ້ມຄອງອ່າງແມ່ນ້ຳທີ່ດີ ສິ່ງທີ່ດີ ສິ່ງເສີມແນວຄວາມຄິດທີ່ເປັນລະບົບ ແລະປະສົມປະສານ ເຊິ່ງລວມມີ ໂອກາດຂອງການນຳໃຊ້ນ້ຳຢ່າງຄົບຊຸດ ແລະສາຍພົວພັນພາຍໃນລະບົບທີ່ຄວນພິຈາລະນາ. ອາຫານຫລາຍຂື້ນ, ອຳນາດເພີ້ມຂື້ນ, ໂອກາດທີ່ສາມາດຍາດມາໄດ້ເພີ້ມຂື້ນ ທັງໝົດເຫລົ່ານີ້ສາມາດຍາດມາໄດ້ ໃນຂະນະທີ່ຮັກສາສິ່ງແວດລ້ອມແບບປະສົມປະສານ. ທາງເລືອກທີ່ທົດແທນທີ່ຫຍຸ້ງຍາກມັກຈະພົບເຫັນ ລະຫວ່າງການອະນຸລັກສິ່ງແວດລ້ອມ ແລະ ການພັດທະນາ ແມ່ນ້ຳ, ແຕ່ການປະເມີນຜົນກະທົບເຫລົ່ານີ້ໄດ້ຖືກສ້າງຂື້ນເລື້ອຍໆ ໃນລະດັບອ່າງ. ການປ່ຽນແປງແນວຄວາມຄິດ ໃນການວາງແຜນໃນລະດັບອ່າງຍັງຈະນຳຜົນປະໂຫຍດທາງດ້ານ ເສດຖະກິດ ທີ່ໄດ້ມາຈາກ ການຮ່ວມມື ໃນການຄຸ້ມຄອງ ແມ່ນຳຮ່ວມກັນ.

*"ການວາງແຜນທີ່ມີການຮ່ວມມື ໃນລະດັບອ່າງແມ່ນ້ຳ ນຳຜົນໄດ້ຮັບທີ່ເປັນທ່າແຮງທາງເສດຖະກິດ"*

*ກໍລະນີ 2.2 ການຄຸ້ມຄອງແບບປະສົມປະສານຂອງແມ່ນ້ຳ ເຊນີການ.*[8]

ອົງການພັດທະນາອ່າງແມ່ນ້ຳເຊນີການ ເປັນອົງການ ທີ່ສົ່ງເສີມການຮ່ວມມືໃນຮູບແບບ ເພື່ອສົ່ງເສີມ ການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ແລະ ການລົງທຶນຮ່ວມກັນ. ອົງການດັ່ງກ່າວ ໄດ້ສ້າງຕັ້ງຂື້ນໃນປີ 1972 ໂດຍມີ ປະເທດມາລີ, ໂມລິຕາເນຍ ແລະ ເຊນາການ, ພ້ອມທັງພາລະບົດບາດຂອງເຂົາເຈົ້າ ເພື່ອສ້າງຄວາມ ເຂັ້ມແຂງ ທາງດ້ານເສດຖະກິດ ຂອງລັດທີ່ເປັນສະມາຊິກ ແລະ ປົກປ້ອງຊີວິດການເປັນຢູ່ ຜ່ານການພັດທະນາ ຊັບພະຍາກອນນ້ຳ ແລະ ພະລັງງານ ຈາກແນວຄວາມຄິດການຄຸ້ມຄອງອ່າງແມ່ນ້ຳ.
ອົງການພັດທະນາອ່າງແມ່ນ້ຳເຊນີການ (OMVS) ໄດ້ສ້າງຂື້ນ ແລະບໍລິຫານງານໃນປະຈຸບັນດ້ວຍ ເຂື່ອນທີ່ມີຫລາຍວັດຖຸປະສົງ - ເຂື່ອນມານັນຕາລີ (ໃນເມືອງມາລີ) ແລະ ເຂື່ອນດີອາມາ (ໃນຊາຍແດນຂອງ ໂມຣີຕາ ເນຍ ແລະ ເຊເນການ). ຄ່າໃຊ້ຈ່າຍແລະຜົນປະໂຫຍດຂອງການລົງທຶນດັ່ງກ່າວ ໄດ້ຖືກແບ່ງປັນລະຫວ່າງ 3 ລັດທີ່ຢູ່ພາຍໃນ OMVS - ມາລີ, ໂມຣີຕາເນຍ ແລະ ເຊເນການ - ພາຍໃຕ້ຂໍ້ຕົກລົງທີ່ເປັນເອະພາບ. ເມື່ອໂຄງສ້າງດັ່ງກ່າວ ໄດ້ຖືກສ້າງຂື້ນເປັນຕົວແບບ ສຳລັບການສ້າງຄວາມຮ່ວມມື, ພວກເຂົາເຈົ້າໄດ້ມີຜົນກະທົບທາງລົບຕໍ່ ສິ່ງແວດລ້ອມ ແລະ ສັງຄົມ. ຄວາມພະຍາຍາມທີ່ສຳຄັນດັ່ງກ່າວ ສາມາດເຮັດໃຫ້ແກ້ໃຂໄດ້ບັນຫາດັ່ງກ່າວ.
ໃນປີ 2002, ຂໍ້ຕົກລົງດ້ານນ້ຳ ໄດ້ຖືກຮັບຮອງ ເຊິ່ງລວມມີຫັລກເກນ ກ່ຽວກັບການປະຕິບັດທີ່ດີ ໃນດ້ານ ຄວາມສະເໝີພາບ, ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ແລະ ການປ້ອງກັນ ສິ່ງແວດລ້ອມ. ສິ່ງດັ່ງກ່າວໄດ້ຮຽກຮ້ອງ, ຕົວຢ່າງ ການບໍລິຫານຈັດການເຂື່ອນ ໃນລະດັບອ່າງ ຕ້ອງໄດ້ຮັບປະກັນ ພື້ນຖານຂໍ້ມູນການໄຫຼຂອງນ້ຳເພື່ອສິ່ງແວດລ້ອມ, ໃນເວລາທີ່ ເງື່ອນໃຂທີ່ມີຂໍ້ມູນທາງອຸທົກກະສາດ ຕລອດປີ ແລະ ການໄຫລຂອງນ້ຳຈາກ ເຂື່ອນ ມານັນຕາລີ ເພື່ອປ້ອງກັນນ້ຳຖ້ວມ ເພື່ອບັນລຸໄດ້ຕາມຄວາມຕ້ອງການ ໃນການ ປັບປຸງລະບົບນິເວດທາງ ກະເສດແລະທົ່ງພຽງນ້ຳຖ້ວມ ຢູ່ໃຕ້ແມ່ນ້ຳ.
ປະເທດ ກີເນຍ Guinea, ເປັນປະເທດສຸດທ້າຍແລະຍອດນ້ຳ ຂອງແມ່ນ້ຳເຊເນການ ທີ່ໄດ້ເຂົ້າເປັນ ສະມາຊິກ ຂອງ OMVS. ການເຂົ້າຮ່ວມຂອງ ກີເນຍ ເຮັດໃຫ້ການຄຸ້ມຄອງອ່າງເຊເນການຄົບຊຸດ, ແລະ ໃຫ້ໂອກາດສຳລັບການສ້າງຄວາມເຂັ້ມແຂງ ການປະສານງານດ້ານການຄຸ້ມຄອງອ່າງໂຕ່ງ ແລະ ການພັດທະນາພະລັງງານ ໄຟຟ້າຫລາຍຂື້ນ.

*ຍ້ອນແມ່ນ້ຳ* ຫລາຍປະເທດໃກ້ຄຽງ ໄດ້ມີປະຫວັດສະພາບຕຶງຄຽດ. ຍາກທີ່ໄດ້ຮັບການແກ້ໃຂ ຖ້າມີການຮ່ວມມື ຈະຊ່ວຍຫລຸດຄວາມຕຶ່ງຄຽດດັ່ງກ່າວ ທີ່ໄດ້ເກີດຂື້ນໃນເວລາກວດກາການໄຫລຂອງແມ່ນ້ຳ. ບັນຫາຕ່າງໆທີ່ພົວພັນກັບ

ຄວາມຈຳເປັນທາງ ຄວາມໝັ້ນຄົງ, ຍຸດທະສາດ ແລະ ອະທິປະໄຕ (ສ່ວນໃຫຍ່ແມ່ນພົວພັນກັນ, ແລະ ອາດຄ້າຍຄືກັນກັບສະພາບຕຶງຄຽດອື່ນໆ) ອາດເປັນປະເດັນສຳລັບ ສາຍພົວພັນທາງການເມືອງກ່ຽວກັບຊາຍແດນ ລະຫວ່າງລັດຕ່າງໆພາຍໃນອ່າງແມ່ນ້ຳໜຶ່ງ ແລະອາດກາຍເປັນບັນຫາ ສຳລັບການພັດທະນາ ໂດຍການສະກັດກັ້ນ ການຄ້າລະດັບພາກພື້ນ ທີ່ສ້າງທັງຊັບພະຍາກອນມະນຸດ ແລະການເງິນ. ຄວາມຕຶງຄຽດແລະຄ່າໃຊ້ຈ່າຍເຫຼົ່ານີ້ ມີຢູ່ໃນທຸກໆອ່າງແມ່ນ້ຳ ແລະຕ່າງລະດັບ; ເຊັ່ນໃນບາງອ່າງ ອາດບໍ່ມີຄວາມຮຸນແຮງ, ໃນເຂດອື່ນໆ ອາດສະແດງໃຫ້ເຫັນເປັນສິ່ງທ້າທາຍຢ່າງຫລວງຫລາຍ. ສິ່ງທ້າທາຍ ແມ່ນສ່ວນໃຫຍ່ສຳລັບ ນັກເຈລະຈາແມ່ນ້ຳສາກົນ ເພື່ອເສີມສ້າງສາຍພົວພັນ ຜ່ານບັນດາໂອກາດໃນການນຳໃຊ້ຮ່ວມກັນ ເພື່ອປະກອບສ່ວນເຂົ້າໃນຜົນປະໂຫຍດຂອງການຮ່ວມມື ແລະ ການປະສານສົມທົບຫລາຍກ່ວາ*(ນອກເໜືອ)ແມ່ນ້ຳ.*

> *" ການຫລຸດຜ່ອນ ຄວາມຕຶງຄຽດ ສາມາດເປັນຜົນປະໂຫຍດຢ່າງແທ້ຈິງ ທີ່ເກີດຂຶ້ນເລື້ອຍໆ ລະຫວ່າງ ບັນດາຜູ້ຊົມໃຊ້ນ້ຳ"*

*ຜົນປະໂຫຍດນອກເໜືອຈາກນ້ຳ* ແມ່ນນອນໃນຫລາຍໆບັນດາໂອກາດ ສຳລັບການຮ່ວມມື. ການຮ່ວມມືໃນການຄຸ້ມຄອງແລະພັດທະນາ ແມ່ນ້ຳສາກົນ ສາມາດສິ່ງເສີມ ແລະເສີມສ້າງຄວາມເຂັ້ມແຂງ ໃນການຮ່ວມມືກັບປະເທດອື່ນໆ. ການເພີ້ມຜົນປະໂຫຍດຈາກແມ່ນ້ຳ ແລະການຫລຸດຄ່າໃຊ້ຈ່າຍທີ່ເກີດຂຶ້ນຍ້ອນນ້ຳ ສາມາດກະຕຸ້ນການຂະຫຍາຍຕົວທາງເສດຖະກິດ ແລະການຮ່ວມມືໃນລະດັບພາກພື້ນ, ທັງສ້າງຜົນປະໂຫຍດໃຫ້ແກ່ ຂະແໜງການທີ່ບໍ່ໄດ້ກ່ຽວຂ້ອງໂດຍກົງ. ການໄຫຼຂອງນ້ຳ ນອກຈາກນ້ຳ ອາດຂະຫຍາຍຕົວເຊັ່ນກັນ – ການເພີ້ມການສື່ສານ ແລະ ການຈຳໜ່າຍ. ສະນັ້ນ ຄວາມຄືບໜ້າໃນການປະສານງານ ດ້ານການຄຸ້ມຄອງນ້ຳຮ່ວມກັນ ສາມາດສ້າງ ແລະກະຕຸ້ນ ຜົນປະໂຫຍດນອກເໜືອຈາກແມ່ນ້ຳ, ເຫັນໄດ້ໂດຍກົງ ສ່ວນຫລາຍຈາກ ການພົວພັນທາງເສດຖະກິດ ແລະສ່ວນໜ້ອຍຈາກ ການຫລຸດຜ່ອນຄວາມຕຶງຄຽດ ແລະປັບປຸງສາຍພົວພັນ.

ແຕ່ລະຊະນິດຂອງຜົນປະໂຫຍດ ທັງສີ່ຊະນິດ ອາດເປັນທ່າແຮງທີ່ຈະບັນລຸໄດ້ ໃນການຄຸ້ມຄອງອ່າງແມ່ນ້ຳສາກົນ, ແຕ່ຂະໜາດ, ຄວາມເປັນໄປໄດ້ ແລະຄວາມສຳຄັນຂອງ ແຕ່ລະຊະນິດຜົນປະໂຫຍດ ຈະມີການປ່ຽນແປງໃນແຕ່ລະອ່າງແມ່ນ້ຳ. ທ່າແຮງທີ່ອາດເປັນໄປໄດ້ ສຳລັບຜົນປະໂຫຍດຂອງແຕ່ລະຊະນິດທີ່ແຕກຕ່າງກັນ ພາຍໃນສະເພາະອ່າງແມ່ນ້ຳໃດໜຶ່ງ ຈະເປັນໝາກຜົນຂອງໂອກາດຕ່າງໆທາງກາຍະພາບ, ຄ່າໃຊ້ຈ່າຍແລະຊະນິດຂອງ ການຮ່ວມມື ທີ່ໄດ້ສ້າງຂຶ້ນ ແລ້ວ ລະຫວ່າງລັດຕ່າງໆໃນແຄມແມ່ນ້ຳ.

ສິ່ງທີ່ຄ້າຍຄືກັນ, ແຕ່ລະຊະນິດຂອງຜົນປະໂຫຍດ ອາດເປັນຈຸດລິເລີ້ມທີ່ແທດເໝາະ ສຳລັບການຮ່ວມມື; ມັນບໍ່ມີຂັ້ນຕອນສະເພາະຂອງທັງໝົດສີ່ຊະນິດຜົນປະໂຫຍດ ທີ່ຮຽກຮ້ອງໃຫ້ດຳເນີນ. ສ່ວນໃຫຍ່ແມ່ນມີການຕິດພັນກັບສະພາບການທີ່ເກີດຂຶ້ນ ເຊັ່ນ ແລ້ງ ຫລື ນ້ຳຖ້ວມ, ທີ່ຈະກໍ່ເກີດໃຫ້ມີຄວາມຮີບດ່ວນໃນການຮ່ວມມື ໂດຍການນຳໃຊ້ວິທີການໃດໜຶ່ງ. ເຖິງຢ່າງໃດກໍຕາມ ສິ່ງດັ່ງກ່າວເປັນພຽງ ການລິເລີ້ມໃນການຮ່ວມມື, ຮູບແບບອື່ນໆໃນການຮ່ວມມືອາດຕິດຕາມ ແລະນຳໃຊ້ໄດ້. ການເລີ້ມຕົ້ນໃນດ້ານສິ່ງແວດລ້ອມ (ຊະນິດທີ 1) ຫລື ການຮ່ວມມືໂດຍກົງທາງເສດຖະກິດ (ຊະນິດທີ 2) ສາມາດນຳໄປສູ່ການຮ່ວມມືທາງການເມືອງ (ຊະນິດທີ 3), ແລະການຮ່ວມມືທາງເສດຖະກິດທາງອ້ອມ (ຊະນິດທີ 4) - ຫລືໃນທາງກັບກັນ. ຄວາມເຂັ້ມຂຸ້ນລະຫວ່າງຊະນິດຕ່າງໆ ອາດເປັນທັງຜົນບວກ ແລະຜົນລົບ, ຕົວຢ່າງໃນເມື່ອການຮ່ວມມື ຊະນິດທີ 3 ອາດຊ່ວຍໃຫ້ເພີ້ມການຮ່ວມມື ຊະນິດທີ 1 ແລະ 2, ສະນັ້ນຖ້າຊະລໍ ການພົວພັນໃນຊະນິດທີ 3 ອາດເປັນອຸປະສັກໃຫ້ແກ່ ການຮ່ວມມື ຊະນິດ 1 ແລະ 2.

ການຮ່ວມມື ສາມາດໃຫ້ຫລາກຫລາຍຜົນປະໂຫຍດ, ບາງການຮ່ວມມືອາດໃຫ້ຫລາຍ ແລະ ບາງອັນອາດໜ້ອຍ, ບາງອັນສາມາດເປັນມູນຄ່າ ແລະບາງອັນຂອງມູນຄ່າອາດເປັນພຽງແຕ່ ຜົນປະໂຫຍດໃຫ້ແກ່ຜູ້ມີສ່ວນຮ່ວມສະເພາະໃດນຶ່ງ.

*"ການເຫັນໄດ້ຄວາມສຳຄັນ ແລະ ເຂົ້າໃຈດ້ານຜົນປະໂຫຍດເຫຼົ່ານີ້ ກໍ່ໃຫ້ເກີດມີທາງເລືອກ ລະ ຫວ່າງ ຂໍ້ຂັດແຍ່ງ ແລະ ຄວາມຮ່ວມມື"*

## 2.3 ເມື່ອໃດຈຶ່ງສົມຄວນແບ່ງປັນ

### 2.3.1 ການຮັບຮູ້ການຮ່ວມມືສາກົນ ເປັນບຸລິມະສິດລະດັບຊາດ

ການເລືອກລະຫວ່າງການຮ່ວມມື ແລະ ບໍ່ຮ່ວມມືຈະອີງໃສ່ ຄວາມຮັບຮູ້ວ່າທາງເລືອກໃດຈະໃຫ້ຜົນປະໂຫຍດຫຼາຍກວ່າ. ເວົ້າງ່າຍໆ-ບັນດາປະຊາຊາດຈະຮ່ວມກັນກໍ່ຕໍ່ເມື່ອວ່າມັນເປັນຜົນປະໂຫຍດຂອງເຂົາເຈົ້າເອງທີ່ຈະຮ່ວມມືກັນ.

ໃນບາງກໍລະນີຜົນປະໂຫຍດອາດຈະບໍ່ກຸ້ມຄ່າກັບຄ່າໃຊ້ຈ່າຍທີ່ຈະປະຕິບັດໃນການຮ່ວມມື, ແຕ່ໃນກໍລະນີອື່ນຜົນປະໂຫຍດອາດຈະສູງຫຼາຍ. ການຮ່ວມມືດ້ານແມ່ນ້ຳລະຫວ່າງປະເທດສາມາດນຳຜົນປະໂຫຍດຫຼາຍໆຢ່າງ ເຊິ່ງບໍ່ມີປະເທດໃດສາມາດບັນລຸໄດ້ດ້ວຍຕົວເອງ ເພາະວ່າການຮ່ວມມືຊ່ວຍໃຫ້ມີການປະຕິບັດຕໍ່ອ່າງແມ່ນ້ຳ ໃນຖານະລະບົບທີ່ກວມລວມ-ເຊິ່ງແມ່ນເປົ້າໝາຍສຸດທ້າຍຂອງການຄຸ້ມຄອງແຫຼ່ງນ້ຳແບບປະສົມປະສານ ແລະ ດັ່ງນັ້ນ ຈຶ່ງເພີ່ມ ຜົນປະໂຫຍດ ທີ່ສາມາດເປັນໄປໄດ້ ຈາກບັນຫາດັ່ງກ່າວ ຜົນປະໂຫຍດແມ່ນທຸກສິ່ງທຸກຢ່າງທີ່ສັງຄົມຮັບຮູ້ວ່າມີຄຸນຄ່າເຊັ່ນ: ການດຳລົງຊີວິດ, ການຈະເລີນເຕີບໂຕ, ການບໍລິການຂອງລະບົບນິເວດ, ຊີວະນາໆພັນ, ທຳມະຊາດ ແລະ ມໍລະດົກແຫ່ງຊາດ, ຄວາມປອດໄພ, ຄວາມສະເໝີພາບທາງເພດ, ຈາລິຍະທຳ, ຄວາມຮັບຮູ້ກ່ຽວກັບຄວາມສວຍສົດງົດງາມ ແລະຄວາມເປັນສາກົນ. ການກຳນົດ ແລະ ຄວາມເຂົ້າໃຈຂອບເຂດຂອງຜົນປະໂຫຍດທີ່ມັກກ່ຽວພັນກັນ ທີ່ໄດ້ ຈາກການຄຸ້ມຄອງ ທີ່ຮ່ວມມືກັນ ແລະ ການພັດທະນາ ແມ່ນ້ຳລະຫວ່າງປະເທດແມ່ນເປັນໃຈກາງໃຫ້ແກ່ການຄຸ້ມຄອງແມ່ນ້ຳໂລກທີ່ດີກວ່າ ແລະ ຕໍ່ກັບການພົວພັນ ລະຫວ່າງ ປະຊາຊາດທີ່ໃຊ້ແມ່ນ້ຳເຫຼົ່ານັ້ນຮ່ວມກັນ.

*"ການຮ່ວມມືໃນແມ່ນ້ຳສາກົນ ສາມາດນຳຜົນປະໂຫຍດຫຼາຍຢ່າງ ເຊິ່ງບໍ່ມີປະເທດໃດຈະສາມາດບັນລຸໄດ້ຜູ້ດຽວ"*

ໂດຍຮັບຮູ້ວ່າ ທຸກໆປະເທດທີ່ມີຊາຍຝັ່ງທະເລຕິດແມ່ນ້ຳ ມີເປົ້າໝາຍກວ້າງໄກຮ່ວມກັນ-ເພື່ອຮັກສາລະບົບແມ່ນ້ຳ ທີ່ໃຫ້ຜົນຜະລິດ ແລະ ມີສຸຂະພາບທີ່ດີ-ບຸລິມະສິດແຫ່ງຊາດ ແລະ ສາກົນ ສາມາດເລີ່ມເຂົ້າໃນແຖວດຽວກັນ. ປະເທດທີ່ມີອະທິປະໄຕຈະມີວາລະແຫ່ງຊາດໃນການພັດທະນາແມ່ນ້ຳສາກົນຂອງເຂົາເຈົ້າຢູ່ສະເໝີ: ອັນນີ້ແມ່ນສົມເຫດສົມຜົນ ແລະ ຊອບທຳ.[9] ຢູ່ໃນອ່າງແມ່ນ້ຳທີ່ໃຊ້ຮ່ວມກັນຂອງ 2 ປະເທດ , ມັນຈະມີ 2 ວາລະແຫ່ງຊາດ. ຖ້າວ່າ 2 ວາລະແຫ່ງຊາດເຫຼົ່ານີ້ຫາກກວມເອົາເປົ້າໝາຍດຽວກັນບາງຢ່າງ ເຊັ່ນ: ການບັນເທົາໄພນ້ຳຖ້ວມ ຫຼືການຮັກສາການໄຫລວຽນຂອງສິ່ງແວດລ້ອມ, ມັນຈະມີວາລະທີ 3 ທີ່ຊ້ຳຊ້ອນ ແລະ ຮ່ວມກັນ ເຊິ່ງເປັນຜົນປະໂຫຍດຂອງ 2 ກຸ່ມ (ເບິ່ງແຜນວາດ 2.1) ຖ້າວ່າວາລະຮ່ວມມືກັນທີ່ເກີດຂຶ້ນນັ້ນຫາກໃຫ້ຜົນປະໂຫຍດທີ່ບໍ່ສາມາດບັນລຸໄດ້ (ຫຼືບໍ່ສາມາດບັນລຸໄດ້ດ້ວຍຕົ້ນທຶນສົມເຫດສົມຜົນ) ໂດຍຜ່ານວາລະແຫ່ງຊາດທີ່ບໍ່ຮ່ວມມືກັນ, ແລ້ວການຮ່ວມນັ້ນ ຈະກາຍເປັນບຸລິມະສິດຂອງ 2 ຊາດ.

ວາລະຮ່ວມມືທີ່ຮ່ວມກັນອາດຈະຂ້ອນຂ້າງນ້ອຍ ຫຼື ຂ້ອນຂ້າງມີຄວາມສຳຄັນ. ໃນບາງອ່າງແມ່ນ້ຳ ການເວລາຜ່ານໄປ, ເມື່ອໄດ້ມີການສ້າງຄວາມເຊື່ອໝັ້ນ ແລະ ໄດ້ຮັບຮູ້ ແລະ ຮັບປະກັນໂອກາດເປັນກ້າວໆແລ້ວ ວາລະຮ່ວມກັນ

ຈະຂະຫຍາຍຈົນກວ່າວາລະແຫ່ງຊາດ 2 ຢ່າງນັ້ນຈະມາຈອດກັນ. ການກຳນົດ ແລະ ການສະໜັບສະໜູນວາລະຮ່ວມກັນທີ່ມີຜົນປະໂຫຍດທັງ 2 ຝ່າຍແມ່ນເປັນບາດກ້າວທຳອິດໃນການສົ່ງເສີມການຮ່ວມມື.

*"ການໃຈ້ແຍກວາລະການຜົນປະໂຫຍດການຮ່ວມມື ແມ່ນຂັ້ນຕອນທຳອິດໃນການສົ່ງເສີມການຮ່ວມມື"*

*ແຜນວາດ 2.1 ການລວບລວມແນວຄວາມຄິດ, ບູລິມະສິດ ແລະ ຂໍ້ຕົກລົງຕ່າງໆ*




*ລະດັບຂອງການລວບລວມຂໍ້ຕົກລົງຂອງປະເທດກັນທີ່ຢູ່ແຄມແມ່ນ້ຳ ຈະໄດ້ຖືກກຳນົດໂດຍລັກສະນະສະເພາະຂອງລະບົບແມ່ນ້ຳ, ສິ່ງແວດລ້ອມ, ເສດຖະກິດ ແລະ ສັງຄົມ*

*ແຫຼ່ງຂໍ້ມູນ:* ດັດປັບຈາກ Sadoff & Grey(2005)[10]

### *2.3.2 ການຮ່ວມມືແມ່ນຫຍັງ ແລະ ເມື່ອໃດທີ່ເໝາະສົມ?*

ຄວາມຮ່ວມມືບໍ່ສາມາດເຮັດໄດ້ທັງໝົດ ຫຼື ບໍ່ສາມາດຕອບສະໜອງໄດ້ທຸກສິ່ງທຸກຢ່າງ ມັນຂຶ້ນຢູ່ກັບໄລຍະເວລາ ແລະ ຄວາມພະຍາຍາມຂອງການດຳເນີນການ. ປະເພດການ ຮ່ວມມືທີ່ເໝາະສົມ ແມ່ນຈະຖືກກຳນົດໂດຍປັດໃຈທາງດ້ານອຸທົກກະສາດ, ສິ່ງແວດລ້ອມ, ເສດຖະກິດ, ສັງຄົມ ແລະ ການເມືອງ ຊຶ່ງຮ່ວມກັບການ ກຳນົດຜົນປະໂຫຍດທີ່ມີຄວາມເປັນໄປໄດ້ ແລະ ຄວາມເໝາະສົມທາງດ້ານທຶນຮອນໃນ ການເລືອກ ຍຸດທະສາດໃນການຮ່ວມມື.

*"ຄວາມຮ່ວມມືແມ່ນບໍ່ສາມາດເຮັດໄດ້ທັງໝົດ ຫຼື ບໍ່ສາມາດຕອບສະໜອງໄດ້ທຸກສິ່ງທຸກຢ່າງ"*

ໃນບາງອ່າງແມ່ນ້ຳ, ການແລກປ່ຽນຂໍ້ມູນຂ່າວສານ ແລະ ການປະເມີນຍຸດທະສາດ ທັງລະບົບອ່າງ ແມ່ນ້ຳອາດພຽງພໍໃນການສົ່ງເສີມ ການຮ່ວມມືໃນການຄຸ້ມຄອງ. ພ້ອມນັ້ນ, ການຮ່ວມມືໃນການດຳເນີນງານແມ່ນຕ້ອງຄຳນຶງເຖິງ ລະບຽບການສິ່ງແວດລ້ອມຂອງນ້ຳ, ການເກັບກັກນ້ຳ, ການຫຼຸດຜ່ອນໄພນ້ຳຖ້ວມ ແລະ ແຫ້ງແລ້ງ ເພື່ອໃຫ້ໄດ້ຮັບຜົນທີ່ສຳຄັນ. ຄວາມຕໍ່ເນື່ອງຂອງການຮ່ວມມື [11] ສາມາດພິຈາລະນາໂດຍເລີ່ມຈາກການ *ດຳເນີນງານຝ່າຍດຽວ* (ການເຮັດວຽກແບບເອກະລາດ, ແຜນລະດັບຊາດທີ່ບໍ່ມີຄວາມໂປ່ງໃສ) ໄປເຖິງ *ການປະສານງານ* (ການສື່ສານ ແລະ ການແລກປ່ຽນຂໍ້ມູນຂ່າວສານ), *ການເຮັດວຽກຮ່ວມກັນ* (ການປັບປຸງແຜນ ໃນລະດັບຊາດເພື່ອຜົນປະໂຫຍດ ຮ່ວມກັນ), ແລະ *ການຮ່ວມມືກັນໃນການດຳເນີນງານ* (ຮ່ວມ ວາງແຜນ ສຳລັບການຄຸ້ມຄອງ ແລະ ການລົງທຶນ).

*ການດຳເນີນງານພຽງຝ່າຍດຽວ* ໃນທີ່ນີ້ໝາຍເຖິງການຂາດຄວາມພະຍາຍາມເພື່ອໃຫ້ເກີດມີການຮ່ວມມື ຫຼື ລວມທັງຂາດການພົວພັນກັນໃນວຽກງານການຄຸ້ມຄອງ ແລະ ການວາງແຜນການ ໃນການພັດທະນາ ໃນແຫຼ່ງນ້ຳທີ່ໄດ້ມີການນຳໃຊ້ຮ່ວມກັນ.ສິ່ງນີ້ບໍ່ພຽງແຕ່ບໍ່ຮັບປະກັນຄວາມ ໝັ້ນຄົງຂອງຜົນປະໂຫຍດທີ່ມີຮ່ວມກັນ, ແຕ່ເຫດການນີ້ອາດເຮັດໃຫ້ການພັດທະນາ ຫຼື ແຜນການ ລົງທຶນຂອງປະເທດໜຶ່ງ ໄປສ້າງຄວາມເສຍຫາຍ ແກ່ປະເທດ ອື່ນທີ່ຢູ່ອ່າງແມ່ນ້ຳດຽວກັນ. ການວາງແຜນພຽງຝ່າຍດຽວແມ່ນເປັນການວາງແຜນທີ່ບໍ່ໄດ້ມີການຄຳນຶງເຖິງປະເທດທີ່ຢູ່ຮ່ວມອ່າງແມ່ນ້ຳດຽວກັນ ຊຶ່ງມັນຈະນຳໄປສູ່ຜົນກະທົບແບບປະສະສົມສາມາດເຮັດໃຫ້ເກີດການຫຼຸດລົງການຂອງການໄຫຼວຽນຂອງນ້ຳ ຫຼື ຄຸນນະພາບນ້ຳຫຼຸດ ລົງເຖິງ ຂັ້ນເຮັດໃຫ້ທຸກກິດຈະກຳ - ແລະ ສຸຂະພາບຂອງ ລະບົບແມ່ນ້ຳ-ນັ້ນອາດຈະຖືກຄຸກຄາມໄດ້.

*ການປະສານງານ* ສາມາດເຮັດໄດ້ໂດຍການ ແລກປ່ຽນ ຫຼື ຮ່ວມກັນຮວບຮວມຂໍ້ມູນ ກ່ຽວກັບອ່າງແມ່ນ້ຳ. ສ່ວນຫຼວງຫຼາຍຜູ້ຈັດການຊັບພະຍາກອນນ້ຳແມ່ນມີ ຂໍ້ມູນພຽງແຕ່ແມ່ນ້ຳທີ່ໄຫຼຢູ່ພາຍໃນອະນາເຂດຂອງຕົນ. ການແລກປ່ຽນຂໍ້ມູນ ອຸທົກກະວິທະຍາໃນອ່າງແມ່ນ້ຳ ມັນສາມາດ ສ້າງປະໂຫຍດໄດ້ຫຼາຍປະການເຊັ່ນ: ການປັບປຸງການພະຍາກອນການໄຫຼຂອງນ້ຳ ແລະ ການຮັບມືກັບໄພນ້ຳຖ້ວມ ແລະ ບັນຫາໄພແຫ້ງແລ້ງ. ການແລກປ່ຽນຂໍ້ມູນກ່ຽວກັບ ແຜນພັດທະນາແມ່ນ້ຳແມ່ນສາມາດຊ່ວຍໃຫ້ຜູ້ວາງແຜນໃນອ່າງແມ່ນ້ຳຈາກແຕ່ລະປະເທດຫຼີກຫຼ່ຽງ ການເກີດໂຄງການ ທີ່ຂັດແຍ່ງກັນ. ຂໍ້ມູນທີ່ສຳຄັນເລົ່ານີ້ຍັງອາດຈະເປັນ ການຊ່ວຍ ການສ້າງ ຄວາມເຊື່ອໝັ້ນ, ຄວາມໝັ້ນໃຈ ແລະ ຄວາມເຕັມໃຈໃນການຮ່ວມມືໃນອານາຄົດ.

ການເຮັດວຽກຮ່ວມກັນແມ່ນ ສາມາດຖືໄດ້ວ່າເປັນການປັບຕົວຂອງແຜນໃນລະດັບຊາດ ເພື່ອທີ່ຈະສາມາດເຂົ້າເຖິງຜົນປະໂຫຍດ ຫຼື ຫຼຸດຜ່ອນຄ່າໃຊ້ຈ່າຍຢູ່ໃນປະເທດອື່ນໆໃນອ່າງແມ່ນ້ຳ. ການເຮັດວຽກຮ່ວມກັນ ສາມາດ ເຮັດໄດ້ຢູ່ໃນຂັ້ນຕອນການປັບປຸງແຜນງານຢ່າງບໍ່ເປັນທາງການ ຂອງບັນດາແຜນການທີ່ກຳລັງດຳເນີນຢູ່ ຫຼື ມັນສາມາດເຮັດໄດ້ໃນຂອດ ການລົງທຶນ ຂອງໂຄງການລະດັບຊາດທີ່ໄດ້ຮັບການປຶກສາຫາລືຈາກບັນດາ ປະເທດໃນອ່າງແມ່ນ້ຳ.

*ການດຳເນີນງານຮ່ວມກັນ* ເກີດຂຶ້ນເມື່ອບັນດາປະເທດໃນອ່າງແມ່ນ້ຳ ສະແດງຄວາມເປັນຄູ່ຮ່ວມງານ ໃນການອອກແບບ, ການລົງທຶນ ແລະ ຈັດຕັ້ງປະຕິບັດ ການພັດທະນາແມ່ນ້ຳສາກົນ. ລະດັບຂອງການ ຮ່ວມມືນີ້ ຈະໃຫ້ເປັນທາງການໄດ້ນັ້ນ ແມ່ນຕ້ອງໄດ້ມີການສ້າງສົນທິສັນຍາຮ່ວມກັນ ໂດຍການຈັດແບ່ງຜົນປະໂຫຍດ, ການຄຸ້ມຄອງຮ່ວມກັນເພື່ອໃຫ້ໄດ້ມາ ຊຶ່ງ ຜົນປະໂຫຍດຈາກແມ່ນ້ຳຫຼາຍທີ່ສຸດ ເພື່ອໃຫ້ມີການ ຮ່ວມມືທີ່ເຂັ້ມແຂງ ສົ່ງເສີມຄວາມອາດສາມາດ ຂອງອົງກອນ ການຮ່ວມດຳເນີນງານການຄຸ້ມຄອງ ອາດຈະລວມເຖິງ ໃນລະດັບຂະແໜງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອເພີ້ມປະສິດທິພາບ ຂອງການລົງທຶນ ທັງທາງກົງ ແລະ ທາງອ້ອມ.

*"ການພັດທະນາຮ່ວມກັນ ຂອງລະບົບແມ່ນ້ຳ ສະແດງເຖິງລະດັບສູງສຸດຂອງຄວາມຮ່ວມມື"*

*ແຜນວາດທີ 2.2* ອະທິບາຍເຖິງລະດັບຕ່າງໆຂອງຄວາມພະຍາຍາມໃນການຮ່ວມມື. ມັນເປັນສິ່ງທີ່ສຳຄັນທີ່ຈະຕ້ອງ ຮັບຮູ້ວ່າຄວາມຕໍ່ເນື່ອງອັນນີ້ແມ່ນ *ບໍ່ມີທິດທາງ, ປ່ຽນແປງສະເໝີ ແລະຊ້ຳໄປຊ້ຳມາ.* ຄວາມຕໍ່ເນື່ອງແມ່ນ *ບໍ່ມີທິດທາງ* ນັ້ນກໍ່ຍ້ອນວ່າການຮ່ວມມືບໍ່ແມ່ນສິ່ງຈຳເປັນທີ່ຈະເຮັດໃຫ້ສະຖານະການດີຂຶ້ນ. ຄວາມຕໍ່ເນື່ອງສະແດງ ການເພີ່ມຂຶ້ນຂອງ ລະດັບຄວາມພະຍາຍາມໃນການຮ່ວມມື, ແຕ່ມັນບໍ່ໄດ້ເປັນການແນະນຳວ່າ ມັນຈະຕ້ອງແມ່ນເປົ້າໝາຍຂອງທຸກໆອ່າງ ແມ່ນ້ຳ. ຄວາມຕໍ່ເນື່ອງແມ່ນ *ປ່ຽນແປງສະເໝີ* ນັ້ນກໍ່ຍ້ອນວ່າ ແຕ່ລະປະເດັນ ແມ່ນເໝາະສົມກັບແຕ່ລະກິດຈະກຳ ແລະ ເວລາທີ່ແຕກຕ່າງກັນ. ແຕ່ລະປະເທດອາດດັດປັບ ກິດຈະກຳຂອງຕົນເພື່ອເພີ່ມ ຫຼື ຫຼຸດລະດັບຂອງ ການ

ຮ່ວມມືເພື່ອຕອບສະໜອງຕໍ່ກັບໂອກາດໃໝ່ ຫຼື ການພັດທະນາພາຍໃນ (ພາຍນອກ) ຂະບວນການຮ່ວມມື. ຄວາມຕໍ່ເນື່ອງ ແມ່ນ *ຊໍ້າໄປຊໍ້າມາ* ນັ້ນກໍ່ຍ້ອນວ່າມັນ ຖືກຍໍ້າຄືນ, ບາງຄັ້ງເກີດຄວາມບໍ່ຕໍ່ເນື່ອງຂອງໂອກາດໃນການຮ່ວມມື ແລະ ບາງຄັ້ງການ ຮ່ວມມືໄດ້ຮັບຜົນສໍາ ເລັດຕັ້ງແຕ່ໄລຍະຕົ້ນໂດຍສະເພາະໃນແງ່ຂອງຜົນປະໂຫຍດ ທີ່ຈະກາຍເປັນການສິ່ງເສີມ ການເພີ່ມຂຶ້ນຂອງ ການຮ່ວມມື. ໃນສະພາບການທີ່ຊໍ້າໄປຊໍ້າມາ ບັນດາປະເທດໃນອ່າງແມ່ນໍ້າແມ່ນຄໍານຶງວ່າ ການຂາດການ ດໍາເນີນງານຮ່ວມກັນແມ່ນອາດຈະສິ່ງຜົນໃຫ້ການຮ່ວມມືມີການຫຼຸດລົງໃນອະນາຄົດ.

ການຮ່ວມມືແມ່ນມີຕົ້ນທຶນທີ່ແທ້ຈິງ ໃນແງ່ຂອງເວລາ, ເງິນ ແລະ ຊັບພະຍາກອນມະນຸດ. ຫາກຕົ້ນທຶນ ຂອງການຮ່ວມມືເກີນກັບຄວາມສົມດູນຂອງຜົນປະໂຫຍດ (ຕາມທີ່ໄດ້ກໍານົດອີງປະກອບລວມ,ຕົວຢ່າງເຊັ່ນ: ປະໂຫຍດຂອງການສ້າງຄວາມໄວ້ວາງໃຈກັບຄູ່ຮ່ວມງານໃໝ່) ນັ້ນຈະຖືວ່າກິດຈະກໍາຮ່ວມແມ່ນບໍ່ຖືກຕ້ອງ. ກິດຈະກໍາ ຮ່ວມທີ່ມີຕົ້ນທຶນສູງເກີນຄວນແມ່ນສາມາດນໍາໄປສູ່ບັນຫາໃນໄລຍະຍາວ.

ການກໍານົດລະດັບຄວາມພະຍາຍາມ ແລະ ການລົງທຶນທີ່ຖືກຕ້ອງຂອງການຮ່ວມມືໃນລະດັບສາກົນ ແມ່ນເປັນກຸນແຈທີ່ສໍາຄັນເພື່ອຊອກຫາແຫຼ່ງງົບປະມານທີ່ແທ້ຈິງທີ່ປາສະຈາກການກໍ່ໃຫ້ເກີດຕົ້ນທຶນທີ່ເກີນ ຄວາມຕ້ອງການ. ພຶດຕິກໍານີ້ ຈະຊ່ວຍສ້າງຂໍ້ຜູກພັນທາງດ້ານການເມືອງ ແລະ ໃຫ້ແນ່ໃຈວ່າທຸກພາກສ່ວນມີ ຄວາມສົນໃຈຕໍ່ການຮ່ວມມືແບບຍືນຍົງ.

*ແຜນວາດ 2.2 ຄວາມຕໍ່ເນື່ອງທາງດ້ານການຮ່ວມມື*




ແຫຼ່ງຂໍ້ມູນຈາກ: ດັດແກ້ຈາກ Sadoff & Grey (2005)

## *2.4 ການແບ່ງປັນຜົນປະໂຫຍດທີ່ຍຸດຕິທຳ*

ເພື່ອກະຕຸ້ນໃຫ້ເກີດການຮ່ວມມືແບບຍືນຍົງ, ມັນມີຄວາມຈຳເປັນທີ່ສຸດທີ່ທຸກໆປະເທດທີ່ຢູ່ໃນອ່າງແມ່ນ້ຳຈະໄດ້ຮັບ ການ ແບ່ງປັນຜົນປະໂຫຍດທີ່ໄດ້ຮ່ວມກັນຢ່າງຍຸດຕິທຳ.

ການຮ່ວມມືທາງດ້ານການພັດທະນາແລະຄຸ້ມຄອງໃນອ່າງແມ່ນ້ຳໂດຍລວມແມ່ນຈະໄດ້ຮັບໝາກຜົນທີ່ດີຕໍ່ທົ່ວອ່າງແມ່ນ້ຳ,ແຕ່ມັນບໍ່ໄດ້ໝາຍຄວາມວ່າທຸກປະເທດຈະໄດ້ຮັບຜົນປະໂຫຍດທີ່ເທົ່າທຽມກັນ (ຫຼື ກຸ່ມໃດໜຶ່ງ), ຖ້າຫາກ ຜົນປະໂຫຍດສ່ວນໃຫຍ່ຫາກຕົກຢູ່ໃນປະເທດດຽວ (ຫຼື ກຸ່ມດຽວ),ໃນຂະນະທີ່ຕົ້ນທຶນສ່ວນໃຫຍ່ເກີດຂຶ້ນຢູ່ ອີກບ່ອນໜຶ່ງ, ຄ້າຍໆຄືກັບວ່າ ໂຄງການທີ່ດີສາມາດເຮັດໃຫ້ເກີດການສູນເສຍຜົນປະໂຫຍດຂອງບາງຜູ້ມີສ່ວນຮ່ວມ. ການພັດທະນາອ່າງ ແມ່ນ້ຳແມ່ນອາດແມ່ນເພື່ອຜົນປະໂຫຍດແບບຍືນຍົງສູງສຸດ, ແຕ່ຖ້າຫາກຜົນປະໂຫຍດດັ່ງກ່າວ ຫາກຕົກຢູ່ພຽງຝ່າຍດຽວ (ຕົວຢ່າງ: ພະລັງງານໄຟຟ້າ ສ່ວນໃຫຍ່ຈາກເຂື່ອນໄຟຟ້າ ຫຼື ເຂດຊົນລະປະທານ) ນັ້ນສະແດງວ່າການແບ່ງປັນຜົນປະໂຫຍດອາດບໍ່ສະເໝີພາບກັນ. ມັນອາດເບິ່ງຄືວ່າເປັນການດີທີ່ມີການຂະຫຍາຍຕົວແບບໂດຍລວມແຕ່ການກະຕຸ້ນການຮ່ວມມືທີ່ແທ້ຈິງນັ້ນແມ່ນຄວນໃຫ້ແຕ່ລະກຸ່ມ ຫຼື ແຕ່ລະປະເທດໄດ້ມີການເຕີບໂຕໄປພ້ອມໆກັນ.

ເມື່ອການແຈກຢາຍຜົນປະໂຫຍດ ຈາກການຄຸ້ມຄອງ ແລະ ການພັດທະນາຮ່ວມກັນ ແມ່ນບໍ່ມີຄວາມເປັນທຳ, ກົນໄກການແບ່ງປັນຜົນປະໂຫຍດ ຈຶ່ງເປັນສິ່ງໜຶ່ງທີ່ເຂົ້າມາມີບົດບາດສຳຄັນ ເພື່ອກະຕຸ້ນໃຫ້ເກີດການຮ່ວມມື. ການແບ່ງປັນ ຜົນເປັນສິ່ງໜຶ່ງທີ່ສາມາດເປັນຕົວ ກຳນົດທຸກໆການດຳເນີນງານເພື່ອໃຫ້ເກີດການປ່ຽນແປງ ໃນການຈັດສັນຕົ້ນທຶນ ແລະ ຜົນປະໂຫຍດຈາກການຮ່ວມມື. ຄ່າໃຊ້ຈ່າຍຂອງຄວາມຮ່ວມມື ອາດຈະກ່ຽວ ຂ້ອງໂດຍກົງ ກັບຄ່າໃຊ້ຈ່າຍໃນສະຖາບັນ ຫຼື ທາງດ້ານການ ຄຸ້ມຄອງ ແລະ ພັດທະນາ ອ່າງແມ່ນ້ຳ (ເຊັ່ນ ການຟື້ນຟູອ່າງໂຕ່ງ, ເຂື່ອນ ຫຼື ເພື່ອຄວບຄຸມການໄຫຼຂອງແມ່ນ້ຳ) ຫຼື ຄ່າໃຊ້ຈ່າຍອື່ນໆ ທີ່ເລືອກເຂົ້າມາໃນການພິຈາລະນາ ເພື່ອເຈລະຈາຕໍ່ລອງກັນ (ຕົວຢ່າງວ່າການສະໜອງໄຟຟ້າໃນຊົນນະບົດທີ່ມາຈາກ ເຂື່ອນໄຟຟ້າ) ໃນກໍລະນີສ່ວນໃຫຍ່ ການແບ່ງປັນຕົ້ນທຶນ ແລະ ຜົນປະໂຫຍດ ຈະຕ້ອງຮຽງລຳດັບບາງສ່ວນຂອງການແຈກຢາຍຫຼືການຊົດເຊີຍຕາມຂໍ້ຕົກລົງສະເພາະທີ່ໄດ້ກຳນົດກັນໄວ້.

ບັນຫາຂອງຄວາມເປັນທຳໃນການແຈກຢາຍຜົນປະໂຫຍດເປັນສິ່ງທີ່ສຳຄັນໃນທຸກລະດັບ, ແຕ່ຜູ້ມີສ່ວນຮ່ວມທີ່ໄດ້ຮັບຜົນກະທົບ (ເບິ່ງໝວດທີ 3) ແມ່ນຈະຕ້ອງໄດ້ຮັບຄວາມສົນໃຈ ໂດຍສະເພາະກ່ຽວກັບຄວາມເປັນທຳ. ການ ແບ່ງປັນຜົນປະໂຫຍດຢ່າງເທົ່າທຽມກັນ ໃນລະດັບທ້ອງຖິ່ນທີ່ໄດ້ຮັບຜົນກະທົບແມ່ນ ເປັນສິ່ງທີ່ທ້າທາຍກວ່າການແບ່ງປັນ ຜົນປະໂຫຍດໃນລະດັບຊາດ. ການແບ່ງປັນຜົນປະໂຫຍດໃຫ້ກັບທ້ອງຖິ່ນໂດຍກົງແມ່ນສາມາດຕອບສະໜອງໃນການແກ້ໄຂບັນຫາຄວາມ ທຸກຍາກໄດ້ຢ່າງທັນທີ.

*"ບັນຫາຂອງຄວາມເປັນທຳໃນການກະຈາຍຜົນປະໂຫຍດເປັນສິ່ງທີ່ສຳຄັນໃນທຸກລະດັບ"*

ຄວາມເປັນທຳໃນການແບ່ງປັນຜົນປະໂຫຍດ ແມ່ນເປັນບັນຫາປົກກະຕິ. ກົດໝາຍນ້ຳສາກົນໄດ້ລະບຸບາງຄຳແນະນຳໃນຫຼັກການເຫຼົ່ານີ້ໄປສູ່ພາກປະຕິບັດ ແລະ ພັດທະນາລະບຽບ ສະເພາະໃນການຈັດສັນຜົນປະໂຫຍດ ແລະກົນໄກ ສຳລັບການກະຈາຍຄຳໃນທາງກົດໝາຍ (ເບິ່ງໝວດທີ 4) ຂອງຫຼັກການທີ່ກ່ຽວກັບ "ຄວາມສະເໝີພາບ ແລະຄວາມສົມເຫດສົມຜົນຂອງການນຳໃຊ້" ແລະ ກ່ຽວກັບ "ບໍ່ມີຄວາມເສຍຫາຍທີ່ສຳຄັນ". ຫຼັກການເຫຼົ່ານີ້ເປັນຈຸດເລີ້ມຕົ້ນທີ່ມີປະໂຫຍດສຳລັບການເຈລະຈາກ່ຽວກັບການຈັດສັນຜົນປະໂຫຍດທີ່ເປັນທຳ. ແຕ່ເຖິງຢ່າງໃດກໍ່ຕາມ,ຜູ້ກຳນົດນະໂຍບາຍຈຳເປັນຕ້ອງໄດ້ຜັນຂະຫຍາຍຫຼັກການເຫຼົ່ານີ້ໄປສູ່ການປະຕິບັດ ແລະ ພັດທະນາລະບຽບສະເພາະໃນການຈັດສັນຜົນປະໂຫຍດແລະກົນໄກສຳລັບການກະຈາຍຄືນຫຼືຊົດເຊີຍ. ດັ່ງນັ້ນ, ມັນຈຶ່ງເປັນປະໂຫຍດທີ່ຈະກວດສອບການປະຕິ

ບັດຕົວຈິງ ພັດທະນາຂື້ນ

ເພື່ອຄວາມສະດວກໃນການຄຸ້ມຄອງແມ່ນ້ຳສາກົນ.ຫຼັກການພື້ນຖານເຈັດປະການສຳລັບການຄຸ້ມຄອງກັນທີ່ຢູ່ໃນສົນທິສັນຍາສາກົນ[12] ທີ່ກ່ຽວຂ້ອງກັບການຄຸ້ມຄອງຊັບພະຍາກອນນ້ຳສາກົນ (ຊຶ່ງໄດ້ກຳນົດຕາມລຳດັບດັ່ງນີ້):

- ຄ່າຕອບແທນສຳລັບຜົນປະໂຫຍດທີ່ຫາຍໄປ
- ເຄິ່ງໜຶ່ງຂອງການໄຫຼຈັດສັນໃຫ້ປະເທດທີ່ຢູ່ໃນອ່າງແມ່ນ້ຳ
- ຈັດລຳດັບຄວາມສຳຄັນຂອງການໃຊ້
- ການຈ່າຍຄ່ານ້ຳ
- ອຳນາດອະທິປະໄຕລົມບູນຂອງແມ່ນ້ຳ
- ການຈັດສັນຜົນປະໂຫຍດທີ່ເທົ່າທຽມກັນ
- ການຢຸດການນຳໃຊ້ລ່ວງໜ້າ

ມີຫຼາຍບົດຄວາມທີ່ໄດ້ຂຽນກ່ຽວກັບການແບ່ງປັນຜົນປະໂຫຍດ,[13] ຊຶ່ງສ່ວນໃຫຍ່ເນັ້ນໄປທີ່ ວິທີການໃນການແບ່ງປັນລາຍຮັບຂອງໂຄງການ ໃຫ້ແກ່ກຸ່ມທີ່ໄດ້ຮັບຜົນກະທົບ. ຜົນປະໂຫຍດທີ່ໄດ້ຮັບມາຈາກການ ພັດທະນາແຫຼ່ງນ້ຳໂດຍທົ່ວໄປແມ່ນ ຈະຖືກແບ່ງປັນຢ່າງບໍ່ຍຸດຕິທຳໂດຍສະເພາະແມ່ນ ຄົນທີ່ໄດ້ຖືກຜົນກະທົບໂດຍກົງຈາກການພັດທະນາ ໂຕມັນເອງ.

ການແບ່ງປັນຜົນປະໂຫຍດສາມາດເປັນໄດ້ຫຼາຍກວ່າເຄື່ອງມືໃນການກະຈາຍຜົນປະໂຫຍດ ຫຼື ລາຍໄດ້ຈາກໂຄງການ - ມັນສາມາດກຳນົດກອບໃນການວິເຄາະແນວຄວາມຄິດ ແລະ ອອກແບບໂຄງການດ້ວຍຕົວມັນເອງ. ວິທີໃນການແບ່ງປັນຜົນປະໂຫຍດເປັນຕົວກຳນົດໂອກາດຂອງໂຄງການ ເພື່ອໃຫ້ໄດ້ຮັບຜົນປະໂຫຍດ ດ້ານສິ່ງແວດລ້ອມ, ເສດຖະກິດ ແລະ ສັງຄົມ ທີ່ພຽງພໍເພື່ອການແບ່ງປັນຜົນປະໂຫຍດຢ່າງຍຸດຕິທຳໃຫ້ບັນດາຜູ້ມີສ່ວນຮ່ວມ. ຖ້າຫາກການແບ່ງປັນຜົນກຳໄລໃຫ້ພຽງພໍ ແລະ ເທົ່າທຽມກັນໃຫ້ແກ່ທຸກຜູ້ມີສ່ວນຮ່ວມແມ່ນ ເປັນໄປບໍ່ໄດ້ນັ້ນ, ໂຄງການນັ້ນຈະຖືກຕີຄວາມໝາຍວ່າບໍ່ມີຄວາມໝັ້ນຄົງ. ເພື່ອໃຫ້ບັນລຸການ ແບ່ງປັນ ທີ່ມີຄວາມຍຸຕິທຳ, ໂຄງການສາມາດອອກແບບໃຫ້ມີອົງປະກອບທີ່ຊ່ວຍໃນການເສີມສ້າງການລົງທຶນຮ່ວມ ຊຶ່ງອົງປະກອບອັນນີ້ສາມາດສ້າງລາຍໄດ້ເສີມໃນອ່າງແມ່ນ້ຳ. ເມື່ອລະດັບຂອງຜົນປະໂຫຍດທີ່ເໝາະສົມໄດ້ຮັບການກຳນົດ ໂຄງການສາມາດກຳນົດຢ່າງຈະແຈ້ງກ່ຽວກັບການ ແຈກຢາຍບັນດາຜົນປະໂຫຍດຕ່າງໆ ໃຫ້ແກ່ຜູ້ມີສ່ວນຮ່ວມຢ່າງຍຸດຕິທຳ

## *2.5 ກົນໄກສຳລັບການແບ່ງປັນຜົນປະໂຫຍດ*

ໂອກາດ ແລະ ກົນໄກສຳລັບການແບ່ງປັນຜົນປະໂຫຍດແມ່ນ ຈະຕ້ອງໄດ້ຈັດເຂົ້າໃນເວທີການປຶກສາຫາລື ໃນລະດັບສູງ ເພື່ອໃຫ້ມີການຍອມຮັບໃນກອບທາງດ້ານການເມືອງ, ເສດຖະກິດ ແລະ ສິ່ງແວດລ້ອມ, ໂອກາດໃນການແບ່ງປັນຜົນປະໂຫຍດ ສາມາດພົບເຫັນໄດ້ໃນທຸກລະດັບ ໂດຍຜ່ານທາງດ້ານກົນໄກ (ເບິ່ງຕາຕະລາງ 2.2). ກົນໄກການແບ່ງປັນຜົນປະໂຫຍດສາມາດກຳນົດເປັນໂຄງຮ່າງຂຶ້ນມາໄດ້ໂດຍຜ່ານການແບ່ງປັນຄວາມຮູ້, ການອອກແບບໂຄງການ, ການຈັດສັນລາຍໄດ້ ແລະ ການພັດທະນາທາງດ້ານສະຖາບັນ ແລະ ນະໂຍບາຍ.

ບົດອະທິບາຍ 2.1 ຕົວຢ່າງກົນໄກສຳລັບການແບ່ງປັນຜົນປະໂຫຍດ. 14

ການແບ່ງປັນຄວາມຮູ້

- ການແລກປ່ຽນທາງດ້ານຂໍ້ມູນຂ່າວສານ ແລະ ການແບ່ງປັນທາງດ້ານຄ່າໃຊ້ຈ່າຍ ລະຫວ່າງ ປະເທດທີ່ຢູ່ໃນ ອ່າງແມ່ນ້ຳ
- ການປະເມີນຜົນຮ່ວມກັນທາງດ້ານໂອກາດທາງອຸທົກກະສາດ ແລະ ການປ່ຽນແປງຂອງອ່າງແມ່ນ້ຳ, ການຮ່ວມກັນໃຫ້ຄວາມຮູ້ ແລະ ສ້າງຄວາມອາດສາມາດໃຫ້ແກ່ບຸກຄະລາກອນ.

ການອອກແບບໂຄງການ

- ການອອກແບບໂຄງການ ແລະ ການກຳນົດຈຸດທີ່ຕັ້ງຂອງໂຄງການ ທີ່ເປັນໂຄງການຫຼັກ ແມ່ນເປັນສິ່ງທີ່ຈະ ນຳ ຜົນປະໂຫຍດ ແລະ ຜົນກະທົບທັງທາງບວກ ແລະ ທາງລົບເຂົ້າມາ
- ການປະກອບການລົງທຶນ ການກະຈາຍຜົນປະໂຫຍດ, ການທົດແທນຄືນ ຫຼື ເສີມການລົງທຶນທີ່ເປັນການແຈກຢາຍຕົ້ນທຶນ ແລະ ຜົນປະໂຫຍດແມ່ນມີຄວາມສະເໝີພາບຫຼາຍຂຶ້ນ

ການຈັດສັນລາຍໄດ້ ແລະ ການຈັດການທາງດ້ານການເງິນ

- ການຈັດສັນລາຍໄດ້ເຊັ່ນຈາກ: ຄ່າສິດທິ, ຄ່າເຊົ່າ ແລະ ການຂາຍກາກບອນ
- ການຈ່າຍຄ່າໃຊ້ນ້ຳໂດຍກົງເຊັ່ນ: ການສະໜອງນ້ຳໃຫ້ຕົວເມືອງ ຫຼື ຊົນລະປະທານ (ໃນກໍລະນີທີ່ສິດ ໄດ້ຮັບ ການມອບໝາຍໃຫ້ແລ້ວ)
- ການຈ່າຍໂດຍກົງເພື່ອຜົນປະໂຫຍດ ເຊັ່ນ: ການປະມົງ, ການຄຸ້ມຄອງແຫຼ່ງນ້ຳ, ການບໍລິການ, ການປ່ຽນແປງ ທີ່ເປັນປະໂຫຍດໃນການໄຫຼຂອງແມ່ນ້ຳໃນກອບຂອງກົດໝາຍ.
- ການຊົດເຊີຍສຳລັບຄ່າໃຊ້ຈ່າຍເຊັ່ນ: ທີ່ດິນຖືກນ້ຳຖ້ວມ, ມົນລະພິດ, ການສູນເສຍລະບົບນິເວດ, ການປ່ຽນແປງ ທາງໄຫຼຂອງແມ່ນ້ຳ.
- ການເຮັດສັນຍາຊື້ຂາຍ ເຊັ່ນ: ການຂາຍໄຟຟ້າ, ສິນຄ້າກະສິກຳ (ໃນກໍລະນີທີ່ເງື່ອນໄຂຂອງສັນຍາ ທີ່ສາມາດໃຊ້ໃນການຖ່າຍໂອນຜົນປະໂຫຍດ)
- ການຈັດສັນທຶນ ແລະ ການເປັນເຈົ້າຂອງ ເຊັ່ນ: ມີການຄຸ້ມຄອງ ແລະ ເປັນເຈົ້າຂອງຮ່ວມກັນ ທາງດ້ານພື້ນຖານໂຄງລ່າງ.

ການພັດທະນາ ນະໂຍບາຍ ແລະ ສະຖາບັນ

- ລະບຽບການໃນການດຳເນີນງານ ເຊັ່ນ: ການດຳເນີນງານທາງດ້ານການສ້າງເຂື່ອນ ເພື່ອຮັກສາ ນ້ຳຖ້ວມເຂດກະສິກຳ ຫຼື ການທຳການປະມົງ
- ກອບຂອງນະໂຍບາຍ ແລະ ສິ່ງແວດລ້ອມທີ່ເອື້ອອຳນວຍ ເຊັ່ນ: ໂຄງສ້າງອົງກອນ ແລະ ສິ່ງຈູງໃຈ ເພື່ອຮັບປະກັນຜົນປະໂຫຍດ ເປັນຕົ້ນ: ກົດໝາຍ, ລະບຽບການ, ການເກັບພາສີ, ກຳນົດລາຄາ ແລະ ການຄຸ້ມຄອງ ຜູ້ບໍລິໂພກ.

### 2.5.1 ການແລກປ່ຽນຄວາມຮູ້

ຄວາມຮູ້ ແລະ ຂ່າວສານ ແມ່ນມີຄຸນຄ່າ ແລະ ຕົ້ນທຶນ. ກິດຈະກຳຮ່ວມ ທີ່ເປັນການແລກປ່ຽນຄວາມຮູ້ ແລະ ຂ່າວສານ ຫຼື ການຮ່ວມກັນສ້າງລະບົບຄວາມຮູ້ ແມ່ນສາມາດສ້າງຂຶ້ນມາໄດ້ ເພື່ອເປັນເຄື່ອງມື ສຳລັບການແບ່ງປັນຜົນປະໂຫຍດ ແລະ ຄ່າໃຊ້ຈ່າຍຮ່ວມກັນ. ຂໍ້ມູນຂ່າວສານທາງດ້ານອຸທົກກະສາດສາມາດຊ່ວຍໃຫ້ປະເທດໃນອ່າງແມ່ນ້ຳບໍລິຫານຄຸ້ມຄອງແຫຼ່ງນ້ຳພາຍໃນອະນາເຂດຂອງຕົນໄດ້ດີຂຶ້ນ, ພ້ອມນັ້ນມັນຍັງຊ່ວຍໃຫ້ບັນດາປະເທດ ທີ່ນອນຢູ່ໃນອ່າງແມ່ນ້ຳດຽວກັນ ໄດ້ຮັບຮູ້ ແລະ ເຂົ້າໃຈ ເຖິງຜົນກະທົບ ຈາກການດຳເນີນງານພາຍໃນຂົງເຂດອ່າງແມ່ນ້ຳ ແລະ ມັນຍັງຈະຊ່ວຍໃນການກຳນົດໂອກາດຮ່ວມກັນໃນ ການຍົກລະດັບ ການຄຸ້ມຄອງອ່າງແມ່ນ້ຳ.

ນອກຈາກນີ້ແລ້ວ, ຄວາມເຂົ້າໃຈຢ່າງຈະແຈ້ງຕໍ່ການປ່ຽນແປງຂອງການແບ່ງປັນໃນລະບົບອ່າງແມ່ນ້ຳ ແມ່ນຈະຊ່ວຍໃນຫຼຸດຜ່ອນຂໍ້ມູນທີ່ບໍ່ສົມສ່ວນທີ່ສາມາດທຳລາຍການຕໍ່ລອງໃນບັນດາປະເທດໃນອ່າງແມ່ນ້ຳ, ແລະ ພ້ອມທັງເປັນການສົ່ງເສີມຜົນໄດ້ຮັບແບບຍືນຍົງ ແລະ ເທົ່າທຽມກັນ

*"ຄວາມເຂົ້າໃຈ ທາງດ້ານການປ່ຽນແປງ ໃນລະບົບການແບ່ງປັນໃນອ່າງແມ່ນ້ຳ ເພື່ອສົ່ງເສີມຄວາມ ຍືນຍົງ ແລະ ຜົນໄດ້ຮັບທີ່ເທົ່າທຽມກັນ"*

### 2.5.2 ການອອກແບບໂຄງການ

ການອອກແບບ ແລະ ທີ່ຕັ້ງຂອງໂຄງການຈະເປັນຕົວກຳນົດຂອບເຂດຈິງຂອງຜົນປະໂຫຍດ ແລະ ຕົ້ນທຶນ. ເຖິງຢ່າງໃດກໍ່ຕາມ ການກຳນົດລາຍລະອຽດ, ກຳນົດສະຖານທີ່ແທ້ຈິງ ແລະ ຄວາມເປັນໄປໄດ້ໃນລົງທຶນຕໍ່ການທົດແທນຄືນແມ່ນຈະສາມາດຖືກນຳກັບມາພິຈາລະນາ ແລະ ທົບທວນຄືນໃໝ່ໄດ້ຖ້າການແຈກຢາຍຜົນປະໂຫຍດແມ່ນບໍ່ມີຄວາມເທົ່າທຽມກັນໃນເບື້ອງຕົ້ນ. ການປະກອບການລົງທຶນສາມາດເຮັດໄດ້ເພື່ອເປັນການເພີ່ມ ຈຳນວນ ຂອງໂຄງການ, ພ້ອມດຽວກັນນັ້ນກໍ່ເພື່ອເປັນການສ້າງກ້ອນຜົນປະໂຫຍດທີ່ສາມາດນຳມາແຈກຢາຍໄດ້ຢ່າງເທົ່າທຽມກັນ. ຕົວຢ່າງຂອງການປະກອບການລົງທຶນຊຶ່ງລວມມີ ການຕິດຕັ້ງໄຟຟ້າໃນເຂດຊົນນະບົດ ກ່ຽວຂ້ອງກັບການພັດທະນາໄຟຟ້າພະລັງງານນ້ຳ, ການສ້າງເສັ້ນທາງ ກ່ຽວຂ້ອງກັບການສ້າງຊົນລະປະທານ ຫຼື ການລົງທຶນໃນວຽກງານຊີວິດການເປັນຢູ່ແບບຍືນຍົງ ກ່ຽວຂ້ອງ ກັບວຽກງານການຄຸ້ມຄອງອ່າງໂຕ່ງ.

ກ້ອນຜົນປະໂຫຍດທີ່ໃຫຍ່ຂຶ້ນສາມາດຖືກນຳເຂົ້າມາຢູ່ໃນກົນໄກການແບ່ງປັນຜົນປະໂຫຍດໄດ້. ລະດັບຂອງຜົນປະໂຫຍດທີ່ຫຼາຍຂຶ້ນພາຍໃຕ້ການປຶກສາຫາລື, ຄວາມເປັນໄປໄດ້ແມ່ນເພີ່ມຂຶ້ນ ທີ່ປະເທດໃນອ່າງແມ່ນ້ຳ ຈະສາມາດຫາຂໍ້ຕົກລົງຮ່ວມກັນໃນການແບ່ງປັນຜົນປະໂຫຍດດັ່ງກ່າວ. ການລົງທຶນທີ່ບໍ່ກ່ຽວຂ້ອງ (ຕົວຢ່າງ: ການສ້າງເສັ້ນທາງຄົມມະນາຄົມ, ຕາໜ່າງໄຟຟ້າ) ຫຼື ພື້ນທີ່ທີ່ມີຜົນປະໂຫຍດຮ່ວມກັນ (ຕົວຢ່າງ: ການຄ້າ, ການເດີນທາງເຂົ້າປະເທດ, ການຕິດຕໍ່ສື່ສານ, ການທ່ອງທ່ຽວ ແລະ ການປົກປັກຮັກສາສິ່ງແວດລ້ອມ) ສາມາດຖືກຍົກຂຶ້ນມາເຈລະຈາຮ່ວມກັບບັນຫາການນຳໃຊ້ນ້ຳ. ຄວາມກັງວົນທາງດ້ານການເມືອງ ແລະ ຄວາມສຳພັນທາງການທູດ, ພາບພົດ ແລະ ຊື່ສຽງ ແມ່ນອາດມີສ່ວນທີ່ສົ່ງຜົນສະທ້ອນຕໍ່ການເຈລະຈາກ່ຽວກັບ ການຮ່ວມມືໃນການຄຸ້ມຄອງຂອງອ່າງແມ່ນ້ຳ ທີ່ຖືກນຳໃຊ້ຮ່ວມກັນ. ຮູບແບບ ເຕັມຂອງກົນໄກການແບ່ງປັນຜົນ ປະໂຫຍດສາມາດຖືກນຳມາຮອງຮັບຜົນປະໂຫຍດທີ່ເພີ່ມຂຶ້ນ ພ້ອມທັງເພື່ອຫາວິທີທາງໃນການແກ້ໄຂບັນຫາທີ່ສາມາດຍອມຮັບໄດ້.

*"ລະດັບຂອງຜົນປະໂຫຍດທີ່ຫຼາຍຂຶ້ນພາຍໃຕ້ປຶກສາຫາລື, ຄວາມເປັນໄປໄດ້ແມ່ນເພີ່ມຂຶ້ນ ທີ່ປະເທດໃນອ່າງແມ່ນ້ຳຈະສາມາດແບ່ງປັນກັນໄດ້"*

### 2.5.3 ການຈັດສັນລາຍໄດ້ ແລະ ກົນໄປທາງດ້ານການເງິນ

ລາຍໄດ້ທີ່ໄດ້ຈາກໂຄງການ ສາມາດແບ່ງປັນໃຫ້ກັບຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຫຼື ບັນດາຜູ້-ມີສ່ວນ ຮ່ວມທີ່ຮັບສ່ວນແບ່ງຄ່າໃຊ້ຈ່າຍໃນການພັດທະນາໂຄງການ, ແຕ່ພາກສ່ວນອື່ນໆ ແມ່ນບໍ່ມີຄວາມຈຳເປັນທີ່ຈະຕ້ອງແບ່ງປັນຜົນປະໂຫຍດໃຫ້.

ການສຳລະເງິນສຳລັບນ້ຳແມ່ນຜົນປະໂຫຍດສາມາດນຳມາແຈກຢາຍຄືນໄດ້ອີກ ໂດຍບໍ່ຈຳເປັນຕ້ອງ ກຳນົດ ສິດທິໃນການນຳໃຊ້ນ້ຳຄືນອີກ. ເມື່ອສິດທິຂອງນ້ຳ ມີຄວາມຊັດເຈນ ແລະ ພາກສ່ວນຕ່າງໆຍອມຮັບໃຫ້ປະເທດໜຶ່ງ ໃນ ອ່າງແມ່ນ້ຳມີການໃຊ້ນ້ຳຫຼາຍຂຶ້ນກ່ວາທີ່ພວກເຂົາໄດ້ຮັບສິດຕາມກົດໝາຍ, ການຈ່າຍຄ່າຜູກພັດສຳລັບສິດທິການນຳໃຊ້ນ້ຳສາມາດສິ່ງເສີມໃຫ້ເຫັນເຖິງຜົນປະໂຫຍດຈາກການນຳໃຊ້ນ້ຳ ໂດຍບໍ່ຈຳເປັນຕ້ອງເວົ້າເຖິງສິດ ການນຳໃຊ້ແບບ ເປັນ ທາງການ. ຕະຫຼາດນ້ຳສາກົນ ສາມາດກຳນົດກົນໄກການທີ່ປ່ຽນແປງໄດ້ ໃນການນຳໃຊ້ນ້ຳ ໃນບັນດາປະເທດ ທີ່ຢູ່ ໃນອ່າງແມ່ນ້ຳດຽວກັນ. ລາຄາ ແລະ ປະລິມານຂອງນ້ຳ ສາມາດຕົກລົງກັນໄດ້ ໂດຍການເຈລະຈາຕໍ່ລອງ ທາງດ້ານກົນໄກການຕະຫຼາດ. ຂໍ້ຕົກລົງ ກ່ຽວກັບ

ຮູບທີ 2.1 ໝາກລຳໄຍໄດ້ຖືກຂົນສົ່ງລົງສູ່ເຮືອຂອງຈີນ ຢູ່ໃນທ່າເຮືອຂອງຊຽງແສນ ແມ່ນ້ຳຂອງ, ພາກເໜືອຂອງປະເທດໄທ. ທ່າເຮືອນີ້ແມ່ນຢູ່ໃນລະດັບແນວໜ້າທີ່ມີການຄ້າຈະເລີນເຕີບໂຕໄວ ກັບ ຈີນ




ຮູບທີ 2.1 ໝາກລຳໄຍໄດ້ຖືກຂົນສົ່ງລົງສູ່ເຮືອຂອງຈີນ ຢູ່ໃນທ່າເຮືອຂອງຊຽງແສນ ແມ່ນ້ຳຂອງ, ພາກເໜືອຂອງປະເທດໄທ. ທ່າເຮືອນີ້ແມ່ນຢູ່ໃນລະດັບແນວໜ້າທີ່ມີການຄ້າຈະເລີນເຕີບໂຕໄວ ກັບ ຈີນ

ລາຄານໍ້າ, ປະລິມານນໍ້າທີ່ສາມາດຕອບສະໜອງໃຫ້,ຂະໜາດຂອງອັດຕາທີ່ຜູ້ຊື້ຮັບໄດ້ແມ່ນມີຜົນຕໍ່ກັບ ສ່ວນແບ່ງຜົນປະໂຫຍດ ທີ່ໄດ້ຈາກນໍ້າດັ່ງກ່າວນັ້ນ.

ການສໍາລະເງິນເພື່ອຜົນປະໂຫຍດ(ຫຼືຄ່າຊົດເຊີຍສໍາລັບຄ່າໃຊ້ຈ່າຍ)ອາດຈະຢູ່ໃນກອບຂອງການຮ່ວມມືກັນ.ຖ້າປະເທດທີ່ຢູ່ໃນອ່າງແມ່ນໍ້າເຫັນດີໃນກອບຂອງການຮ່ວມມືທີ່ເປັນຜົນປະໂຫຍດນໍາກັນແລ້ວໂດຍບໍ່ແຕະຕ້ອງສິດຜົນປະໂຫຍດຂອງກັນ ແລະ ກັນແມ່ນສາມາດສໍາລະຄ່າຊົດເຊີຍໄດ້ເລີຍ. ຕົວຢ່າງ ປະເທດທີ່ຢູ່ຕອນລຸ່ມຂອງແມ່ນໍ້າເຫັນດີທີ່ຈະຈ່າຍໃຫ້ປະເທດທີ່ຢູ່ຕອນເທິງຂອງແມ່ນໍ້າ ເພື່ອການປົກປັກຮັກສາແຫຼ່ງນໍ້າຖ້າຫາກມັນເປັນຜົນປະໂຫຍດ ໃນການເພີ້ມທາງດ້ານປະລິມານນໍ້າ, ການຫຼຸດຜ່ອນໄພນໍ້າຖ້ວມ ຫຼື ຫຼຸດການຕົກຕະກອນ, ໃນຂະນະດຽວກັນ ຖ້າປະເທດຢູ່ຕອນລຸ່ມຂອງແມ່ນໍ້າ ຫາກຕັນນໍ້າ ຫຼື ກັກນໍ້າໄວ້ໃຊ້ ແຕ່ນໍ້າພັດໄປຖ້ວມ ເຂດພື້ນທີ່ຂອງປະເທດທີ່ຢູ່ຕອນເທິງ ປະເທດຕອນລຸ່ມຕ້ອງໄດ້ຈ່າຍຄ່າຊົດເຊີຍໃຫ້ກັບ ພື້ນທີ່ນໍ້າຖ້ວມນັ້ນ.

ຂໍ້ຕົກລົງຊື້ຂາຍ ເປັນເຄື່ອງມືອັນໜຶ່ງທີ່ໃຊ້ໃນການ ແບ່ງປັນຜົນປະໂຫຍດຢ່າງເທົ່າທຽມກັນ. ຕົວຢ່າງ ປະເທດທີ່ຢູ່ໃນ ອ່າງແມ່ນໍ້າ ອາດຈະສ້າງ ຫຼື ປັບປຸງເຂື່ອນໄຟຟ້າພະລັງນໍ້າ ແລະ ມີການເຈລະຈາຕົກລົງການໃນການຂາຍໄຟຟ້າ ຊຶ່ງເລື່ອງດັ່ງກ່າວເປັນທີ່ໜ້າສົນໃຈຂອງປະເທດທີ່ຢູ່ໃນອ່າງ, ແຕ່ວ່າ ສ້າງແລ້ວເຮັດໃຫ້ການສະໜອງນໍ້າໃນປະເທດ ບໍ່ພຽງພໍ, ແຕ່ວ່າ ຄວາມຕ້ອງການ ເພື່ອສະໜອງໄຟຟ້ານີ້ ມັນມີຄວາມສໍາຄັນ ເພື່ອຕ້ອງການ ຜົນປະໂຫຍດຈາກການຂາຍໄຟ. ການເຈລະຈາເລື່ອງລາຄາ ສາມາດ ນໍາໄປໃຊ້ໃນການ ແບ່ງປັນຜົນປະໂຫຍດຮ່ວມກັນ ໂດຍການຕົກລົງໃນລາຄາທີ່ສູງຕົວຢ່າງ ໂອນຜົນປະໂຫຍດ ຕາມສັດສ່ວນຫຼາຍຂຶ້ນ ຕາມປະລິມານນໍ້າ, ໃນຂະນະທີ່ ລາຄາທີ່ຕົກລົງກັນແມ່ນຕໍ່າ ແຕ່ໃຫ້ຜົນປະໂຫຍດຢ່າງຫຼວງຫຼາຍ, ປະເທດທີ່ຢູ່ຕອນເທິງຂອງແມ່ນໍ້າ ອາດຈະສ້າງເຂື່ອນເພື່ອກັກເກັບນໍ້າໄວ້ໃຊ້ ແລະ ພິຈາລະນາ ເຫັນໄດ້ໃນຄວາມສໍາຄັນຂອງການຄຸ້ມຄອງແຫຼ່ງນໍ້າ ໂດຍມີການເຈລະຈາ ກັບບັນດາປະເທດທີ່ຢູ່ຕອນລຸ່ມແມ່ນໍ້າ ຊຶ່ງຂໍ້ຕົກລົງດັ່ງກ່າວ ອາດຈະສະທ້ອນໃຫ້ເຫັນຜົນກະທົບ ທີ່ເປັນທາງບວກ ແລະ ຜົນລົບ ກັບຮູບແບບຂອງ ການປ່ອຍນໍ້າຂອງເຂື່ອນ.

ເມື່ອການຄຸ້ມຄອງໃນການຮ່ວມມື ສໍາລັບໂຄງການຂະໜາດໃຫຍ່, ດ້ານການເງິນ, ຄວາມເປັນເຈົ້າການ ແລະ ການຕຽມການໃນການດໍາເນີນງານຈະມີໂຄງສ້າງທີ່ຈະຮ່ວມແບ່ງປັນຜົນປະໂຫຍດ ລະຫວ່າງ ອ່າງແມ່ນນໍ້າດ້ວຍກັນ. ການຮ່ວມ ຫຼື ການຈັດຫາເງິນລົງທຶນ ການປະສານງານຂອງໂຄງການຄວາມຮ່ວມມືທີ່ປະສົບຄວາມສໍາເລັດສາມາດ ຮັກສາຄວາມຮ່ວມມື ໂດຍການແບ່ງປັນຜົນປະໂຫຍດໃນບັນດາປະເທດທີ່ ຢູ່ໃນອ່າງແມ່ນໍ້າ. ຮ່ວມກັນດໍາເນີນງານ ຮ່ວມກັນຮັບຜົນປະໂຫຍດ (ບໍລິສັດຮ່ວມລົງທຶນທາງດ້ານພະລັງງານ) ສາມາດໃຫ້ສິດທິທາງດ້ານຜົນປະໂຫຍດທາງການເງິນ ໂດຍກົງ ແລະ ສ້າງຄວາມໄວ້ເນື້ອເຊື່ອໃຈ ໂດຍການຮ່ວມ ມືແບບຕໍ່ເນື່ອງ. ການລຽງລໍາດັບຂອງການຮ່ວມມື ໃຫ້ເປັນ ແຜນໄລຍະຍາວ ແມ່ນຈະ ຊ່ວຍໃຫ້ການຄຸ້ມຄອງ ມີການປັບຕົວຫຼາຍຂຶ້ນກ່ຽວກັບ ຊັບສິນ ແລະ ມີຜ່ອນສັ້ນຜ່ອນຍາວ ໃນການຕອບ ສະໜອງ ຕໍ່ຄວາມທ້າທາຍ ແລະ ໂອກາດສໍາລັບແມ່ນໍ້າ.

### *2.5.4 ການພັດທະນາ ນະໂຍບາຍ ແລະ ອົງກອນ.*

ປະໂຫຍດຂອງການຮ່ວມມືອາດຈະບໍ່ເກີດຂຶ້ນ ຖ້າຫາກວ່າຂາດນະໂຍບາຍ ແລະ ແຮງຈູງໃຈ ທີ່ຈະເຮັດໃຫ້ຜູ້ທີ່ມີໂອກາດໄດ້ຮັບຜົນປະໂຫຍດ. ໃນກໍລະນີນີ້ ການປະຕິຮູບນະໂຍບາຍ, ການສ້າງຈິດສໍານຶກ, ການສ້າງຄວາມອາດສາມາດ ແລະ ການຊ່ວຍເຫຼືອ ທາງດ້ານວິຊາການ ທັງໝົດນີ້ ອາດເປັນສ່ວນປະກອບການລົງທຶນ ທີ່ສໍາຄັນເພື່ອຮັບປະກັນ

ດ້ານຜົນປະໂຫຍດ ແລະ ການແບ່ງປັນຜົນ ປະໂຫຍດ ທີ່ສຳຄັນ.ນີ້ອາດຈະເປັນກໍລະນີສະເພາະ ໃນການບໍລິຫານ ຜົນປະໂຫຍດໃນລະດັບຊາດ ແລະ ລະດັບທ້ອງຖິ່ນ. ການເນັ້ນຄວາມສຳຄັນຂອງການປັບປຸງຍຸດທະສາດ ການແບ່ງປັນ ຜົນປະໂຫຍດ ແລະ ກົນໄກ ເພື່ອແບ່ງປັນຜົນປະໂຫຍດ ໃນທາງທີ່ແຕກ ຕ່າງກັນ.

*"ການລົງທຶນໃນ ອົງກອນ ແລະ ການສ້າງຄວາມອາດສາມາດ ອາດຕ້ອງມີຄວາມໝັ້ນໃຈວ່າການແບ່ງປັນຜົນປະໂຫຍດແມ່ນສາມາດເຮັດໄດ້ແທ້"*

ເພື່ອໝັ້ນໃຈວ່າ ການກະຈາຍຜົນປະໂຫຍດແມ່ນຈະສາມາດດຳເນີນການໄດ້ນັ້ນມັນຮຽກຮ້ອງໃຫ້ມີ ການລົງທຶນໃນການຈັດຕັ້ງທີ່ຖືກກົດໝາຍ ແລະ ການປົກປັກຮັກສາ. ໃນບາງກໍລະນີ, ການປະກອບສ່ວນຂອງເອກະຊົນ ທາງດ້ານການເງິນເປັນສິ່ງທີ່ຈຳເປັນຊຶ່ງມັນຊ່ວຍໃຫ້ການດຳເນີນການ, ໂຄງສ້າງ ແລະ ການຮ່ວມມື ທາງດ້ານການຄຸ້ມຄອງນ້ຳ ໃຫ້ມີຄວາມຍືນຍົງ.

ລະບຽບການແລະນະໂຍບາຍທາງດ້ານການປະຕິບັດທີ່ອອກໂດຍພາກສ່ວນຊົນລະປະທານ ຫຼື ເຂື່ອນໄຟຟ້າ ຊຶ່ງມັນເປັນປະໂຫຍດໃນການດຳລົງຊີວິດ ທີ່ຢູ່ຕົ້ນນ້ຳ ແລະ ທ້າຍນ້ຳ. ການໃຫ້ຄວາມເອົາໃຈໃສ່ ແລະ ໃຫ້ຄວາມສົນໃຈກັບຄວາມຕ້ອງການຂອງປະຊາຊົນ ທີ່ໄດ້ຮັບຜົນກະທົບ ຈາກໂຄງການ ເປັນສິ່ງທີ່ສຳຄັນ ໃນການເທົ່າທຽມກັນ ຂອງການແບ່ງປັນຜົນປະໂຫຍດ.

## 2.6 *ການນຳໃຊ້ ການແບ່ງປັນຜົນປະໂຫຍດ ໃນທຸກລະດັບ.*

ຂະໜາດຂອງກົນໄກໃນການແບ່ງປັນຜົນປະໂຫຍດ ສາມາດນຳມາໃຊ້ໃນທຸກລະດັບ, ແລະ ຄວນນຳມາໃຊ້ເປັນ ຈຸດເນັ້ນໜັກສະເພາະສຳລັບຊຸມຊົນ ແລະ ລະບົບນິເວດ ທີ່ໄດ້ຮັບຜົນກະທົບຈາກໂຄງການ. ການພັດທະນາ ແລະ ການຄຸ້ມຄອງແມ່ນ້ຳ ຕ້ອງໄດ້ລວມເອົາຜົນປະໂຫຍດທົດແທນ. ສິ່ງດັ່ງກ່າວ ຕ້ອງໄດ້ສ້າງຂື້ນ ແລະ ຈັດຕັ້ງປະຕິບັດ ໃນວິທີການທີ່ ທຸກໆພາກສ່ວນທີ່ໄດ້ຮັບຜົນກະທົບ ໄດ້ຮັບຜົນປະໂຫຍດ ເທົ່າທຽມກັນ.

ຢູ່ໃນລະດັບທ້ອງຖິ່ນ ປະຊາກອນ ແລະ ລະບົບນິເວດທີ່ຖືກຜົນກະທົບ ຕ້ອງໄດ້ເອົາໃຈໃສ່ເປັນຈຸດຫລັກ. ກົນໄກການແບ່ງປັນຜົນປະໂຫຍດ ເຊັ່ນ ຊັບສິນບັດທີ່ໄດ້ເປັນເຈົ້າຂອງຮ່ວມກັນ, ການຈ່າຍພັນທະຊັບພະຍາກອນ ແລະ ການຈ່າຍໃນຮູບແບບຮ່ວມມືລະດັບອ່າງໂຕ່ງ ສາມາດສ້າງຂື້ນເພື່ອສ້າງລາຍຮັບຢ່າງຕໍ່ເນື່ອງ ຫລືຜົນປະໂຫຍດ. ໂຄງການຕົວແບບທີ່ມີເປົ້າໝາຍ ເພື່ອຍົກສູງໂອກາດສຳລັບ, ແລະຈັດການເພື່ອຫລຸດຜ່ອນຜົນກະທົບຕໍ່ຄົນ ແລະ ລະບົບນິເວດທີ່ຖືກກະທົບ ອາດລວມເອົາທັງ ກອງທຶນພັດທະນາຊຸມຊົນ, ສຸຂະພາບ ແລະນ້ຳ ບຸລິມະສິດເພື່ອການວ່າຈ້າງງານ ໃນການຄຸ້ມຄອງໂຄງການ, ການເງິນລະດັບຈຸລະພາກ ແລະ ການປັບແປງດ້ານນະໂຍບາຍ ເຊັ່ນ ກຳມະສິດທີ່ດິນ. ສິ່ງດັ່ງກ່າວຂອງໂຄງສ້າງທີ່ໄດ້ຄາດກະໄວ້ ບໍ່ພຽງແຕ່ໄດ້ ສິ່ງເສີມຄວາມສະເໝີພາບ ໃນການກະຈາຍຜົນປະໂຫຍດ ຍັງສາມາດນຳໃຊ້ເພື່ອສ້າງຄວາມຍືນຍົງ ແລະ ປັບປຸງຜົນກະທົບຂອງການພັດທະນາ.

*"ຈຸດເນັ້ນໜັກສະເພາະ ແມ່ນສຳລັບຊຸມຊົນ ແລະ ລະບົບ ນິເວດ ທີ່ໄດ້ຮັບຜົນກະທົບກະທົບ ຈາກໂຄງການ."*

ໃນລະດັບສາກົນ, ການຕັດສິນໃຈກ່ຽວກັບການອອກແບບ ແລະ ສະຖານທີ່ຕັ້ງໂຄງການ ຈະໄດ້ກຳນົດດ້ວຍການເກີດຂື້ນຂອງຜົນປະໂຫຍດ ແລະ ຄ່າໃຊ້ຈ່າຍ ທາງກາຍະພາບ (ເຊັ່ນ ໂອກາດໃນການມີວຽກເຮັດງານທຳ, ທ່າແຮງ

ທາງຊົນລະປະທານ ແລະ ສະພາບນ້ຳຖ້ວມ). ແຕ່ເຖິງຢ່າງໃດກໍຕາມ ນະໂຍບາຍໃນການຈັດການ ແລະການລົງທຶນ ອາດນຳໃຊ້ ເພື່ອກະຈາຍລາຍໄດ້ ນອກເໜືອຈາກເຂດໂຄງການ ແລະ ລະຫວ່າງຫລາຍຂະແໜງເສດຖະກິດທີ່ກ່ຽວຂ້ອງ (ເຊັ່ນ ລາຍໄດ້ໂຄງການທີ່ໄດ້ວາງໄວ້, ໄຟຟ້າຊົນນະບົດ ແລະການເຂົ້າເຖິງພະລັງງານ, ການບໍາຫານງານເຂື່ອນ ເພື່ອຫລາຍວັດຖຸປະສົງ, ລະບົບນ້ຳໃຊ້ ແລະທາງຊົນນະບົດ.

ໃນລະດັບພາກພື້ນ ແລະ ລະຫວ່າງຊາຍແດນ ໄດ້ມີກົນໄກສຳລັບການແບ່ງປັນຜົນປະໂຫຍດຢ່າງຄົບຊຸດ. ການເລືອກກົນໄກ ຈະຂື້ນກັບໂຄງການໃດໜຶ່ງສະເພາະ ແຕ່ການຮ່ວມມືລະຫວ່າງ ສະຖາບັນ ໄດ້ຢັ້ງຢືນເຖິງ ຄວາມສາມາດທີ່ພຽບພ້ອມ ແລະບົດບາດໃນການຮ່ວມໃນພາກພື້ນເຂັ້ມແຂງ (ເຊັ່ນ ຄວາມເປັນເຈົ້າການຮ່ວມໃນຊັບສິນບັດ, ການນຳໃຊ້ພະລັງງານໃນພາກພື້ນ).

ໃນທຸກລະດັບ, ການແບ່ງປັນ - ຜົນປະໂຫຍດ ສ້າງຂື້ນ ຕ້ອງໃຫ້ສອດຄ່ອງ ກັບຄຸນຄ່າສະເພາະ, ບຸລິມະສິດ ແລະ ໂອກາດ. ໃນເວລາດຽວກັນ, ຄວນມີການຄາດຄະເນວ່າ ຄຸນຄ່າ ບຸລິມະສິດ ແລະ ໂອກາດດັ່ງກ່າວນີ້ ຈະປ່ຽນແປງຕາມເວລາ. ກົນໄກທາງກົດໝາຍ ແລະການຈັດຕັ້ງ ສຳລັບການແບ່ງປັນຜົນປະໂຫຍດ ໄດ້ລະບຸໄວ້ໃນໝວດທີ 4 ແລະ 5 ສະນັ້ນຕ້ອງ ສາມາດປັບປ່ຽນໄດ້ ແລະ ໜັກແໜ້ນພຽງພໍ ເພື່ອການປັບຕົວ.

*“ການແບ່ງປັນ - ຜົນປະໂຫຍດ ສ້າງຂື້ນ ຕ້ອງໃຫ້ສອດຄ່ອງ ກັບຄຸນຄ່າສະເພາະ, ບຸລິມະສິດ ແລະ ໂອກາດ”*

## 2.7 ການແບ່ງປັນຜົນປະໂຫຍດໃນທາງປະຕິບັດ

ການແບ່ງປັນຜົນປະໂຫຍດ ສາມາດໃຫ້ ກອບນະໂຍບາຍທີ່ເລັ່ງໃສ່ຄວາມສະເໝີພາບ ສຳລັບໂຄງການຮ່ວມມື, ສິ່ງໜຶ່ງທີ່ຊອກຫາ ເພື່ອເກັບກໍາຜົນປະໂຫຍດສຳລັບ ຄວາມຫລາກຫລາຍຂອງ ຜູ້ທີ່ມີສ່ວນຮ່ວມ, ເພື່ອສ້າງໂຄງສ້າງສຳລັບການແບ່ງປັນຜົນປະໂຫຍດ ທີ່ຄວນຄຳນຶງຢ່າງເປັນທຳ.

ໃນທາງປະຕິບັດນີ້ ແມ່ນກຳນົດ ກອບຂອງໂຄງການຮ່ວມມື ໃນການແບ່ງປັນຜົນປະໂຫຍດ ຊຶ່ງລວມມີ:

- ຊອກຫາ ບັນຫາຜົນປະໂຫຍດໂດຍລວມ ແລະ ການແບ່ງຜົນປະໂຫຍດ ແບບສະເໝີພາບ ໃນໄລຍະລິເລີ້ມການກະກຽມໂຄງການ;
- ການປັບປ່ຽນການອອກແບບໂຄງການ ເພື່ອເພີ້ມຜົນປະໂຫຍດ ແລະການຄິດໄລ່ຄ່າໃຊ້ຈ່າຍຢ່າງ ມີປະສິດທິຜົນ ໃນບ່ອນທີ່ເຫັນສົມຄວນ;
- ມີໂຄງສ້າງຢ່າງຊັດເຈນ ສຳລັບຜົນປະໂຫຍດ ແລະມູນຄ່າ ພາຍຫລັງການຄຳນຶງເຖິງ ທາງເລືອກໂດຍລວມ ສຳລັບການລົງທຶນ, ການຕໍ່ເນື່ອງຂອງກິດຈະກຳ, ຄວາມເປັນເຈົ້າການ ສຳລັບ ຜູ້ທີ່ໄດ້ຮັບຜົນກະທົບ, ການແບ່ງປັນຄ່າເຊົ່າ, ແລະ ການຖົມຂຸມທາງດ້ານໄຟຟ້າ ຫຼື ພາສີ ), ແລະ ອື່ນໆ.;
- ບໍ່ລືມໂອກາດຕ່າງໆ ໃນລະຫວ່າງການກໍ່ສ້າງ, ແລະໃນເວລາການບໍລິຫານງານ ແລະ ການບຳລຸງຮັກສາ.

ມັນໄດ້ຮຽກຮ້ອງໃຫ້ມີການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ ໃນຂະບວນການ ແລະ ໂຄງການ (ເບິ່ງໝວດທີ3) ໄດ້ແກ່:

- ການກຳນົດ ແລະ ການເຂົ້າຮ່ວມ ຂອງຜູ້ມີສ່ວນຮ່ວມໃນລະດັບທ້ອງຖິ່ນ, ລະດັບ ພູມິພາກ, ລະດັບຊາດ ແລະ ລະດັບສາກົນ;

- ການພິຈາລະນາຂະໜາດ ແລະ ຄວາມສຳຄັນ ຂອງຜົນປະໂຫຍດ ແລະຄ່າໃຊ້ຈ່າຍ ທີ່ເປັນມູນຄ່າ ແລະ ບໍ່ເປັນມູນຄ່າ ຈາກຫລາຍແນວຄວາມຄິດຂອງ ຜູ້ມີສ່ວນຮ່ວມ;
- ເຫັນໄດ້ແນວຄວາມຄິດ ແລະຄຸນຄ່າ ທີ່ແຕກຕ່າງກັນ ທີ່ມີຄວາມສຳຄັນຕໍ່ ການກຳນົດ ການກະຈາຍຜົນປະໂຫຍດຢ່າງແທດເໝາະ;
- ຜັກດັນເພື່ອສ້າງແຮງຈູງໃຈ ໃຫ້ແກ່ຜູ້ມີສ່ວນຮ່ວມ ເພື່ອຄວາມສຳເລັດ ແລະ ຍືນຍົງ.

ມັນຮຽກຮ້ອງໃຫ້ສູມໃສ່ຄວາມສະເໝີພາບ, ລວມທັງ:

- ເບິ່ງຄວາມສົມດູນ ລາຍຈ່າຍແລະຜົນປະໂຫຍດ ຂອງການຮ່ວມມື ສຳລັບແຕ່ລະກຸ່ມຜູ້ມີສ່ວນຮ່ວມ;
- ການພິຈາລະນາ ຫຼັກການ ທີ່ການແບ່ງປັນຜົນປະໂຫຍດ ຄວນໄດ້ຮັບຄວາມເອົາໃຈໃສ່;
- ການຍອມຮັບວ່າ ຄວາມສະເໝີພາບ ບໍ່ຈຳເປັນໝາຍຄວາມວ່າ ເທົ່າທຽມກັນ;
- ມຸ່ງໝັ້ນ ເພື່ອຄວາມໂປ່ງໃສ.

ຕ້ອງມີການສ້າງຕັ້ງ ສະຖາບັນການຈັດຕັ້ງ ແລະ ກົນໄກທີ່ແຂງແຮງ (ເບິ່ງໝວດທີ 4 ແລະ 5) ເຊັ່ນ:

- ເຮັດຄູ່ຂະໜານກັບ ສະຖາບັນການຈັດຕັ້ງ, ຄວາມອາດສາມາດ ແລະ ສິ່ງຊຸກຍູ້ ເພື່ອໃຫ້ເຫັນໄດ້ເຖິງຜົນປະໂຫຍດທີ່ແທ້ຈິງ;
- ການພິຈາລະນາກົນໄກເຕັມຮູບແບບ ໃນລະດັບທ້ອງຖິ່ນ, ພູມີພາກ ແລະ ລະດັບຊາດ;
- ເລັ່ງໃສ່ຮູບແບບ ເພື່ອຄວາມລຽບງ່າຍ, ໂປ່ງໃສ ແລະ ຖາວອນ;
- ເລັ່ງໃສ່ ເພື່ອການປັບຕົວ, ຄືກັນກັບຄຸນຄ່າ, ບຸລິມະສິດ ແລະ ສະຖານະການ ທີ່ຈະປ່ຽນແປງ ໄປຕາມເວລາ.



# ໝວດທີ3

## ຜູ້ມີສ່ວນຮ່ວມໃນ ການແບ່ງປັນຜົນປະໂຫຍດ ແລະ ຂະບວນການຄຸ້ມຄອງ

ຂະບວນການໃນການຄຸ້ມຄອງ ນໍ້າຂ້າມຜ່ານຊາຍແດນແມ່ນສັບສົນ ແລະ ມີຂໍ້ຂັດແຍ່ງ. ການເຂົ້າຮ່ວມຕັ້ງແຕ່ຫົວທີ ຂອງຜູ້ມີສ່ວນຮ່ວມ ສາມາດເຮັດໃຫ້ຜົນຮັບໃນການຄຸ້ມຄອງ ໄດ້ຮັບຜົນສຳເລັດດີຂຶ້ນກວ່າເກົ່າ. ຫຼີກລ້ຽງຂໍ້ຂັດແຍ່ງ ແລະ ເພີ່ມທະວີການແບ່ງປັນຜົນປະໂຫຍດ ໃຫ້ໄດ້ຮັບຜົນສຳເລັດ. ຮູບແບບຕ່າງໆ ຂອງການເຂົ້າຮ່ວມແມ່ນມີຄວາມ ຈຳເປັນສຳລັບແຕ່ລະປະເພດຂອງຜູ້ມີສ່ວນຮ່ວມ, ການໄຈ້ແຍກຜູ້ມີສ່ວນຮ່ວມແຕ່ຫົວທີ ເຂົ້າໃນຂະບວນການ, ການກຳນົດເວລາ ແລະ ວິທີການເຂົ້າຮ່ວມຂອງແຕ່ລະກຸ່ມຢ່າງມີປະສິດທິຜົນ ຍິ່ງຈະເຮັດໃຫ້ ຈຸດປະສົງຂອງການຄຸ້ມຄອງມີ ຄວາມຄືບໜ້າ ແລະ ຮັບປະກັນມູນຄ່າ ແລະ ຜົນປະ ໂຫຍດທີ່ໄດ້ຮັບມີຄວາມເປັນທຳ ແລະສະໜອງໃຫ້ແກ່ຜູ້ເຂົ້າຮ່ວມ.

### *3.1 ໃຜ ຄື ຜູ້ມີສ່ວນຮ່ວມ?*

ພື້ນທີ່ນໍ້າຂ້າມຜ່ານຊາຍແດນກະທົບຕໍ່ຄົນ,ສະຖາບັນແລະຂະບວນການພັດທະນາໃນຫຼາຍ ຮູບແບບ ແລະ ຂ້າມຜ່ານປະເທດລວມມີ ລັດຕໍ່ລັດ, ຕ່າງລັດຕໍ່ລັດ, ສັງຄົມ ແລະ ທ້ອງຖິ່ນ.

ຜູ້ມີສ່ວນຮ່ວມໄດ້ແກ່: ບຸກຄົນ, ນິຕິບຸກຄົນ, ບໍລິສັດ ແລະ ອົງກອນເອກະຊົນ (ທີ່ເປັນທາງການ ແລະ ບໍ່ເປັນທາງການ) ຢ່າງໃດຢ່າງໜຶ່ງທີ່ກ່ຽວຂ້ອງທັງທາງກົງ ແລະ ທາງອ້ອມ ກັບແຫຼ່ງນໍ້າຂ້າມຜ່ານຊາຍແດນ ແລະ ການຄຸ້ມຄອງຂອງເຂົາເຈົ້າ. ພວກເຂົາອາດຈະເປັນອົງການມະຫາຊົນ, ລັດວິສະຫະກິດ, ອົງການທີ່ບໍ່ແມ່ນ ລັດຖະບານ (NGO), ຂະແໜງການທີ່ກ່ຽວຂ້ອງກັບການນຳໃຊ້ນໍ້າ ເຫຼົ່ານີ້ເປັນຕົ້ນ ຊຶ່ງສາມາດເຫັນໄດ້ ໃນສະຖານທີ່ໆ ແຕກຕ່າງກັນ, ພື້ນທີ່, ຄວາມຮັບຜິດຊອບກໍແຕກຕ່າງກັນ ເປັນຕົວແທນໃຫ້ກັບຜົນປະໂຫຍດຂອງກຸ່ມຄົນ ກໍແຕກຕ່າງກັນ. ນອກຈາກນີ້ ຜູ້ທີ່ມີສ່ວນຮ່ວມອາດມີການປ່ຽນແປງ ເມື່ອເວລາຜ່ານໄປ ເປັນຜູ້ມີສ່ວນຮ່ວມໃໝ່ ທີ່ປະກົດໃນຂະນະທີ່ຄົນອື່ນໆ ຫາຍໄປຈາກຂະບວນ ການດັ່ງກ່າວ.

*“ຜູ້ມີສ່ວນຮ່ວມອາດມີການປ່ຽນແປງ ຕາມການເວລາ, ເມື່ອມີຜູ້ມີສ່ວນ ໃໝ່ປະກົດຂຶ້ນ ຜູ້ມີສ່ວນຮ່ວມເກົ່າຈະຫາຍໄປ”*

ຖ້າຫາກຈຳນວນ ຂອງຜູ້ມີສ່ວນຮ່ວມມີຈຳນວນຫຼາຍ ມັນຈະເປັນຜົນປະໂຫຍດໃນການແບ່ງ ຍ່ອຍອອກໄປໃຫ້ກັບ ຜູ້ທີ່ມີສ່ວນຮ່ວມທັງພາຍໃນແລະພາຍນອກ (ພາຍໃນ ຫຼື ພາຍນອກເພື່ອຂະບວນການຄຸ້ມຄອງ) ເຊັ່ນດຽວກັນກັບກຸ່ມປະຖົມ ແລະ ມັດທະຍົມ. ນີ້ເປັນຈຸດເລີ້ມຕົ້ນຂັ້ນພື້ນຖານສຳລັບ ການວິເຄາະ ການແບ່ງປັນຜົນປະໂຫຍດທີ່ດີທີ່ສຸດ ແລະຈະຊ່ວຍໃຫ້ເຮົາເຂົ້າໃຈ ທັງສອງວິທີທີ່ແຕກຕ່າງກັນ ຜູ້ມີສ່ວນຮ່ວມຮັບຮູ້ສິດຜົນປະໂຫຍດ ແລະ ຄ່າໃຊ້ຈ່າຍ ແລະ ຮັບຮູ້ເຖິງການຮຽກຮ້ອງການຊົດເຊີຍຄ່າຕອບແທນທາງດ້ານຜົນປະໂຫຍດທີ່ພວກເຂົາຄວນຈະໄດ້ຮັບ.

### *3.1.1 ຜູ້ມີສ່ວນຮ່ວມທັງພາຍໃນແລະ ພາຍນອກ*

ຜູ້ມີສ່ວນຮ່ວມພາຍໃນແມ່ນຢູ່ພາຍໃນຜູ້ບໍລິຫານອົງກອນຫຼືຜູ້ທີ່ທຳງານຮ່ວມກັນໃນອົງກອນ ເຊັ່ນ: ລັດຖະບານ, ສະຖາບັນການເງິນ, ຄູ່ຮ່ວມງານພາກສ່ວນເອກະຊົນ. ຜູ້ມີສ່ວນຮ່ວມພາຍໃນ ເປັນຜູ້ມີຄວາມຮັບຜິດຊອບ ໂດຍກົງໃນການອອກແບບ, ການເງິນ ແລະ ການຈັດຕັ້ງປະຕິບັດການຄຸ້ມຄອງອ່າງ ສ່ວນຜູ້ມີສ່ວນຮ່ວມອື່ນໆ ເອີ້ນວ່າ ຜູ້ມີສ່ວນຮ່ວມພາຍນອກທີ່ຢູ່ໃນຂັ້ນຕົ້ນ ແລະ ຂັ້ນຮອງ.

*ຜູ້ມີສ່ວນຮ່ວມຫຼັກ*

ຜູ້ມີສ່ວນຮ່ວມຫຼັກ ຄືບັນດາຜູ້ທີ່ໄດ້ຮັບຜົນກະທົບໂດຍກົງ ຈາກຂະບວນການພັດທະນາ ຊຶ່ງຈະບໍ່ຈຳເປັນ ຫຼື ກ່ຽວຂ້ອງກັບການປ່ຽນແປງ ຂອງສະພາບແວດລ້ອມ ທາງກາຍະພາບພາຍນອກທີ່ພວກເຂົາອາໄສ. ການປ່ຽນແປງເຫຼົ່ານີ້ ສາມາດມີຜົນກະທົບ ທັງດ້ານບວກ ແລະ ລົບໃນຊີວິດ ແລະ ການດຳລົງຊີວິດ ຂອງພວກເຂົາ.

ຜູ້ມີສ່ວນຮ່ວມ ຈະງ່າຍຕໍ່ການກຳນົດ ແຕ່ຍາກໃນການດຶງຄວາມສົນໃຈໃນການເຂົ້າຮ່ວມ ຍ້ອນລັກສະນະການກະຈາຍ ແລະ ການຕັ້ງພູມລຳເນົາຂອງພວກເຂົາ. ການເຂົ້າຮ່ວມອາດຈະໄດ້ຮັບການກະຕຸກຊຸກຍູ້ຈາກຜູ້ທີ່ ມີສ່ວນຮ່ວມທີ່ສາມາດເປັນຕົວແທນໃຫ້ແກ່ ສິດຜົນປະໂຫຍດຂອງຜູ້ມີສ່ວນຮ່ວມຫຼັກຜູ້ມີສ່ວນຮ່ວມກັງວົນຫຼາຍທີ່ສຸດຄື ຜົນກະທົບທີ່ຈະເກີດຈາກ ໂຄງການພັດທະນາ, ການຮັບຮູ້ເຖິງຜົນກະທົບ ແລະ ວິທີການໃນການບັນເທົາຜົນກະທົບ ທາງລົບ ແລະ ຜົນກະທົບຕໍ່ຜົນປະໂຫຍດຂອງພວກເຂົາທີ່ເພີ້ມຂຶ້ນ.

*"ຜູ້ມີສ່ວນຮ່ວມຫຼັກ, ຜູ້ໃດທີ່ໄດ້ຮັບຜົນກະທົບໂດຍກົງ, ແມ່ນເປັນເລື່ອງງ່າຍທີ່ຈະກຳນົດວ່າໃຜ ແຕ່ຍາກທີ່ຈະເອົາເຂົ້າມາມີສ່ວນຮ່ວມ"*

*ຜູ້ມີສ່ວນຮ່ວມສຳຮອງ*

ຜູ້ມີສ່ວນໄດ້ສ່ວນເສຍສຳຮອງ ເປັນຜູ້ທີ່ບໍ່ໄດ້ຮັບຜົນກະທົບໂດຍກົງ ຈາກການພັດທະນາແຕ່ພວກເຂົາ ອາດມີສ່ວນຮ່ວມໃນຜົນຂອງຂະບວນການ ມີຜົນກະທົບຕໍ່ຜູ້ມີສ່ວນຮ່ວມຫຼັກ ຫຼື ຄວາມສົນໃຈໃນການຄຸ້ມຄອງນ້ຳຂ້າມຜ່ານຊາຍ ແດນຢູ່ໃນລະດັບການອອກນະໂຍບາຍ. ພວກເຂົາອາດຈະເປັນອົງກອນພາກປະຊາສັງຄົມ ຫຼື ສະມາຄົມ, ສະຖາບັນສາທາລະນະ ຫຼື ປະໂຫຍດຂອງພາກເອກະຊົນ ເຊັ່ນ: ສະມາຄົມທາງ ດ້ານການຄ້າ, ເສດຖະກິດ, ຫຼື ສະຖາບັນການເງິນ. ຜູ້ທີ່ມີສ່ວນຮ່ວມພາກລັດສາມາດເຂົ້າຮ່ວມເລືອກຕັ້ງຕົວແທນ, ລັດຖະບານທ້ອງຖິ່ນ, ສະພາ, ທະຫານ ຫຼື ອົງການຈັດ ຕັ້ງສາກົນ ເຊັ່ນ: ສະຫະປະຊາຊາດ.

ຜູ້ມີສ່ວນຮ່ວມສຳຮອງມັກຈະມີຕົວກາງ ລະຫວ່າງຜູ້ທີ່ຮູ້ສຶກໄດ້ເຖິງ ຜົນກະທົບຂອງຂະບວນ ການການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ, ຜູ້ບໍລິຫານ ແລະ ຜູ້ມີອຳນາດໃນການຕັດສິນໃຈທາງດ້ານນະໂຍບາຍ. ພວກເຂົາອາດສະໜັບສະໜູນ ໂຄງການພັດທະນານ້ຳທີ່ຢູ່ໃນຄວາມສົນໃຈຂອງປະເທດຫຼືພາກພື້ນ ຫຼື ສະເພາະປະເພດການແບ່ງປັນຜົນປະໂຫຍດໃດໜຶ່ງ ອີກວິທີໜຶ່ງເຂົາອາດຈະຕໍ່ຕ້ານ ການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ເຊັ່ນ: ການພັດທະນາເຂື່ອນ ຂະໜາດໃຫຍ່ ຫຼື ການແບ່ງປັນຜົນ ປະໂຫຍດສະເພາະໃດໜຶ່ງ.

*"ຜູ້ມີສ່ວນຮ່ວມສຳຮອງ ຄືຜູ້ທີ່ ບໍ່ໄດ້ຮັບຜົນກະທົບໂດຍກົງແຕ່ມັກຈະເປັນ ເໝືອນຕົວກາງ"*

ການກຳນົດຜົນປະໂຫຍດ ຂອງຜູ້ມີສ່ວນຮ່ວມສຳຮອງ ມັກຈະມີຄວາມຊັບຊ້ອນ ແລະ ຄວາມສາມາດ ໃນການລະບຸ ແລະ ດຶງດູດພວກເຂົາທັງໝົດຈະຖືກຈຳກັດ ຢ່າງໃດຢ່າງໜຶ່ງຕາມກອບຂອງເວລາຂອງການພັດທະນາ ຫຼື ເປັນໄປຕາມຄວາມຮູ້ຕາມທີ່ພວກເຂົາມີ. ຈະມີໃນຫຼາຍກໍລະນີຜູ້ມີສ່ວນຮ່ວມສຳຮອງ ອາດຈະບໍ່ໄດ້ໃຫ້ຄວາມສົນໃຈພິຈາລະນາເຂົ້າໃນຂະບວນການວາງແຜນໂຄງການ ພວກເຂົາບໍ່ຖືກຖືໃນຄວາມສຳຄັນຂອງຂະບວນການ ວາງແຜນທີ່ເອົາຄຸນຄ່າຂອງພວກເຂົາເຂົ້າຮັບພິຈາລະນາ ເຖິງຄຸນຄ່າທີ່ຄວນຈະໄດ້ຮັບ. ນີ້ເປັນການຕອກຍ້ຳຄວາມຈຳເປັນ ທີ່ຈະຕ້ອງມີ ສ່ວນຮ່ວມພາຍໃນເພື່ອລະບຸເຖິງຜູ້ມີສ່ວນຮ່ວມ ທີ່ມີສັກກະຍະພາບທັງໝົດ ແລະ ໃຫ້ໝັ້ນໃຈວ່າພວກເຂົາເອົາໃສ່ໃຈເຖິງໂອກາດໃນການສະແດງຄວາມຄິດເຫັນ. ບາງອ່າງແມ່ນ້ຳ ຜູ້ຄຸ້ມຄອງໄດ້ພັດທະນາລະບົບຖານຂໍ້ມູນ ຂອງຜູ້ມີສ່ວນຮ່ວມສຳຮອງ.

ຜູ້ທີ່ມີສ່ວນຮ່ວມພາກປະຊາສັງຄົມແມ່ນມີບົດບາດສຳຄັນຢ່າງຫຼວງຫຼາຍຕ້ອງໄດ້ເອົາໃຈໃສ່ ເພາະມັນເປັນ ຕົວແທນແຫ່ງສິດຜົນປະໂຫຍດຂອງຊຸມຊົນ ທີ່ໄດ້ຮັບຜົນກະທົບບາງຄັ້ງຕ້ອງໄດ້ມີການແຕ່ງຕັ້ງ ເມື່ອມີການຮ້ອງຂໍຈາກຜູ້ກ່ຽວຂ້ອງບາງຄັ້ງກໍແຕ່ງຕັ້ງພາກສ່ວນຕົນເອງເປັນ. ຊຶ່ງບຸກຄົນເຫຼົ່ານີ້ ອາດລວມເຖິງທ້ອງຖິ່ນ ຫຼື ລະດັບຊາດ (ຊຶ່ງອາດເປັນບຸກຄົນ ຫຼື ລັດ), ນັກວິຊາການ, ຜູ້ເຄື່ອນໄຫວທາງສັງຄົມສາດ, NGOs, ແລະ ສະຫະພາບແຮງງານທຸລະກິດການຄ້າເຫຼົ່ານີ້ ເປັນຕົ້ນ. ສິ່ງສຳຄັນ ຂອງພວກເຂົາເພີ່ມຂຶ້ນເລື້ອຍໆ ເພາະແຕກຕ່າງຈາກຜູ້ມີສ່ວນຮ່ວມຫຼັກ, ພວກເຂົາມີເຄືອຂ່າຍສູງ ເຮັດໃຫ້ເຂົາມີອິດທິພົນຕໍ່ຂະບວນການພັດທະນາໃຫຍ່ຫຼວງ. ດັ່ງນັ້ນ ພາຍໃຕ້ຂະບວນການຂອງຫຼາຍໆ ສະຖາບັນການເງິນລະຫວ່າງປະເທດ ແລະ ການຊຸກຍູ້ໃຫ້ມີສ່ວນຮ່ວມໃນການພັດທະນາ. ຜູ້ມີສ່ວນຮ່ວມນີ້ ມັກມີສິດອຳນາດໃນການຕໍ່ລອງຜົນປະໂຫຍດສະເພາະໃດໜຶ່ງ.

ເຖິງຢ່າງໃດກໍຕາມ, ໃນຖານະໄດ້ແຕ່ງຕັ້ງຕົນ ເປັນຜູ້ມີສ່ວນຮ່ວມສຳຮອງ ບໍ່ອາດຢືນຢູ່ໃນຜົນປະໂຫຍດຂອງຜູ້ມີສ່ວນຮ່ວມຫຼັກທີ່ມີຄວາມມຸ້ງຫວັງເພື່ອໃຫ້ຕົນເປັນຕົວແທນຂອງພວກເຂົາ. ນອກຈາກນີ້ ຍັງມີຄວາມເປັນໄປໄດ້ອີກວ່າ ຜູ້ມີສ່ວນຮ່ວມຫຼັກອາດບໍ່ຮູ້ຜູ້ມີສ່ວນຮ່ວມສຳຮອງຄື ເປັນຕົວແທນໃຫ້ແກ່ພວກເຂົາ. ສິ່ງທ້າທາຍເຫຼົ່ານີ້ສາມາດແກ້ໄຂໄດ້ສ່ວນໃດໜຶ່ງ ໂດຍຜ່ານຂະບວນຈຳແນກຜູ້ທີ່ມີສ່ວນຮ່ວມແລະການສົນໃຈໃນການເຂົ້າຮ່ວມ. ນີ້ຮັບປະກັນໄດ້ສ່ວນໃດສ່ວນໜຶ່ງວ່າຜູ້ທີ່ມີສ່ວນຮ່ວມຫຼັກ ໄດ້ຈຳແນກຜູ້ມີສ່ວນຮ່ວມສຳຮອງເປັນຕົວແທນສິດຜົນປະໂຫຍດຂອງພວກເຂົາ. ໃນທຳນອງດຽວກັນ ພັນທະມິດສາມາດເຮັດໃຫ້ຜູ້ມີສ່ວນຮ່ວມຫຼັກແລະສຳຮອງມີຄວາມສົນໃຈທີ່ຄ້າຍຄືກັນ.

ໃນການເຄື່ອນໄຫວຫຼ້າສຸດຂອງ ການລິເລີ່ມການຄຸ້ມຄອງອ່າງໂຕ່ງແມ່ນ້ຳໄນ (NBI), ຜູ້ໃຫ້ທຶນ ແລະ ລັດຖະບານ ເຫັນໄດ້ເຖິງຄວາມສຳຄັນຂອງການມີສ່ວນຮ່ວມ ຂອງຜູ້ມີສ່ວນຮ່ວມ ແລະ ການສ້າງຕັ້ງກຸ່ມປຶກສາຫາລືອ່າງ ແມ່ນ້ຳໄນ (Nile Basin Discourse) ເພື່ອປຶກສາຫາລື ແລະ ແລກປ່ຽນບົດຮຽນທາງ ດ້ານຕ່າງໆນຳກັນໃນ 10 ປະເທດທີ່ນອນ ໃນອ່າງແມ່ນ້ຳ. (ເບິ່ງ ກໍລະນີ 3.1).

*"ຜູ້ມີສ່ວນຮ່ວມສຳຮອງ ພາກປະຊາສັງຄົມທີ່ເປັນຕົວແທນຜູ້ທີ່ໄດ້ຮັບຜົນກະທົບ ໂດຍສະເພາະຕໍ່ກັບຊຸມຊົນ ຊຶ່ງບາງຄັ້ງກໍຖືກເຊີນໃຫ້ເຂົ້າຮ່ວມ ບາງຄັ້ງກໍແຕ່ງຕັ້ງພຽງໃນນາມ"*

*ກໍລະນີ 3.1 ບົດໂດຍສັງລວມ-ການມີສ່ວນຮ່ວມຂອງຜູ້ມີສ່ວນຮ່ວມໃນອ່າງແມ່ນ້ຳໄນ.*[15]

ການລິເລີ່ມການຄຸ້ມຄອງອ່າງໂຕ່ງແມ່ນ້ຳໄນ(NBI)ມຸ່ງໝັ້ນທີ່ຈະໃຊ້ວິໄສທັດຮ່ວມກັນ: "ເພື່ອໃຫ້ເກີດການພັດທະນາ ທາງເສດຖະກິດ ແລະ ສັງຄົມຢ່າງຍືນຍົງຜ່ານການໃຊ້ຢ່າງເທົ່າທຽມກັນ ແລະ ໃຊ້ປະໂຫຍດຈາກຊັບພະຍາກອນນ້ຳໃນ ອ່າງນ້ຳໄນ" ຫຼັກການພື້ນຖານຂອງການດຳເນີນງານຮ່ວມມື ໃນອ່າງແມ່ນ້ຳໄນມີການແບ່ງປັນຜົນປະໂຫຍດ ແລະ ສ້າງຄວາມໝັ້ນໃຈ-ຂອງຜູ້ມີສ່ວນຮ່ວມ ທີ່ສຳຄັນ.

ການມີສ່ວນຮ່ວມ ໂດຍກົງຂອງ NBI ມີ ສອງລະດັບ:

- ໃນລະດັບແຜນງານທີ່ຢູ່ໃນລະດັບພາກພື້ນ ໂດຍຜ່ານການສັງລວມ ຂອງຄວາມຫຼາກຫຼາຍຂອງກຸ່ມຜູ້ມີສ່ວນຮ່ວມຈາກ-ນະໂຍບາຍ, ຜູ້ມີອຳນາດໃນການຕັດສິນບັນຫາ, ທຸລະກິດຂະໜາດນ້ອຍຍິງຊາຍ, ປະມົງ, ຊາວກະສິກອນ, ສາດສະໜາ ແລະ ກຸ່ມເຢົາວະຊົນ.
- ໃນລະດັບໂຄງການ: ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງ ມີສ່ວນຮ່ວມໃນການອອກແບບ ແລະ ກະກຽມກິດຈະກຳ ໂດຍຜ່ານການປຶກສາຫາລື ແລະ ຂະບວນການໃນການແລກປ່ຽນຂໍ້ມູນຂ່າວສານ.

ນອກຈາກນີ້, ເຄືອຄ່າຍອິດສະຫຼະຈາກອົງກອນພາກປະຊາສັງຄົມໄດ້ຮັບການຈັດຕັ້ງຂຶ້ນເພື່ອໃຫ້ມີອຳນາດແຕ່ຕ້ອງໄດ້ຮັບການເຫັນດີຈາກ ຫຼື ໄດ້ຮັບອະນຸມັດຈາກອົງກອນ NBI. ເຄືອຂ່າຍສົນທະນາແມ່ນ້ຳໄນ (Nile Basin Discourse: NBD),[16] ຖືກອອກແບບມາເພື່ອ ເຊື່ອມໂຍງຜູ້ມີສ່ວນຮ່ວມຫຼັກ ແລະ ສຳຮອງ ເຂົ້າໃນກິດຈະກຳຂອງ NBI. NBD ເຮັດໜ້າທີ່ເປັນ ຜູ້ຄຸ້ມຄອງອົງກອນ ໃນລະດັບຊາດ ຂອງແຕ່ລະປະເທດທີ່ມີ ອ່າງແມ່ນ້ຳໂດຍລວມ ເຊິ່ງຜ່ານການປະສານງານກັບສະຖາບັນ ປະສານງານຂອງປະເທດ (Country Coordinating Institutions, CCI) ຊຶ່ງເບິ່ງທາງດ້ານກິດຈະກຳລວມໃນເວທີການປຶກສາຫາລື ໃນລະດັບຊາດ (National Discourse Forums, NDFs). ເວທີການປຶກສາຫາລື ຕັ້ງຢູ່ເມືອງ Etebbe ໃກ້ກັບ ກອງເລຂາຂອງ NBI ເຊິ່ງເຮັດ ໜ້າທີ່ເປັນກອງເລຂາໃຫ້ NDB. ກອງເລຂາດັ່ງກ່າວ ເປັນຜູ້ຮັບຜິດຊອບ ໃນການປະສານງານ ທາງດ້ານທຶນໂດຍລວມ, ບໍລິຫານ ແລະ ໃຫ້ການສະໜັບສະໜຸນທາງດ້ານວິຊາການ ແລະ ເຮັດໜ້າທີ່ເປັນຈຸດຕິດຕໍ່ປະສານງານໃນອ່າງແມ່ນ້ຳໄນ.

### *3.1.2 ການກຳນົດຜູ້ມີສ່ວນຮ່ວມສະເພາະ*

ຂັ້ນຕອນທຳອິດ ທີ່ສຳຄັນໃນການກຳນົດຜູ້ມີສ່ວນຮ່ວມສະເພາະຄື ການສ້າງກອບສຳລັບການວິເຄາະທີ່ຕ້ອງໄດ້ລະບຸປະເພດຂອງຜູ້ມີສ່ວນຮ່ວມ, ອຳນາດອິດທິພົນ, ຄວາມສຳພັນ, ຄວາມສົນໃຈ ແລະ ບົດບາດໃນການຄຸ້ມຄອງ. ຈຸດມຸ້ງໝາຍຂອງຂະບວນການນີ້ຄື ເພື່ອປະເມີນຄວາມສຳຄັນຂອງ ຜູ້ມີສ່ວນຮ່ວມກ່ຽວກັບຜົນສຳເລັດ ຫຼື ບໍ່ມີຜົນສຳເລັດໃນແຕ່ລະຂັ້ນຕອນຂອງຂະບວນການພັດທະນາ. ດ້ວຍເຫດນີ້ມັນຈຶ່ງຕ້ອງມີທິດນຳທາງດ້ານ ຍຸດທະສາດໃນການດຶງດູດ ໃຫ້ມີຄວາມສົນໃຈເຂົ້າຮ່ວມ.

ຕາຕະລາງ3.1 ສະແດງໃຫ້ເຫັນເຖິງວິທີການ ຊຶ່ງສະແດງໃຫ້ເຫັນພາບລວມຂອງຜູ້ມີສ່ວນຮ່ວມຫຼັກ ແລະ ຜູ້ມີສ່ວນຮ່ວມສຳຮອງ ຕາມສະຖານທີ່ພື້ນທີ່ ແລະ ຄວາມສົນໃຈໃນຂັ້ນຕອນຮອບວຽນ ຂອງໂຄງການ ເຊັ່ນ: ການປະຕິບັດສາມາດເຮັດໄດ້ ສຳລັບອົງປະກອບທັງໝົດຂອງຂະບວນການ ການຄຸ້ມຄອງ ນ້ຳຂ້າມຜ່ານຊາຍແດນ ແລະ ການຢູ່ຮ່ວມກັນຂອງຜູ້ມີສ່ວນຮ່ວມໃນໂລກ.

*ຕາຕະລາງ3.1 ແຜນວາດຂອງຜູ້ມີສ່ວນຮ່ວມ ແລະ ຂັ້ນຕອນຂອງການມີສ່ວນຮ່ວມ ໃນການອອກແບບ ໂຄງການຈາກປະຊາຊົນຜູ້ມີສ່ວນຮ່ວມ ຜ່ານການດຳເນີນການຈັດຕັ້ງປະຕິບັດໂຄງການ.*

| | ຂັ້ນຕອນໃນການຄຸ້ມຄອງ | | | |
|---|---|---|---|---|
| | **ການກຳນົດ** | **ການອອກແບບ** | **ແຜນການ ແລະ ການເງິນ** | **ການຈັດຕັ້ງປະຕິບັດ** |
| **ຜູ້ມີສ່ວນຮ່ວມຫຼັກ** | | | | |
| ປະເພດຂອງຜູ້ມີສ່ວນຮ່ວມຫຼັກ ໂດຍກຳນົດຈາກ ສະພາບ ພື້ນທີ່ ແລະ ຄວາມສົນໃຈ | • ຜູ້ນຳຊຸມຊົນ ທີ່ໄດ້ຮັບຜົນກະທົບ ທາງລົບ-ບວກ ຈາກແຜນງານ ແລະ ໂຄງການ<br>• ຜູ້ນຳ-ຕົວແທນ ຈາກທ້ອງຖິ່ນ ທີ່ໄດ້ກຳນົດ<br>• ຜູ້ແທນ ຈາກເພດຍິງ ແລະ ຊົນເຜົ່າ. | • ວິເຄາະລະດັບ ຄົວເຮືອນ ຂອງຜົນກະທົບ (ລວມທັງບົດບາດ ຍິງ-ຊາຍ) ຂອງຜົນກະທົບດ້ານແນວຄວາມຄິດ ແລະ ຄວາມຕ້ອງການ)<br>• ກຸ່ມຜູ້ດຳລົງຊີວິດຫຼັກ ແລະ ພົວພັນກັບທຳມະຊາດໄດ້ຖືກພົວພັນ ແລະ ເຂົ້າຮ່ວມໃນຂະບວນການຕໍ່ໄປ. | • ຕົວແທນຈາກທ້ອງຖິ່ນທີ່ມີການຕິດຕໍ່ປະສານກັບອຳນາດການປົກຄອງໃນການຄຸ້ມຄອງອາດດຳເນີນໂດຍຜູ້ມີສ່ວນຮ່ວມສຳຮອງ.<br>• ຜູ້ນຳຊຸມຊົນ ລວມເຂົ້າໃນການເວທີສົນທະນາ ແລະ ປະກອບສ່ວນ ໃນການຈັດການການຄຸ້ມຄອງທ້ອງຖິ່ນ. | • ຜູ້ນຳຊຸມຊົນ ແລະ ຜູ້ຕາງໄດ້ນຳສະເໜີບົດບາດ ສະເພາະໃນການຈັດຕັ້ງ ປະ ຕິບັດ -ແລະ ຄຸ້ມຄອງກິດຈະການ ລວມທັງການເຂົ້າຮ່ວມຂອງຊຸມຊົນທ້ອງຖິ່ນ. |
| **ຜູ້ມີສ່ວນຮ່ວມສຳຮອງ** | | | | |
| ປະເພດຂອງການມີສ່ວນຮ່ວມສຳ ຮອງ ໂດຍ ການຈັດລະດັບ ແລ ປະເພດ | • ກຸ່ມອົງການສະມະຄົມທ້ອງຖິ່ນ ແລະ ຊຸມຊົນພົວພັນກັບໃນຫຼາຍລະດັບ ອີງໃສ່ຄວາມສົນໃຈຕໍ່ຫົວຂໍ້ແຜນງານແລະພູມສາດ<br>• ກຸ່ມຊ່ຽວຊານທີ່ມີສ່ວນພົວພັນ ແລະ ກ່ຽວຂ້ອງ<br>• ອົງການປົກຄອງຂັ້ນທ້ອງຖິ່ນທີ່ເຮັດ ການຄຸ້ມຄອງແລະຕຽມການ | • ກຸ່ມຜົນປະໂຫຍດພິເສດ(ສັດປ່າ,ຄວາມທຸກຍາກ,ບົດບາດຍິງຊາຍ, ຊົນເຜົ່າ) ໄດ້ເຊື້ອເຊີນເຂົ້າຮ່ວມເພື່ອສະເໜີຄວາມຄິດເຫັນ ແລະ ບົດສະເໜີໂຄງການ<br>• ສະມະຄົມພັດທະນາວິຊາການໃດໜຶ່ງໄດ້ເຂົ້າ ຮ່ວມໃນການອອກແບບຂະບວນການ | • ສະຖາບັນທາງດ້ານການເງິນ ຊອກຫາໝາກຜົນຂອງຂະບວນການເຂົ້າຮ່ວມໃນເມື່ອກ່ອນ ເພື່ອຮັບປະກັນການຈັດຕັ້ງປະຕິບັດ.<br>• ອົງການຈັດຕັ້ງທີ່ເຂົ້າຮ່ວມໃນຂະແໜງການກ່ຽວ ຂ້ອງໄດ້ເຊື້ອເຊີນເຂົ້າຮ່ວມໃນຂະບວນການວາງແຜນຢ່າງລະອຽດ. | • ທີ່ປຶກສາໄດ້ເຂົ້າຮ່ວມໃນແຜນງານ.<br>• ອົງການຈັດຕັ້ງເຂົ້າຮ່ວມໃນການຈັດຕັ້ງປະຕິບັດກິດຈະກຳສະເພາະໃດໜຶ່ງລວມທັງການໃຫ້ຂໍ້ມູນຂ່າວສານແກ່ສັງຄົມ.<br>• ອົງການທ້ອງຖິ່ນ ແລະ ພາກພື້ນທີ່ເຮັດວຽກຮ່ວມ ກັບຜູ້ຮັບເໝົາ ເອກກະຊົນໃນການກໍ່ສ້າງໂຄງລ່າງ. |

ຜູ້ມີສ່ວນຮ່ວມໄດ້ມີສ່ວນຮ່ວມຢ່າງຕໍ່ເນື່ອງຈາກການພັດທະນາຊ່ອງທາງການສື່ສານ ແລະ ການໃຫ້ຂໍ້ມູນຕໍ່ສາທາລະນະ, ບໍລິສັດທີ່ປຶກສາ, ຜູ້ມີສ່ວນຮ່ວມ ແລະ ຄວາມເປັນໄປໄດ້ໃນການເປັນເຄືອ ຂ່າຍໃນໄລຍະຍາວນຳກັນ.

ໃນຕາຕະລາງ3.1 ມັນມີຄວາມເປັນໄປໄດ້ທີ່ຈະເລີ່ມຕົ້ນ ໃນການສ້າງແຜນວາດທີ່ກ່ຽວພັນ ກັບຜູ້ທີ່ເຂົ້າຮ່ວມ ໃນຂະບວນການຕ່າງໆທີ່ແຕກຕ່າງກັນ. ການກຳນົດຜູ້ທີ່ມີສ່ວນຮ່ວມຫຼັກທີ່ສຳຄັນແມ່ນ ສະທ້ອນໃຫ້ເຫັນ ໃນແຕ່ລະຂັ້ນຕອນທີ່ແຕກຕ່າງກັນ ໃນຂະບວນການຄຸ້ມຄອງ ເປັນສິ່ງທີ່ສຳຄັນເພື່ອການກຳນົດຍຸດທະສາດ ໃນການມີສ່ວນຮ່ວມ ທີ່ ມີປະສິດທິພາບ. ຄວາມເຂົ້າໃຈເຫຼົ່ານີ້ ຈະຊ່ວຍໃຫ້ການກຳນົດເປົ້າໝາຍທີ່ດີຂຶ້ນ ກ່ຽວກັບຂ່າວສານຂອງຜູ້ມີຮ່ວມ ແລະ ເຮັດໃຫ້ໝັ້ນໃຈວ່າ ຂະບວນການມີສ່ວນຮ່ວມມີປະສິດທິພາບ ແລະ ສາມາດເຂົ້າເຖິງໄດ້ໃນກຸ່ມເປົ້າໝາຍ ໃນເວລາທີ່ເໝາະ ສົມ

*"ການມີສ່ວນຮ່ວມຂອງຜູ້ມີສ່ວນຮ່ວມແບບຕໍ່ເນື່ອງ"*

### *3.1.3 ແຜນວາດທາງດ້ານອຳນາດ ແລະ ຜົນປະໂຫຍດ*

ຂັ້ນຕອນທີສອງ - ແຜນວາດ ແຫຼ່ງຂອງອຳນາດ ແລະ ຜົນປະໂຫຍດທີ່ສະແດງໃຫ້ເຫັນ (ເບິ່ງແຜນວາດ3.1) ສາມາດຊ່ວຍໃນການສະທ້ອນຄວາມເປັນໄປໄດ້ ໃນການນຳມາພິຈາລະນາ ຂອງຮູບແບບການມີສ່ວນຮ່ວມທີ່ແຕກຕ່າງກັນຂອງຜູ້ມີສ່ວນໄດ້ສ່ວນເສຍ. ວົງຈອນນີ້ເປັນເຄື່ອງມື ສຳລັບຂະບວນການປຶກສາຫາລື ແລະ ການຊ່ວຍໃຫ້ຜູ້ມີສ່ວນຮ່ວມພາຍໃນຈະເຂົ້າໃຈຜູ້ທີ່ມີສ່ວນຮ່ວມພາຍນອກ. ອັນນີ້ມັນ ສະແດງໃຫ້ເຫັນເຖິງ ວິທີທີ່ແຕກຕ່າງກັນໃນ ຄວາມສົນໃຈ ແລະ ອຳນາດຢູ່ ໃນຂະບວນການ ຂອງການຄຸ້ມຄອງ.

*"ການກຳນົດອຳນາດ ແລະ ຜົນປະໂຫຍດ ສາມາດຊ່ວຍໃນການວາງແຜນກ່ຽວກັບ ຄວາມເປັນໄປໄດ້ໃນການດຶງດູດຄວາມສົນໃຈໃຫ້ມີການເຂົ້າຮ່ວມ"*




ຮູບ 3.1. ພະນະທ່ານ OLusegun Obasanjo, ປະທານປະເທດໄນຈີເຣຍ ເປັນຜູ້ວ່າການກອງປະຊຸມດາມາຕູລູ (Damaturu) ໄດ້ເຊັນສັນຍາກ່ຽວກັບ ການວາງແຜນການກັກເກັບນ້ຳສຳລັບ ໂກໂມດູກູ (Komodugu) ອ່າງໂຕ່ງແມ່ນ້ຳໂຢບ (Yobe)

ແຜນວາດ 3.1 ຮູບພາບທາງດ້ານອຳນາດ ແລະ ຜົນປະໂຫຍດສຳລັບກຸ່ມຜູ້ມີສ່ວນຮ່ວມຕ່າງໆທີ່ແຕກຕ່າງກັນ ແລະ ວິທີຂອງພວກເຂົາຜ່ານຫຼັກສູດຂອງໂຄງການ.



S1 ຫາ S3: ແຜນວາດສະແດງເຖິງການວິວັດທະນາອຳນາດແລະຄວາມສົນໃຈຂອງຜູ້ມີສ່ວນຮ່ວມສຳຮອງໃນການສ້າງແຜນຄຸ້ມຄອງນ້ຳຂ້າມຊາຍແດນໃນອ່າງນ້ຳສະເພາະໃດໜຶ່ງ. ໃນອ່າງແມ່ນ້ຳໃນ ນີ້ອາດຈະເປັນທີ່ໜ້າສົນໃຈ ຂອງໜັງສືພິມ ຫຼືກຸ່ມກ່ຽວກັບໂຄງການສະເພາະເຂື່ອນ ຫຼືໃຫ້ຄວາມສົນໃຈໃນປະເດັນ ເລື່ອງບັນຫາ ຜົນກະທົບທາງດ້ານສິ່ງແວດລ້ອມ.

S2 ຫາ S8: ນີ້ໝາຍເຖິງອຳນາດທີ່ຫຼຸດລົງ ແລະ ຄວາມສົນໃຈຂອງຜູ້ມີສ່ວນຮ່ວມຫຼັກ ອາດຈະເປັນໂຄງການ ທີ່ປ່ຽນແປງແຜນງານລັກສະນະ ແລະ ຂອບເຂດຂອງຜົນປະໂຫຍດຈະນ້ອຍລົງ ຍ້ອນເປັນຜົນມາຈາກການກະທຳ ຂອງຜູ້ມີສ່ວນໄດ້ສ່ວນເສຍສຳຮອງ ຕົວຢ່າງເຊັ່ນ ອາດຈະຕໍ່ຕ້ານການດຳເນີນການ ຈາກໂຄງການຊົນລະປະທານ ຂະໜາດໃຫຍ່.

S4 ຫາ S7: ໃນທາງກົງກັນຂ້າມ ມັນແມ່ນການເພີ່ມຜົນປະໂຫຍດ ແລະ ອຳນາດຂອງກຸ່ມຜູ້ມີສ່ວນຮ່ວມຫຼັກໃນການສ້າງແຜນງານຄຸ້ມຄອງແຫຼ່ງນ້ຳໃນເຂດເນີນສູງ, ອາດຈະໄດ້ຮັບການຊ່ວຍເຫຼືອຈາກ ກຸ່ມຜູ້ມີສ່ວນຮ່ວມສຳຮອງ ທີ່ມີອຳນາດ ແລະ ຜົນປະໂຫຍດ.

S5 ຫາ S6: ການວາດພາບນີ້ແມ່ນການພັດທະນາໃນແຕ່ລະໄລຍະ ກ່ຽວກັບຜົນປະໂຫຍດຜູ້ມີ ສ່ວນຮ່ວມສຳຮອງໃນໂຄງປະກອບຂອງໂຄງການໃຫຍ່ໃນການປົກປັກຮັກສາສິ່ງແວດລ້ອມ. ຍ້ອນວ່າມັນມີຜົນປະໂຫຍດອຳນາດ ຈຶ່ງມີ ອິດທິພົນໃນການສ້າງພັນທະມິດລະຫວ່າງເຄືອຄ່າຍຜູ້ມີສ່ວນ ຮ່ວມຫຼັກ ແລະ ສຳຮອງ.

ການວິເຄາະລະອຽດສິ່ງນີ້ມີຄວາມໝາຍວ່າ ອຳນາດໃນເນື້ອໃນຂອງການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ແລະ ການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມຈຶ່ງມີຄວາມສຳຄັນ ແລະ ຈຳເປັນ.

## *3.2 ເວລາ ແລະ ວິທີການໃນການດຶງດູດຜູ້ມີສ່ວນຮ່ວມ.*

ການສ້າງແຜນທີ່ຄວາມສົນໃຈ ແລະ ອິດທິພົນຂອງຜູ້ມີສ່ວນຮ່ວມ ໃນແຕ່ລະຂັ້ນຕອນແຕກຕ່າງກັນ ໃນຂະບວນການ ຂອງການຄຸ້ມຄອງ ດັ່ງສະແດງໃນຕາຕະລາງ 3.1 ແລະ ແຜນວາດ 3.1 ສາມາດຊ່ວຍໃນການກຳນົດເວລາ ແລະວິທີການທີ່ດີທີ່ສຸດຂອງຜູ້ມີສ່ວນຮ່ວມທີ່ສາມາດເຂົ້າຮ່ວມ.

### *3.2.1 ການມີສ່ວນຮ່ວມໃນຂັ້ນຕອນ*

ຄວາມຊັບຊ້ອນຂອງການມີສ່ວນຮ່ວມ ຂອງຜູ້ມີສ່ວນຮ່ວມ ແມ່ນຈະໄດ້ແນະນຳໂດຍວິທີການ ແລະ ຂັ້ນ ຕອນຍ່ອຍມັກຈະທັບຊ້ອນກັນ ຕາມທີ່ຈະຖືກນຳເຂົ້າມາໃນຂະບວນການຂອງເວລາ ແລະ ວິທີການ. ມັນບໍ່ຄວນຖືກເບິ່ງວ່າເປັນຂະບວນການໃນການແບ່ງວິໄສທັດ, ສ້າງເປັນຄວາມຄິດເຫັນແບບສັງລວມ, ສ້າງອົງກອນ ແລະ ກຳນົດ ຜູ້ທີ່ສົນໃຈ ແລະ ໃຫ້ຄຳໝັ້ນສັນຍາ.

ຂໍ້ຈຳກັດທາງດ້ານການເງິນ ຈຳເປັນຕ້ອງມີການວິເຄາະແນວໂນ້ມຂອງຄ່າໃຊ້ຈ່າຍ ແລະ ປະໂຫຍດຂອງການມີສ່ວນຮ່ວມຂອງຜູ້ມີສ່ວນຮ່ວມ ໃນສ່ວນຕ່າງໆຂອງຂະບວນການ ໃນການພັດທະນາ. ເພື່ອລະບຸຄວາມ ຕ້ອງການຂອງແຕ່ລະກຸ່ມ ຜູ້ມີສ່ວນຮ່ວມ ໃຫ້ໄດ້ເຂົ້າຮ່ວມໃນຂະບວນການ ແລະ ຂັ້ນຕອນ ນັ້ນເປັນສິ່ງທີ່ຈຳເປັນ ແລະ ສຳຄັນທີ່ສຸດ ຂອງແຕ່ລະກຸ່ມຄຳຖາມຕາມ ແຕ່ລະຂັ້ນຕອນຄື:

- ຂໍ້ມູນຄວນຈະໄດ້ສະໜອງໃຫ້ໂດຍໄວ ເພື່ອວ່າຜູ້ມີສ່ວນຮ່ວມຈະໄດ້ເຂົ້າມາຮ່ວມໃນພາຍຫຼັງ ບໍ?
- ຂັ້ນຕອນຂອງຂະບວນການອອກແບບ ຄວນໃຫ້ເປັນວິທີທີ່ແຕກຕ່າງກັນ ຕາມສະພາບ ແລະ ມຸມມອງບໍ?

- ຄວນບໍ່ວ່າກຸ່ມນີ້ ໄດ້ເຂົ້າຮ່ວມເປັນທາງການໃນໄລຍະຍາວ ຕະຫຼອດການກໍານົດເປົ້າໝາຍ ຂອງການຄຸ້ມຄອງ ເລີ່ມຈາກການອອກແບບ, ການວາງແຜນ ແລະ ການຈັດຕັ້ງປະຕິບັດ?
- ຫຼືກຸ່ມຜູ້ມີສ່ວນຮ່ວມນີ້ໃນຄວາມເປັນຈິງ, ພໍທີ່ຈະໃຫ້ຄວາມສໍາຄັນໃນການພັດທະນາຜົນທີ່ຈະເຮັດໃຫ້ ຜົນປະໂຫຍດ ເພື່ອການພັດທະນາເຕັມຮູບແບບທີ່ຈະດໍາເນີນການໄດ້ ຫຼື ບໍ່?

ການຕັ້ງຄໍາຖາມແມ່ນສາມາດໃຊ້ ໃນການປະເມີນຜູ້ມີສ່ວນຮ່ວມທີ່ແຕກຕ່າງກັນ ປະເພດໃນແງ່ຂອງທ່າແຮງການ ປະກອບສ່ວນຂອງພວກເຂົາອໍານາດ/ອິດທິພົນ ແລະ ຄວາມສົນໃຈໃນຄວາມສໍາພັນກັບຂັ້ນຕອນຕ່າງໆອາດຈະຖາມ:

- ກຸ່ມນີ້ຈະມີຄວາມກ່ຽວຂ້ອງ ແລະ ເປັນຕົວແທນໃນລະດັບທ້ອງຖິ່ນ ຫຼືບໍ່?
- ລະດັບການຮັບຮູ້ ແລະ ແນວໂນ້ມຂອງຜົນກະທົບແມ່ນຫຍັງ?
- ລະດັບອິດທິພົນທີ່ມີຕໍ່ຂະບວນການໃນການຄຸ້ມຄອງມີຫຼາຍເທົ່າໃດ?
- ມີການປະກອບສ່ວນຫຍັງ(ເຊັ່ນ ຄວາມເຂົ້າໃຈ, ຂໍ້ມູນແລະ ຄວາມອາດສາມາດໃນການຄຸ້ມຄອງ) ທີ່ອາດເຮັດໃຫ້ຂະບວນການຄຸ້ມຄອງທີ່ໄດ້ຮັບຜົນ?

ການຕອບຄໍາຖາມເຫຼົ່ານີ້ ຈະຊ່ວຍໃຫ້ຜູ້ບໍລິຫານສາມາດກໍານົດຄະແນນຄວາມແຕກຕ່າງ ຂອງຜູ້ທີ່ມີສ່ວນຮ່ວມກັບວິທີການທີ່ເໝາະສົມຫຼາຍທີ່ສຸດ ແລະ ຊ່ວງເວລາຂອງຄວາມຜູກພັນຂອງ ພວກເຂົາ.

*"ການວິເຄາະຄວາມຕ້ອງການທີ່ມີຂໍ້ຈໍາກັດທາງດ້ານການເງິນ ກ່ຽວກັບ ຄ່າໃຊ້ຈ່າຍ ແລະ ຜົນປະໂຫຍດ ຂອງຜູ້ມີສ່ວນຮ່ວມ"*

### *3.2.2 ເສັ້ນທາງການມີສ່ວນຮ່ວມ*

ການມີສ່ວນຮ່ວມທີ່ມີປະສິດທິພາບ ຈໍາເປັນຕ້ອງໃຊ້ລະດັບພື້ນຖານຂອງຂໍ້ມູນສາທາລະນະທີ່ ສາມາດສ້າງຄວາມ ໝັ້ນໃຈໃນດໍາເນີນການເອງ ແລະ ໃຫ້ແນ່ໃຈວ່າຂະບວນການການພັດທະນາໃນ ອານາຄົດເປັນທີ່ເຂົ້າໃຈໄດ້ຢ່າງງ່າຍດາຍ. ຄວາມເຂົ້າໃຈນີ້ຈະຊ່ວຍໃຫ້ຜູ້ມີສ່ວນໄດ້ສ່ວນເສຍສາມາດ:

- ເຂົ້າໃຈວ່າ ເປັນຫຍັງພວກເຂົາຈະຖືກລວມຢູ່ໃນຂັ້ນຕອນທີ່ສະເພາະເຈາະຈົງ;
- ເຂົ້າໃຈວິທີການຂອງພວກເຂົາມີສ່ວນຮ່ວມ ເປັນຜູ້ຮັບຂໍ້ມູນຫຼືຄູ່ຮ່ວມງານຢ່າງເຕັມທີ່ສາມາດ ໃຫ້ຄໍາເຫັນເຂົ້າໃນຂະບວນການຄຸ້ມຄອງ ແລະ ນໍາໄປສູ່ການປ່ຽນແປງ.

*"ລະດັບພື້ນຖານຂອງຂ່າວສານສາທາລະນະ ສາມາດສ້າງຄວາມເຊື່ອໝັ້ນ ໃນຂະບວນ ການຂອງມັນເອງໄດ້"*

ຈຸດທີສອງທີ່ເປັນສິ່ງສໍາຄັນໃນຄວາມແຕກຕ່າງລະຫວ່າງການ ມີສ່ວນຮ່ວມພຽງໃນນາມ ແລະ ການມີສ່ວນຮ່ວມໃນການປະຕິບັດ. ໃນຫຼາຍກໍລະນີການມີສ່ວນຮ່ວມພຽງໃນນາມ ແມ່ນພຽງແຕ່ຮັບຮູ້ ຂ່າວສານຈາກການຈັດຕັ້ງປະຕິບັດສໍາລັບກອບຂອງວຽກງານເທົ່ານັ້ນ. ການໃຫ້ຂ່າວສານພຽງຢ່າງດຽວ ບໍ່ສາມາດເຮັດໃຫ້ຜູ້ມີສ່ວນຮ່ວມ ເຂົ້າມາມີສ່ວນຮ່ວມຢ່າງເຕັມທີ່ ແລະ ບໍ່ມີໂອກາດຈະໄດ້ແລກປ່ຽນບົດຮຽນ ແລະ ປະສົບການເພື່ອຊ່ວຍພັດທະນາຂະບວນການ ນັ້ນໃຫ້ໄດ້ຮັບໝາກຜົນສູງ.

ການມີສ່ວນຮ່ວມໃນການປະຕິບັດ ແມ່ນສາມາດຕອບສະໜອງກົນໄກ ຊຶ່ງມັນຈະຕອບກັບ ທາງດ້ານຂ່າວສານ (ເຊັ່ນ ການໃຫ້ຄຳປຶກສາ, ການສຳຫຼວດ ແລະ ຄວາມຜູກພັນ) ຈະສະໜອງໃຫ້ ເພື່ອສ້າງຄວາມກົມກຽວ ແລະ ແກ້ໄຂບັນຫາຂໍ້ຂ້ອງໃຈແລະຄວາມກັງວົນລົງໄດ້. ແຕ່ລະດັບຂອງການມີສ່ວນຮ່ວມນີ້ ຍັງຕ້ອງໃຊ້ຂະບວນການ ໃນການຈັດການທີ່ມີປະສິດທິພາບ ທີ່ສາມາດແກ້ໄຂຂໍ້ຂ້ອງໃຈທາງດ້ານຜົນປະໂຫຍດ, ອຳນາດ ແລະ ຂໍ້ຂັດແຍ່ງທີ່ອາດຈະເກີດຂຶ້ນ ໃນກຸ່ມຂອງຜູ້ທີ່ມີສ່ວນຮ່ວມທີ່ແຕກຕ່າງກັນ. ການມີສ່ວນຮ່ວມໃນລະດັບນີ້ ຈະກາຍເປັນບາງສິ່ງບາງຢ່າງຂອງການດຳ ເນີນການໃນພາຍໜ້າ ການດຳເນີນງານໃນຫຼາຍກໍລະນີຂອງຂະບວນການເຫຼົ່ານີ້ເປັນລັດຖະບານ ຄວນຈະໃຫ້ຄວາມສຳຄັນ ໃຫ້ກາຍເປັນວ່າ ລະບົບກົນໄກໃຫ້ຄວາມສົນໃຈ ເຂົ້າໃນທາງດ້ານການເມືອງໃຫ້ຫຼາຍ.

*"ການມີສ່ວນຮ່ວມທາງດ້ານການປະຕິບັດ ແມ່ນຕອບສະໜອງເພື່ອ ການປະສົມປະສານທາງດ້ານຄວາມວັງວົນ ແລະ ຄວາມສົນໃຈ"*

*ກໍລະນີ 3.2 ຂ່າວສານ ແລະ ການມີສ່ວນຮ່ວມໃນ ທະເລສາບຂອງອາເມລິກາເໜືອ* [17]

ການເຫັນໄດ້ຄວາມສຳຄັນຂອງການເຂົ້າຮ່ວມ ອີງການສັງຄົມ ຂ້າມຜ່ານຊາຍແດນເຂົ້າຮ່ວມ ໃນຂະບວນການທົບທວນຂໍ້ຕົກລົງຂອງຄຸນະພາບນ້ຳຂອງທະເລສາບ, ຄະນະກຳມະທິການຮ່ວມສາກົນ ໃນທະເລສາບໄດ້ຮ່ວມມືກັບຫຼາຍເຈົ້າເມືອງຜູ້ປົກຄອງລະດັບສູງ ຈາກອ່າງແມ່ນ້ຳທະເລສາບ St Lawrence ທີ່ໄດ້ຈັດກອງປະຊຸມຂຶ້ນ 15 ເທື່ອ ທີ່ປະເທດການາດາ ແລະ ສະຫະລັດອາເມລິກາ. ໂດຍຜ່ານກອງປະຊຸມດັ່ງກ່າວນີ້ ບົດສົນທະນາທາງເວັບໄຊ, ອີເມວ, ໂທລະສານ ແລະ ຂໍ້ຄວາມຈົດໝາຍ, ຈາກສິ່ງທີ່ປ້ອນເຂົ້າຈາກ ຫຼາຍກວ່າ 4100 ຄົນ ໄດ້ລວບລວມ ໂດຍ IJC ແລະ ສົ່ງໄປຍັງລັດຖະບານທັງສອງ.

ໃຫ້ລັດຖະບານທຸກລະດັບ ເພື່ອປຸກລະດົມ ຄວາມພະຍາຍາມຂອງເຂົາເຈົ້າ ໃນການຈັດຕັ້ງປະຕິບັດສິ່ງດັ່ງກ່າວ ຂໍ້ກັງວົນໄດ້ເໜັ້ນໜັກໃສ່ຜົນກະທົບຂອງຊະນິດ ຄຸກຄາມ ໃນນັ້ນ, ຄວາມຄືບໜ້າຊ້າໃນການແຈ້ງການຂໍ້ກັງວົນດັ່ງກ່າວ, ການປ່ອຍນ້ຳເສຍຂອງຕົວເມືອງ ແລະ ຄວາມບໍ່ແນ່ນອນ ອີງໃສ່ຜົນກະທົບການປ່ຽນແປງ ດິນຟ້າອາກາດ . ຜູ້ມີສ່ວນຮ່ວມໄດ້ສອບຖາມ ເພີ່ມເຕີມ ຂໍ້ມູນ ແລະ ໃຫ້ການສຶກສາມວນຊົນ ໃນດ້ານລະບົບນິເວດທະເລສາບ, ແລະ ໂອກາດທີ່ສືບເນື່ອງສຳລັບການເຂົ້າຮ່ວມຂອງຂະບວນການທົບທວນ.

ການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ ຍັງໄດ້ເປັນສິ່ງຄ້ຳປະກັນໃຫ້ແກ່ລະດັບຊາດ, ພາກພື້ນ ຫຼື ແຂວງ ໃນເຂດທະເລສາບ. ສະຫະລັດອາເມລິກາ ກຳລັງຮຽກຮ້ອງການປະກອບສ່ວນຂອງມວນຊົນ ໃນຍຸດທະສາດປະສານງານລະດັບພາກພື້ນຂອງທະເລສາບ Great lake ຂອງອາເມລິກາເພື່ອຟື້ນຟູ ແລະ ປົກປັກຮັກສາທະເລສາບດັ່ງກ່າວ ແລະ ຂະບວນການປຶກສາຫາລືກັບມວນຊົນ ໃນ 3 ເດືອນ ໃນຂໍ້ຕົກລົງ ການາດາ-ອັງໂຕລີໂອ 2007 ໃນການເຫັນດີຕໍ່ລະບົບນິເວດອ່າງທະເລສາບໄດ້ຖືກເລີ່ມຂຶ້ນໃນເດືອນ ມີນາ 2007.

**ຕົວຢ່າງຂອງລະດັບຂອງເສັ້ນທາງການມີສ່ວນຮ່ວມ, ລວມມີ:**

*ການໃຫ້ຂໍ້ມູນຂ່າວສານ*

ຈຸດປະສົງ ແລະ ເປົ້າໝາຍຂອງການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ຄວນໄດ້ຮັບການເຜີຍແຜ່ຢ່າງກວ້າງຂວາງ. ການໃຫ້ຂໍ້ມູນທີ່ເປັນຈິງສາມາດຍົກສູງຄວາມຕື່ນຕົວໃນການເຂົ້າຮ່ວມຂະບວນ ການໃນປະຈຸບັນ ແລະ ອະນາຄົດ, ກະຕຸ້ນໃຫ້ມີການຖົກຖຽງກ່ຽວກັບອັນດີ ແລະ ບໍ່ດີ ຂອງວິທີການຕ່າງໆ ແລະ ສ້າງໃຫ້ມີການປະກອບຄວາມເຫັນຈາກ

ພາຍນອກ ແລະ ພາຍໃນສັງຄົມ. ກ່ຽວກັບຂ່າວສານ ທີ່ຄວນຊ່ວຍໃນຂະບວນການໃນການມີສ່ວນຮ່ວມໃນໄລຍະທີສອງນັ້ນ. ຂໍ້ມູນຄວນຖືກເຜີຍແຜ່ໃນລັກສະນະໃຫ້ຄໍາປຶກສາຜ່ານເວທີຕ່າງໆ ເຊັ່ນ ຜ່ານການປຶກສາຫາລື, ປະຊຸມສໍາມະນາ ແລະ ສ້າງຂະບວນການໃນຊຸມຊົນ, ການຂຽນບົດຄວາມ ລົງຜ່ານທາງໜັງສືພິມ, ໂຄສະນາຜ່ານທາງສື່ ຂອງຊາດ ແລະ ການສ້າງຈິດສໍານຶກ ໃຫ້ຜູ້ມີສ່ວນຮ່ວມ.

*ການປຶກສາຫາລື*

ການປຶກສາຫາລືບໍ່ພຽງແຕ່ສົ່ງຂ່າວສານໄປຍັງຜູ້ມີສ່ວນຮ່ວມ ແຕ່ຈະເປັນການດຶງດູດເອົາມຸມມອງຂອງ ຜູ້ມີສ່ວນຮ່ວມ ເຂົ້າໃນການປະເມີນຄ່າໃຊ້ຈ່າຍ ແລະ ປະໂຫຍດຂອງການຄຸ້ມຄອງນໍ້າ ແລະ ການພັດທະນາໂຄງການ. ຂອບເຂດຂອງການປຶກສາຫາລືຈະຢູ່ໃນສ່ວນໜຶ່ງ ເພື່ອຕອບສະໜອງໃນລະດັບທີ່ໜ້າສົນໃຈ ແຕ່ຍັງຈະເປັນຜົນມາຈາກສັດສ່ວນຂອງການເຂົ້າຮ່ວມໃນການກໍານົດຍຸດທະສາດ ແລະ ຄວາມຜູກພັນກັບຜົນປະໂຫຍດພາຍນອກອ່າງກໍ່ເປັນໄດ້.

*ການມີສ່ວນຮ່ວມ*

ຄວາມຈໍາເປັນໃນການມີສ່ວນຮ່ວມທີ່ສໍາຄັນ ແມ່ນການກໍານົດກຸ່ມຜູ້ມີສ່ວນຮ່ວມ ສະເພາະທີ່ມີຕົວແທນຈາກປະຊາຊົນເພື່ອມາວາງຍຸດທະສາດ ແລະ ກໍານົດຂະບວນການຂອງການປຶກສາຫາລື ຊຶ່ງການມີສ່ວນຮ່ວມໄດ້ແກ່: ຮ່ວມໃນການອອກແບບວາງແຜນໂຄງການ, ຮ່ວມປຶກສາຫາລື ແລະ ຮ່ວມຈັດຕັ້ງປະຕິບັດ ເຫຼົ່ານີ້ເປັນຕົ້ນ.

*ການພັດທະນາເຄືອຂ່າຍ*

ການພັດທະນາເຄືອຂ່າຍ ເຕັມຮູບແບບໃນຂະບວນການ ຄຸ້ມຄອງນໍ້າຂ້າມຜ່ານຊາຍແດນ ໝາຍເຖິງການ ກໍານົດເປົ້າໝາຍ ທີ່ຕົກລົງກັນບົນພື້ນຖານຜົນໄດ້ຮັບ ແລະ ຈຸດປະສົງ. ໃນລະດັບຂອງການມີສ່ວນຮ່ວມນີ້ ຜູ້ມີສ່ວນຮ່ວມຈະເຂົ້າໃນຂະບວນການການພັດທະນາ ອາດຈະລົມກັນຢູ່ໃນກອງປະຊຸມ, ທີມງານວິຊາການ ຫຼື ຄະນະກໍາມະການ ຊີ້ນໍາ.

*"ຂໍ້ມູນຂ່າວສານຄວນຖືກເຜີຍແຜ່ໃນການປຶກສາຫາລື ເວທີຕ່າງໆ"*

### 3.2.3 ການເຂົ້າຮ່ວມຂອງສັງຄົມ

ສິ່ງສໍາຄັນອີກສິ່ງໜຶ່ງແມ່ນ ການວາງແຜນການເຂົ້າຮ່ວມຂອງສັງຄົມ. ຂະບວນການນີ້ຕ້ອງການທັງສອງຢ່າງຄື ເພື່ອຫຼີກລ້ຽງຄວາມນຶກຄິດ ແບບຊອກທາງເລືອກຮ່ວມກັນ (ໂດຍສະເພາະພາກລັດ) ແລະ ອະນຸຍາດໃຫ້ສັງຄົມເປັນເຈົ້າຕົນເອງ ເຊິ່ງມີຄວາມສາມາດໃນການເລືອກເຂົ້າ ຫຼື ອອກໂດຍ ປາສະຈາກການຂົ່ມຂູ່ດ້ວຍການລົງໂທດ. ອັນນີ້ມັນມີຄວາມສໍາຄັນທາງກົດໝາຍ ແລະ ທັງເປັນການຮັບ ປະກັນ ບໍ່ໃຫ້ຜູ້ມີສ່ວນຮ່ວມຫັນເຫ ອອກຈາກການເຂົ້າຮ່ວມ.

*"ສັງຄົມເຂົ້າຮ່ວມເພື່ອຕ້ອງການຮັກສາສິດໃນການເປັນເຈົ້າຕົນເອງ"*

ຕາຕະລາງທີ3.2 ທາງເບື້ອງລຸ່ມນີ້ ສະແດງໃຫ້ເຫັນເຖິງຂັ້ນຕອນຕ່າງໆຂອງຂະບວນການຄຸ້ມຄອງນໍ້າຂ້າມ ຜ່ານຊາຍແດນ ແລະ ການເປີດໂອກາດໃຫ້ພາກປະຊາສັງຄົມໄດ້ເຂົ້າຮ່ວມ.

ຂະບວນການຈະຕ້ອງກໍານົດເປົ້າໝາຍ ແລະ ວັດຖຸປະສົງແລະປະເມີນທາງດ້ານຄ່າໃຊ້ຈ່າຍ ແລະ ຜົນປະໂຫຍດຈາກພື້ນຖານຂອງຄວາມຈໍາເປັນ ໂດຍມີການສະທ້ອນກັບສິ່ງທີ່ຮັບຮູ້ ແລະ ວິທີການມາຍັງຜູ້ບໍລິຫານໃຫ້ເຖິງ ຂະບວນການ ພື້ນຖານຂອງການຮຽນຮູ້ເພື່ອປັບປຸ່ງວິທີການໃຫ້ມີຄວາມເຂັ້ມແຂງ. ໃນບາງກໍລະນີ, ດັ່ງທີ່ເວທີການປຶກສາຫາລື ໃນອ່າງແມ່ນໍ້າໄນ, ໂຄງສ້າງສະຖາບັນຈະສາມາດຈັດຕັ້ງຂຶ້ນເພື່ອໃຫ້ເປັນເຄືອຂ່າຍໃນລະດັບອ່າງແມ່ນໍ້າສໍາລັບ

ການມີສ່ວນຮ່ວມ ໃນພາກປະຊາສັງຄົມ ທີ່ມີທັງຕອບສະໜອງຕໍ່ຄຳເຊີນໃຫ້ມີສ່ວນຮ່ວມ ແລະ ປະສິດທິພາບທີ່ຈະກຳນົດ ວາລະການ ສຳລັບ ການເຂົ້າຮ່ວມ (ເບິ່ງກໍລະນີ 3.1)

### *3.2.4 ການມີສ່ວນຮ່ວມ ຂອງບຸກຄົນທີສາມ*

ການສະໜັບສະໜູນຈາກບຸກຄົນທີສາມ ສາມາດຊ່ວຍໃຫ້ຄວາມສະດວກໃນການພັດທະນາສະຖາບັນຮ່ວມມື ຂ້າມຜ່ານຊາຍແດນ, ລວມທັງຄວາມສາມາດຕອບສະໜອງ ໃນການມີສ່ວນຮ່ວມໃນການພັດທະນາກັບ ຜູ້ທີ່ມີສ່ວນຮ່ວມ, ເຖິງແມ່ນວ່າໃນສະພາບແວດລ້ອມທີ່ບໍ່ຕ້ອງການຮັບການພັດທະນາຈາກສະຖາບັນໃດກໍ່ຕາມ, ແຕ່ວ່າ ບັນດາອ່າງແມ່ນ້ຳ ຈະຕ້ອງພົບກັບຂໍ້ຫຍຸ້ງຍາກຫຼາຍ, ສະນັ້ນ, ອ່າງແມ່ນ້ຳເຫຼົ່ານີ້ຈະເປັນບ່ອນທີ່ຕ້ອງໄດ້ຮັບ ການພັດທະນາຈາກ ສະຖາບັນລະດັບແຫ່ງຊາດ. ເລື່ອງການຍົກຍ້າຍຂ້າມຜ່ານຊາຍແດນກໍ່ເຊັ່ນດຽວກັນ, ບັນຫາພື້ນຖານເຫຼົ່ານີ້ເຊິ່ງສາມາດໄດ້ຮັບ ການຊ່ວຍເຫຼືອ ຢ່າງມະຫາສານຈາກບຸກຄົນທີ່ສາມ. ພ້ອມກັນນີ້, ບັນຫາທີ່ພົບຄວາມຫຍຸ້ງຍາກກ່ຽວກັບ ສະພາບການນະໂຍບາຍທາງດ້ານການເມືອງ ຕາມລັດຊາຍຝັ່ງ, ເຊິ່ງມັນເປັນເລື່ອງທີ່ລະອຽດອ່ອນ ແລະ ຊັດເຈນ ຄວາມຕຶງຄຽດກັບບັນດາປະເທດ ທີ່ຢູ່ຕາມຊາຍຝັ່ງ, ບາງທີຄວາມຮຸນແຮງເຫຼົ່ານັ້ນກໍ່ເປັນກຸນແຈທີ່ ສຳຄັນຕໍ່ກັບຂະບວນການ ທີ່ຈະເຂົ້າມາຄຸ້ມຄອງ ເລື່ອງ ບັນຫາຂ້າມຜ່ານຊາຍແດນ ເພື່ອສະດວກໃນເວລາການຈັດຕັ້ງປະຕິບັດ.

ການສະໜັບສະໜູນຈາກບຸກຄົນທີສາມ ສາມາດຊ່ວຍໃຫ້ເປັນຮູບປະທຳ ໃນການສົນທະນາ ກັບສິ່ງແວດລ້ອມອ້ອມຂ້າງຂອງຜູ້ທີ່ມີສ່ວນຮ່ວມ. ລວມທັງການແລກປ່ຽນບົດຮຽນ ແລະ ໄດ້ນຳເອົາປະສົບການ ຈາກອ່າງແມ່ນ້ຳເຫຼົ່ານັ້ນ. ຊຶ່ງມັນກໍ່ຍັງເປັນສິ່ງໜຶ່ງທີ່ສຳຄັນ ທີ່ໄດ້ຮັບແຫຼ່ງທຶນສະໜູນສະໜູນ ຈາກຜູ້ທີ່ມີສ່ວນຮ່ວມໃນໄລຍະເລີ່ມຕົ້ນ. (ເບິ່ງ ຕາຕະລາງ3.3)

*"ການສະໜັບ ສະໜູນ ຈາກບຸກຄົນທີສາມ ສາມາດ ນຳເອົາບົດຮຽນ ແລະ ປະສົບການຈາກບັນດາອ່າງແມ່ນ້ຳ"*

ສະຖາບັນພັດທະນາເຊັ່ນວ່າ:ທະນາຄານໂລກ,ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP), ອົງການຮ່ວມມືເຄື່ອງຄ່າຍນ້ຳໂລກ (GWP) ແລະ ອົງການອະນຸລັກທຳມະຊາດສາກົນ (IUCN), ອົງການຕົວແທນເຫຼົ່ານີ້ ສາມາດ ບໍລິການຢ່າງມີຈັນຍາບັນ ທາງດ້ານການເມືອງກັບບັນດາ ປະເທດສະມາຊິກ, ໂດຍສະເພາະແມ່ນບັນດາປະເທດ ທີ່ຈະນຳເອົາເຂົ້າມາຮ່ວມມື ແມ່ນຍາກຫຼາຍ, ຍິ່ງໄປກວ່ານັ້ນ, ບຸກຄົນທີສາມຍັງເປັນເຄື່ອງມືໃນການເຊື່ອມໂຍງ ລະຫວ່າງ ຜູ້ຄຸ້ມຄອງການຂ້າມຜ່ານຊາຍແດນໃນໂຊງເຂດນັ້ນໆ. ພ້ອມກັນນີ້, ຍັງມີນະໂຍບາຍຕ່າງໆໃຫ້ກັບ ປະເທດທີ່ມີສ່ວນຮ່ວມ ເພື່ອ ອຳນວຍຄວາມສະດວກ ໃນເວລາດຳເນີນໂຄງການ .

*ຕາຕະລາງ 3.2 ບົດບາດທີ່ສ້າງຂຶ້ນຂອງອົງການຈັດຕັ້ງສັງຄົມ ໃນຂັ້ນຕອນທີ່ແຕກຕ່າງກັນຂອງຂະບວນການ ການຄຸ້ມຄອງນໍ້າຂ້າມຜ່ານຊາຍແດນ*

| ຂັ້ນຕອນດໍາເນີນງານ | ບົດບາດທີ່ເປັນໄປໄດ້ຂອງອົງການຈັດຕັ້ງສັງຄົມ |
|---|---|
| ຂັ້ນຕອນເລີ່ມຕົ້ນ | ພົວພັນທາງການ ລະຫ່ວາງ ກຸ່ມປະເທດຢູ່ໃກ້ຄຽງ; ການສ້າງການປຶກສາຫາລືຜ່ານເຄື່ອຄ່າຍ ຂອງກຸ່ມອົງການຈັດຕັ້ງສັງຄົມ ກັບບັນດາກຸ່ມສັງຄົມ ໃນລະດັບພາກພື້ນ. |
| ການຄຸ້ມຄອງສະຖາບັນ | ຜູ້ສັງເກດການຕໍ່ບັນຫາ ກອງປະຊຸມໃຫ່ຍ; ການສ້າງເຄື່ອຄ່າຍ ເພື່ອເອົາໄປນໍາໃຊ້ໃຫ້ແກ່ການສ້າງນະໂຍບາຍ ແລະ ການເກັບກໍາຂໍ້ມູນ. |
| ການຈັດຕັ້ງປະຕິບັດແຜນງານ | ການສ້າງຄວາມເຂັ້ມແຂງ, ຂະບວນການກວດກາ ແບບອິດສະຫຼະ; ການຊ່ວຍໃນການໃຫ້ຂໍ້ຄິດເຫັນ ແນວຄວາມຄິດ ແລະ ຜົນກະທົບ ຈາກຊຸມຊົນທ້ອງຖິ່ນ. |
| ການແຈ້ງແຫຼ່ງທຶນໃນວຽກງານການຄຸ້ມຄອງຊັບພະຍາກອນນໍ້າ | ການຈັດຕັ້ງປະຕິບັດ ແລະ ການຮ່ວມມື, ໃນວຽກງານທີ່ເໝາະສົມ, ການໃຫ້ການຊ່ວຍເຫຼືອທາງວິຊາການ ໃນການພັດທະນາການຄຸ້ມຄອງວຽກງານລວມທັງການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ. |

*ແຫລ່ງຂໍ້ມູນ : ODI/ARCADIS/EUROConsult,2001* [19]

*ຕາຕະລາງ 3.3 ບົດບາດສຳລັບອົງການສາກົນທີ່ເຄື່ອນໄຫວເປັນພາກສ່ວນທີສາມ*

| ຂັ້ນຕອນ ຂອງ ຂະບວນການ | ບົດບາດທີ່ເປັນໄປໄດ້ຂອງອົງການສາກົນທີ່ເຄື່ອນໄຫວ ເປັນພາກສ່ວນທີສາມ |
|---|---|
| ຂະບວນການ ລິເລີ່ມ | ສົ່ງເສີມ, ປະສານງານ ແລະ ສະໜັບສະໜູນກິດຈະກຳລິເລີ່ມໂດຍອົງການຈັດຕັ້ງ ເພື່ອກຳນົດ ແລະ ເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມໃນການຄົ້ນຄ້ວາຊັບພະຍາກອນໃນພາກພື້ນ, ໃຫ້ການບໍລິ ການຄືກັນກັບກຳມະການ ໃນເວລາມີບັນຫາຖົກຖຽງເກີດຂຶ້ນ, ສະໜັບສະໜູນຫຼັກການ ການສ້າງຈິດສຳນຶກໃນດ້ານຄວາມສະເໝີພາບ ໂປ່ງໃສ, ເຂົ້າຮ່ວມ ແລະ ການປົກຄອງທີ່ດີ ລວມທັງແນວຄວາມຄິດ ການແບ່ງປັນຜົນປະໂຫຍດ. |
| ການຄຸ້ມຄອງ ສະຖາບັນ | ການກວດກາອິດສະລະຂອງຂະບວນການ ການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ, ລວມທັງບັນຫາຫຼັກຂອງຄວາມເຊື່ອຖື, ການຮ່ວມມື, ຄວາມຖືກຕ້ອງທາງກົດໝາຍ ແລະ ຕົວແທນເພື່ອພັດທະນາແນວຄິດຂອງການແບ່ງປັນຜົນປະໂຫຍດ ແບບສະເໝີພາບ. |
| ການຈັດຕັ້ງປະຕິບັດແຜນງານ | ສ້າງມາດຕະຖານເປັນກາງ ແລະ ຄູ່ມືທີ່ນຳໃຊ້ໄດ້ທົ່ວໄປສຳລັບການກຳນົດຜູ້ມີສ່ວນຮ່ວມ ແລະການເຂົ້າເຄື່ອນໄຫວລະຫ່ວາງຜູ້ມີສ່ວນຮ່ວມ ໃນການຄຸ້ມຄອງຊັບພະຍາກອນໃດໜຶ່ງສະເພາະ. |
| ການສ້າງທຶນໃນວຽກງານ ການຄຸ້ມຄອງ ຊັບພະຍາກອນນ້ຳ | ການເພີ່ມດ້ານການເງິນໃຫ້ແກ່ປະເທດທີ່ຢູ່ແຄມນ້ຳ ທີ່ຍັງອ່ອນນ້ອມ ແລະ ການເຂົ້າຮ່ວມຂອງກຸ່ມ ຜູ້ມີສ່ວນຮ່ວມໃນໂຄງການການສ້າງທຶນສະເພາະ. |

*ແຫລ່ງຂໍ້ມູນ:* ODI/ARCADIS/Euro Consult, 2001[20]

## *3.3 ເສັ້ນທາງສຳລັບການມີສ່ວນຮ່ວມ*

ຂັ້ນຕອນໃນການສ້າງສິດທິ ແລະ ຂະບວນການຄຸ້ມຄອງຊັບພະຍາກອນນ້ຳ ລະຫ່ວາງ ບັນດາ ຜູ້ທີ່ມີສ່ວນຮ່ວມຕໍ່ກັບອ່າງແມ່ນ້ຳ ບາງທີມັນກໍ່ເປັນພຽງສິ່ງທ້າທາຍຂັ້ນເລີ່ມຕົ້ນເທົ່ານັ້ນ ສຳລັບສະຖາບັນຂ້າມຜ່ານຊາຍແດນ, ສະຖາບັນດັ່ງກ່າວ ຈະບໍ່ໄດ້ຢູ່ພາຍໃຕ້ລັດຖະບານຂອງປະເທດນັ້ນ ແຕ່ສາມາດ ສະໜັບສະໜູນ ສິດທິຕ່າງໆຂອງລັດຊາຍຝັ່ງໄດ້. ແຕ່ເຖິງຢ່າງໃດກໍ່ຕາມ, ໃນຂົງເຂດການຄຸ້ມຄອງຊັບພະຍາກອນນ້ຳກໍ່ເກີດມີຄວາມສັບສົນ ຕໍ່ກັບບັນດາກຸ່ມທີ່ມີສ່ວນຮ່ວມ. ພາຍໃຕ້ສະພາບການ ດັ່ງກ່າວ ກໍ່ເປັນບັນຫາທີ່ສຳຄັນ ຕ້ອງໄດ້ເຂົ້າຮ່ວມໃນລະດັບສັງຄົມໃນພາກພື້ນນັ້ນ.

*"ມັນມີຄວາມສຳຄັນຢ່າງຍິ່ງ ທີ່ມີການເຂົ້າຮ່ວມຂອງສັງຄົມໃນລະດັບ ຂົງເຂດ"*

ການມີສ່ວນຮ່ວມທີ່ເໝາະສົມ ຂອງບັນດາກຸ່ມສັງຄົມສີວິໄລ ກ່ອນອື່ນໝົດ, ຕ້ອງສ້າງຄວາມໝັ້ນໃຈໃນສິດທິ ຂອງຕົນເອງ ແລະ ຮັບປະກັນຄວາມໝັ້ນຄົງຕະຫຼອດໄປ ໃນຂະບວນການຄຸ້ມຄອງຊັບພະຍາກອນນ້ຳທີ່ຂ້າມຜ່ານຊາຍແດນ.

ແຜນວາດ3.2 ສະພາບລວມ ຂອງຂະບວນການທີ່ມີສ່ວນຮ່ວມ ຊຶ່ງມັນສາມາດນຳໃຊ້ ໃນຫຼາຍລະດັບ ຂອງອ່າງແມ່ນ້ຳທີ່ຂ້າມຜ່ານຊາຍແດນ, ຈາກທ້ອງຖິ່ນໄປສູ່ລະດັບພາກພື້ນ (ໃນຂະນະດຽວກັນນັ້ນ ຍັງໄດ້ຮັບຮູ້ເຖິງ ການສະຫຼັບຊັບຊ້ອນ ແລະ ການພົວພັນກັນ ໃນລະດັບພາກພື້ນທີ່ແຕກຕ່າງກັນ). ນີ້ແມ່ນຈຸດມຸ້ງໝາຍທີ່ຮັບປະກັນ ຕໍ່ກັບຜູ້ທີ່ມີສ່ວນຮ່ວມ ເຊິ່ງຈະໄດ້ໃຈ້ແຍກບັນດາອ່າງແມ່ນ້ຳທີ່ຂ້າມຜ່ານຊາຍແດນ ແລະ ໃຫ້ມີປະສິດທິຜົນທາງດ້ານຂໍ້ຜູກມັດ ຫຼື ມີສ່ວນຮ່ວມໃນການຄຸ້ມຄອງອ່າງແມ່ນ້ຳທີ່ ຂ້າມຜ່ານຊາຍແດນ.

ແຜນວາດ *3.2 ບາດກ້າວຕ່າງໆໃນການກຳນົດຜູ້ມີສ່ວນຮ່ວມ, ການສັງລວມຄວາມຄິດ ຄວາມສົນໃຈຂອງຜູ້ມີ*ສ່ວນຮ່ວມ ແລະ ການປະເມີນຂະບວນການ.

**ຜູ້ໃດແມ່ນຜູ້ມສ່ວນຮ່ວມໃນການຄຸ້ມຄອງ ຊັບພະຍາກອນນ້ຳ ຂ້າມຜ່ານຊາຍແດນ?**

- ການກຳນົດ ແລະ ອະທິບາຍລັກສະນະຂອງທຸກໆບຸກຄົນ, ກຸ່ມຄົນ, ສະຖາບັນ ແລະ ອົງການຈັດຕັ້ງສາກົນ.
- ການກຳນົດຜູ້ເຂົ້າຮ່ວມຜ່ານການປຶກສາຫາລືກັບພະນັກງານຫຼັກຂອງອົງການຈັດຕັ້ງຫຼັກ, ຫຼື ບັນທຶກ ຫຼື ການຄັດເລືອກດ້ວຍ ຕົນເອງ ຫຼືການນຳໃຊ້ວິທີການ ປະສົມປະສານຂອງວິທີການດັ່ງກ່າວ.
- ຈັດປະເພດຜູ້ທີ່ມີສ່ວນຮ່ວມເຂົ້າໃນປະເທດຫຼັກ ຫຼື ສຳຮອງ, ພາຍໃນ ຫຼື ພາກສ່ວນອື່ນຈາກພາຍນອກ.

**ສັງລວມຄວາມຄິດ ຄວາມສົນໃຈຂອງຜູ້ມີສ່ວນຮ່ວມ, ຜົນສະທ້ອນ ແລະ ຄຸນລັກສະນະ**

- ເຂົ້າໃຈຄວາມຄິດ ຄວາມເຂົ້າໃຈ, ຄວາມມຸ້ງຫັວງ, ຜົນປະໂຫຍດ ແລະ ຜົນເສຍຂອງຜູ້ມີສ່ວນຮ່ວມ.
- ຄວາມແຕກຕ່າງ ລະຫ່ວາງສະຖາບັນການຈັດຕັ້ງ, ອົງການຈັດຕັ້ງແລະ ບຸກຄົນທີ່ມີສ່ວນຮ່ວມ.

**ກຳນົດຮູບແບບ ແລະ ເນື້ອໃນ ໃນການພົວພັນຂອງຜູ້ມີສ່ວນຮ່ວມ**

- ເຂົ້າໃຈການພົວພັນ ລະຫ່ວາງຜູ້ມີສ່ວນຮ່ວມ.
- ຄົ້ນຄິດບັນດາຈຸດຕ່າງໆສຳລັບການປະສານງານ ແລະ ແກ້ໄຂຂໍ້ຂັດແຍ່ງລະຫ່ວາງຜູ້ເຂົ້າຮ່ວມ.
- ຄົ້ນຄິດຈຸດຕ່າງຂອງສິ່ງທີ່ຄ້າຍຄືກັນ ແລະ ແຕກຕ່າງກັນກັບດ້ານນະໂຍບາຍການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ.

**ອຳນາດຂອງຜູ້ມີສ່ວນຮ່ວມ, ທ່າແຮງ ແລະ ຜົນສະທ້ອນ**

- ເຂົ້າໃຈຄວາມສຳຄັນຂອງຜູ້ມີສ່ວນຮ່ວມໃນດ້ານນະໂຍບາຍການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ.
- ເຂົ້າໃຈອຳນາດຂອງຜູ້ມີສ່ວນຮ່ວມໃນການສະທ້ອນດ້ານນະໂຍບາຍໂດຍລວມ ແລະ ນະໂຍບາຍ ການຄຸ້ມຄອງ ນ້ຳຂ້າມຜ່ານຊາຍແດນໂດນສະເພາະ.
- ເຂົ້າໃຈທ່າແຮງຂອງຜູ້ມີສ່ວນຮ່ວມເພື່ອສະທ້ອນ ແລະ ປະກອບເຂົ້າໃນນະໂຍບາຍການຄຸ້ມຄອງນ້ຳຜ່ານຊາບແດນ

**ປະເມີນທາງເລືອກ ແລະ ນຳໃຊ້ຜົນຈາກການປະເມີນເພື່ອສ້າງຄວາມຄືບໜ້າ**

- ທົບທວນຄວາມຄືບໜ້າ ອີງໃສ່ 4 ຂັ້ນຕອນໃນເມື່ອກອ່ນ ແລະ ວາງແຜນຂະບວນການເຂົ້າຮ່ວມສຳລັບຜູ້ມີສ່ວນຮ່ວມ.
- ຕາຕະລາງຜູ້ມີສ່ວນຮ່ວມສາມາດນຳໃຊ້ໄດ້ ເພື່ອຈັດລຽງຂໍ້ມູນຂອງຄວາມຄິດຄວາມສົນໃຈຂອງຜູ້ມີສ່ວນຮ່ວມ, ຜົນສະທ້ອນ ແລະ ການເຂົ້າຮ່ວມດ້ານການນະໂຍບາຍການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ.



# ໝວດທີ 4

## ກອບກົດໝາຍ ກ່ຽວກັບ ການຮ່ວມມືລະຫວ່າງຊາຍແດນ

ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ແມ່ນຂະບວນການສົ່ງເສີມການພັດທະນາ ຂອດປະສານງານ ແລະ ການຄຸ້ມຄອງນ້ຳ, ດິນ ແລະ ຊັບພະຍາກອນອື່ນໆ ທີ່ກ່ຽວຂ້ອງກັບ ຊັບພະຍາກອນນ້ຳ ໃນລະດັບອ່າງແມ່ນ້ຳ,[20] ມັນໄດ້ຮຽກຮ້ອງໃຫ້ມີກອບກົດໝາຍ ທີ່ມີປະສິດທິພາບ ເພື່ອກຳນົດຂະບວນການ ແລະ ລະບຽບການນຳໃຊ້ຊັບພະຍາກອນນ້ຳຢ່າງຈະແຈ້ງ. ກົດໝາຍແມ່ນມີ ບົດບາດສຳຄັນຕໍ່ທຸກບາດກ້າວຂອງການວາງແຜນ ແລະ ລະບົບການອອກແບບໃນການຈັດຕັ້ງປະຕິບັດການຄຸ້ມຄອງນ້ຳ. ຈຳນວນບັນຫາຂອງກົດໝາຍ ຄວນໄດ້ຖືກແກ້ໄຂຕົວຢ່າງແມ່ນການຖືກຳມະສິດຄອບຄອງນ້ຳ, ການຮ່ວມຮັບຜິດຊອບ, ການກະທຳທີ່ເປັນອັນຕະລາຍທີ່ອາດຈະເກີດຂຶ້ນ ແລະ ການໃຊ້ປະໂຫຍດ ແຕ່ພຽງຝ່າຍດຽວ, ບັນດາກົນໄກໃນການຮ່ວມມື ກັບບັນດາປະເທດພາກພື້ນ, ການຈັດສັນ ແລະ ກຳນົດໃນການນຳໃຊ້ນ້ຳໃນຫຼາກຫຼາຍຈຸດປະສົງ ແລະ ການແກ້ໄຂຂໍ້ຄັດແຍງແບບສັນຕິວິທີ. ການນຳໃຊ້ກອບກົດໝາຍທີ່ເໝາະສົມແມ່ນກໍ່ໃຫ້ເກີດການຄຸ້ມຄອງນ້ຳມີປະສິດທິພາບ ແລະ ຊ່ວຍຫຼີກລ້ຽງ ຫຼື ແກ້ໄຂຂໍ້ຂັດແຍ່ງລະຫວ່າງຄວາມຂັດແຍ່ງ ແລະ ຜົນປະໂຫຍດຂອງຜູ້ນຳໃຊ້ນ້ຳ.

### *ກອບກົດໝາຍທີ່ເໝາະສົມ ແມ່ນກໍ່ໃຫ້ເກີດມີ ການຄຸ້ມຄອງນ້ຳແບບມີປະສິດທິພາບ ແລະ ປະສິດທິຜົນ*

ສິ່ງທີ່ທ້າທາຍ ແລະ ຄວາມຫຍຸ້ງຍາກ ຂອງກົດໝາຍ ແມ່ນໄດ້ເກີດຂຶ້ນ ພາຍໃນປະເທດ ແລະ ມັນຈະກາຍເປັນຄວາມສັບສົນຂຶ້ນ ເມື່ອເຂດຊັບພະຍາກອນແຫຼ່ງນ້ຳ ໄດ້ມີການຮ່ວມຊາຍແດນກັບຫຼາຍໆປະເທດ. ໃນກໍລະນີນີ້, ລະບົບການຄຸ້ມຄອງທີ່ດີ ບໍ່ສາມາດກຳນົດຂຶ້ນພຽງແຕ່ຝ່າຍດຽວ, ແຕ່ຈຳເປັນຕ້ອງໄດ້ມີປຶກສາຫາລື ແລະ ຕົກລົງການຮ່ວມກັນກັບບັນດາປະເທດ ທີ່ຮ່ວມຊາຍແດນ. ນອກຈາກນີ້, ກໍລະນີແມ່ນ້ຳ ຫຼື ທະເລສາບໃດ ທີ່ຮ່ວມເຂດຊາຍແດນພາຍໃນປະເທດ ຫຼື ຂ້າມຜ່ານຊາຍແດນ ຫຼື ທັງສອງກໍລະນີ ກອບກົດໝາຍສຳຫຼັບຊາຍແດນຊັບພະຍາກອນນ້ຳແມ່ນ ຄວນມີການປັບໃຊ້ ໃນແຕ່ລະສະຖານະການແຕກຕ່າງກັນໄປ.

### *4.1 ກົດໝາຍພື້ນຖານ ສຳຫຼັບການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ*

ກົດໝາຍນ້ຳ ແມ່ນສ້າງບ່ອນອີງ ໃຫ້ແກ່ລະບົບການຄຸ້ມຄອງນ້ຳ ຂ້າມຜ່ານຊາຍແດນ. ເຊິ່ງກົດໝາຍ ດັ່ງກ່າວແມ່ນຄວນມີ ແລະ ຖືກນຳໃຊ້ໃນທຸກໆລະດັບ: ລະດັບສາກົນ, ລະດັບຊາດ ແລະ ລະດັບທ້ອງຖິ່ນ. ສາຍພົວພັນ ລະຫວ່າງປະເທດທີ່ຮ່ວມຊາຍແດນຊັບພະຍາກອນນ້ຳ ແມ່ນຖືວ່າເປັນລະດັບສາກົນ ໂດຍມີລະບົບການປົກຄອງ ພາຍໃຕ້ກົດໝາຍສາກົນກ່ຽວກັບນ້ຳຈືດ ເຊິ່ງຂຶ້ນ ກັບສົນທິສັນຍາ, ລະບຽບການ ແລະ ຫຼັກການອື່ນໆ ຂອງກົດໝາຍສາກົນທີ່ວາງອອກ.

### *ກົດໝາຍນ້ຳແມ່ນຄວນມີ ແລະ ຖືກນຳໃຊ້ໃນທຸກໆລະດັບ: ສາກົນ, ລະດັບຊາດ ແລະ ລະດັບທ້ອງຖິ່ນ*

ກົດໝາຍນ້ຳຈືດສາກົນ ແມ່ນຕ້ອງມີການແປເປັນພາສາຊາດ ໃນລະດັບຊາດ ແລະ ລະດັບຖ້ອງຖິ່ນ ທີ່ຖືກຕ້ອງ ແລະ ເໝາະສົມ ເພາະມັນເປັນພັນທະສ່ວນບຸກຄົນ ຫຼື ສ່ວນລວມ ພາຍໃນປະເທດ. ຂະບວນການນີ້ ໄດ້ຮັບຜົນສຳເລັດ

ຜ່ານການຈັດຕັ້ງປະຕິບັດ ກົດໝາຍນ້ຳ ໃນລະດັບຊາດ ແລະ ທ້ອງຖິ່ນ ແທນກົດໝາຍສາກົນ. ກົດໝາຍ ນ້ຳລະດັບສາກົນ, ລະດັບຊາດ ແລະ ທ້ອງຖິ່ນ ແມ່ນເປັນກົດໝາຍພື້ນຖານຂອງການຄຸ້ມຄອງຊັບພະຍາກອນແຫຼ່ງນ້ຳ ຂ້າມຜ່ານຊາຍແດນ.

### *4.1.1 ຂໍ້ຕົກລົງ ແລະ ສົນທິສັນຍາສາກົນ: ການຮວບຮວມຫຼັກການດ້ານກົດໝາຍ ແລະ ລະບຽບການນຳໃຊ້ສິດຕາມປະເພນີ*

ເພື່ອທຳຄວາມເຂົ້າໃຈໃນລະບົບການປົກຄອງກົດໝາຍ ໃນປະຈຸບັນທີ່ ຄວບຄຸມຊັບພະຍາກອນແຫຼ່ງນ້ຳຂ້າມຜ່ານຊາຍແດນ, ການຄຸ້ມຄອງນ້ຳຈຳຕ້ອງວິເຄາະສົນທິສັນຍາ ກົດໝາຍສາກົນ ທີ່ມີຢູ່.

ສົນທິສັນຍາ ທີ່ມີຢູ່ໃນປະຈຸບັນຈະແຕກຕ່າງກັນໄປ ຂຶ້ນກັບພູມສັນຖານທີ່ປົກຄຸມ, ພື້ນທີ່ຈຸດສຸມ, ແລະ ຂອບເຂດການກຽມພ້ອມ ແລະ ໂຄງຮ່າງການຈັດຕັ້ງຕ່າງໆ. ສົນທິສັນຍາ ວ່າດ້ວຍການຄຸ້ມຄອງອ່າງແມ່ນ້ຳ ແມ່ນໄດ້ຖືກ ສ້າງຂຶ້ນແລ້ວໃນຜ່ານມາ (ເບິ່ງຫ້ອງທີ:4.1), ສົນທິສັນຍາດັ່ງກ່າວ ແມ່ນອີງໃສ່ຂອບເຂດ ພູມສັນຖານ, ຄວາມຫຼາກຫຼາຍຂອງພື້ນໜ້າດິນ, ລະດັບພາກພື້ນ, ຫຼາຍຝ່າຍ ຫຼື ສອງຝ່າຍແຕກຕ່າງອອກໄປ. ສົນທິສັນຍາ ໃນເບື້ອງຕົ້ນ ສ່ວນໃຫ່ຍແມ່ນໄດ້ສຸມໃສ່ນຳໃຊ້ນ້ຳເພື່ອການເດີນເຮືອ. ຕໍ່ມາສົນທິສັນຍາ ລວມທັງກົດລະບຽບການຄຸ້ມຄອງ ຊັບພະຍາກອນແຫຼ່ງນ້ຳ ກໍ່ໄດ້ຄວບຄຸມຫຼາກຫຼາຍການນຳໃຊ້ນ້ຳ ເຊັ່ນ: ຊົນລະປະທານ, ການຜະລິດອຸດສາຫະກຳ ຫຼື ການຄວບຄຸມອຸທົກກະໄພ. ສົນທິສັນຍາທີ່ຜ່ານມາສ່ວນຫຼາຍແມ່ນພະຍາຍາມນຳໃຊ້ວິທີການປະສົມປະສານຮ່ວມກັນ ລວມເຖິງສິ່ງແວດລ້ອມ ແລະ ຄວາມກັງວົນເລື່ອງຄວາມສະເໝີພາບ. ການປະເມີນລະບົບການປົກຄອງ ກົດໝາຍວ່າດວ້ຍ ນ້ຳຂ້າມຜ່ານຊາຍແດນ, ມັນຈຳເປັນ ຕ້ອງໄດ້ຕີລາຄາວ່າສົນທິສັນຍາສາກົນ ດັ່ງກ່າວນັ້ນ ໄດ້ປັບໃຊ້ເຂົ້າກັບ ຊັບພະຍາກອນແຫຼ່ງນ້ຳ ທີ່ມີບັນຫາ ແລະ ສິ່ງພົນຕໍ່ການຄຸ້ມຄອງຊັບພະຍາກອນນ້ຳນັ້ນ ຫຼືບໍ່.

ບົດອະທິບາຍ 4.1: ປະເພດຂອງສົນທິສັນຍາສາກົນ

ສົນທິສັນຍາສາກົນ ປະຊາຊາດ ກົດໝາຍວ່າດ້ວຍ ການນຳໃຊ້ຊັບພະຍາກອນແຫຼ່ງນ້ຳ ຮ່ວມຊາຍແດນ ທີ່ບໍ່ແມ່ນການເດີນເຮືອ ແມ່ນເປັນຂໍ້ຕົກລົງລະດັບໂລກ ທີ່ເນັ້ນໃສ່ການຄຸ້ມຄອງ ຊັບພະຍາກອນນ້ຳລະຫວ່າງປະເທດ, ການປົກປັກຮັກສາ ຊັບພະຍາກອນນ້ຳ ເພື່ອຈຸດປະສົງອື່ນໆລວມທັງ ການນຳໃຊ້ເພື່ອການເດີນເຮືອ. ໃນຂະນະທີ່ສົນທິສັນຍາ ຍັງບໍ່ທັນຖືກບັງຄັບໃຊ້ ໝາຍຄວາມວ່າ ສົນທິສັນຍາດັ່ງກ່າວບໍ່ແມ່ນຂໍ້ຜູກມັດຕໍ່ປະເທດໃດໆ, ແຕ່ມັນມີບົດບາດສຳຄັນໃນການ ລວບລວມ ບັນດາກົດລະບຽບ ແລະ ຫຼັກການຕ່າງໆທີ່ສາມາດເປັນບ່ອນອີງ ໃນການສ້າງລະບົບການປົກຄອງ ໃນການຄຸ້ມຄອງຊັບພະຍາກອນນ້ຳຮ່ວມກັນ. ການທົບທວນສົນທິສັນຍາ ວ່າດ້ວຍການຮ່ວມຊາຍແດນ ຊັບພະຍາກອນນ້ຳ. ໃນຊຸມຊົນທີ່ພັດທະນາແລ້ວ ໃນເຂດພາກໃຕ້ຂອງທະວີບອາຟຣິກາ, ຫຼື ສົນທິສັນຍາ UNECE ວ່າດ້ວຍການນຳໃຊ້ ແລະ ປົກປັກຮັກສາ ຊັບພະຍາກອນນ້ຳຂ້າມຜ່ານຊາຍແດນ ແລະ ທະເລສາບສາກົນ ແມ່ນເປັນຂໍ້ຕົກລົງມະຫາພາກ ແບບຢ່າງວ່າດ້ວຍໃນການນຳໃຊ້ ແລະ ການຄຸ້ມຄອງຊັບພະຍາກອນນ້ຳລະຫວ່າງປະເທດ. ໃນນັ້ນ ລວມມີປະເທດສະມາຊິກຂອງ ຄະນະ ກຳມະທິການເສດຖະກິດຂອງຢູເອັນ ສຳລັບເອີຣົບ, ອາເມລິກາ ແລະ ການະດາ ຈຸດປະສົງຂອງສົນທິສັນຍານີ້ ແມ່ນເພື່ອອະນຸລັກຊັບພະຍາກອນນ້ຳ ລະຫວ່າງປະເທດ ໂດຍຜ່ານກອບກົດໝາບ ທີ່ນອນຢູ່ໃນສົນທິສັນຍາ ໂປຣໂຕໂກ້ (ຕົວຢ່າງ: ສັນຍາ ໂປຣໂຕໂກ້ ວ່າດ້ວຍນ້ຳ ແລະ ສຸຂະພາບ ປີ 1996) ລວມທັງຂໍ້ຕົກລົງອ່າງແມ່ນ້ຳ ທີ່ສາມາດຕົກລົງກັນໄດ້,ໃນຫຼາຍໆອ່າງແມ່ນ້ຳ ລະຫວ່າງປະເທດ, ໄດ້ສ້າງສົນທິສັນຍາຂຶ້ນ ເພື່ອເປັນການສ້າງຄະນະກຳມະທິການຮ່ວມຊາຍແດນ ເຊິ່ງມີພາລະບົດບາດສະເພາະໃນການຄຸ້ມຄອງຊັບພະຍາກອນນ້ຳຂ້າມຜ່ານຊາຍແດນ. ຕົວຢ່າງ: ສົນທິສັນຍາວ່າດ້ວຍ ການປົກປັກຮັກສາ ຣິນ, ສົນທິສັນຍາ ວ່າດ້ວຍ ການປະສານງານ ກ່ຽວກັບການປົກປັກຮັກສາ ແລະ ການນຳໃຊ້ແບບຍືນຍົວ ຂອງແມ່ນ້ຳແດນນິບ, ສັນຍາວ່າດ້ວຍການຮ່ວມມືເພື່ອພັດທະນາ ອ່າງແມ່ນ້ຳຂອງແບບຍືນຍົງ ແລະ ສົນທິສັນຍາວ່າດ້ວຍການພັດທະນາອ່າງທະເສາບວິກທໍເລຍ

ສົນທິສັນຍາສາກົນ ມີບົດບາດອັນສຳຄັນ ໃນການຄຸ້ມຄອງນ້ຳຜ່ານຊາຍແດນ ເພາະມັນເປັນການເຈລະຈາສິດ ອຳນາດຂອງພວກເຂົາໃນການຄົ້ນຫາຂໍ້ຕົກລົງຍິນຍອມລະຫວ່າງການນຳໃຊ້ ແລະ ຜົນປະ ໂຫຍດທີ່ແຕກຕ່າງກັນ ແລະ ເພື່ອກຳນົດລະບຽບການ, ຫຼັກການ ແລະ ວິທີດຳເນີນງານ ແບບຈະແຈ້ງກ່ຽວກັບນ້ຳ ແລະ ຜົນປະໂຫຍດຂອງການ ພັດທະນາຊັບພະຍາກອນນ້ຳ ທີ່ໄດ້ເທົ່າທຽມກັນ. ສົນທິສັນຍາສາກົນ ຈະບໍ່ປ້ອງກັນ ທຸກຂໍ້ຂັດແຍ່ງທີ່ເກີດຂຶ້ນ ລະຫວ່າງ ປະເທດທີ່ມີແມ່ນ້ຳຮ່ວມຊາຍແດນ. ສົນທິສັນຍາສາກົນແມ່ນມີຄວາມຈຳເປັນໃນການຕັດສິນໃຈ ບົດບາດຂອງການ ດຳ ເນີນການທີ່ເພີ່ມຄວາມໝັ້ນຄົງ ທາງດ້ານກົດໝາຍ ແລະ ຫຼຸດຜ່ອນບັນດາຂໍ້ຂັດແຍ້ງ ການນຳໃຊ້ ນ້ຳທີ່ອາດຈະເພີ່ມຂຶ້ນ ໃນບັນດາປະເທດທີ່ມີຊາຍແດນຮ່ວມກັນ.

ບັນດາປະເທດທີ່ມີຊາຍແດນອ່າງແມ່ນ້ຳຮ່ວມກັນ ບໍ່ທັງໝົດທີ່ຈະປະຕິບັດຕາມສັນຍາສາກົນ ແລະ ມີຈຳນວນ ໜ້ອຍທີ່ຂໍ້ຕົກລົງໄດ້ກຳນົດກ່ຽວກັບກອບກົດໝາຍການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານທີ່ແນ່ນອນ.ໃນປະເທດທີ່ພັດທະນາແລ້ວ ມີຫຼາຍໆສົນທິສັນຍາສາກົນ ກ່ຽວກັບ ລະບຽບການຮ່ວມຊາຍແດນໄດ້ຖືກເຜີຍແຜ່. ຕົວຢ່າງຄື ຢູໂຣບ ແມ່ນມີສີ່ອ່າງແມ່ນ້ຳ ທີ່ຮ່ວມຊາຍ ແດນກັບ ຫຼາຍປະເທດ ເຊິ່ງລະບຽບການແມ່ນມີບໍ່ຕ່ຳກວ່າ 175 ສົນທິສັນຍາ. ໃນຂະນະທີ່ ສົນທິສັນຍາ ໄດ້ມີການປັບປຸງແກ້ໄຂເຫັນວ່າ ສົນທິສັນຍາ ສະບັບເກົ່າແມ່ນຂາດການ ຄວບຄຸມຂອດເຂດ

ບັນຫາໃນປະຈຸບັນ. ໃນປະເທດທີ່ພັດທະນາແລ້ວ, ປົກກະຕິແລ້ວ ລະບຽບການມີ ແມ່ນໍ້າຮ່ວມຊາຍແດນ ແມ່ນມີໜ້ອຍ. ຕົວຢ່າງ, ອາຟຣິກກາ ມີລະບົບອ່າງແມ່ນໍ້າທີ່ກວ້າງ ແລະ ຊັບຊ້ອນ, ແຕ່ມາປຽບທຽບແລ້ວ ມີພຽງສົນທິສັນຍາ ສ່ວນໜ້ອຍທີ່ສອດຄ່ອງກັບການນໍາໃຊ້. ເພາະສະນັ້ນ, ບູລິມະສິດຂອງການຄຸ້ມຄອງຊັບພະຍາກອນແຫຼ່ງນໍ້າ ແລະ ຜູ້ທີ່ຕັດສິນໃຈຄວນເປັນດັ່ງຕໍ່ ໄປນີ້:

- ສ້າງສົນທິສັນຍາສໍາລັບ ຊັບພະຍາກອນແຫຼ່ງນໍ້າ ທີ່ມີຊາຍແດນກັບຫຼາຍປະເທດທີ່ຍັງບໍ່ທັນມີ ຂໍ້ຕົກລົງ; ແລະ
- ປັບປຸງຄືນສົນທິສັນຍາທີ່ມີຢູ່ເພື່ອໃຫ້ແນ່ໃຈວ່າສົນທິສັນຍາ ດັ່ງກ່າວໄດ້ສົ່ງເສີມການມີສ່ວນຮ່ວມ, ການຄຸ້ມຄອງນໍ້າແບບຍຸຕິທໍາ ແລະ ຍືນຍົງລວມທັງການປັບຕົວ ຕໍ່ສະຖານະການ/ ກໍລະນີມີການ ປ່ຽນແປງ ທີ່ບໍ່ໄດ້ຄາດໄວ້ລ່ວງ ໜ້າ.

*4.1.2 ລະບຽບສິດນໍາໃຊ້ຕາມປະເພນີ, ຫຼັກການທົ່ວໄປຂອງກົດໝາຍ ແລະ ລະບຽບການ: ເຊິ່ງສາມາດຄົ້ນຫາ ມາດຕະການຂອງກົດໝາຍທີ່ບໍ່ມີໃນສົນທິສັນຍາສາກົນ*

ໃນກໍລະນີບໍ່ມີ ສົນທິສັນຍາສາກົນລະຫວ່າງປະເທດ, ແຕ່ລະປະເທດສາມາດນໍາໃຊ້ລະບຽບສິດນໍາໃຊ້ຕາມປະເພນີ, ຫຼັກການພື້ນຖານຂອງກົດໝາຍ, ເຄື່ອງມືທີ່ບໍ່ມີຂໍ້ຜູກມັດທາງດ້ານກົດໝາຍເພື່ອ ເລີ່ມຕົ້ນກໍານົດຄວາມກ່ຽວຂ້ອງຂອງກົດໝາຍລະຫວ່າງປະເທດເພື່ອນບ້ານທີ່ຮ່ວມຊາຍແດນ.

ກົດລະບຽບສິດນໍາໃຊ້ຕາມປະເພນີ ແມ່ນສ້າງຂຶ້ນ ໂດຍຜ່ານຂະບວນການນໍາເອົາ ວິທີທີ່ເຄີຍ ປະຕິບັດອັນໝັ້ນຄົງມານໍາໃຊ້ຄືນເຊິ່ງອັນທີ່ປະເທດນັ້ນໆ ຍອມຮັບໃນການຈັດຕັ້ງປະຕິບັດໃນການ ນໍາໃຊ້ແມ່ນໍ້າຮ່ວມກັນ ໃນການເຈລະຈາສ້າງ ຂໍ້ສັນຍາສາກົນ ແລະ ການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງໃນລະດັບຊຸມຊົນ ຫຼື ການແກ້ໄຂບັນຫາຂໍ້ຂັດແຍ່ງຂອງແມ່ນໍ້າຂ້າມຜ່ານຊາຍແດນ. ກົດລະບຽບທໍານຽມ (ກົດລະບຽບ ແພັກຕ໊າຊັນເຊີວັນດ້າ ທີ່ໝາຍວ່າມີຄວາມພໍໃຈຕໍ່ສົນທິສັນຍາ) ແມ່ນກົດເກນຂໍ້ຜູກມັດຂອງກົດໝາຍສາກົນ. ເຖິງແມ່ນວ່າ, ກົດລະບຽບດັ່ງກ່າວບໍ່ໄດ້ ຖືກບັນທຶກລົງໃນເນື້ອໃນຂອງການຄຸ້ມຄອງແມ່ນໍ້າຮ່ວມກັນ, ແຕ່ບັນດາກົດເກນເຫຼົ່ານັ້ນກໍ່ໄດ້ຖືກນໍາໄປປະຕິບັດພາຍໃນກອບຂອງ ກົດໝາຍ.

ການນໍາໃຊ້ຫຼັກການພື້ນຖານ ຕາມກົດໝາຍກໍານົດ ຂອງກົດໝາຍສາກົນ ມັນໄດ້ໝາຍເຖິງ ການແກ້ໄຂຊ່ອງຫວ່າງ ໃນສົນທິສັນຍາສາກົນ ທີ່ການປ່ຽນແປງໃໝ່ຂອງກົດລະບຽບທໍານຽມຍັງບໍ່ ທັນໄດ້ລະບຸ. ບັນດາຫຼັກການເຫຼົ່ານີ້ແມ່ນໄດ້ມາຈາກການປຽບທຽບລະຫວ່າງກົດໝາຍຊາດ ແລະ ກົດໝາຍສາກົນ ແລະບັນດາລະບຽບການຕ່າງໆ, ອໍານາດໃນການຕັດສິນ ທີ່ຊັດເຈນ ທັງໝົດເຫຼົ່ານີ້ ເປັນພື້ນຖານທີ່ຄວນມີ ໃນລະບົບຂອງກົດໝາຍ. ລະບຽບການນໍາໃຊ້ສິດຕາມປະເພນີ ແລະ ຫຼັກການພື້ນຖານຂອງກົດໝາຍແມ່ນ ໄດ້ເຊື່ອມໂຍງໄປເຖິງລະບຽບຫຼັກການ ໃນການພັດທະນາ ທີ່ເກີດຂຶ້ນຢ່າງຫຼວງຫຼາຍໂດຍທີ່ເຮັດໃຫ້ປະເທດນັ້ນໆຮັບຜົນປະໂຫຍດເທົ່າທຽມກັນທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ແຕກຕ່າງກັນໄປ.

*ໃນກໍລະນີບໍ່ມີ ສົນທິສັນຍາລະຫວ່າງປະເທດ, ແຕ່ລະປະເທດສາມາດນໍາໃຊ້ລະບຽບສິດນໍາໃຊ້ຕາມປະເພນີ, ຫຼັກການພື້ນ ຖານຂອງກົດໝາຍ, ເຄື່ອງມືທີ່ບໍ່ມີຂໍ້ຜູກມັດທາງດ້ານກົດໝາຍ*

ໃນທາງກົງກັນຂ້າມກັບສົນທິສັນຍາລະຫວ່າງປະເທດ, ລະບຽບສິດນໍາໃຊ້ຕາມປະເພນີ ແລະ ຫຼັກການພື້ນຖານຂອງກົດໝາຍສາກົນ, ເຄື່ອງມືເຊັ່ນ: ຖະແຫຼ່ງການ, ລະບຽບການປະພຶດ, ນະໂຍບາຍ ຫຼື ຄໍາຖະແຫຼງການຂອງກອງປະ

ຊຸມ ລະດັບສູງ ແມ່ນບໍ່ໄດ້ສ້າງລະບຽບຜູກພັນ ແລະ ການຜູກມັດປະເທດ. (ຫ້ອງທີ4.2). ຫຼັກການກົດໝາຍ ສະທ້ອນໃຫ້ເຫັນເຖິງການລິເລີ່ມ ທີ່ບໍ່ແມ່ນກົດໝາຍ ແຕ່ແມ່ນລະບຽບການ. ປະເດັນຕ່າງໆ ສາມາດນຳໃຊ້ ລະບຽບການໃນການພັດທະນາ ແລະ ທົດລອງບັນທັດຖານທາງກົດໝາຍໃໝ່ ກ່ອນທີ່ລະບຽບການດັ່ງກ່າວ ຈະກາຍເປັນຂໍ້ຜູກມັດ, ຫຼື ທ່າແຮງທາງດ້ານຊັບພະຍາກອນ ທີ່ໄດ້ມາຈາກການເຈລະຈາ ການຄຸ້ມຄອງຊາຍແດນ.

ຂະບວນການ ໃນການພັດທະນາລະບຽບການ ໃຫ້ຄວາມສະເພາະໃດໜຶ່ງ, ຄືລະບຽບການທີ່ກົດໝາຍທີ່ບໍ່ໄດ້ຖືກສ້າງຂຶ້ນ ຂໍ້ຜູກມັດ ແມ່ນໄດ້ຖືກສ້າງຂຶ້ນຜ່ານຂະບວນການ ປະຊຸມເຊັ່ນ: ກອງປະຊຸມນ້ຳໂລກ ຫຼື ຄວາມຄິດລິເລີ່ມ ຂອງກອງປະຊຸມ ຄູ່ຮ່ວມມືໃນການຄຸ້ມຄອງນ້ຳ ລະດັບໂລກ (GWP) ຊຶ່ງຈະມີການປ່ຽນແປງຫຼາຍກວ່າ ຂະບວນການຮ່າງກົດໝາຍລະຫວ່າງປະເທດແບບດັ້ງເດີມ ແລະ ມັນເຊື່ອມໂຍ່ງໂດຍກົງເຖິງຂໍ້ມູນເພີ່ມເຕີມທາງສັງຄົມ. ການຮ່າງກົດໝາຍຕາສານບາງຢ່າງທີ່ນຸ້ມນວນ. ໃນເວທີແມ່ນທຸກຄົນຈະຕ້ອງໄດ້ມີການມີສ່ວນຮ່ວມຈາກຫຼາຍພາກສ່ວນ, ຈາກອົງການວິທະຍາສາດ ແລະ ຜູ້ຊ່ຽວຊານ ຈາກສະຖາບັນການສຶກສາ, ອົງການບໍ່ຂຶ້ນກັບລັດຖະບານ, ພາກອຸດສາຫະກຳ ແລະ ອົງການຈັດຕັ້ງລັດຖະບານຕ່າງໆ. ບັນດາພາກສ່ວນຕ່າງໆ ແມ່ນມີອຳນາດໃນການຮ່າງລູກກົດໝາຍຮ່ວມກັນ ເພື່ອສະເໜີແນວຄວາມຄິດດ້ານການເມືອງ ຫຼືຜົນການວິໄຈທາງວິທະຍາສາດ ຕໍ່ຜູ້ມີສ່ວນຮ່ວມທັງຫຼາຍໂດຍການສະເໜີລັດຖະບານເພື່ອນຳໃຊ້ນະໂຍບາຍ ລວມຮ່າງກົດໝາຍທີ່ນຸ້ມນວນ.

ເຖິງແມ່ນວ່າ ມັນມີຄວາມສຳຄັນຫຼາຍ, ແຕ່ກົດໝາຍທີ່ນຸ້ມນວນ ບໍ່ສາມາດນຳໃຊ້ແທນບ່ອນບັນຖັດຖານ ຜູກມັດກົດໝາຍນ້ຳຈືດ ລະຫວ່າງປະເທດ. ແຕ່ມັນມີບົດບາດເສີມ ໃນການສ້າງ, ຍົກລະດັບ ຫຼື ການຕີຄວາມໝາຍ ຂອງກອບກົດໝາຍ ວ່າດ້ວຍການໃຊ້ຊັບພະຍາກອນນ້ຳຮ່ວມກັນ.

*ເຄື່ອງມືທາງດ້ານກົດໝາຍນຸ້ມນວນ ສາມາດພັດທະນາ ແລະ ທົດລອງບັນທັດຖານທາງກົດໝາຍໃໝ່ ສຳຫຼັບການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ*

ບົດອະທິບາຍ.4.2 ເຄື່ອງມືທີ່ບໍ່ແມ່ນຂໍ້ຜູກມັດ ແລະ ການຄຸ້ມຄອງນ້ຳຮ່ວມກັນ
ໃນປີ 1966 ສະມາຄົມກົດໝາຍສາກົນ(ILC) ຊຶ່ງເປັນອົງການທີ່ບໍ່ຂຶ້ນກັບລັດຖະບານ ທີ່ນຳໃຊ້ ກົດລະບຽບຂອງ ເຮວຊິນກິ (Helsiki Rules) ວ່າດ້ວຍການຄຸ້ມຄອງນ້ຳ ຂອງອ່າງແມ່ນ້ຳລະຫວ່າງປະເທດ. ກົດລະບຽບດັ່ງກ່າວ ແມ່ນອັນທຳອິດທີ່ເນື້ອຫາໄດ້ລວບລວມ ເອົາບັນດາຫຼັກການ ຂອງກົດໝາຍນ້ຳຈືລະຫວ່າງປະເທດ. ເຖິງຢ່າງໃດ ກໍ່ຕາມ, ສະມາຄົມກົດໝາຍສາກົນ ບໍ່ມີກົດໝາຍຄົບຖ້ວນ ທີ່ເຊື່ອມໂຍງໂດຍກົງໃນການສ້າງລະບຽບການຜູກມັດ, ບັນດາອົງການຈັດຕັ້ງ ແມ່ນສາມາດພິຈາລະນາ ຄວາມສຳຄັນຂອງ ລະບຽບການ ເຮວຊິນກິ (Helsiki Rules) ອັນ ເປັນພື້ນຖານ ເພື່ອລິເລີ່ມ ການສ້າງກົດໝາຍນ້ຳຈືດ ລະຫວ່າງປະເທດ ໃນອານາຄົດ. ໃນຕົ້ນສົກປີ 1980, ສະມາ ຄົມກົດໝາຍສາກົນ ຊຶ່ງແມ່ນສະຫະປະຊາຊາດ ທີ່ມີພາລະບົດບາດ ໃນການລວບລວມ ບັນດາກົດລະບຽບ ຂອງກົດ ໝາຍລະຫວ່າງປະເທດ/ກົດໝາຍສາກົນ, ທີ່ເລີ່ມ ຕົ້ນໃນການປະເມີນ ຄວາມກ້າວໜ້າ ຂອງກົດໝາຍລະຫວ່າງປະ ເທດ ກ່ຽວກັບແມ່ນ້ຳ ແລະ ສ້າງຮ່າງມາດ ຕາຕາມພາຍຫຼັງ ເພື່ອໃຊ້ເປັນພື້ນຖານ ສຳຫຼັບ ສົນທິສັນຍາ ສະຫະປະຊາ ຊາດ ວ່າດ້ວຍນ້ຳ ສະບັບສຸດທ້າຍໃນປີ 1997.
ກອງປະຊຸມ ດັບບິ້ນ (Dublin) ກ່ຽວກັບນ້ຳ ແລະ ສິ່ງແວດລ້ອມ ປີ 1992 ແມ່ນໄດ້ນຳໃຊ້ ຄຳຖະແຫຼງການດັບບິ້ນ ວ່າດ້ວຍ ນ້ຳ ແລະ ການພັດທະນາ ແບບຍືນຍົງ, ຊຶ່ງແມ່ນອຳນາດຂອງ ສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍ ສິ່ງແວດລ້ອມ ແລະ ການພັດທະນາ ທີ່ເມືອງ ລີໂອ ດີເຈນເນໂຣ ປີ 1992 ແລະ ວາລະກອງປະຊຸມ ທີ 21 ໂດຍ ໄດ້ເນັ້ນເຖິງຈຸດສຳຄັນ ຂອງແນວທາງໂຮລິສຕິກ ແບບກວ້າງ ໃນການຄຸ້ມຄອງນ້ຳ ເພື່ອການພັດທະນາແບບຍືນຍົງ. ໃນນັ້ນໜຶ່ງໃນສີ່ ຫຼັກການ, ຂອງຄຳຖະແຫຼງການ ໄດ້ເວົ້າເຖິງ "ການຄຸ້ມຄອງນ້ຳ ໂດຍພື້ນຖານການມີສ່ວນຮ່ວມ ຂອງຜູ້ຊົມໃຊ້, ນັກວາງແຜນ ແລະ ການຕັດສິນໃຈ ໃນທຸກລະດັບ". ເຖິງແມ່ນວ່າ ສະຖານະພາບຂອງຫຼັກການນັ້ນ ບໍ່ມີຂໍ້ຜູກມັດທາງດ້ານກົດໝາຍ, ແຕ່ ການລາຍງານແມ່ນໄດ້ຍົກໃຫ້ເຫັນ ຕົວຢ່າງ ການປະຕິບັດໄດ້ຮັບຜົນດີ ແລະ ເປັນລະບົບມາດຖານການປົກຄອງທີ່ດີ.

4.1.3 ກົດລະບຽບການນຳໃຊ້ສິດຕາມປະເພນີວ່າດ້ວຍການນຳໃຊ້ໃຫ້ເກີດປະໂຫຍດແບບຍຸດຕິທຳ : ຈາກອະທິປະໄຕ ໃນການຄອບຄອງດິນແດນໃຫ້ເກີດປະໂຫຍດ ແບບແຍຸດຕິທຳຮ່ວມກັນ.

'ການນຳໃຊ້ໃຫ້ເກີດປະໂຫຍດແບບຍຸດຕິທຳ' ແມ່ນໜຶ່ງຂໍ້ກຳນົດ ທີ່ສຳຄັນຂອງ ກົດລະບຽບທຳນຽມ ໃນຫຼັກການ ການໃຊ້ຊັບພະຍາກອນນ້ຳຮ່ວມກັນ. ມັນໄດ້ຕອບສະໜອງຄວາມຂາດຕົກບົກຜ່ອງ ຂອງແນວທາງອື່ນໆ ເຊັ່ນ: ອຳນາດ ຫຼື ການຊົມໃຊ້ດິນແດນ ຊຶ່ງເປັນການນຳໃຊ້ ທຶນທຳມະຊາດ ຫຼື ການສິດນຳໃຊ້ນ້ຳຮ່ວມຊາຍແດນ ພຽງຝ່າຍດຽວ. ການໃຊ້ ແນວທາງ ໃນການຖືອຳນາດເໜືອຝ່າຍອື່ນ ໝາຍວ່າພາກພື້ນທຳອິດທີ່ໃນເວລານັ້ນ ມີສິດອຳນາດໃນການນຳໃຊ້ນ້ຳ (ຕົວ ຢ່າງ: ການຫັນທິດການໄຫຼຂອງນ້ຳ) ເຊິ່ງເປັນການໄດ້ສິດອຳນາດ ເພື່ອສືບຕໍ່ນຳໃຊ້ນ້ຳ ເພື່ອອ້າງສິດ ແລະ ຂັດຄ້ານ ຕໍ່ປະ ເທດພາກພື້ນ. ໃນທາງກັບກັນ, ມັນກໍ່ສາມາດຕີຄວາມໝາຍ ເຖິງການສະຫງວນ ແລະ ບໍ່ນຳໃຊ້ນ້ຳເພື່ອປ່ອຍໃຫ້ປະເທດ ຮ່ວມຊາຍແດນ ໄດ້ນຳໃຊ້ສິດດັ່ງກ່າວ. ໃນນີ້ການສ້າງຄວາມຢ້ານກົວ ລະຫວ່າງປະເທດຮ່ວມຊາຍແດນ ແມ່ນຄວາມສ່ຽງ ໃນການເສຍໂອກາດ ໃນການໃຊ້ນ້ຳ, ມັນເປັນສິ່ງທີ່ທໍ້ຖອຍໃຈ ໃນການໃຊ້ຊັບພະຍາກອນນ້ຳຮ່ວມກັນ, ແລະ ສະໜັບ ສະ ໜູນ ການແຂ່ງກັນທີ່ກ້າຫານໃຫ້ພວກເຂົາ ໃຫ້ໄວເທົ່າທີ່ເປັນໄປໄດ້.
ອຳນາດອະທິປະໄຕໃນການຄອບຄອງດິນແດນໝາຍອີກຢ່າງໜຶ່ງແມ່ນ ການຄອບຄອງປະເທດອື່ນທີ່ຮ່ວມ ຊາຍແດນ ຊຶ່ງ ເປັນ ອຳນາດອະທິປະໄຕທີ່ເໜືອກວ່າ ເພື່ອນຳສະເໜີຕໍ່ຂັ້ນອຳນາດຕັດສິນ. ໃນນີ້ໝາຍຄວາມວ່າ ມັນມີຫຼັກການການສິດ ນຳໃຊ້ ທຸກຊັບພະຍາກອນທຳມະຊາດ ທີ່ນອນໃນເຂດດິນແດນ ລວມທັງ ຄວາມຕ້ອງການຂອງຜູ້ຄອບຄອງ ແລະ

ສິດທາງເລືອກອື່ນໆ. ສິດທິນີ້ໄດ້ມີຂໍ້ຈຳກັດ, ຖ້າຊັບພະຍາກອນນ້ຳໄດ້ຮ່ວມຊາຍແດນກັບ ປະເທດອຳນາດອະທິປະໄຕເທົ່າທຽມກັນ ນັ້ນມັນກໍ່ໄດ້ມີການຂັດຄ້ານ ສິດໃນການນຳໃຊ້ນ້ຳເພື່ອຕອບສະໜອງຄວາມຕ້ອງການຂອງຕົນຝ່າຍດຽວ. ຖ້າກໍລະນີນີ້ ແມ່ນຂໍ້ຂັດແຍ່ງຂອງສິດທິ ໃນການກົດກັນເຊິ່ງກັນ ແລະ ກັນ, ຖ້າອີກຝ່າຍໜຶ່ງຢືນຢັນສິດຂອງຕົນ ແລະ ປະຕິເສດຕໍ່ທຸກໆການຕົກລົງ ແລະ ປານີປານອມໃດໆ.

ເພື່ອຫລີກເວັ້ນການຍາດແຍ່ງ ແລະ ຜິດຖຽງກັນໃນການນຳໃຊ້ນ້ຳ, ເຊິ່ງສາມາດກະທົບຕໍ່ຈຳນວນ ແລະ ຄຸນະພາບ ໃນການນຳໃຊ້ນ້ຳຮ່ວມກັນ, ແລະ ເພື່ອໃຫ້ໄດ້ຜົນຮັບລວມດີທີ່ສຸດ ດັ່ງນັ້ນ, ບັນດາລັດຈຳເປັນຕ້ອງມີການຮ່ວມມື ແລະ ພິຈາລະນາຜົນປະໂຫຍດຂອງລັດອື່ນໆ. ໃນສະພາບການນີ້, ມັນໄດ້ຮັບຮູ້ເພີ້ມຂື້ນວ່າລັດໜຶ່ງບໍ່ພຽງແຕ່ມີສິດນຳໃຊ້ຊັບພະຍາກອນທຳມະຊາດຂອງຕົນເອງ, ແຕ່ວ່າຫາກຍັງມີຫນ້າທີ່ບໍ່ກໍ່ໃຫ້ເກີດຜົນເສຍຫາຍ ໃຫ້ແກ່ລັດອື່ນໆອີກເໝືອນກັນ ເມື່ອເວລາໃຊ້ແຫລ່ງຊັບພະຍາກອນຂອງຕົນ. ແນວຄວາມຄິດນີ້ໄດ້ນຳໄປສູ່ການສ້າງລະບຽບການນຳໃຊ້ແບບສະເໝີພາບຕາມປະເພນີ.

*"ເພື່ອຫຼີກລ້ຽງການໂຕ້ຖຽງ ທີ່ເກີດຈາກການນຳໃຊ້ນ້ຳຮ່ວມກັນ, ແຕ່ລະປະເທດຄວນມີການຄຳນຶງເຖິງ ຄວາມຕ້ອງການຂອງອີກຝ່າຍໜຶ່ງ"*

.

ການນຳໃຊ້ໃຫ້ເກີດປະໂຫຍດແບບຍຸຕິທຳ ແມ່ນເປັນພື້ນຖານຂອງການເຂົ້າໃຈ ໃນສິດທິແບບເທົ່າທຽມກັນ. ສິດເທົ່າທຽມກັນບໍ່ ໄດ້ໝາຍເຖິງການການແບ່ງແຍກຊັບພະຍາກອນນ້ຳໃຫ້ເທົ່າທຽມກັນ ໃນບັນດາປະເທດຮ່ວມຊາຍແດນ. ມັນເປັນພຽງການຮຽກຮ້ອງໃຫ້ມີການ ຄຳນຶງເຖິງຄວາມສະເໝີພາບໃນການຮັບຜິດຊອບ ການນຳໃຊ້, ການໄດ້ຮັບຜົນປະໂຫຍດຈາກ ການໃຊ້ຊັບພະຍາກອນນ້ຳຮ່ວມກັນ. ທັງນີ້ມັນກໍ່ໃຫ້ເກີດມີ ສິ່ງທ້າທາຍ 2 ຢ່າງຄື: (ກ) ຈຳແນກປະເພດການນຳໃຊ້ນ້ຳ ທີ່ສົມເຫດສົມຜົນ ຊຶ່ງມັນມີ ຄວາມຈຳເປັນຈະຕ້ອງໃຫ້ມີການເທົ່າທຽມກັນ; ແລະ (ຂ) ການປະເມີນ ກິດຈະກຳນຳໃຊ້ນ້ຳ ທີ່ຄວນເປັນບູລິມະສິດ.

*ສິດເທົ່າທຽມກັນບໍ່ ໄດ້ໝາຍເຖິງການການແບ່ງແຍກຊັບພະຍາກອນນ້ຳໃຫ້ເທົ່າທຽມກັນ ໃນບັນດາປະເທດຮ່ວມຊາຍແດນ.*

*ການຄຳນຶງເຖິງ ກິດຈະກຳການນຳໃຊ້ນ້ຳ ແບບສົມເຫດສົມຜົນ:*

ນັບຕັ້ງແຕ່ການຮ່ວມຊັບພະຍາກອນນ້ຳ ມີຄວາມແຕກຕ່າງ, ມັນເປັນໄປບໍ່ໄດ້ທີ່ຈະກຳນົດລວ່ງ ໜ້າໃນການນຳໃຊ້ນ້ຳຢ່າງສົມເຫດສົມຜົນ ຈະໝາຍເຖິງທຸກໆກໍລະນີ ທີ່ເປັນໄປໄດ້. ການນຳໃຊ້ຊັບ ພະຍາກອນນ້ຳຂອງປະເທດໜຶ່ງໆ ອາດຈະມີເຫດຜົນໃນກໍລະນີໃດໜຶ່ງ, ບໍ່ໄດ້ລວມທັງອື່ນໆ. ເຖິງຢ່າງໃດກໍ່ຕາມ, ຂໍ້ຂັດແຍ້ງທີ່ບໍ່ຊັດເຈນຍືດເຍື້ອ, ກົດລະບຽບການໃຊ້ໃຫ້ເກີດປະໂຫຍດ ແບບເທົ່າທຽມກັນມີຄວາມໝາຍໃນທາງດ້ານ ການຈັດຕັ້ງປະຕິບັດ. ໃນຂະນະທີ່ ການຕັດສິນໃຈ ແບບມີເຫດມີຜົນແມ່ນຂຶ້ນກັບ ສະຖານະການຂອງແຕ່ລະກໍລະນີ, ວິທີການຕັດສິນບັນຫານີ້ ເຫັນໄດ້ຈະແຈ້ງ, ຜົນປະໂຫຍດ ຂອງສອງກໍລະນີ ແລະ ຄ່າເສຍຫາຍຂອງການນຳໃຊ້ ແມ່ນຈຳຕ້ອງໄດ້ກຳນົດເຂົ້າໃນບັນຊີ:

- ຖ້າການນຳໃຊ້ສິ່ງຜົນຕໍ່ອີກຝ່າຍໜຶ່ງ. ຕົວຢ່າງ: ການນຳໃຊ້ທີ່ຈະເປັນການກຳນົດ ສິ່ງທີ່ບໍ່ສົມເຫດສົມຜົນ. ເຖິງແນວໃດກໍ່ຕາມ, ມັນເປັນເລື່ອງທີ່ສຳຄັນ ໃນການທຳຄວາມເຂົ້າໃຈວ່າບໍ່ໄດ້ໝາຍວ່າຈະເປັນໜ້າທີ່ ທີ່ຈະກັນ ບໍ່ໃຫ້ມີອັນຕະລາຍໃນຊາຍແດນ. ແທນທີ່ຈະຂຶ້ນ ກັບສະພາບການ, ລະດັບການເປັນອັນຕະລາຍ ຕໍ່ປະເທດເພື່ອນບ້ານ

(ມັນອາດຈະເປັນການນຳໃຊ້ທີ່ບໍ່ເປັນປະໂຫຍດ ຫຼື ຊັບພະຍາກອນນ້ຳເປັນພິດ) ມັນສາມາດຍອມຮັບໄດ້ ຖ້າບັນດາ ປະເທດນຳໃຊ້ແບບຕໍ່ເນື່ອງ ສາມາດຄວບຄຸມອັນຕະລາຍນັ້ນ.

- ໃນກໍລະນີ, ການນຳໃຊ້ບໍ່ສົ່ງຜົນກະທົບໃດໆ, ກົດລະບຽບປະເພນີ ແລະ ເຄື່ອງມືດ້ານກົດໝາຍທີ່ບໍ່ເປັນຂໍ້ຜູກມັດສາມາດ ຊ່ວຍໃນການວິເຄາະແລະພິຈາລະນາຢ່າງສົມເຫດສົມຜົນ. (ເບິ່ງບົດອະທິບາຍ 4.2)

ນະໂຍບາຍ ຫຼື ເຄື່ອງມືດ້ານກົດໝາຍທີ່ອ່ອນນ້ອມ ທີ່ມີມາດຕະຖານ, ຊຶ່ງມັນສາມາດດັດປັບ ແລະ ພັດທະນາໄດ້ ຕະຫຼອດເວລາ. ຕົວຢ່າງ: ປະເທດທີ່ຮຽກຮ້ອງໃຫ້ຫຼີກລ້ຽງ ການຂຸດຄົ້ນ ຊັບພະຍາ ກອນນ້ຳທີ່ບໍ່ຍືນຍົງ ແລະ ສ້າງຄວາມ ພໍໃຈໃນການສະໜອງນ້ຳ ທີ່ມີຄຸນນະພາບຕໍ່ທຸກຄົນ ໃນຂະນະທີ່ມີການ ຮັກສາລະບົບນິເວດໄປພ້ອມໆກັນ. ມາດຕະຖານ ເຫຼົ່ານີ້, ແນວໃດກໍ່ຕ້ອງໄດ້ຄຳນຶງເຖິງ ດ້ານງົບປະມານໃນປະເທດຢ່າງ "ສົມເຫດສົມຜົນ" ແຕ່ບໍ່ໄດ້ຮຽກຮ້ອງໃຫ້ໄດ້ດີທີ່ສຸດ.

*ຄວາມສະເໝີພາບ ໃນການນຳໃຊ້ນ້ຳແບບສົມເຫດສົມຜົນ*

ໜຶ່ງມັນຈະຊີ້ໃຫ້ເຫັນຈະແຈ້ງໃນການພິຈາລະນາເຖິງເຫດຜົນທີ່ນຳໃຊ້ນ້ຳ, ມັນຍັງຕ້ອງໄດ້ຕັດສິນກ່ຽວກັບ ຂໍ້ຂັດແຍ່ງທີ່ຈະເກີດຂຶ້ນຄືກັນ. ຈຸດດີຂອງປະເທດ ໃນການນຳໃຊ້ກົດລະບຽບຮ່ວມເພາະມັນຈະເປັນ ການຫຼີກລ້ຽງຂໍ້ບົກຜ່ອງ ແລະ ອັນຕະລາຍຮ້າຍແຮງທີ່ຈະເກີດຈາກປະເທດໃກ້ຄຽງ. ຄວນຈະມີການຊັ່ງຊາ ເຖິງຄວາມສົນໃຈໃນການນຳໃຊ້ ນ້ຳເຫຼົ່ານີ້ທີ່ຂຶ້ນກັບສະພາບແວດລ້ອມອ້ອມຂ້າງ, ໃນຂະນະທີ່ພວກເຂົາ ໄດ້ຂາດການຊັ່ງຊາເຖິງບັນຫາອື່ນໆຫຼາກຫຼາຍອອກໄປ.

ສົນທິສັນຍາ ສະຫະປະຊາຊາດ ປີ 1997 ວ່າດ້ວຍການນຳໃຊ້ຊັບພະຍາກອນນ້ຳລະຫວ່າງປະເທດທີ່ບໍ່ ແມ່ນການເດີນເຮືອໄດ້ເປັນແນວທາງໃຫ້ແກ່ປັດໃຈອື່ນໆ ຊຶ່ງມັນຄວນຈະຖືກບັນທຶກເຂົ້າໃນ ບັນຊີເມື່ອການນຳໃຊ້ນ້ຳມີຄວາມເທົ່າທຽມ ແລະ ສົມເຫດສົມຜົນ. ເຖິງແນວນັ້ນກໍ່ຕາມມັນຍັງບໍ່ໄດ້ ກວມເອົາ ທຸກບັນຫາລວມທັງ:

- ພູມສັນຖານ, ການໄຫຼຂອງນ້ຳ, ພູມອາກາດ, ລະບົບນິເວດ ແລະ ປັດໃຈທຳມະຊາດອື່ນໆ.
- ຄວາມຮຽກຮ້ອງຕ້ອງການ ທາງດ້ານເສດຖະກິດ-ສັງຄົມ ຂອງແຕ່ລະປະເທດ.
- ປະຊາກອນ ດຳລົງຊີວິດ ທີ່ອາໃສຊັບພະຍາກອນນ້ຳ ຂອງປະເທດ.
- ຜົນຂອງການນຳໃຊ້ ຫຼື ການນຳໃຊ້ແຫຼ່ງນ້ຳ ໃນປະເທດໃດໜຶ່ງ ສົ່ງຜົນຕໍ່ປະເທດອື່ນ.
- ທ່າແຮງທີ່ສະແດງອອກໃນການນຳໃຊ້ນ້ຳ ລະຫວ່າງປະເທດ.
- ການປົກປັກຮັກສາ, ພັດທະນາ ແລະ ປະຢັດ ໃນການນຳໃຊ້ຊັບພະຍາກອນຂອງແມ່ນ້ຳ ແລະ ຄ່າເສຍຫາຍທີ່ເປັນຜົນກະທົບຕໍ່ກິດຈະກຳນັ້ນ.
- ທາງເລືອກ ທີ່ເປັນໄປໄດ້ ຂອງປະໂຫຍດ ທີ່ເກີດຈາກແຜນນຳໃຊ້ນ້ຳ.

ການນຳໃຊ້ທີ່ບໍ່ເກີດຜົນ ແມ່ນເກີດຈາກການນ້ຳໃຊ້ຫຼາຍເກີນໄປ, ບໍ່ຄວນນຳໄຊ້ເຂົ້າໃນບູລິມະສິດອື່ນ, ແຕ່ການນຳໄຊ້ເພື່ອຄວາມຈຳເປັນຂອງມະນຸດຕ້ອງມີຄວາມລະມັດລະວັງເປັນພິເສດ. ຄວາມຕ້ອງການອັນຈຳເປັນຂອງມະນຸດນີ້ບໍ່ໃຫ້ເຂົ້າໃຈໃນພຽງແຕ່ໃນແງ່ເສດຖະກິດສັງຄົມຢ່າງດຽວ. ການປົກປັກຮັກສາລະບົບນຳໄຊ້ນ້ຳຮ່ວມກັນສາມາດເຊື່ອມຕໍ່ໂດຍກົງໄດ້ ເໝືອນກັນເພື່ອຮັບປະກັນຄວາມຕ້ອງການຂອງຄົນໃນປະເທດໜຶ່ງ, ດັ່ງນັ້ນມັນຈຶ່ງມີຄຸນຄ່າຫລາຍກ່ຽວກັບຜົນປະໂຫຍດທາງດ້ານເສດຖະກິດ.

ໃນທາງຈັດຕັ້ງປະຕິບັດ, ຮຽກຮ້ອງໃຫ້ມີຈຸດປະສົງ ການນຳໃຊ້ນ້ຳຂອງປະເທດພຽງ “ໜຶ່ງດຽວ” ເພື່ອຄວາມສະເໝີພາບຂອງຜົນທີ່ຕາມມາອື່ນໆ. ກົດໝາຍລະຫວ່າງປະເທດ ແມ່ນບໍ່ອະນຸຍາດໃຫ້ ພາກພື້ນໃດ ພັດທະນາ ແລະ ນຳໃຊ້ຊັບພະຍາກອນນ້ຳ ເໜືອກວ່າປະເທດພາກພື້ນ, ຖ້າປະເທດໃດກະທຳ, ເຖິງຢ່າງໃດ ກໍ່ມີໜ້າທີໃນການພົວພັນ (ເບິ່ງບົດອະທິບາຍ4.2) ອັນທີ່ເປັນໜ້າທີ່ ຂອງພວກເຂົາໃນການນຳ ໄປພິຈາລະນາອີກຝ່າຍໜຶ່ງ.

*ບົດບາດຂອງອົງການຈັດຕັ້ງ ບໍ່ຂຶ້ນກັບລັດຖະບານ ແລະ ອົງການຈັດຕັ້ງມະຫາຊົນ/ສັງຄົມ*

ອົງການຈັດຕັ້ງມະຫາຊົນ/ສັງຄົມ ເປັນບຸກຄົນທີ່ສຳຄັນໃນການກຳນົດ ອັນໃດທີ່ແມ່ນຄວາມ ເທົ່າທຽມກັນ ແລະ ສົມເຫດສົມຜົນ. ພວກເຂົາສາມາດວາດພາບລວມໆ ຂອງກົດໝາຍລູກ ແລະ ມາດຕະຖານ ຂອງຄຳວ່າ ‘ສົມເຫດສົມຜົນ’. ພວກເຂົາມີບົດບາດໃນການເປັນຕົວແທນ ຂອງກຸ່ມຜູ້ມີ ສ່ວນຮ່ວມທີ່ແຕກຕ່າງກັນ, ພວກເຂົາມີພາລະບົດບາດໃນການ ສ້າງຈິດສຳນຶກ ໃນສັງຄົມໃນການ ນຳໃຊ້ນ້ຳສະເພາະຄວາມຕ້ອງການ. ບໍ່ເທົ່ານັ້ນ ພວກເຂົາຍັງສາມາດປຸກລະດົມໜ້າວຽກ ແລະ ສ້າງຄວາມສົນໃຈວ່າ ຄວາມສົນໃຈດັ່ງກ່າວແມ່ນຈະກາຍເປັນການທຳຄວາມເຂົ້າໃຈ ຕໍ່ຂະບວນການສະເໝີພາບ ເຖິງຢ່າງໃດກໍ່ຕາມໃນເວລານີ້ ແມ່ນມີຄວາມຕ້ອງການ ຂອງການມີສ່ວນຮ່ວມຂອງ ສັງຄົມຢ່າງຈິງຈັງ.

## *4.2 ການຈັດຕັ້ງປະຕິບັດກົດໝາຍລະຫວ່າງປະເທດຄວນເຮັດແບບໃດໃຫ້ມີການຈັດຕັ້ງປະຕິບັດ ກົດໝາຍລະຫວ່າງປະເທດໃນທຸກລະດັບກໍ່ຄື ລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບສາກົນ.*

*ລະດັບສາກົນ:*

ໃນຕົວເມືອງທີ່ກຳລັງຈັດຕັ້ງປະຕິບັດກົດໝາຍລະຫວ່າງປະເທດ ນິໄສສະເພາະສ່ວນບຸກຄົນຄວນສຳນຶກໄວ້ໃນໃຈແຫຼ່ງທີ່ມາຫຼັກຂອງກົດໝາຍລະຫວ່າງປະເທດແມ່ນສົນທິສັນຍາແລະການກຽມພ້ອມບໍ່ແມ່ນຂໍ້ຜູກມັດໃນປະເທດ.
ສິ່ງທີ່ຊີ້ໃຫ້ເຫັນແມ່ນເນື້ອໃນຕ້ອງເພີ່ມລະບຽບການ,ຂໍ້ຕົກລົງຂະບວນການນີ້ ແມ່ນເປັນທາງການໃນການຕັດສິນ ຫຼື ອະນຸມັດ ເປັນຂໍ້ຕົກລົງສົນທິສັນຍາ, ປົກະຕິແລ້ວການປັບໃຊ້ລະບຽບການແຫ່ງຊາດລວມທັງສົນທິສັນຍາໃນກົດໝາຍແຫ່ງຊາດ ອາດຈະລະບຸໄວ້ໃນ ສົນທິສັນຍາ ລະຫວ່າງ ປະເທດ ສຳລັບການປະເມີນຜົນບັງຄັບໃຊ້ເຊັ່ນ: ການສັນຍາໂດຍບຸກຄົນ ຈຳນວນໜຶ່ງ, ເພື່ອໃຫ້ ກົດໝາຍນ້ຳ ມີຜົນບັງຄັບໃຊ້ລະຫວ່າງປະເທດ

ໃນທາງການຈັດຕັ້ງປະຕິບັດ ຕ້ອງຍອມຮັບບັນດາກົນໄກ ສຳລັບການຍັບຍັ້ງຂໍ້ພິພາດ ເປັນເຄື່ອງມື ບັງຄັບໃຊ້ກົດໝາຍ ເພື່ອຕອບໂຕ້ ຕໍ່ກັບການບໍ່ປະຕິບັດຕາມ

*“ສົນທິສັນຍາລະຫວ່າງປະເທດແລະບົດບັນຍັດຂອງພວກເຂົາ, ບໍ່ມີຜົນກັບປະເທດຢ່າງທັນທີທັນໃດ”*

ຂໍ້ຜູກພັນຕາມກົດໝາຍລະຫວ່າງປະເທດເປັນເຄື່ອງມື, ນະໂຍບາຍທີ່ມີປະໂຫຍດຫາກມັນສອດຄ່ອງກັບລັດ, ມັນເປັນສິ່ງສຳຄັນເພື່ອກວດສອບ, ສອດຄ່ອງ ແລະ ຂອງການບໍ່ປະຕິບັດຕາມ. ໃນຂະນະທີ່ສານລະຫວ່າງປະເທດ (ເຊັ່ນ: ສານຍຸດຕິທຳລະຫວ່າງປະເທດ) ທີ່ມີຢູ່ແລ້ວ ພວກເຂົາສາມາດໃນການຕີຄວາມໝາຍ ແລະ ການຕັດສິນໃຈເພາະຫາກປະເທດທີ່ກ່ຽວຂ້ອງກັນຕົກລົງກັນຢູ່ໃນກອງປະຊຸມ. ໃນກໍລະນີທີ່ ສານໂລກເປັນອິດສະຫຼະນັ້ນເປັນສິ່ງສຳຄັນທີ່ປະເທດຍອມຮັບຂໍ້ຕົກລົງລະຫວ່າງປະເທດ ຫຼືເມື່ອເກີດຂໍ້ຂັດແຍ່ງເກີດຂຶ້ນຂໍ້ພິພາດກ່ຽວກັບກົນໄກການຕັ້ງຖິ່ນຖານ, ນອກຈາກນີ້ປະເທດຕ້ອງຍອມຮັບໃນຄວາມໝາຍພຽງພໍ ທີ່ຈະບັງຄັບໃນການຕັດສິນໃຈດັ່ງກ່າວຂອງຜູ້ມີອຳນາດ. ຫຼັກການຄວາມເຊື່ອໝັ້ນທີ່ດີຄືການຮັບປະກັນສະເພາະປະເທດທີ່ຍຶດໝັ້ນໃນການຕັດສິນໃຈໂດຍສານລະຫວ່າງປະເທດ.

ເຖິງແມ່ນວ່າຈະມີການປະຕິບັດຕາມກົດໝາຍອອກນອກ ກອບປະເພນີລະຫວ່າງປະເທດຍັງຄົງຄວບຄຸມສິດທິ ແລະ ໜ້າທີ່ໃໝ່ສະເພາະ ໃນບັນດາປະເທດ ຫຼື ອົງການລະຫວ່າງປະເທດມັນບໍ່ໄດ້ກຳນົດ ຄວາມສຳພັນ ລະຫວ່າງລັດ

ແລະ ບຸກຄົນ ຫຼື ໃນຕົວບຸກຄົນເອງ. ດັ່ງນັ້ນ ລັດຕ້ອງໄດ້ແນ່ໃຈວ່າການດຳເນີນການ ຂອງກົດໝາຍອາດອອກຈາກກອບລະຫວ່າງປະເທດໃນທຸກລະດັບໃນການຮ່ວມມືລະດັບຊາດ ແລະ ພາລະໜ້າທີ່ໃນລະດັບຊາດ, ກົດໝາຍຕ່າງປະເທດຂອງພວກເຂົາ, ລວມທັງໃນລະດັບຊາດ. ການສ້າງຄວາມຜູກພັນທາງກົດໝາຍ ແລະ ສິດທິຂອງບຸກຄົນ ແລະ ໃນລະດັບທ້ອງຖິ່ນ ທີ່ກົດໝາຍລະດັບຊາດ ນຳໄປໃຊ້ໂດຍສັງຄົມ.

*ໃນລະດັບທ້ອງຖິ່ນ ແລະ ລະດັບຊາດ*

ການດຳເນີນການກວດສອບຂອງກົດໝາຍ ລະຫວ່າງປະເທດ ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ເທົ່ານັ້ນທີ່ສາມາດເຮັດໄດ້ ຫາກມີການປັບຕົວໄດ້ງ່າຍ ຈະຊ່ວຍໃຫ້ການຕອບສະໜອງທີ່ແຕກຕ່າງກັນ ທີ່ໃຫ້ຄຳຕອບກັບທຳມະຊາດສິ່ງແວດລ້ອມ. ມັນເປັນຄວາມທ້າທ້າຍ, ມັນບໍ່ພຽງແຕ່ການຜ່ອນສັ້ນຜ່ອນຍາວ,ແຕ່ໃນຄະນະດຽວກັນ ເພື່ອໃຫ້ສອດຄ່ອງກັນ, ຊຶ່ງຈະຫຼີກລ້ຽງຄວາມຄຸມເຄືອ ໃນການຕີຄວາມ ແລະ ການ ດັດປັບໃຊ້ກົດໝາຍລະຫວ່າງຊາດ. ໃນຄຳອື່ນໆ ການຜ່ອນສັ້ນ ຜ່ອນຍາວ ທີ່ຈຳເປັນ ບໍ່ຄວນປະນີປະນອມ ການຮັກສາຄວາມປອດໄພ ຕາມກົດໝາຍທີ່ຈະຕ້ອງໃຊ້ໃນລະດັບໜຶ່ງຂອງການຄາດຄະເນ.

*"ການຜ່ອນສັ້ນ ຜ່ອນຍາວ ທີ່ຈຳເປັນ ບໍ່ຄວນປະນີປະນອມ ການຮັກສາຄວາມປອດໄພ ຕາມກົດໝາຍທີ່ຈະຕ້ອງໃຊ້ໃນລະດັບໜຶ່ງຂອງການຄາດຄະເນ"*

ຜູ້ມີອຳນາດ ສາມາດ ຕັດສິນໃຈ ໃນທຸກລະດັບ ສາມາດບັນລຸຄວາມສອດຄ່ອງ ແລະ ຮັກສາຄວາມ ປອດໄພຕາມກົດໝາຍ ໃນຮູບແບບທີ່ແຕກຕ່າງກັນ ພວກເຂົາສາມາດສົນທະນາປົກກະຕິ ເພື່ອຫາລືກ່ຽວກັບນະໂຍບາຍ ແລະ ວິທີການ ທາງກົດໝາຍໃຫ້ສອດຄ່ອງກັບ ນະໂຍບາຍ ເຊັ່ນດຽວກັບຂະບວນການປົກຄອງທາງກົດໝາຍ ແລະ ສະຖາບັນ. ແຕ່ເປັນໄປໄດ້ໃນກໍລະນີພິເສດເຊັ່ນ: ສະຫະພາບຢູໂຣບ ຊຶ່ງມີເຈດຈຳນົງ ທາງການເມືອງພໍສຳລັບການປະສານງານ ທາງການເມືອງຫາຍໄປ ເປັນການປ້ອງກັນ ທີ່ສົມຈິງຫຼາຍຂຶ້ນ ລວມເຖິງຄວາມຕ້ອງການບາງຢ່າງ ສຳລັບການດຳເນີນງານຕາມຂໍ້ຜູກພັນໃນສົນທິສັນຍາລະຫວ່າງປະເທດ ຄືຕາມທຳມະດາ ຄວາມຕ້ອງການບາງຢ່າງ ສຳລັບການດຳເນີນງານຕາມ ພັນທະໜ້າທີ່ ໃນສົນທິສັນຍາລະຫວ່າງປະເທດ ໃນຕົວສັນຍາເອງ ຕົວຢ່າງເຊັ່ນ: ສົນທິສັນຍາສາມາດລວບລວມຂໍ້ກຳນົດ, ຮັບຮູ້ເຖິງຂໍ້ຈຳກັດ ບາງຢ່າງຫຼືມາດຕະການ ຂອງເຕັກໂນໂລຊີ ເປັນພື້ນຖານ ທີ່ຈະໃຊ້ໃນກົດໝາຍແຫ່ງຊາດ, ສ່ວນໃຫຍ່ ວິທີການນີ້ເປັນ ຄວາມຈິງຫຼາຍຂຶ້ນ ແລະ ເພື່ອໃຫ້ບັນລຸກົດໝາຍຫຼືນະໂຍບາຍແຫ່ງຊາດ.

ສິ່ງທີ່ທ້າທ້າຍທີ່ກ່ຽວກັບຂອບເຂດຂອງຄູ່ຮ່ວມງານ, ສະຖາບັນ ທີ່ຈຳເປັນ ການກະຈາຍຄວາມຮັບຜິດຊອບ ທີ່ແຕກຕ່າງກັນ ລະຫວ່າງໜ່ວຍງານທັງພາຍໃນ ແລະ ຕ່າງປະເທດ ມີຄວາມຕ້ອງການທີ່ຈະມີຄວາມເຂັ້ມແຂງໃນການພັດທະນາ ແລະ ການໃຊ້ນ້ຳຮ່ວມກັນ ມັນສາມາດເຮັດໄດ້ໂດຍກົນໄກການປະສານ ງານທີ່ມີປະສິດທິພາບຂອງປະເທດ, ເປັນລະດັບລະຫວ່າງປະເທດ. ທາງເລືອກໜຶ່ງຄື: ສະເໜີຊື່ເປັນຈຸດປະສານງານ ໃນກະຊວງທີ່ຮັບຜິດຊອບ ໃນການນຳໃຊ້ນ້ຳ, ເຮັດໜ້າທີ່ເປັນຜູ້ເອີ້ນປະຊຸມ,ອຳນວຍຄວາມສະດວກ ແລະ ປະສານງານໃນປະເທດ(ໃນກະຊວງຕ່າງໆທີ່ມີຄວາມສົນໃຈໃນການພັດທະນາຊັບພະຍາກອນນ້ຳ) ເຊັ່ນດຽວ ກັບການຮ່ວມມືກັບຕ່າງປະເທດ (ໃນຕ່າງປະເທດ ແລະ ສະຖາບັນສາກົນ).

*" ຄວາມຮັບຜິດຊອບຂອງບັນດາກຸ່ມ ທີ່ແຕກຕ່າງກັນລະຫວ່າງອົງການຈັດຕັ້ງທີ່ຕ້ອງເອົາຊະນະກັນ"*

*ບົດບາດຂອງອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ(NGO's)ແລະ(CSOs) ໃນຂະບວນການດຳເນີນງານ ລະດັບຊາດ ແລະ ລະດັບທ້ອງຖິ່ນ*

ທາງການເມືອງ ແລະ ທາງບໍລິ ຫານບໍ່ຄວນເປັນຄົນຄົນດຽວກັນ ຊຶ່ງມີສ່ວນກ່ຽວຂ້ອງ ໃນການດຳເນີນການ ທາງກົດໝາຍຕ່າງປະເທດ, ຊຶ່ງລະດັບທ້ອງຖິ່ນ ແລະ ລະດັບຊາດ. ອົງການNGOs ແລະ CSOs ຍັງມີບົດບາດທີ່ສຳຄັນ, ພວກເຂົາຍັງລວມຢູ່ໃນຄຳສັ່ງ ເພື່ອຊ່ວຍໃຫ້ໝັ້ນໃຈໃນການຍອມຮັບ ຄວາມຮັບຮູ້ ແລະ ຄວາມເປັນເຈົ້າການຂອງການກຽມພ້ອມສຳລັບ ການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ໂດຍບຸກຄົນໃນທ້ອງຖິ່ນ ທີ່ຈະໄດ້ຮັບຜົນກະທົບຫຼາຍທີ່ສຸດ, ພວກເຂົາຈະຕ້ອງເປັນຄົນທີ່ຈະດຳເນີນຂະບວນການບົນພື້ນແຜ່ນດິນ ການມີສ່ວນຮ່ວມຂອງອົງການ NGOsແລະ ອົງການ CSOs ສາມາດຫຼຸດຊ່ອງຫວ່າງ ຈາກການອຳນວຍຄວາມສະດວກ ໃນການສະເໜີກ່ຽວກັບ ການດຳເນີນການ ທາງກົດໝາຍລະຫວ່າງປະເທດ ທີ່ແຕກຕ່າງກັນ, ເພື່ອມີສ່ວນຮ່ວມໃນການປຶກສາຫາລື ບັນຫາເຫຼົ່ານີ້ ເພື່ອ ໃຫ້ມີອິດທິພົນຕໍ່ພວກເຂົາ, ເຖິງແມ່ນວ່າການສະໜັບສະໜູນ ຫຼື ການກວດສອບ ຂະບວນການ ໃນການດຳເນີນງານ ເພື່ອໃຫ້ໝັ້ນໃຈວ່າມີການປະຕິບັດຕາມ (ອ່ານໝວດທີ 3)

ການດຳເນີນງານຕາມກອບຂອງກົດໝາຍ ລະຫວ່າງປະເທດ ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ທີ່ຕ້ອງໃກ້ສິດ ຮ່ວມມືລະຫວ່າງປະເທດ ຜູ້ມີສ່ວນໄດ້ ສ່ວນເສຍອື່ນໆ ລວມເຖິງພາກປະຊາຄົມ ແລະ ພາກສ່ວນເອກະຊົນ.

## *4.3 ການຈັດຕັ້ງສົນທິສັນຍາລະຫວ່າງປະເທດສະບັບໃໝ່ທີ່ໃຊ້ຮ່ວມກັບການຄຸ້ມຄອງນ້ຳ*

ໃຈຄວາມສຳຄັນ ຂອງສົນທິສັນຍາເບຍລິງ(Bearing)ລະຫວ່າງປະເທດ ສຳລັບການຕັ້ງຄ່າກອບຂອງກົດໝາຍການຂ້າມຜ່ານຊາຍແດນ ລະບົບການຈັດການນ້ຳ ແລະ ສັນຍາດັ່ງກ່າວ ຍັງຄຳນຶງເຖິງ ຄວາມຈຳເປັນທີ່ຈະຕ້ອງພັດທະນາໃໝ່ ຫຼື ປັບປຸງສົນທິສັນຍາ ທີ່ມີຢູ່ໃນການຄຸ້ມຄອງນ້ຳ ທີ່ໃຊ້ຮ່ວມກັນ, ຜູ້ຄຸ້ມຄອງນ້ຳ ຈຳເປັນຕ້ອງເຂົ້າໃຈເຖິງບັນຫາທີ່ຄວນໃສ່ໄວ້ໃນສົນທິສັນຍາ ລະຫວ່າງປະເທດ ແລະ ວິທີການດັ່ງກ່າວ ສົນທິສັນຍາສາມາດເຈລະຈາ.

*"ການເຈລະຈາເປັນເລື່ອງທີ່ຍາກທີ່ຈະໄກ່ເກ່ຍແລະສະໜັບສະໜູນ ໂດຍບຸກຄົນທີ່ສາມມາດຊ່ວຍໄດ້"*

### *4.3.1 ການເຈລະຈາຕໍ່ລອງສົນທິສັນຍານ້ຳຂ້າມຜ່ານຊາຍແດນ*

ເມື່ອປະເທດ ໄດ້ລະບຸຄວາມຈຳເປັນ ໃນສົນທິສັນຍາລະຫວ່າງປະເທດ ໃນຂໍ້ຄວາມຈະຕ້ອງມີການເຈລະຈາຕໍ່ລອງສົນທິສັນຍາພາຄີ, ຊ່ອງທາງການທູດ ມີຄວາມພຽງພໍ ໂດຍບໍ່ຕ້ອງເຈລະຈາຫັນໜ້າເຂົ້າກັນຢ່າງເປັນທາງການ, ຄວາມສຳພັນຢ່າງເປັນທາງການທູດທີ່ດີ ຈະຊ່ວຍເພີ່ມໂອກາດຄືບວົງຈອນ ໃນການຈັດລະບົບປົກຄອງສາມາດສ້າງຕັ້ງຂຶ້ນ. ແຕ່ຖ້າປະເທດຕັ້ງໃຈ ແລະ ຄວາມສາມາດ ໃນການໃຫ້ຄວາມຮ່ວມມືຂອງພວກເຂົາເຊັ່ນ: ໃນກໍລະນີທີ່ເຈລະຈາເປັນເລື່ອງຍາກ ສາມາດ ແລະ ໄກ່ເກ່ຍ, ສະໜັບສະໜູນໂດຍບຸກຄົນທີ່ສາມ.

***ກໍລະນີ 4.1 ການໄກ່ເກ່ຍ ແລະ ການສະໜັບສະໜູນ ການເຈລະຈາ ໃນ ສົນທິສັນຍາ Indus Waters Treaty[21].***
ໜຶ່ງໃນອົງປະກອບທີ່ສຳຄັນ ຂອງຂະບວນການນຳໄປສູ່ການເຊັນສົນທິສັນຍາອິນດັສກ່ຽວກັບນ້ຳ ແມ່ນບົດບາດຂອງທະນາຄານໂລກໃນການດຶງເອົາພາກສ່ວນຕ່າງໆເຂົ້າຫາກັນ ແລະ ລະດົມທຶນທີ່ຕ້ອງການເພື່ອເຮັດໃຫ້ສົນທິສັນຍາໄດ້ຮັບການ ຈັດຕັ້ງປະຕິບັດ.
ໃນປີ1951 ທະນາຄານໂລກ ໄດ້ເຊີນໃຫ້ສອງຝ່າຍ ເພື່ອໄກ່ເກ່ຍລະຫວ່າງ ອິນເດຍ ແລະ ປາກິດສະຖານ. ເຂົ້າໃຈໃນຄວາມພະຍາຍາມ ເພື່ອການຕົກລົງສົນທິສັນຍາ ສອງຝ່າຍ ລະຫວ່າງ ການເຈລະຈາທີ່ສຳຄັນດັ່ງກ່າວບໍ່ໄດ້ຮັບຜົນ. ຄວາມຄືບໜ້າໃນໄລຍະຕົ້ນ ໄດ້ຮັບຂໍ້ຕົກລົງໃນຂະບວນ ການຮ່ວມກັນ ແລະ ຈຳນວນທັງໝົດຂອງນ້ຳທີ່ຢູ່ ແລະ ຢູ່ພາຍໃຕ້ການປຶກສາຫາລື. ຢ່າງໃດກໍ່ຕາມ

ຄວາມຮຽກຮ້ອງຂອງສອງປະເທດ ກໍໄດ້ເກີດການດຳເນີນການຕໍ່ໄປບໍ່ໄດ້. ໃນປີ 1954 ທະນາ ຄານໂລກ(WB)ໄດ້ສະເໜີ ການຈັດສັນແມ່ນ້ຳ ພາກຕາເວັນຕົກ ( Indus Jhelum and Chenab) ເຖິງປາກິດສະຖານ ແລະ ແມ່ນ້ຳ ພາກຕາເວັນອອກ ( Ravi,Beas and Sutlej)ເຖິງອິນເດຍ, ນີ້ແມ່ນຂໍ້ສະເໜີທີ່ຮັບຮູ້ກັນທັງສອງຝ່າຍ.

ເພື່ອຄວາມສະເໝີພາບ ໃນການນຳໃຊ້ນ້ຳ ຮ່ວມກັນຂອງສອງປະເທດ,ເຖິງຢ່າງໃດກໍຕາມ ປາກິດສະຖານ(Pakistan) ໄດ້ລົງທຶນຈຳນວນມະຫາສານ ໃນການເຊື່ອມຕໍ່ຄອງນ້ຳ, ການກໍ່ສ້າງແລວນ້ຳ ແລະການສ້າງຫຼາຍເຂື່ອນ. ທະນາຄານໂລກໄດ້ໃຫ້ການຊ່ວຍເຫຼືອ, ໂດຍເຈລະຈາມູນຄ່າການລົງທືນຮ່ວມກັນ. ການກະກຽມສຳລັບການກໍ່ສ້າງໂຄງລ່າງພື້ນຖານເຫຼົ່ານັ້ນ ແລະ ການປູກຝັງ, ລ້ຽງສັດ ມູນຄ່າ 900 ລ້ານໂດລາສະຫະລັດ. ຄວາມອາດສາມາດລະດົມທຶນທາງດ້ານການເງິນ ຂອງທະນາຄານໂລກ ໃນຕອນນີ້ ກ່ຽວກັບປາກິດສຖານ ແມ່ນມີຄວາມສຳຄັນຫຼາຍ.

ການເຊັນສັນຍາລະຫວ່າງປະເທດ ຂອງແມ່ນ້ຳ ອິນດັກ (Indus Waters),ແມ່ນເຊັນໃນວັນທີ່ 19 ກັນຍາ 1960 ລົງນາມໂດຍທະນາຄານໂລກ(WB), ແຕ່ບໍ່ແມ່ນຜູ້ຮັບປະກັນຂອງສັນຍາ. ທະນາຄານໂລກແມ່ນມີຄວາມຮັບຜິດຊອບເປັນພິເສດ ທີ່ຢູ່ໄຕ້ສັນຍາ, ມີຫຼາຍສິ່ງທີ່ກ້ຽວພັນເຖິງຕອນສຸດທ້າຍ ແລະ ປະຈຸບັນໄດ້ສຳເລັດ. ຄວາມຮັບຜິດຊອບທີ່ຄ້າງຄາທີ່ກ່ຽວພັນ ໃນການແກ້ໄຂຂໍ້ຂັດແຍ້ງຕົວຢ່າງ: ຖ້າຄະນະກຳມະການແມ່ນ້ຳດັສ ບໍ່ສາມາດ ແກ້ໄຂ, ຫຼາຍໆຄຳຖາມລະຫວ່າງບັນດາພັກການເມືອງ, ບັນຫາທີ່ອ້າງອີງເຖິງຊ່ຽວຊານ ທີ່ເປັນກາງ, ທະນະຄານໂລກໄດ້ຈັດການ ກ່ຽວກັບ ມູນຄ່າລວມ ທາງດ້ານການເງິນ ນີ້ແມ່ນ ຂະບວນການ, ຖ້າວ່າທັງສອງປະເທດບໍ່ສາມາດຕົກລົງກັນໄດ້, ທະນາຄານໂລກ (ໃນການປຶກສາກັນສອງປະເທດ) ຈະນັດຊ່ຽວຊານທີ່ເປັນກາງ.

ການເຈລະຈາ ກາຍເປັນຄວາມຫຍຸ້ງຍາກຫຼາຍຂຶ້ນ ເມື່ອການພັດທະນາການເຊັນສົນທິສັນຍາຫຼາຍຝ່າຍ. ຂະບວນການທີ່ສາມາດເຮັດໃຫ້ງ່າຍຂື້ນໂດຍເອົາສິ່ງທັງໝົດມາເວົ້າໃນເວທີປະຊຸມ ເຊັ່ນວ່າ ອົງການຈັດຕັ້ງສາກົນ ຄື: ສະຫະປະຊາຊາດ, ໃນຂົງເຂດເຊັ່ນວ່າ ຄູ່ຮ່ວມງານ UNECE ຫຼື ຈັດກອງປະຊຸມພິເສດຂອງອົງການຈັດຕັ້ງ ເພື່ອພິຈາລະນາຫົວຂໍ້ພິເສດ. ໃນສະພາບການດັ່ງກ່າວ ເພື່ອພັດທະນາຮ່າງເອກະສານສະບັບທຳອິດຂອງໜ່ວຍງານວິຊາການ ແລະ ຊ່ຽວຊານດ້ານກົດໝາຍ, ຄວນຢູ່ພາຍໄຕ້ການຄຸ້ມຄອງຂອງສະຖາບັນ ຫຼື ດຳເນີນໃນກອງປະຊຸມ. ເຖິງແນວໃດກໍຕາມພວກເຂົາຍັງຂາດຄວາມອາດສາມາດຢ່າງເປັນທາງການ ໃນການໃຫ້ສັນຍາ ໃນສະພາບການນີ້,ຜູ້ຊ່ຽວຊານສາມາດປ່ຽນແປງສົນທິສັນຍາເບື້ອງຕົນຂອງສະບັບທຳອິດ.

ສົນທິສັນຍາ ຢ່າງເປັນທາງການ ໄດ້ເຮັດຂະບວນການຄວາມໝາຍຂອງສົນທິສັນຍາສຸດທ້າຍຂອງສົນທິສັນຍາສະບັບຕົ້ນ ຈະຈັດຂື້ນໂດຍຕົວແທນຂອງຜູ້ທີ່ມີຄວາມຮັບຜິດຊອບທີ່ແນ່ນອນ ເພື່ອປັບປຸງສົນທິສັນຍາສາກົນ. ຖ້າວ່າມັນບໍ່ສາມາດໄກ່ເກ່ຍໄດ້ທັງໝົດ ບັນດາປະເທດສະມາຊິກ ເພື່ອເຊື່ອມຕໍ່ສົນທິສັນຍາສາກົນ. ຖ້າວ່າມັນບໍ່ສາມາດໄກ່ເກ່ຍໃນທັນທີ່ທັນໃດ ປະເທດສະມາຊິກທັງໝົດ ເພື່ອເຊື່ອມຕໍ່ສົນທິສັນຍາສາກົນ,ສາມາດເປັນໄປໄດ້ເພື່ອສະຫຼຸບ ໃນໄລຍະທຳອິດ ຂອງໝວດການຂຽນກ່ຽວກັບປະເທດ ແລະ ຊັດເຈນ ຫຼືອະນຸຍາດໃນອະນາຄົດ.

*"ຂະບວນການຂອງການພັດທະນາ ສົນທິສັນຍາຫຼາຍຝ່າຍ ສາມາດເຂົ້າໃຈງ່າຍ ໃນການປຶກສາຫາລືຢູ່ໃນກອງປະຊຸມ"*

ອີກທາງເລືອກໜື່ງ ແມ່ນນຳໃຊ້ວິທີທາງແຕ່ລຸ່ມຫາເທິງ ເພື່ອເປັນວິທີການພື້ນຖານ ເພື່ອການຮ່ວມມືໃນອະນາຄົດ. ການຮ່ວມມືຫຼືຮ່ວມກັນ ໃນການປະເມີນ ທາງດ້ານວິທະຍາສາດ, ແລກປ່ຽນຂໍ້ມູນຂ່າວສານ ແລະ ການຄຸ້ມຄອງການຂ້າມຜ່ານຊາຍແດນຢູ່ທ້ອງຖິ່ນ ດ້ວຍຄວາມພະຍາຍາມ ເພື່ອນຳໄປພິສູດ, ແຕ່ວ່າຜົນຂອງການບັງຄັບໃຊ້ ການຍອມຮັບກົງກັນຂ້າມກັບຄວາມຄິດເຫັນ. ການຮ່ວມມືທີ່ດີກັບຊຸມຊົນທ້ອງຖິ່ນ ຈະຊ່ວຍສ້າງຄວາມເຊື່ອໝັ້ນ ແລະ ເຫັນໄດ້ຜົນປະໂຫຍດຈາກ ການຄຸ້ມຄອງຂ້າມຜ່ານຊາຍແດນ. ບົດຮຽນດັ່ງກ່າວ ທີ່ມີຜົນກະທົບຊັດເຈນ ແລະກໍ່ໃຫ້ເກີດຜົນກະທົບຕໍ່ມວນຊົນ ແລະ ການເພີ້ມຄວາມຮຽກຮ້ອງ ສຳລັບການຮ່ວມມືໃນອານາຄົດ ໃນທ້ອງຖິ່ນກໍຄື ລະດັບປະເທດ.

ຄວາມສຳພັນທາງອິດທິພົນ ລະຫວ່າງລັດຖະບານຕ່າງໆ ໄດ້ສະທ້ອນໃຫ້ເຫັນໃນ ຂະບວນການ ເຈລະຈາ, ປະເທດທີ່ຢູ່ຕົ້ນນ້ຳ ແມ່ນໂດຍທົ່ວໄປຢູ່ໃນຖານະທີ່ດີກ່ວາ ຍ້ອນວ່າພວກເຂົາສາມາດໄດ້ຮັບ ນຳໃຊ້ນ້ຳກ່ອນບັນດາປະເທດອື່ນທີ່ຢູ່ແຄມແມ່ນ້ຳ ທີ່ສາມາດໃຊ້ນ້ຳ. ເຖິງຢ່າງໃດກໍ່ຕາມ ສາຍພົວພັນລະຫວ່າງຕົ້ນນ້ຳ ແລະ ລຸ່ມນ້ຳ ຍັງສາມາດປ່ຽນແປງໄດ້ ລະຫວ່າງປະເທດ ແລະຂຶ້ນຢູ່ກັບຊັບພະຍາກອນນ້ຳ ພາຍໃຕ້ການເຈລະຈາ, ຖ້າຫາກວ່າ ຕົວຢ່າງ ປະເທດທີ່ຢູ່ຕົ້ນນ້ຳ ມີໜຶ່ງອ່າງຮັບນ້ຳ, ແຕ່ວ່າປະເທດຢູ່ລຸ່ມນ້ຳ ພັດມີອ່າງຮັບນ້ຳອື່ນ.ໃນກໍລະນີນີ້ ຖານະຂອງບັນດາປະເທດທີ່ຢູ່ຕົ້ນນ້ຳ ແລະ ລຸ່ມນ້ຳ ຕ້ອງມີການສົມດຸນກັນ. ໃນຕົວຈິງ ອຳນາດທາງເສດຖະກິດ ແລະ ການທະຫານ ມີຄວາມສຳພັນກັບ ບັນດາປະເທດທີ່ຢູ່ແຄມແມ່ນ້ຳ. ບາງລັດຖະບານທີ່ບໍ່ເຫັນຄວາມສຳຄັນ ບາງຄັ້ງອາດໄດ້ຊັກຊວນ ໃນລິເລີ້ມການເຈລະຈາ ໃນເວລາມີການຈ່າຍທົດແທນດ້ານການເງິນ, ໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ຫຼືການປະນີປະນອມ ທີ່ພົວພັນກັບແນວຄວາມຄິດ ສົນໃຈອື່ນໆ ເຊັ່ນ ການໃຊ້ວິທີແບ່ງປັນຜົນປະໂຫຍດຮ່ວມກັນ (ເບິ່ງໝວດທີ 2)

> *"ການຮ່ວມມືລະຫວ່າງຊຸມຊົນຂັ້ນພື້ນຖານ ສາມາດນຳໄປສູ່ຄວາມຕ້ອງການ ເພີ່ມຂື້ນສຳລັບການຮ່ວມມືໃນຂັ້ນຕໍ່ໄປ"*

### *4.3.2. ການສ້າງຕັ້ງສົນທິສັນຍານ້ຳ ຂ້າມຜ່ານຊາຍແດນ*

ຫົວຂໍ້ສຳຄັນຂອງສົນທິສັນຍາ ແມ່ນອີງຕາມສະພາບການ, ໂດຍສະເພາະການພົວພັນລະຫວ່າງປະເທດ ສະມາຊິກ ແລະ ຫຸ້ນສ່ວນ. ເຖິງຢ່າງໃດກໍ່ຕາມ ຄຸນລັກສະນະທີ່ສຳຄັນບາງຢ່າງທີ່ຄວນຢູ່ໃນສົນທິສັນຍາ ການຄວບຄຸມນ້ຳທັງໝົດທີ່ໃຊ້ຮ່ວມກັນ.

*ວິໃສທັດ: ກຳນົດເປົ້າຫມາຍຂອງສົນທິສັນຍາ*

ສົນທິສັນຍາສາກົນຕ້ອງການວິໃສທັດ ເຊິ່ງປະກອບດ້ວຍຈຸດປະສົງຈະແຈ້ງ ແລະ ກອບກໍ່ຄືກຳນົດນິຍາມໃຫ້ຈະແຈ້ງໃນການນຳໃຊ້ຄຳສັບ. ຈຸດສຸມຂອງລະບົບການຄຸ້ມຄອງການນຳໃຊ້ນ້ຳຮ່ວມມີຄວາມແຕກຕ່າງກັນ. ສົນທິສັນຍາລະຫວ່າງລັດຕ່າງໆສາມາດສຸມໃສ່ໃນຂົງເຂດ,ແມ່ນ້ຳ ຫລືທະເລສາບໃດໜຶ່ງ, ຫລືພຽງແຕ່ສ່ວນໃດໜຶ່ງຂອງແຫລ່ງນ້ຳ (ຕົວຢ່າງ, ນ້ຳຫນ້າດິນ, ແຕ່ວ່າບໍ່ແມ່ນນ້ຳໃຕ້ດິນ). ແນວຄິດຂອງສົນທິສັນຍາໃນການນຳໃຊ້ນ້ຳຮ່ວມກັນແບບໃຫມ່ບໍ່ຄວນນຳໃຊ້ໃນຂອບເຂດຈຳກັດທາງພູມສາດ, ແຕ່ຕ້ອງວາງລະບຽບການນຳໃຊ້ແຫລ່ງນ້ຳໃນລະບັບທີ່ເຫມາະສົມກັບອັດຕາສ່ວນທາງອຸທົກກະສາດ-ລຸ່ມນ້ຳ. ກອບສົນທິສັນຍາສາມາດຂະຫຍາຍອອກສູ່ລັດອື່ນໆທີ່ບໍ່ໄດ້ນຳໃຊ້ນ້ຳຮ່ວມກັນ, ແຕ່ວ່າອາດໄດ້ຮັບຜົນກະທົບຈາກການນຳໃຊ້ນັ້ນ, ຫລືໄດ້ຮັບຜົນກະທົບຈາກກິດຈະກຳຕ່າງໆຂອງພວກເຂົາ (ກະເສດ, ລ້ຽງປາ ແລະ ບໍ່ແຮ່)

ຜົນປະໂຫຍດໄດ້ຈາກຊັບພະຍາກອນນ້ຳ ບໍ່ຄວນກຳນົດໃນວົງແຄບໃນສົນທິສັນຍາ. ນ້ຳມີການພົວພັນເຊິ່ງກັນ ແລະ ກັນຫລາຍໃນການນຳໃຊ້ໃນການກະສິກຳ, ຜະລິດອຸດສາຫະກຳ, ການເດີນເຮືອ, ການຫາປາ, ພັກຜ່ອນຢ່ອນໃຈ ແລະ ສິ່ງສຳຄັນແມ່ນການບຳລຸງຮັກສາລະບົບນິເວດ ແລະ ການໃຫ້ການບໍລິການຂອງພວກມັນ. ດັ່ງນັ້ນກອບຂອງເນື້ອໃນສົນທິສັນຍາບໍ່ຄວນກຳນົດໃນວົງແຄບ, ຖ້າບໍ່ດັ່ງນັ້ນ, ມັນຈະມີຂໍ້ຈຳກັດໃນການກຳນົດວິທີແບ່ງຜົນປະໂຍດ ຄືໄດ້ອະທິບາຍໃນໝວດທີ 2. ມັນຕ້ອງລວມທັງການກຳນົດລະບຽບການນຳໃຊ້ທາງດ້ານເສດຖະກິດ, ການປ້ອງກັນແລະຄວບຄຸມມົນລະພິດ, ແລະການປ້ອງກັນ ແລະ ຟື້ນຟູລະບົບນິເວດ. ດ້ວຍວິໃສທັດໃນວົງກວ້າງນັ້ນ, ສົນທິສັນຍາສາມາດສະຫນອງກອບກົດຫມາຍໃນການສ້າງຂໍ້ຕົກລົງສະເພາະ ຫລື ວິທີການຕ່າງໆທີ່ເນັ້ນໃສ່ການແກ້ບັນຫາສະເພາະໃດໜຶ່ງໃຫ້ລະອຽດຈະ

ແຈ້ງ. ດີທີ່ສຸດ, ມັນຕ້ອງມີການສ້າງອີງກອນໃນການຄູ້ມຄອງແຫລ່ງນ້ຳ (ເບິ່ງ ໝວດທີ 5) ທີ່ເນັ້ນໃສ່ການແກ້ໄຂບັນຫານີ້ ແລະຈັດຕັ້ງການປະສານງານສົນທິສັນຍາໂດຍອີ່ງໃສ່ຈຸດປະສົງທີ່ໄດ້ກຳນົດ.

"ສົນທິສັນຍາສາມາດໃຫ້ກອບ ສຳລັບການພັດທະນາ ຂອງຫຼັກການທີ່ການແກ້ໄຂບັນຫາໂດຍສະເພາະໃນລາຍລະອຽດ ຫຼາຍຂື້ນ"

ການນຳໃຊ້ນ້ຳ: ຈະເຮັດແນວໃດໃນການນຳໃຊ້ຊັບພະຍາກອນນ້ຳ ສຳລັບຄົນລຸ້ນປະຈຸບັນ ແລະ ອະນາຄົດໃຫ້ຍືນຍົງ.

ເພື່ອໃຫ້ບັນລຸເຖີງວິໃສທັດຂອງສົນທິສັນຍາ ແລະ ເພື່ອສົ່ງເສີມ ການໃຊ້ກຳລັງການຜະລິດຢ່າງເປັນທຳ ສົນທິສັນຍາຄວນລະບຸ ໃຫ້ມີການພິຈາລະນາ ເຖິງປັດໃຈ ຂະບວນການ ທີ່ດຸ່ນດ່ງງ. ມັນສາມາດເນັ່ນໜັກເຖິງບັນຫາທີ່ກ່ຽວຂ້ອງຫຼາຍທີ່ສຸດ,ເຊັ່ນ: ປັດໃຈຂອງລະບົບນິເວດ ບາງຢ່າງຫຼື ຜົນປະໂຫຍດຂອງຊຸມຊົນທີ່ຂື້ນຢູ່ກັບຊັບພະຍາກອນນ້ຳ. ຂໍ້6 ປີ 1997 ວ່າດ້ວຍການອະນຸມັດສົນທິສັນຍາ ສະຫະປະຊາດ ທີ່ກ່ຽວກັບກົດໝາຍຂອງການໃຊ້ງານທີ່ບໍ່ແມ່ນການນຳເຂົ້າຈາກຕ່າງປະເທດ.



ຮູບ4.1 ເຊັນສົນທິສັນຍາກ່ຽວກັບກົດໝາຍບໍ່ໃຫ້ມີການເດີນເຮືອໃນເສັ້ນທາງນ້ຳສາກົນໂດຍຮອງເອກອັກຄະລະຊະທູດຜູ້ມີອຳນາດເຕັມຂອງຣາດຊະນາອາຈັກເນີເທີແລນ, ພະນະທ່ານ Alphons C.M. Hamer.

ຫຼັກສູດນ້ຳ: ໃຫ້ຄຳແນະນຳທີ່ເປັນປະໂຫຍດ(ເບິ່ງຢູ່ ຫົວຂໍ້4.1.3) ບົດບັນຍັດຂອງຫຼັກສູດຄວາມຕ້ອງການມີການປັບພຶດຕິກຳສະເພາະແລະສະທ້ອນໃຫ້ເຫັນເຖິງຜົນປະໂຫຍດຂອງປະເທດ.

ເປັນກົດລະບຽບ ແລະ ໜ້າທີທີ່ສຳຄັນ ມີຄວາມຈຳເປັນເພື່ອກຳນົດ ດຳເນີນການບາງຢ່າງທີ່ບຸກຄົນຫຼືກິດຈະກຳທີ່ຈະຕ້ອງໃຊ້ເວລາເພື່ອລີກເວັ້ນ ຈາກກິດຈະກຳເພື່ອປົກປັກຮັກສາ ຊັບພະຍາກອນນ້ຳ ສຳລັບຄົນລຸ້ນປະຈຸບັນ ແລະ

ອະນາຄົດ. ກົດລະບຽບດັ່ງກ່າວຈະລວມເຖິງລາຍຊື່ຂອງສານພິດ (ການປ່ອຍສານທີ່ຕ້ອງຫ້າມຫຼືຈຳກັດ), ມາດຕາຖານທົ່ວໄປຂອງນ້ຳເປື້ອນ, ຂີດຈຳກັດຂອງມົນລະພິດ, ລະບົບການອະນຸມັດ ຫຼື ມາດຕະຖານເຕັກໂນໂລຍີບາງຢ່າງ (ເຕັກໂນໂລຍີທີ່ດີທີ່ສຸດທີ່ສາມາດໃຊ້ໄດ້)ໃນລະດັບຊາດ. ນອກຈາກນີ້ການປະບຸກໃຊ້ຫຼັກການທາງກົດໝາຍເຊັ່ນ: ກໍ່ມົນລະພິດຫຼືຫຼັກການ, ຂໍ້ຄວນລະວັງຄວນຈະກຳນົດ ເພື່ອໃຊ້ຄູ່ມືການດຳເນີນງານຂອງສົນທິສັນຍາດັ່ງກ່າວ.

*ວິທີການ: ຈັດຕັ້ງປະຕິບັດສັນຍາ ໂດຍຂັ້ນຕອນທາງກົດໝາຍ*

ສົນທິສັນຍາສາກົນ ຄວນປະກອບດ້ວຍ ການສ້າງຄູ່ຮ່ວມງານ ຂອງປະເທດສາມາດ ມີອິດສະຫຼະໃນການປຶກສາຫາລື ແລະ ປະສານງານ ກິດຈະກຳຂອງພວກເຂົາເຈົ້າ.

*ການຮ່ວມມື:*

ລະບຽບອັນໜຶ່ງ ແມ່ນພັນທະຂອງປະເທດ ຕໍ່ການຮ່ວມມືປະສານງານກັບແຕ່ລະປະເທດ ຜົນໄດ້ຮັບ ແລະ ການແກ້ໄຂບັນຫາສາກົນ. ໜ້າທີ່ໃນການປະສານງານ ມັນແມ່ນຮູບແບບທົ່ວໄປ ຂອງກົດໝາຍສາກົນ. ຫຼັກການນີ້ບໍ່ໄດ້ກຳນົດພາລະໜ້າທີ່ສະເພາະເຈາະຈົງ, ດັ່ງນັ້ນ; ຈຶ່ງເປັນພຽງຂຽວສຳລັບໂຄງການສ້າງສະຖາບັນທີ່ບໍ່ຈຳເປັນ ເພື່ອໃຫ້ບັນລຸການຈັດການປະສານງານ, ເຖິງຢ່າງໃດກໍ່ຕາມໃນທາງປະຕິບັດການຮ່ວມມື ປະກອບດ້ວຍໜ້າທີ່ ສະເພາະບາງຢ່າງ ເຊັ່ນ: ແຈ້ງໃຫ້ຊາບລ່ວງໜ້າຂອງມາດຕາການວາງແຜນ, ການພັດທະນາຜົນກະທົບສິ່ງແວດລ້ອມ ໃຫ້ຄຳປຶກສາ ແລະ ເຈລະຈາ ໃນການຕໍ່ລອງ ໃນຄວາມເຊື່ອທີ່ດີ ແລະການເກັບກຳລວບລວມ ແລະ ແລກປ່ຽນຂໍ້ມູນຂ່າວສານ.

ສົນທິສັນຍາ ຈຶ່ງກຳນົດເງື່ອນໄຂຂອງປະເທດ ຕາມແຜນການຂອງກິດຈະກຳ ຊຶ່ງອາດຈະມີຜົນກະທົບຕໍ່ປະເທດອື່ນໆ ແລະ ວິທີການທີ່ການປຶກສາຫາລືກັບປະເທດ. ມັນມີຄວາມສຳຄັນໃນການຍົກຈິດສຳນຶກກ່ຽວກັບແນວຄວາມຄິດຂອງໂຄງການ ແລະ ຂະບວນການໃຫ້ຄຳປຶກສາ ຈະລະບຸວ່າທຸກປະທດ ມີສິດທິ ທີ່ຈະໄດ້ຮັບການແຈ້ງການ ແລະ ປຶກສາຫາລື ຫຼື ພຽງແຕ່ປະເທດ ທີ່ຄິດວາງແຜນມີແນວໂນ້ມທີ່ຈະໄດ້ຮັບຜົນກະທົບ. ຊ່ວງໄລຍະເວລາໜຶ່ງ ທີ່ຕັ້ງຢູ່ໃນປະເທດຊຶ່ງການວາງແຜນ ຈະຕ້ອງແຈ້ງໃຫ້ບຸກຄົນ ຫຼື ກິດຈະການທີ່ ມີແນວໂນ້ມໄດ້ຮັບຜົນກະທົບ ແລະ ປຶກສາຫາລື ທາງເລືອກທີ່ກຳນົດ ເວລາສຳລັບພວກເຂົາ, ຈະເພີ່ມຄວາມກັງວົນສົນທິສັນຍາ ອາດລະບຸຜົນກະທົບ ຫາກບໍ່ໄດ້ຮັບຮູ້, ໃນກົດໝາຍສາກົນ ມີໜ້າທີ່ຈະຕ້ອງແຈ້ງໃຫ້ຊາບ ແລະ ໃຫ້ຄຳປຶກສາຫາລື ໂດຍບໍ່ຕ້ອງມີວະລະ, ລັດຖະບານເຮັດໜ້າທີ່ໃຫ້ສອດຄ່ອງກັບຄວາມສົນໃຈ ຂອງປະເທດຊາດ ໄດຮັບຜົນກະທົບ ແຕ່ພຽງຈະນຳພວກເຂົາເຂົ້າສູ່ການພິຈາລະນາ.

*" ການໃຫ້ຄວາມຮ່ວມມື ເປັນໜ້າທີ່ສຳຄັນ ທີ່ຈະໄດ້ຮັບການໃຊ້ປະໂຫຍດທີ່ເໝາະສົມ"*

ເພື່ອໃຫ້ຮູ້ວ່າຜູ້ທີ່ຈະໄດ້ຮັບຜົນກະທົບຈາກກິດຈະກຳທີ່ໄດ້ສະເໜີ, ດັ່ງນັ້ນ, ຂໍ້ຕົກລົງອາດກຳນົດໃຫ້ມີການປະເມີນຜົນກະທົບຕໍ່ສິ່ງແວດອ້ອມ(EIA). ຂະບວນການ EIA ຮັບປະກັນວ່າຜົນກະທົບທາງດ້ານເສດຖະກິດ ແລະສິ່ງແວດລ້ອມຂອງກິດຈະກຳທີ່ສະເໜີຈະຕ້ອງໄດ້ພິຈາລະນາໂດຍຜ່ານການວາງແຜນຂອງລັດແລະຄົ້ນຄ້ວາຈາກອົງກອນທີ່ເໝາະສົມກ່ອນໄດ້ຮັບການເຫັນດີຂັ້ນສຸດທ້າຍ. ໃນກໍລະນີການນຳໃຊ້ໜ້ານ້ຳຮ່ວມກັນ, ມັນບໍ່ພຽງພໍທີ່ຈຳກັດການປະເມີນຜົນກະທົບທີ່ເປັນໄປໄດ້ພຽງແຕ່ໃນເຂດແດນຂອງປະເທດນັ້ນ. ຖ້າຈະເວົ້າໃຫ້ຖືກ, ການປະເມີນຜົນກະທົບຂ້າມຊາດມີຄວາມຈຳເປັນທີ່ຈະຕ້ອງສຶກສາຜົນກະທົບຢູ່ຕົ້ນນ້ຳ ແລະ ລຸ່ມນ້ຳຂອງບັນດາລັດ ແລະຜູ້ມີສ່ວນຮ່ວມຂອງພວກເຂົາ. ຂໍ້ກຳນົດ EIA ຄວນໜັ້ນໃສ່ກອບຂອງຂໍ້ມູນທີ່ EIA ຕ້ອງໄດ້ບັນທຶກ, ຜົນຕາມມາຂອງ EIA ສຳຫລັບຂະບວນຕັດສິນໃຈ ແລະ ລະດັບການເຂົ້າຮ່ວມຂອງສາທາລະນາຊົນໃນຂະບວນ EIA. ສິ່ງສຳຄັນແມ່ນໃຫ້ຜູ້ມີສ່ວນຮ່ວມທີ່ໄດ້ຮັບຜົນກະທົບມີໂອກາດສະເໜີ ສິ່ງທີ່ເຂົ້າສົນໃຈ ແລະຄວາມຂັດຂ້ອງຫມອງໃຈ.

ການເກັບກຳ ແລະແລະແລກປ່ຽນຂໍ້ມູນທີ່ກ່ຽວຂ້ອງແມ່ນພື້ນຖານການຮ່ວມມືຢ່າງມີປະສິດຕິຜົນ. ມັນມີຄວາມສຳຄັນວ່າຂໍ້ມູນຈະຕ້ອງເຂົ້າເຖິງທັງສອງຄື: ລັດທີ່ໄດ້ຮັບຜົນກະທົບແລະຜູ້ມີສ່ວນຮ່ວມໃນທ້ອງຖິ່ນ. ດັ່ງນັ້ນ, ມັນເປັນການປະຕິບັດທີ່ດີສຳຫລັບລັດທີ່ແລກປ່ຽນຂໍ້ມູນ ແລະຂ່າວສານທີ່ມີກ່ຽວຂ້ອງ ກັບເງື່ອນໄຂການນຳໄຊ້ແຫລ່ງນ້ຳຮ່ວມກັນເປັນປົກກະຕິ. ຖ້າວ່າ ລັດນຶ່ງໄດ້ຮ້ອງຂໍຈາກລັດນຶ່ງເພື່ອສະຫນອງຂໍ້ມູນ ຫລື ຂ່າວສານທີ່ຍັງບໍ່ທັນມີ, ລັດນັ້ນຕ້ອງໄຊ້ຄວາມພະຍາຍາມໃຫ້ດີທີ່ສຸດເພື່ອສະຫນອງຄວາມຕ້ອງການດັ່ງກ່າວ. ແຕ່ມັນອາດຮຽກຮ້ອງໃຫ້ລັດນັ້ນຈ່າຍຄ່າເກັບກຳຂໍ້ມູນໃນມູນຄ່າທີ່ເຫມາະສົມ. ບັນດາລັດຕ່າງໆຄວນໄຊ້ຄວາມພະຍາຍາມເຫມືອນກັນເພື່ອເກັບກຳຂໍ້ມູນໃນບອ່ນທີ່ເຫມາະສົມ, ວິທີການປຸງແຕ່ງຂໍ້ມູນ ແລະຂ່າວສານທີ່ຊວ່ຍໃຫ້ລັດອື່ນສາມາດໄຊ້ໄດ້ຮ່ວມກັນໄດ້. ການແລກປ່ຽນການນຳໄຊ້ຂໍ້ມູນ ແລະຂ່າວສານແບບສັນນິດຈະຊ່ວຍໃຫ້ຂະບວນຕັດສິນຄັ້ງສຸດທ້າຍມີຄວາມໂປ່ງໃສ ແລະຮັບຜິດຊອບ.

*ການປະຕິບັດຕາມລະບຽບກົດຫມາຍ, ການບັງຄັບໄຊ້ກົດຫມາຍ ແລະແກ້ໃຂຂໍ້ຂັດແຍ້ງ*

ຄູ່ສົນທິສັນຍາຄວນເນັ້ນໃສ່ ບັນຫາກ່ຽວກັບວິທີການກວດກາການຈັດຕັ້ງປະຕິບັດຂໍ້ບັນຍັດສົນທິສັນຍາ. ນີ້ຕ້ອງການ ລະບົບຈະແຈ້ງໃນກວດກາການປະຕິບັດຕາມລະບຽບກົດຫມາຍ ແລະການທົບທວນ. ຕົວຢ່າງ, ສົນທິສັນຍາອາດຕ້ອງການວ່າຄູ່ສົນທິສັນຍາທັງຫມົດດຳເນີນການກວດກາປະເມີນຜົນເປັນປົກກະຕິ ແລະສົ່ງບົດລາຍງານ. ໃນຂະນະດຽວກັນການທົບທວນສະພາບການປະຕິບັດຕາມລະບຽບກົດຫມາຍ, ກໍ່ສາມາດດຳເນີນໄປພາຍໄຕ້ກອງປະຊຸມຂອງຄູ່ສົນທິສັນຍາປະຈຳປີ. ຂະບວນການກວດກາຕິດຕາມສາມາດເຮັດໄດ້ແບບງ່າຍດາຍຖ້າຄູ່ສົນທິສັນຍາສ້າງອົງກອນຄູ້ມຄອງທີ່ມີຄວາມເຊື່ອຖືຮ່ວມກັນ ໂດຍມີຫນ້າທີ່ຊີ້ນຳການກວດກາຕິດຕາມ ແລະທົບທວນ. ການໃຫ້ສິດຢ່າງພຽງພໍແກ່ສາທາລະນະຊົນເຂົ້າຮ່ວມແມ່ນສຳຄັນໃນການຮັບປະກັນການຍິນຍອມໃນການປະຕິບັດຕາມລະບຽບການ. NGOs ແລະ CSOs ສາມາດສະແດງບົດບາດໃນການເຝົ້າລະວັງໃນຖານະຜູ້ສັງເກດການເອກະລາດເຊິ່ງໄດ້ຮັບການເຊື່ອຖືຈາກຜູ້ມີສ່ວນຮ່ວມເປັນສ່ວນໃຫ່ຍ. ຍິ່ງໄປກວ່ານັ້ນ, NGOs ແລະ CSOs ສາມາດສະໜັບສະໜູນຂະບວນການກວດກາຕິດຕາມໂດຍສະໜອງຄວາມສາມາດທາງດ້ານວິຊາການທີ່ຈຳເປັນເຊິ່ງບັນດາລັດຂາດເຂີນຍອັນຂໍ້ຈຳກັດດ້ານການເງິນ.

ສົນທິສັນຍາຄວນເນັ້ນໃສ່ແກ້ໃຂວິທີການ, ຖ້າວ່າສະພາບການບໍ່ຍິນຍອມໃນການປະຕິບັດລະບຽບກົດຫມາຍໄດ້ຖືກພົບເຫັນ. ຄູ່ສົນທິສັນຍາຄວນສະຫນອງຕອບ ແລະນຳຜູ້ບໍ່ຍິນຍອມປະຕິບັດຕາມລະບຽບກັດຫມາຍໃຫ້ປະຕິບັດຕາມກົດຫມາຍ. ສົນທິສັນຍາຄວນສະນອງເຄື່ອງມືທັງຫມົດ: ໃນນີ້ລວມມີທັງສອງຢ່າງຄື: ມາດຕະການສະນັບສະນູນ ແລະ ສິ່ງກະຕຸກຊຸກຍູ້ເພື່ອສາມາດ ແລະ ກະຕຸ້ນໃຫ້ມີການຍິນຍອມໃນການປະຕິບັດລະບຽບກົດຫມາຍ ເຊັ່ນດຽວກັນກັບມາດຕະການລົງໂທດ ເພື່ອຜັກດັນລັດໃນກໍລະນີດີ້ດ້ານບໍ່ຍິນຍອມປະຕິບັດຕາມລະບຽບກົດຫມາຍ.

*ກໍລະນີ 4.2 ການຕັ້ງຖິ່ນຖານ ຕາມມາດຕາຖານ ການບັງຄັບໃຊ້ກົດໝາຍ ແລະ ຂໍ້ພິພາກ ນ້ຳ ພາຍ ໃຕ້ກອບຂອງສະຫະພາບເອີລົບ*[22]

ສະຫະພາບເອີໂລບ(EU)ມີຄຳສັ່ງ(WFD) ຄວບຄຸ້ມການຄົ້ມຄອງຊັບພະຍາກອນນ້ຳ ສຳລັບທຸກປະເທດສະມາຊິກສະຫະ ພາບເອີໂລບ. ຄວາມກັງວົນຂອງ(WFD)ກ່ຽວກັບນ້ຳໜ້າດິນ ແລະ ນ້ຳໃຕ້ດິນທີ່ມີຄຸນນະພາບເຊັ່ນດຽວກັນກັບການປ້ອງກັນນ້ຳຊາຍຝັ່ງທະເລ. ໃນທາງກົງກັນຂ້າມກ່ອນ ໜ້ານີ້ຄະນະກຳມະທິການເອໂລບນ້ຳ(EC) ກົດໝາຍທີ່ເອີ້ນວ່າ (WFD) ສຳລັບການບໍລິຫານຈັດການແບບບຸລະນະການຂື້ນຢູ່ກັບແຫຼ່ງອຸທົກກະສາດ ແລະ ຄຳນຶງເຖິງທີ່ຢູ່ອາໃສ ໃນລະບົບນິເວດແຫຼ່ງນ້ຳ ແລະດິນ.

ໃນສະຖານະທີ່ເປັນຄຳສັ່ງຂອງຄະນະກຳມະການWFD ຈະຜູກພັນລັດຖະສະນາຊິກ ຜົນທີ່ຈະຕ້ອງມີການເຮັດໄດ້, ແຕ່ທາງເລືອກຂອງວິທີການ ແລະ ເຄື່ອງມືດຳເນີນງານ ທີເຫຼືອຂື້ນຢູ່ກັບປະເທດສະມາຊິກຕົວຢ່າງ ຄືຄຳສັ່ງຈະຕ້ອງມີການປັບປ່ຽນ ລົງໃນກົດໝາຍ. ຄະນະກຳມະການນ້ຳໂລກເປັນຜູ້ຮັບຜິດຊອບ ສຳລັບການກວດສອບ ການຂົນຍ້າຍນີ້, ຖ້າວ່າຄະນະກຳມະການພົບວ່າ ປະເທດສະມາຊິກບໍ່

ໄດ້ໃຊ້WFD ໄດ້ຢ່າງຖືກຕ້ອງ ແລະ ຈຶ່ງບໍ່ໄດ້ເປັນຂໍ້ຜູກມັດ ຕາມກົດໝາຍ,ໃນກອງປະຊຸມ ທີ່ສາມາດເປີດຂັ້ນຕອນ ການລະເມີດໂດຍການສົ່ງຈົດໝາຍແຈ້ງໃຫ້ຊາບ ຢ່າງເປັນທາງການ, ແຈ້ງຂັ້ນຕອນທີ່ໄດ້ຮັບການເປີດ ແລະ ລະບຸຂໍ້ກ່າວຫາ, ກຳນົດເປັນບ່ອນອີງໄວ້ສຳລັບປະເທດທີ່ຈະຕອບສະໜອງ.

ຫາກເລື່ອງບໍ່ສາມາດແກ້ໄຂໄດ້ ຄະນະກຳມະການຈະຕ້ອງອ້າງອີງຄະດີໄປສູ່ສານຂອງຄວາມຍຸດຕິທຳ, ຄຳຕັດສິນຂອງສານ ມີຜົນຜູກພັນກັບສະຖາບັນຂອງສະຫະພາບເອີໂລບ ແລະ ບັນດາປະເທດສະມາຊິກ. ເຖິງຢ່າງໃດກໍ່ຕາມ, ສານຍຸດ ຕິທຳບໍ່ໄດ້ມີອຳນາດທີ່ຈະລົບລ້າງ ລັດຖະບັນຍັດແຫ່ງຊາດ ທີ່ບໍ່ເຂົ້າກັນ ຫຼື ທົດແທນການຂາດ ການຍອມຮັບກົດໝາຍແຫ່ງຊາດ. ມັນຂຶ້ນກັບປະເທດສະມາຊິກ ໃນການໃຊ້ມາດຕາການ ໃນການຕອບສະໜອງຕໍ່ການຕັດສິນໃຈຂອງສານ. ຫາກປະເທດສະມາຊິກ, ບໍ່ສຳເລັດໃນການດຳເນີນການ ແລະ ການບໍ່ປະຕິບັດຕາມ, ຍັງມີຄະນະກຳມະການອີກ ອາດນຳມາຊຶ່ງບໍ່ວ່າກ່ອນທີ່ສານຍຸດຕິທຳ ແລະ ອາດຈາກຈຸດນີ້ ຂໍ້ກຳນົດ ຂອງການສຳລະເງິນຄ່າປັບໃໝ ເປັນໄລຍະໆຂຶ້ນ, ຂຶ້ນໄປຍັງຈຸດໃນເວລາທີ່ປະເທດສະມາຊິກ ຈະເຮັດໃຫ້ການລະເມີດໝົດໄປ.

ສ່ວນການຍຸດຕິຂໍ້ພິພາກຂອງການຍົກຍ້າຍຖິ່ນຖານເປັນສິ່ງຈຳເປັນໃນສົນທິສັນຍາລະຫວ່າງປະເທດ. ມີສອງປະເພດຄື: ການຍຸດຕິຂໍ້ພິພາກ ເພື່ອແກ້ໄຂ ພາກສວ່ນ ເອກະຊົນ ແລະ ການລະງັບຂໍ້ພິພາກລະຫວ່າງລັດ ແລະ ເອກະຊົນ, ພາກສວ່ນເອກະຊົນໄດ້ຮັບຜົນກະທົບ ເຂົ້າສູ່ຂະບວນການ ອຳນາດບໍລິຫານ ແລະ ຕຸລາການ.ວິທີການນີ້ມີປະໂຫຍດສຳຄັນ: ເນື່ອງຈາກຂໍ້ພິພາດ ທີ່ບໍ່ໄດ້ບໍລິຫານລະດັບສະຖານະພາບຂອງປະເທດ ແຕ່ລະຫວ່າງລັດ ແລະ ເອກະຊົນ, ມັນເປັນໂອກາດນ້ອຍທາງການເມືອງ, ດັ່ງນັ້ນ ຈຶ່ງມີທ່າອ່ຽງທີ່ຈະແກ້ໄຂໄດ້ຢ່າງວ່ອງໄວ, ຢ່າງໃດກໍຕາມ ເພື່ອຈະເຮັດໃຫ້ການລະງັບຂໍ້ພິພາກນີ້, ພາກລັດຕ້ອງຕົກລົງໄຈ້ແຍກ ລະຫວ່າງຊາດ ແລະ ບໍ່ແມ່ນ, ໃນສົນທິສັນຍາ ຈະຕ້ອງຮັບຮູ້ພາກສວ່ນບຸກຄົນ ທີ່ໄດ້ຮັບຜົນກະທົບທັງໝົດ ຈະໄດ້ຮັບສິດທິ ແລະ ວິທີແກ້ໄຂໃນກົດໝາຍດຽວກັນ.

ໃນລະດັບປະເທດ, ປະເທດມີອິດສະຫຼະໃນການກຳນົດ ວິທີການແກ້ໄຂຂໍ້ພິພາດ ຂອງພວກເຂົາມີຫຼາຍຂະບວນການ ຂອງການລະງັບຂໍ້ພິພາດ, ຈາກການຮ່ວມມື ໃນການເຮັດວຽກຮ່ວມກັນ ເປັນເຄື່ອງມືໃນການໄກ່ເກ່ຍ ຫຼື ຕັດສິນຂອງສານ, ນີ້ຈະຊ່ວຍໃຫ້ເປັນແນວທາງ ທີ່ໃຫ້ຄວາມສຳຄັນ ໃນການມີຄວາມສຳພັນຕໍ່ກັນ, ການຕັ້ງຖິ່ນຖານຜ່ານການເຈລະຈາ ໂດຍກົງ ລະຫວ່າງພາຍໃນຂໍ້ພິພາດ ຫາກບໍ່ມີການຕົກລົງເປັນເອກະພາບກັນ,ຂໍ້ພິພາດທີ່ຄວນຈະເປັນສະຖາບັນຮ່ວມທຶນ (ຖ້າສະຖາບັນການສຶກສາທີ່ມີຢູ່)ຊຶ່ງອາດຈະເປັນບັນຫາໜຶ່ງໃນກອງປະຊຸມຂັ້ນນຳ. ຂັ້ນຕອນທີ່ສາມ ຈະໄດ້ຮັບການແກ້ໄຂ ຄວາມຂັດແຍງຜ່ານການທູດ ໝາຍຄວາມວ່າ ຖ້າແກ້ໄຂບໍ່ໄດ້ຂອງທຸກຂັ້ນທີ່ຜ່ານມາບໍ່ສຳເລັດ ຂໍ້ພິພາດ ທີ່ເວົ້າເຖິງການອະນຸມັດໂດຍຕຸລາການ ໃຫ້ສອດຄ່ອງກັບຂັ້ນຕອນການຕົກລົງ ໂດຍຄູ່ສັນຍາທັງສອງ ຫຼື ໄປຍັງສານລະຫວ່າງປະເທດເຊັ່ນ ສານຍຸດຕິທຳນາໆຊາດ ສຳລັບການຕັດສິນໃຈທີ່ຜູກພັນ.

## *4.4 ກົດໝາຍ: ເປັນເຄື່ອງມື ການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ*

ກົດໝາຍນ້ຳ ເປັນຫົວໃຈຂອງການ ຄຸ້ມຄອງນ້ຳ ຂ້າມຜ່ານຊາຍແດນທີ່ສຳຄັນ ມີບົດບາດໃນທຸກຂັ້ນຕອນ, ແຮງຈູງໃຈໃນການອອກແບບ ແລະ ການດຳເນີນງານ(ເບິ່ງຕາຕະລາງ1.1) ທີ່ເກີດຂຶ້ນໃໝ່ໃນລະຫວ່າງປະເທດ, ກົດໝາຍນ້ຳຈືດກໍເຊັ່ນດຽວກັນ, ກົດໝາຍນ້ຳລະດັບຊາດ ແລະ ທ້ອງຖິ່ນສ້າງກອບພາຍໃນທີ່ແບ່ງປັນຜົນປະໂຫຍດຂອງຜູ້ມີສວ່ນໃດສ່ວນເສຍມີສວ່ນຮ່ວມ, ສະຖາບັນ ແລະ ຂະບວນການໃນການດຳເນີນງານ ໂດຍເລີ່ມຈາກການ ຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ບົນພື້ນແຜ່ນດິນທີ່ງ່າຍ ແລະ ໝັ້ນໃຈ; ເຖິງແມ່ນວ່າໃນກົດໝາຍນ້ຳບໍ່ເປັນເງື່ອນໄຂທີ່ແນ່ນອນສຳລັບການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ,ໃນທາງປະຕິບັດ ກໍເປັນປັດໃຈສຳຄັນສຳລັບໂຄງການຄຸ້ມຄອງທີ່ມີປະສິດທິພາບ ແລະ ປະສິບຄວາມສຳເລັດ.



## ໝວດທີ 5

## ສະຖາບັນການຈັດຕັ້ງສຳລັບອ່າງແມ່ນ້ຳຂ້າມຜ່ານຊາຍແດນ

ໃນລະດັບໂດຍພື້ນຖານແລ້ວ, ສະຖາບັນຄຸ້ມຄອງອ່າງແມ່ນ້ຳຂ້າມຜ່ານຊາຍແດນນີ້ແມ່ນໄດ້ສ້າງຂຶ້ນມາເພື່ອໃຊ້ປະໂຫຍດຈາກໂອກາດ ແລະ ເພື່ອແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ ໃນເວລາທີ່ແມ່ນ້ຳໄດ້ໄຫຼຂ້າມຜ່ານຊາຍແດນ ຂອງສອງປະເທດ ຫຼື ຫຼາຍປະເທດ. ຖານະທາງກົດໝາຍ ຂອງສະຖາບັນເຫຼົ່ານີ້ແມ່ນໄດ້ປະກົດຂຶ້ນໃນຫຼາຍໆລະດັບເຊັ່ນ: ລະດັບສາກົນ, ລະດັບພາກພື້ນ ແລະ ລະດັບອ່າງແມ່ນ້ຳ (ເບິ່ງໝວດທີ 4), ຊຶ່ງໄດ້ອະທິບາຍຢ່າງຈະແຈ້ງ ດ້ານສະຖາບັນຄຸ້ມຄອງອ່າງແມ່ນ້ຳລະດັບຊາດ, ລະດັບທ້ອງຖິ່ນ, ອົງການຈັດຕັ້ງຕ່າງໆ ລວມທັງອົງການຈັດຕັ້ງຂອງລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ. ອັນນີ້ກໍ່ເພື່ອ ເປັນການຮັບປະກັນວ່າສະຖາບັນຄຸ້ມຄອງລະດັບອ່າງແມ່ນ້ຳ ໄດ້ມີປະສິດທິພາບ ຮຽກຮ້ອງໃຫ້ເຂົ້າໃຈເຖິງພາລະບົດບາດຂອງເຂົາເຈົ້າ, ໃນວິທີການເຈລະຈາແນວໃດ ແລະ ຊອກຫາວິທີທາງດ້ານການບໍລິຫານພື້ນຖານການເງິນແບບຍືນຍົງ.

### *5.1 ການພັດທະນາອ່າງແມ່ນ້ຳຂ້າມຜ່ານຊາຍແດນ ແລະ ການຄຸ້ມຄອງສະຖາບັນການຈັດຕັ້ງ: ພາລະໜ້າທີ່, ການອອກແບບ ແລະ ຄວາມມີປະສິດທິພາບ.*

#### *5.1.1 ພາລະໜ້າທີ່ຂອງສະຖາບັນ.*

ສະຖາບັນການຄຸ້ມຄອງໃນລະດັບອ່າງແມ່ນ້ຳມີ ຄວາມຫຼາກຫຼາຍທາງດ້ານ ພາລະໜ້າທີ່ ແລະ ຮູບແບບ. ຢູ່ໃນໝວດນີ້, ພວກເຮົາອີງຕາມການໃຫ້ ນິຍາມດ້ານສະຖາບັນການຈັດຕັ້ງຂອງທ່ານ ແກ້ວຫານ ຄືກັນກັບກອບລະບຽບທີ່ ໝັ້ນຄົງ ແລະ ເຊື່ອມໂຍງກັນ (ທີ່ເປັນທາງການ ແລະ ບໍ່ເປັນທາງການ), ທີ່ໄດ້ລະບຸລະບຽບໃນພາກປະຕິບັດ, ຂໍ້ຫຍຸ້ງຍາກໃນກິດຈະກຳ, ແລະ ຈັດລຽງສິ່ງທີ່ໄດ້ຄາດຫວັງໄວ້.[23] ໃນວຽກງານຊັບພະຍາກອນນ້ຳ, ບັນດາລະບຽບຫຼັກການຂອງສະຖາບັນເຫຼົ່ານີ້ ສາມາດເປັນຮູບແບບທີ່ບໍ່ເປັນທາງການ, ເຊັ່ນ: ບໍ່ມີບົດບັນທຶກຄວາມເຂົ້າໃຈ ຫຼື ຂໍ້ຕົກລົງໃນການເຮັດວຽກ; ຫຼື ເປັນທາງການທີ່ສຸດ ທີ່ມີຫລາຍອົງການຈັດຕັ້ງອ່າງແມ່ນ້ຳລະດັບສາກົນ ຫຼື ຕິດພັນກັບບັນດາສົນທິສັນຍາທາງດ້ານກົດໝາຍ. ດັ່ງທີ່ໄດ້ອະທິບາຍໃນໝວດທີ 4, ດ້ານເນື້ອໃນຂອງບັນດາສະຖາບັນການຄຸ້ມຄອງອ່າງແມ່ນ້ຳ ຂ້າມຜ່ານຊາຍແດນນີ້ ໂດຍທົ່ວໄປແລ້ວ ໄດ້ສ້າງຕັ້ງຂຶ້ນໂດຍຜ່ານສົນທິສັນຍາ ຫຼື ຄ້າຍຄືກັບ ຂໍ້ຕົກລົງທີ່ເຊັນໂດຍ ສອງ ຫຼື ຫຼາຍປະເທດໃນການນຳໃຊ້ ຊັບພະຍາກອນແຫຼ່ງນ້ຳອັນດຽວຮ່ວມກັນ.

*"ກອບກົດລະບຽບຂອງສະຖາບັນ ສາມາດເປັນລັກສະນະ ບໍ່ເປັນທາງການ ຫຼື ທາງການທີ່ສຸດ"*

ບັນດາພາລະໜ້າທີ່ ຂອງອົງການຈັດຕັ້ງຂ້າມຜ່ານຊາຍແດນ ສາມາດຈັດລຽງໄດ້ຈາກການແລກປ່ຽນຂໍ້ມູນ ແລະ ຂ່າວສານ, ເພື່ອດຳເນີນວຽກງານທີ່ມີລັກສະນະຕໍ່ເນື່ອງ, ເປັນຕົ້ນແມ່ນການສ້າງເຂື່ອນໃດໜຶ່ງ, ເພື່ອເປັນການຄຸ້ມຄອງໂດຍລວມກ່ຽວກັບບັນຫາ ນ້ຳ ຢູ່ພາຍໃນອ່າງນ້ຳຂອງເຂົາເຈົ້າ, ຍົກຕົວຢ່າງເຊັ່ນ: ໂດຍຜ່ານການສ້າງຕັ້ງອົງການຈັດຕັ້ງອ່າງແມ່ນ້ຳລະດັບສາກົນເຊັ່ນ: ຄະນະກຳມາທິການອ່າງແມ່ນ້ຳຂອງ ຫຼື ອົງການເພື່ອພັດທະນາອ່າງແມ່ນ້ຳ ເຊເນການ

(OMVS). ໃນຕາຕະລາງ 5.1 ໄດ້ສະແດງ ໃຫ້ເຫັນລັກສະນະທີ່ເປັນໄປໄດ້ໃນບັນດາພາລະໜ້າທີ່ ແລະ ເປົ້າໝາຍຂອງສະຖາບັນບິນພື້ນຖານ ຂອງກົດໝາຍ ສິ່ງແວດລ້ອມສາກົນ.

ຈຸດປະສົງການຮ່ວມມືຂ້າມຜ່ານຊາຍແດນແມ່ນ ການໃຫ້ຂອບເຂດ ທີ່ກ້ວາງໃຫ່ຍອັນໜຶ່ງເພື່ອກຳນົດຮູບແບບການຄຸ້ມຄອງຮ່ວມກັນ. ໂດຍທົ່ວໄປແລ້ວຖ້າມີຈຸດປະສົງຂອງສະຖາບັນຈະແຈ້ງ ຈະຊ່ວຍໃຫ້ເຂົ້າໃຈເນື້ອໃນສະເພາະຂື້ນຕື່ມ, ແລະ ການກຳນົດສິດ ແລະ ພາລະບົດບາດຂອງ ທຸກຝ່າຍທີ່ເຂົ້າຮ່ວມ ຕົວຢ່າງ, ສະຖາບັນຄຸ້ມຄອງອັນໜຶ່ງໄດ້ສ້າງຂື້ນ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການກໍ່ສ້າງ ແລະ ບໍລິຫານຈັດການ ເຂື່ອນ ທີ່ອາດຈະມີຄ່າໃຊ້ຈ່າຍ ທາງດ້ານການເງິນ ແລະ ແຈກຢາຍ ໃຫ້ແຕ່ລະພາກສ່ວນ,ການບໍລິຫານເຂື່ອນດ້ວຍວິທີໃດ, ແລະ ຂໍ້ມູນໃດທີ່ຈະໄດ້ເກັບກຳ, ແລະໃຜຈະເປັນຜູຢັ້ງຢືນວ່າ ຂໍ້ຕົກລົງດັ່ງກ່າວນັ້ນ ສາມາດນຳໃຊ້ໄລະເຊື່ອຖືໄດ້. ອັນນີ້ແມ່ນຕົວຢ່າງໜຶ່ງ ຂອງສະຖາບັນໃດໜຶ່ງ ທີ່ທັງກຳນົດແຜນງານ ແລະ ລະບຽບການ ດັ່ງທີ່ໄດ້ອະທິບາຍຢູ່ ໃນ ຕາຕະລາງ5.1.

*ຕາຕະລາງ5.1ໜ້າທີ່ ແລະ ເປົ້າໝາຍຂອງ ອົງການຈັດຕັ້ງຂ້າມຜ່ານຊາຍແດນ* [24]

| ໜ້າທີ່ | ເປົ້າໝາຍລວມ | ຕົວຢ່າງສະເພາະກ່ຽວກັບນ້ຳ |
|---|---|---|
| ດ້ານລະບຽບການ | ກິດຈະກຳທີ່ເກືອດຫ້າມ ຫຼື ນຳສະເໜີ | ການແບ່ງປັນຈັດສັນນ້ຳ , ການຄວບຄຸມມົນລະພິດ |
| ດ້ານແຜນງານ | ລວມສູນ ຫຼື ສ້າງຊັບພະຍາກອນສຳລັບໂຄງການທີ່ມີຜົນປະໂຫຍດຮ່ວມກັນ. | ການກໍ່ສ້າງ ແລະ ບໍລິຫານເຂື່ອນ, ການໄຫຼຂອງນ້ຳເພື່ອສິ່ງແວດລ້ອມ |
| ດ້ານຂະບວນການ | ປົກກະຕິ, ການຕັດສິນໃຈເປັນໝູ່ຄະນະ | ບັນດາອົງການຈັດຕັ້ງອ່າງແມ່ ນ້ຳສາກົນ, ຄະນະກຳມະການ ການຄຸ້ມຄອງນ້ຳ |
| ດ້ານການຂະຫຍາຍຕົວ | ການພັດທະນາກິດຈະກຳໃໝ່ໆທາງສັງຄົມ | ຂໍ້ຕົກລົງກ່ຽວກັບຫຼັກການຕ່າງໆສຳລັບການຄຸ້ມຄອງນ້ຳ ເຊັ່ນ: ບໍ່ມີຜົນກະທົບຢ່າງຫຼວງຫຼາຍ |

ບັນດາສະຖາບັນ ທີ່ໄດ້ສ້າງຕັ້ງກອບນະໂຍບາຍອັນກວ້າງຂວາງເພື່ອການຮ່ວມມື, ໂດຍປົກກະຕິແລ້ວແມ່ນ ບໍ່ໄດ້ລົງເລິກເຖິງລາຍລະອຽດ. ມີຫຼາຍອົງການຈັດຕັ້ງ ອ່າງແມ່ນ້ຳສາກົນ ໄດ້ກຳນົດກອບນະໂຍບາຍແບບງ່າຍດາຍ ໂດຍຜ່ານການຕັດສິນໃຈ ຕໍ່ກັບບັນຫາຕ່າງໆ ທີ່ໄດ້ຕົກລົງກັນໃນຂັ້ນຕໍ່ມາ (ຂະບວນການໃນການສ້າງການຈັດຕັ້ງ). ສິ່ງອື່ນໆໄດ້ກຳນົດພຽງແຕ່ ຄວາມເຊື່ອຖືຂອງຂອງການຮ່ວມມືທີ່ຄາດຫວັງໄວ້ (ການກຳເນີດສະຖາບັນ). ໃນກໍລະນີດັ່ງກ່າວນີ້, ອົງການຈັດຕັ້ງທີ່ເປັນທາງການ ອາດຈະລວບລວບແນວຄວາມຄິດ ໂດຍຜ່ານການສ້າງຕັ້ງຂະບວນການຮ່ວມມື ແບບບໍ່ເປັນທາງການ ຫລາຍຂື້ນ ແລະ ສ້າງສະຖາບັນຕ່າງໆ.

ບາງຄົນອາດຄິດວ່າ ການກຳເນີດສະຖາບັນ, ສິ່ງດັ່ງກ່າວໄດ້ສະເໜີ ຫລັກເກນທົ່ວໄປ ຫລື ໃຫ້ເວທີ ສຳລັບການສື່ສານ, ບໍ່ມີຈຸດແຂງ. ເຖິງຢ່າງໃດກໍ່ຕາມ, ບັນດາອົງການຈັດຕັ້ງເຫຼົ່ານີ້ ກໍ່ຍັງສາມາດເປັນວິທີການ ສຳລັບປະເທດທີ່ລົງນາມ ເພື່ອການພົບປະ ແລະ ປຶກສາຫາລືບັນຫາຕ່າງໆຮ່ວມກັນ, ສົ່ງເສີມການແລກປ່ຽນຂໍ້ມູນຂ່າວສານ ລະຫວ່າງ ປະເທດທີ່ລົງນາມ, ໄປພ້ອມໆກັບການປະສານງານ ພັດທະນາຊັບພະຍາກອນແຫຼ່ງນ້ຳ ແລະ ການວາງແຜນຄຸ້ມຄອງ, ແລະ ນຳໃຊ້ເປັນເວທີ ເພື່ອຮັບປະກັນການຊ່ວຍເຫລືອ. ນອກນັ້ນ, ມັນຍັງສາມາດນຳໃຊ້ ເປັນເວທີ ເພື່ອສ້າງສ້າງຄວາມເຊື່ອຖື, ຄວາມໝັ້ນໃຈ ແລະ ຄວາມອາດສາມາດສຳລັບແກ້ໄຂບັນຫາຂໍ້ຂັດແຍ້ງ ລະຫວ່າງບັນດາປະເທດທີ່ໄດ້ໃຫ້ ສັດຕະຍາບັນ.

ສະຖາບັນ ຂ້າມຜ່ານຊາຍແດນທັງໝົດ ສາມາດມີບົດບາດທີ່ສຳຄັນ ໃນການເຕົ້າລວມເອົາບັນດາລັດຕ່າງໆໃນເຂດດັ່ງກ່າວ ທີ່ມີແນວຄວາມຄິດຫລາຍກວ່ານ້ຳ ສະຖາບັນດັ່ງກ່າວໄດ້ອອກແບບເພື່ອຄຸ້ມຄອງ. ຄວາມຈິງແລ້ວ, ປະຫວັດຄວາມເປັນມາ ຂອງຂໍ້ຕົກລົງນ້ຳຂ້າມຜ່ານຊາຍແດນ ໄດ້ຊີ້ແຈງໃຫ້ເຫັນບົດບາດດັ່ງກ່າວ ເພື່ອບັນລຸໄດ້ການຮ່ວມມືທາງດ້ານການເມືອງໃນຕໍ່ໜ້າ. ແມ້ກະທັ້ງຢູ່ໃນສອງຂົງເຂດທີ່ມີພູມສັນຖານທີ່ທ້າທາຍທີ່ສຸດໃນໂລກ, ເຂດຕາເວັນອອກກາງ ແລະ ອາຊີໃຕ້, ຊັບພະຍາກອນແຫຼ່ງນ້ຳ ໄດ້ປະກອບເປັນການຮ່ວມມືສາກົນທີ່ສຳຄັນ. ການແບ່ງປັນນ້ຳ ມີບົດບາດເປັນເຫດການສ່ວນໜຶ່ງທີ່ສຳຄັນ ໃນສົນທິສັນຍາສັນຕິພາບ ປີ 1994 ລະຫວ່າງປະເທດ ຈໍແດນ ແລະ ປະເທດ ອິດສະລາເອລ ລວມໄປເຖິງຂໍ້ຕົກລົງຊົ່ວຄາວ ລະຫວ່າງປະເທດ ປາເລສະຕາຍ ແລະ ປະເທດ ອິດສະລະເອລໃນປີ1995. ບັນດາອົງການຈັດຕັ້ງ ໄດ້ສ້າງຂຶ້ນເພື່ອແບ່ງປັນນ້ຳ ໃນເຂດອິນດາສ (Indus) ທ່າມກາງສະພາບ ຄວາມກົດດັນ ຂອງສົງຄາມ ລະຫວ່າງປະເທດ ປາກິດສຖານ ແລະ ອິນເດຍ. ກາລະໂອກາດ ໃນການນຳໃຊ້ນ້ຳ ບົນພື້ນຖານການຮ່ວມມືສາກົນ ແລະ ສັນຕິພາບ, ແທນທີ່ຈະເປັນຄວາມບໍ່ປອງດອງ ແລະ ຄວາມຂັດແຍ້ງ ເຊິ່ງເປັນສິ່ງທີ່ບໍ່ຄວນລືມ (ເບິ່ງກໍລະນີ 2.1).

ໂດຍຖືເອົາຜົນປະໂຫຍດ ຂອງທ່າແຮງດ້ານນ້ຳ ຮຽກຮ້ອງໃຫ້ສະຖາບັນການຈັດຕັ້ງກ່ຽວກັບນ້ຳ ຂ້າມຜ່ານຊາຍແດນຕ້ອງໄດ້ອອກແບບ ຢ່າງເໝາະສົມ ແລະ ມີລະບົບການຈັດຕັ້ງທີ່ເຮັດວຽກຢ່າງມີປະສິດທິຜົນ.

### *5.1.2 ການອອກແບບດ້ານສະຖາບັນການຈັດຕັ້ງ*

ມັນມີຄວາມຈຳເປັນຢ່າງຍິ່ງ ທີ່ຈະຕ້ອງເບິ່ງ ແບບຢ່າງ ຂອງສະຖາບັນການຈັດຕັ້ງຂ້າມຜ່ານຊາຍແດນ. ເຖິງຢ່າງໃດກໍຕາມ, ໂຄງຮ່າງການຈັດຕັ້ງຂອງແຕ່ລະສະຖາບັນ ມີຄ່າໃຊ້ຈ່າຍ ແລະ ຜົນປະໂຫຍດ. ແຕ່ລະອ່າງແມ່ນ້ຳມີລັກສະນະສະເພາະທາງດ້ານຊີວະກາຍະພາບ, ເສດຖະກິດ ສັງຄົມ ແລະ ດ້ານອຸທົກກະສາດ ທາງການເມືອງ ທີ່ມີຄວາມຕ້ອງການຂອງແຕ່ລະສະຖາບັນ. ຕົວຢ່າງ, ສະຖາບັນໜຶ່ງທີ່ໄດ້ສ້າງຂຶ້ນມາ ໂດຍຜ່ານຂະບວນການຕົກລົງທີ່ໄດ້ລະບຸຢ່າງຊັດເຈນກ່ຽວກັບ ບັນດາມາດຕະຖານຄຸນນະພາບນ້ຳທີ່ແທ້ຈິງ ທີ່ແຕ່ລະສະມາຊິກຂອງແຕ່ລະປະເທດ ສາມາດສະໜອງບັນດາພື້ນຖານທີ່ຈຳເປັນ ສຳລັບການຕິດຕາມກວດກາ ແລະ ການບັງຄັບໃຊ້ ປະຕິບັດຂໍ້ຕົກລົງຕ່າງໆ ລັກສະນະສະເພາະຂອງສະຖາບັນການຈັດຕັ້ງໃດນຶ່ງ ອາດຈະເຮັດໃຫ້ມັນມີຄວາມງ່າຍດາຍ ໃນການອອກແບບ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງ ແລະ ອາດຈະນຳໃຊ້ເປັນຫລັກການ ໃນການຮ່ວມມືໃນຕໍ່ໜ້າໃນຫຼາຍໆດ້ານຕື່ມອີກ. ເຖິງຢ່າງໃດກໍຕາມ, ຂໍ້ຕົກລົງນັ້ນ ອາດຈະມີຄວາມຫຍຸ້ງຍາກຕື່ມ ໃນການສັງລວມ ໃນເມື່ອການຕົກລົງຮ່ວມມືກັນ ຄວນຈະບົ່ງບອກ ໃນແຕ່ລະອົງປະກອບຢ່າງລະອຽດ. ການຮວບຮວມ ແລະ ສັງລວມ ຂໍ້ຕົກລົງໃດໜຶ່ງສະເພາະ ຍັງສາມາດເປັນຄວາມສ່ຽງສຳລັບແຕ່ລະປະເທດສະມາຊິກ, ເພາະວ່າມັນໄດ້ສ້າງພັນທະໃຫ້ແກ່ພວກເຂົາເຈົ້າ ໃນການຈັດຕັ້ງປະຕິບັດ ກິດຈະກຳຕ່າງໆສະເພາະ ໃນອະນາຄົດ ເມື່ອເຂົາເຈົ້າ ມີຄວາມຮັບຮູ້ ກ່ຽວກັບ ບັນດາເງື່ອນໄຂ ທາງດ້ານອຸທົກກະສາດ, ເສດຖະກິດ ແລະ ສິ່ງແວດລ້ອມ ແລະ ການຍອມຮັບ ເອົາບັນດາເງື່ອນໄຂຕ່າງໆເຊິ່ງ ຈະປ່ຽນໄປຈາກເດີມ.

*“ແຕ່ລະອ່າງແມ່ນ້ຳແມ່ນມີເອກະລັກ ແລະ ສະນັ້ນມີຄວາມຕ້ອງການດ້ານ ອົງການຈັດຕັ້ງຂອງ ມັນເອງ”*

ໃນອີກດ້ານໜຶ່ງ, ໂຄງສ້າງຂອງສະຖາບັນການຈັດຕັ້ງທີ່ມີໜ້ອຍ ທີ່ໄດ້ສ້າງຕັ້ງຂຶ້ນ ສຳລັບການຮ່ວມມື ຂ້າມຜ່ານຊາຍແດນ ອາດຈະມີຄວາມງ່າຍດາຍໃນການສັງລວມ, ເພາະວ່າ ການເຈລະຈາກ່ຽວກັບບັນຫາຕ່າງໆທີ່ຂັດແຍ່ງກັນ ກໍ່ອາດສາມາດມີການເລື່ອນໄດ້ ແລະ ລາຍລະອຽດຕ່າງໆ ຂອງການຄຸ້ມຄອງ ສາມາດດຳເນີນການ ແລະ ຈັດຕັ້ງປະຕິບັດໂດຍນັກຊ່ຽວຊານນອກຈາກພາກສ່ວນລັດຖະບານ ແລະ ການພິຈາລະນາທາງດ້ານການເມືອງ ຢ່າງຖີ່ຖ້ວນ. ສຳລັບຄວາມບໍ່ຈະແຈ້ງຂອງການຈັດຫາດັ່ງກ່າວ ຍັງສາມາດໃຫ້ທາງເລືອກທີ່ຈະປັບຕົວໄດ້ຫຼາຍຂຶ້ນ ໃນການຈັດຕັ້ງປະຕິບັດໃນເວລາທີ່ມີການປ່ຽນແປງເງື່ອນໄຂຕ່າງໆ. ເຖິງຢ່າງນັ້ນກໍ່ຕາມ, ຄວາມບໍ່ກະຈ່າງແຈ້ງ ຍັງເຮັດໃຫ້ແຕ່ລະພາກສ່ວນບໍ່ມີແນວທາງທີ່ຊັດເຈນ ສຳລັບການຈັດຕັ້ງປະຕິບັດ ຫຼື ວິທີທາງໃນການຮ່ວມມືເພື່ອບັນລຸເປົ້າໝາຍ. ດ້ວຍເຫດນັ້ນ, ສະຖາບັນການຈັດຕັ້ງ ອາດຈະບໍ່ມີຄວາມສາມາດໃນການຄຸ້ມຄອງ ບັນຫາທີ່ເກີດຂຶ້ນຕົວຈິງໃນເມື່ອບັນຫາໃໝ່ໆເກີດຂຶ້ນ, ໂດຍ ສະເພາະສິ່ງເຫຼົ່ານັ້ນ ຮຽກຮ້ອງໃຫ້ມີ ການປະຕິບັດຢ່າງຮີບດ່ວນ ແລະ ທັນການ.

ໃນທີ່ສຸດ, ສະຖາບັນການຈັດຕັ້ງ ໄດ້ຂຶ້ນກັບເນື້ອໃນສະເພາະຂອງ ອ່າງແມ່ນ້ຳ ກັບສິ່ງທ້າທາຍ ແລະ ໂອກາດ ທີ່ກຳນົດ ຮູບແບບທາງການຈັດຕັ້ງທີ່ເໝາະສົມທີ່ສຸດ. ເພາະສະນັ້ນແລ້ວ, ປະສົບການຂອງຜູ້ທີ່ຈັດຕັ້ງປະຕິບັດ ແລະ ນັກຄົ້ນຄວ້າທັງຫຼາຍ ໄດ້ນຳໄປສູ່ຄວາມເປັນເອກະພາບກັນໃນອົງປະກອບໃດນຶ່ງທີ່ແນ່ນອນ ທີ່ຄວນພິຈາລະນາ ຢູ່ໃນການອອກແບບ ຂອງສະຖາບັນ ຈັດຕັ້ງຂ້າມຜ່ານຊາຍແດນໃດໜຶ່ງ.

*“ອົງປະກອບທີ່ແນ່ນອນຄວນພິຈາລະນາເຂົ້າໃນການອອກແບບທຸກໆສະຖາບັນອ່າງແມ່ນ້ຳຂ້າມຊາຍແດນ”*

*ການກຳນົດຂອບເຂດຂອງການຮ່ວມມື*

ຂັ້ນຕອນທຳອິດແມ່ນຈະຕ້ອງກຳນົດຂອບເຂດຂອງການຮ່ວມມື. ໃນບາງຄັ້ງ, ຕ້ອງມີຄວາມຊັດເຈນ ເຖິງວິທີທາງການຮ່ວມມື ເພື່ອສາມາດແກ້ໄຂບັນຫາໃຫ້ໄດ້ຜົນປະໂຫຍດແກ່ທຸກໆລັດ ໃນການນຳໃຊ້ນ້ຳສາຍດຽວຮ່ວມກັນ (ເບິ່ງໝວດທີ2). ເຖິງຢ່າງໃດກໍຕາມ, ໜຶ່ງໃນບັນດາສິ່ງທ້າທາຍທີ່ສຸດ ຂອງການສ້າງຕັ້ງສະຖາບັນ ລະດັບອ່າງແມ່ນ້ຳ ແມ່ນໄດ້ພົບເຫັນ ຄວາມແຕກຕ່າງທາງດ້ານ ພູມີປະເທດ, ເສດຖະກິດ ແລະ ອຳນາດທາງດ້ານການເມືອງ ລະຫວ່າງ ບັນດາປະເທດທີ່ຢູ່ແຄມແມ່ນ້ຳ. ຕາມປົກກະຕິແລ້ວ, ບັນດາປະເທດທີ່ຢູ່ຕອນເທິງແມ່ນ້ຳ ແມ່ນມີແນວຄວາມຄິດເພື່ອເປັນເຈົ້າການໃນທາງອຸທົກກະສາດ ກວ່າປະເທດໃກ້ຄຽງຢູ່ຕອນລຸ່ມ ແລະ ສະນັ້ນ ເຂົາເຈົ້າຈຶ່ງມີບົດບາດໜ້ອຍໃນການເຈລະຈາ, ເຖິງແມ່ນວ່າ ຂໍ້ຕົກລົງອາດຕ້ອງປັບປຸງໃນເງື່ອນໄຂທົ່ວອ່າງແມ່ນ້ຳ. ເຖິງຢ່າງໃດກໍຕາມ, ປະສົບການໄດ້ແຈ້ງໃຫ້ເຫັນວ່າ ບັນດາ ສິ່ງທ້າທາຍ ແລະ ຄວາມແຕກຕ່າງ ສາມາດຄຸ້ມຄອງໄດ້ ເພື່ອເປັນກຳລັງແຮງສຳລັບການຮ່ວມມື.

ຕົວຢ່າງ, ບັນຫາຕ່າງໆຂອງຂອງແມ່ນ້ຳຕອນເໜືອ /ຕອນໃຕ້ ສາມາດແກ້ໄຂໄດ້ ໂດຍທີ່ວ່າ ບັນດາປະເທດທີ່ຢູ່ແຄມແມ່ນ້ຳຕອນລຸ່ມ ເສຍຄ່າຊົດເຊີຍໃຫ້ແກ່ບັນດາປະເທດ ທີ່ຢູ່ຕອນເທິງສຳລັບກິດຈະກຳໃດນຶ່ງ. ໃນບາງກໍລະນີ ທີ່ມີຄວາມຈຳເປັນ ໂດຍສະເພາະແມ່ນໃນສົນທິສັນຍາພື້ນທີ່ສູງ ເຂດເລໂຊໂຕ ໃນປີ 1986, ປະເທດ ອາຟຣິກກາໃຕ້ ໄດ້ເຫັນດີ ທີ່ຈະຊ່ວຍເຫຼືອ ດ້ານການເງິນໃຫ້ແກ່ ການກໍ່ສ້າງຄອງຊົນລະປະທານ ແລະ ການຜະລິດພະລັງງານໄຟຟ້ານ້ຳຕົກຢູ່ເຂດເທິງຂອງຂົງເຂດ ເລໂຊໂຕ. ຕໍ່ກັບການແລກປ່ຽນການຊ່ວຍເຫຼືອນັ້ນ, ປະເທດ ເອຟຣິກກາໃຕ້ ໄດ້ຮັບປະກັນໃນການສະໜອງນ້ຳໃຊ້, ໃນຂະນະທີ່ ປະເທດ ເລໂຊໂຕ ໄດ້ຮັບຜົນປະໂຫຍດ ຈາກການຜະລິດພະລັງງານ. ໃນຂະນະດຽວກັນນັ້ນ, ມັນຍັງມີບັນຫາທາງດ້ານການເມືອງຢ່າງໃຫ່ຍຫຼວງ ທີ່ພົວພັນກັບຂໍ້ຕົກລົງດັ່ງກ່າວ, ມັນເປັນຕົວຢ່າງໜຶ່ງທີ່ ສະແດງ ໃຫ້ເຫັນເຖິງຄວາມເປັນໄປໄດ້ ໃນຫຼາຍໆດ້ານທີ່ອາດຈະເກີດຂຶ້ນ. ໃນເມື່ອປະເທດທັງສອງແມ່ນປະເທດທີ່ຍາກ,

ການໃຊ້ຈ່າຍຕ່າງໆ ບາງຄັ້ງ ແມ່ນໄດ້ຮັບການຊ່ວຍເຫຼືອໂດຍ ປະເທດທີສາມ ຫຼື (ຜູ້ໃຫ້ທຶນ), ດັ່ງນັ້ນ, ມັນຈຶ່ງເປັນທັງຜົນດີ ແລະ ຜົນເສຍ ຕໍ່ກັບຍຸດທະສາດ ດັ່ງກ່າວນີ້ ດັ່ງທີ່ຈະໄດ້ສະເໜີພາຍຫຼັງ.

ອີກວິທີທາງໜຶ່ງ, ໃນການກຳນົດຂອບເຂດຂອງການຮ່ວມມືແມ່ນ ຂະຫຍາຍເວທີການເຈລະຈາ ໃນຫຼາຍໆອ່າງແມ່ນ້ຳຮ່ວມກັນ. ປະເທດສະຫະລັດອາເມລິກາ ແລະ ປະເທດເມັກຊີໂກ ໄດ້ປະຕິບັດວິທີການດັ່ງກ່າວນີ້ ເພື່ອຊອກຫາວິທີທາງຮ່ວມມືກັນທີ່ເປັນເອກະພາຍກັນ ໃນການຄຸ້ມຄອງສາມອ່າງແມ່ນ້ຳເຊັ່ນ ອ່າງແມ່ນ້ຳ ໂຄໂລຣາໂດ, ອ່າງແມ່ ນ້ຳຣີໂອ ບຣາໂວ/ຣີໂອ ແກຣນ ແລະ ອ່າງແມ່ນ້ຳ ຕີຈົວນາ. ໃນລັກສະນະຄຸ້ມຄອງແບບນີ້, ການເຈລະຈາ ສາມາດເຮັດໃຫ້ເບິ່ງເຫັນໄດ້ບັນຫາທີ່ກ້ວາງຂວາງໃນການແກ້ໄຂບັນຫາດ້ານນ້ຳ. ຜົນປະໂຫຍດຈາກນ້ຳລວມທັງຜົນຜະລິດທາງກະສິກຳ, ການເດີນເຮືອ, ພະລັງງານໄຟຟ້ານ້ຳຕົກ ແລະ ການຄວບຄຸມໄພນ້ຳຖ້ວມ. ເມື່ອກ້າວໄປເຖິງປະລິມານນ້ຳມັນໄດ້ສະໜອງ ວິທີ ທາງໃໝ່ໆ ໃຫ້ແຕ່ລະພາກສ່ວນ ໃນການຊອກຫາທາງອອກດ້ານການເຈລະຈາ ທີ່ໄດ້ຮັບຜົນສຳເລັດດັ່ງທີ່ສະແດງໃຫ້ເຫັນໃນໝວດທີ່ 2.

ນ້ຳແມ່ນເປັນບັນຫາທີ່ເປັນເອກະລັກໜຶ່ງດຽວ ທີ່ກ່ຽວຂ້ອງລະຫວ່າງບັນດາປະເທດໃກ້ຄຽງກັນ. ຂອບເຂດຂອງການຮ່ວມມືດ້ານນ້ຳ ສາມາດກຳນົດຂອບເຂດໄດ້ກວ້າງຂວາງໂດຍການ ນຳເອົາບັນຫາຮ່ວມມືດ້ານນ້ຳເຂົ້າເປັນໜຶ່ງ ໃນຫົວຂໍ້ການເຈລະຈາລະດັບຂ້າມຜ່ານຊາຍແດນເຊັ່ນ ການຄ້າ, ການຄົມມະນາຄົມ, ການຕິດຕໍ່ສື່ສານ ແລະ ບັນຫາ ທາງດ້ານການເມືອງ. ຍົກຕົວຢ່າງ ປະເທດອິນເດຍ ແລະ ປະເທດເນປານ ໄດ້ຮ່ວມກຸ່ມໂຄງການຕ່າງໆຮ່ວມກັນ ເຂົ້າໃນສອງສົນທິສັນຍາໃນປີ 1959 ແລະ 1966 ເຊັ່ນ: ດ້ານຊົນລະປະທານ, ພະລັງງານໄຟຟ້ານ້ຳຕົກ, ການເດີນເຮືອ, ການປະມົງ ແລະ ການຟື້ນຟູປ່າ. ການເສີມສ້າງຄວາມເຊື່ອມໂຍງແບບຫຼາກຫຼາຍ ບໍ່ພຽງແຕ່ຈັດຫາທາງເລືອກທີ່ສາມາດເລືອກໄດ້ຫຼາຍແບບເທົ່ານັ້ນ, ແຕ່ຍັງຫຼຸດຜ່ອນຄວາມຕ້ອງການທີ່ສັບຊ້ອນກັນອີກດ້ວຍ, ເຊິ່ງອາດຈະສົ່ງຜົນໃຫ້ມີປະສິດທິພາບ ຫຼາຍຂຶ້ນ ແລະ ການແບ່ງປັນຊັບພະຍາກອນທີ່ສົມເຫດສົມຜົນ ທັງດ້ານການເງິນ ແລະ ຊັບພະຍາກອນທຳມະຊາດ. ການຂະຫຍາຍ ຂອບເຂດຂອງການເຈລະຈາ ນອກຈາກບັນຫານ້ຳແລ້ວ, ມັນຍັງສາມາດເພີ່ມສິ່ງດຶງດູດໃຈເພື່ອຮ່ວມມື ແລະ ລວມທັງຊ່ວງເວລາ ດຳເນີນງານຂອງອົງການຈັດຕັ້ງທີ່ໝັ້ນຄົງແລະຍືນຍົງ,ພາກສ່ວນຕ່າງໆອາດຈະໄດ້ຮັບຜົນປະໂຫຍດ ໂດຍການຮ່ວມມືກັນ ແລະ ຜົນເສຍຖ້າພວກເຂົາໄດ້ຮັບຜົນກະທົບ. ເຖິງຢ່າງນັ້ນກໍ່ຕາມ, ຜົນທີ່ບໍ່ຄາດຫວັງທີ່ຕາມມາ ແມ່ນ ຈະມີພາກສ່ວນທີ່ຈະມີສ່ວນໄດ້ສ່ວນເສຍ ແລະ ບັນຫາຕ່າງໆເພີ່ມຂຶ້ນ, ຄວາມຫຍຸ້ງຍາກໃນການຊອກຫາຂໍ້ຈຸດດີ ແລະ ຜົນໄດ້ຮັບແມ່ນ ເພີ່ມຂຶ້ນເຊັ່ນດຽວກັນ.

*"ເງື່ອນໄຂຄວາມຕ້ອງການພື້ນຖານສ້າງຜົນປະໂຫຍດຫຼາຍກ່ວາການນຳເຂົ້າຈາກພາຍນອກ"*

*ການເຄື່ອນຍ້າຍຈາກສິດທິໄປສູ່ຄວາມຕ້ອງການ ແລະ ເພື່ອຜົນປະໂຫຍດ.*

ເຖິງແມ່ນວ່າຫຼັງຈາກຂອບເຂດຂອງການຮ່ວມມືໄດ້ຖືກກຳນົດຂຶ້ນແລ້ວ, ຫຼາຍໆການເຈລະຈາ ໄດ້ກາຍເປັນສິ່ງທີ່ບໍ່ມີອຳນາດ ເປັນຮອບການຈັດວາງທີ່ບໍ່ມີຄວາມບໍ່ເປັນເອກະພາບ ແລະ ມີຂໍ້ຂັດແຍ່ງກັນ. ໂດຍທົ່ວໄປ,ພາກສ່ວນຕ່າງໆແມ່ນໄດ້ກຳນົດວຽກງານໃນເບື້ອງຕົ້ນ ໂດຍສະເພາະແມ່ນສິດທິ ແມ່ນມີຄວາມໝາຍເຖິງປະເທດ ສະມາຊິກໃດໜຶ່ງ ແມ່ນມີສິດທິໄດ້ຮັບໃນການແບ່ງປັນນ້ຳ ໂດຍພື້ນຖານ ໃນລະດັບທີ່ແນ່ນອນທັງໃນຮູບແບບການນຳໃຊ້ທາງ ດ້ານອຸທົກວິທະຍາ. ແຕ່ຂໍ້ຕົກລົງຕ່າງໆທີ່ສະໜັບສະໜູນໃຫ້ ອົງການຈັດຕັ້ງທີ່ປະສົບຜົນສຳເລັດນັ້ນ, ຕົວຢ່າງທີ່ນຳໃຊ້ເຂົ້າໃນການເຈລະຈາແມ່ນອີງຕາມຄວາມຕ້ອງການພື້ນຖານ "ຫຼາຍກ່ວາສິດທິພື້ນຖານ". ຄວາມຕ້ອງການສາມາດບົ່ງບອກໄດ້ໂດຍສະເພາະແມ່ນພື້ນທີ່ຊົນລະປະທານ, ປະຊາກອນ ຫຼື ຄວາມຕ້ອງການ ສຳລັບໂຄງການສະເພາະໃດໜຶ່ງ. ຕາຕະລາງ 5.2 ໄດ້ສະແດງໃຫ້ເຫັນຕົວຢ່າງ ຂອງເງື່ອນໄຂຄວາມຕ້ອງການພື້ນຖານ ເຊິ່ງນຳມາໃຊ້ເປັນຕົວແບບການຈັດຕັ້ງປະຕິບັດ. ເງື່ອນໄຂ

ເຫຼົ່ານັ້ນພິຈະລະນາເຖິງການສົນທະນາປຶກສາຫາລືກັນ ລະຫວ່າງ ປະເທດສະມາຊິກເຊິ່ງໂດຍປົກກະຕິແມ່ນ ສ້າງຜົນປະໂຫຍດຫຼາຍກ່ວາການນຳເອົາແນວທາງຈາກພາຍນອກມາຕັດສິນ, ເຖິງຢ່າງນັ້ນກໍ່ຕາມ, ບັນດາພາກສ່ວນຮ່ວມມື ທີສາມ ໄດ້ມີພາລະບົດບາດທີ່ສຳຄັນໃນການສະເໜີບັນດາຮູບແບບທີ່ເປັນກາງ ລວມທັງເຕັກໂນໂລຊີ ເພື່ອຊ່ວຍໃນການກຳນົດ ຄວາມຕ້ອງການ.

*ຕາຕະລາງ5.2 ຕົວຢ່າງຂອງເງື່ອນໄຂຄວາມຕ້ອງການພື້ນຖານສຳລັບສົນທິສັນຍາກ່ຽວກັບການ ແບ່ງປັນ*

.

| ສົນທິສັນຍາ | ເງື່ອນໄຂຂອງການຈັດຮັບ |
|---|---|
| ສົນທິສັນຍາຈອນສຕັນJohnston ( 1956 ປະເທດຈໍແດນ ) | ປະລິມານຂອງພື້ນທີ່ຊົນລະປະທານ ພາຍໃນຂອບເຂດອ່າງແມ່ນ້ຳ ໃນແຕ່ລະລັດ |
| ປະເທດອິນເດຍ/ປະເທດ ປາກິດສະຖານ(1960, ອິນດັດສ) | ການນຳໃຊ້ແບບດັ້ງເດີມ (ປະຫັວດສາດ) ແລະ ມີການວາງແຜນແລ້ວ (ສຳລັບປະເທດ ປາກິດສະຖານ) ພ້ອມທັງການຈັດສັນນ້ຳທາງພູມສາດ (ແມ່ນ້ຳຕາເວັນຕົກ ກົງກັບ ຕາເວັນອອກ) |
| ປະເທດອາຟຼິກາໃຕ້ (ພາກຕາເວັນຕົກສຽງໃຕ້ ຂອງອາຟຼິກາ) / ປະເທດປອກຕຸຍການ( ປະເທດ ແອັງໂກລາ ( 1969,ກູນີນ) | ການແບ່ງປັນສຳລັບຄວາມຕ້ອງການຂອງມະນຸດ ແລະ ສັດ ແລະ ລະບົບຊົນລະປະທານ ເບື້ອງຕົ້ນ |
| ຂໍ້ຕົກລົງພາຍໃນລະຫ່ວາງປະເທດ ອິດສະລະເອລ ແລະ ປາເລສະຕາຍ (1995, ຮ່ວມກັນໃຊ້ຊັ້ນໃຫ້ນ້ຳ ໃຕ້ດິນ) | ຄວາມຕ້ອງການດ້ານຊົນລະປະທານ ແລະ ຮູບ ແບບຜົນລະເມືອງ. |

ເມື່ອກ້າວໄປອີກຂັ້ນຕອນໜຶ່ງ, ວິທີການນຳໃຊ້ຜົນປະໂຫຍດຮ່ວມກັນ ໃນການເຈລະຈາ (ໝວດທີ2) ໄດ້ປ່ຽນສິດໃນເມື່ອກ່ອນ ແລະ ຄວາມຕ້ອງການທັງໝົດ, ແລະ ຍັງໄດ້ສຸມໃສ່ການມີຜົນປະໂຫຍດໂດລວບລວມຫຼາຍຂຶ້ນ. ວິທີການນີ້ໄດ້ຮຽກຮ້ອງໃຫ້ບັນດາປະເທດ ທີ່ຢູ່ແຄມແມ່ນ້ຳຕ້ອງບໍ່ພຽງແຕ່ ສຸ່ມໃສນ້ຳເຊິ່ງອາດຈະເປັນປະໂຫຍດທີ່ຈະຖືກ ແບ່ງປັນ ແລະຈັດສັດສ່ວນເທົ່ານັ້ນ -a zero- sum game- ແຕ່ຄວນຈະເບິ່ງການມີສ່ວນຮ່ວມຂອງຜົນປະໂຫຍດທີ່ອາດ ເປັນໄປໄດ້ ເຊິ່ງສາມາດສ້າງໄດ້ ໂດຍການນຳໃຊ້ນ້ຳຮ່ວມກັນ ຂອງເຂົາເຈົ້າ-ເຊິ່ງເປັນວິທີທາງບວກ ແລະ ປະສົມປະສານ.

ເຖິງແມ່ນວ່າ ມີຕົວຢ່າງເລັກນ້ອຍເທົ່ານັ້ນໃນປັດຈຸບັນນີ້, ແຕ່ເຮົາກັບມາເບິ່ງບັນດາຂໍ້ຕົກລົງທາງດ້ານຜົນປະໂຫຍດ ພື້ນຖານໃນອະດີດເຮັດໃຫ້ເຮົາຮູ້ຢ່າງເລິກເຊິ່ງກ່ຽວກັບວິທີການ ເຊິ່ງສາມາດຈັດແບ່ງໄດ້ຢ່າງເປັນລະບົບ. ຍົກຕົວຢ່າງ ຂໍ້ຕົກລົງແມ່ນ້ຳໂຄລຳເບຍ 1964 ລະຫວ່າງປະເທດສະຫະລັດອາເມລິກາ ແລະ ປະເທດການາດາ ໄດ້ແບ່ງປັນນ້ຳ

ໂດຍ ໄດ້ຮັບຜົນປະໂຫຍດເທົ່າທຽມກັນ, ດັ່ງທີ່ສະແດງອອກຢູ່ໃນ ການຜະລິດ/ພັດທະນາກະແສໄຟຟ້ານ້ຳຕົກ ແລະ ການຄວບຄຸມໄພນ້ຳຖ້ວມ. ໃນການນຳເອົາແນວຄວາມຄິດໃນການແບ່ງປັນຜົນປະໂຫຍດມາໃຊ້ໃນອີກວິທີໜຶ່ງ, ໃນສັນຍາແມ່ນ້ຳຂອງ ປີ 1975 ໄດ້ລະບຸກ່ຽວກັບ " ສິດທິຄວາມເທົ່າທຽມກັນ" ມັນບໍ່ແມ່ນການແບ່ງປັນນ້ຳທີ່ເທົ່າທຽມກັນ, ແຕ່ເປັນສິດທີໃນການນຳໃຊ້ນ້ຳເທົ່າທຽມກັນບົນພື້ນຖານ ຄວາມຕ້ອງການທາງດ້ານເສດຖະກິດ ແລະ ສັງຄົມຂອງແຕ່ລະປະເທດ ເລາະລຽບຕາມລຳນ້ຳ. ຄວາມສຳພັນຂອງການນຳໃຊ້ຜົນປະໂຫຍດຈາກທຳມະຊາດ ແມ່ນໄດ້ລະບຸຢູ່ ສັນຍາໄນກາຣາ ໃນປີ 1950 ລະຫວ່າງປະເທດ ສະຫະລັດອາເມລິກາ ແລະ ປະເທດການາດາ, ເຊິ່ງໄດ້ສະໜອງປະລິມານການໄຫຼຂອງນ້ຳ ຜ່ານລົງສູ່ນ້ຳ ຕົກຕາດທີ່ມີຊື່ສຽງໂດ່ງດັງທີ່ສຸດໃນໂລກ ໃນຊ່ວງເວລາກາງເວັນຂອງລະດູຮ້ອນ ເມື່ອລາຍໄດ້ຈາກ ການທ່ອງທ່ຽວຕໍ່ປະລິມານນ້ຳ 1 ແມັດກ້ອນຫຼາຍກວ່າການນຳໃຊ້ໃນຮູບແບບອື່ນ ໂດຍສະເພາະການຜະລິດພະລັງງານໄຟຟ້ານ້ຳຕົກ.

ບ່ອນທີ່ການເຈລະຈາຄວນຈະເລີ່ມຕົ້ນ ແລະ ຢຸດຕິລົງໃນດ້ານສິດທິໄປສູ່ຄວາມຕ້ອງການ ແລະ ຜົນປະໂຫຍດຢ່າງຕໍ່ເນື່ອງ ນັ້ນມັນຂື້ນກັບເງື່ອນໄຂສະເພາະຂອງແຕ່ລະອ່າງແມ່ນ້ຳ.

*ການຮັກສາຄວາມສອດຄ່ອງກັນ*

ຄັ້ງໜຶ່ງທີ່ເຊັນສັນຍາກັນ, ບັນດາຂໍ້ຕົກລົງທີ່ເປັນທາງການ ນອກເໜືອຈາກອົງການຈັດຕັ້ງຂ້າມຜ່ານຊາຍແດນ ແມ່ນມີຄວາມຫຍຸ້ງຍາກທີ່ຈະເສີມຂະຫຍາຍອອກ. ເພາະສະນັ້ນ, ບັນດາປະເທດຕ່າງໆຕ້ອງໄດ້ເອົາໃຈໃສ່ໃນການອອກແບບ ອົງການຈັດຕັ້ງເຊິ່ງຈະເປັນໂອກາດ ອັນດີທີ່ຈະຮັບມືກັບການປ່ຽນແປງທີ່ບໍ່ຄາດຫວັງເຊັ່ນ: ດ້ານຂໍ້ມູນຂ່າວສານ, ເງື່ອນໄຂຕ່າງໆ ແລະ ບູລິມະສິດເຊິ່ງອາດຈະເກີດຂື້ນໄດ້ ຕະຫຼອດເວລາຢ່າງຫຼີກລ້ຽງບໍ່ໄດ້. ສິ່ງທ້າທາຍນີ້ສາມາດ ຜ່ານພົ້ນໄປໄດ້ ໂດຍການສ້າງອົງການຈັດຕັ້ງທີ່ມີຄວາມສອດຄ່ອງ ກັບສະພາບຕົວຈິງເຊິ່ງເປັນຂະບວນການໜຶ່ງທີ່ຮັບຮູ້ວ່າເປັນການຄຸ້ມຄອງ ແບບດັດປັບໄດ້.

ການແບ່ງປັນນ້ຳບໍ່ແມ່ນບັນຫາທີ່ໃຫ່ຍທີ່ສຸດໃນການຮ່ວມມືຂ້າມຜ່ານຊາຍແດນສະເໜີໄປ. ເຖິງຢ່າງໃດກໍ່ດີ, ມັນກໍ່ແມ່ນຈຸດໃຈກາງຂອງ ການເກີດຄວາມຂັດແຍ່ງຂອງຊັບພະຍາກອນນ້ຳ ຂ້າມຜ່ານຊາຍແດນ ແລະ ດ້ວຍເຫດນັ້ນ ບ່ອນທີ່ມີການພິຈະລານາເຖິງຄວາມສອດຄ່ອງກັນ ຈຶ່ງເປັນບັນຫາສຳຄັນທີ່ສຸດ. ນອກຈາກນີ້, ການແບ່ງປັນຍັງຂື້ນກັບຄວາມບໍ່ໝັ້ນຄົງຂອງປະລິມານນ້ຳໃນອະນາຄົດອີກດ້ວຍ. ສະຖານະການເບິ່ງຄືວ່າ ຈະມີການເຊື່ອມໂຊມລົງໂດຍການປ່ຽນແປງດິນຟ້າອາກາດ.

ຄ່າໃຊ້ຈ່າຍໃນ ການອອກແບບກົນໄກຂອງອົງການຈັດຕັ້ງທີ່ດັດປັບໄດ້ ທີ່ບໍ່ປະສົບຜົນສຳເລັດ ແມ່ນໄດ້ສະແດງໃຫ້ເຫັນ ໃນກໍລະນີຂອງຂໍ້ຕົກລົງ ລະຫວ່າງປະເທດອິດສະລາເອລ ແລະ ປະເທດຈໍແດນ ໃນປີ 1994, ເຊິ່ງບໍ່ໄດ້ພິຈະລະນາເຖິງ ຜົນກະທົບຂອງໄພແຫ້ງແລ້ງ. ດ້ວຍເຫດນັ້ນ, ສັນຕິພາບລະຫວ່າງສອງປະເທດຕົກຢູ່ໃນທ່າສ່ຽງ ເຊິ່ງໄດ້ເກີດມີໄພແຫ້ງແລ້ງຄັ້ງຮ້າຍແຮງທີ່ສຸດໃນປະຫວັດສາດໃນປີ 1999. ໃນຂະນະດຽວກັນນີ້, ເຖິງແມ່ນວ່າ ຂໍ້ຕົກລົງລະຫວ່າງສະຫະລັດອາເມລິກາ ແລະ ປະເທດແມັກຊິກໂກ ໃນປີ 1994 ໄດ້ສັງລວມເອົາ ຂໍ້ກຳນົດ ສຳລັບການ ໄຫຼຂອງນ້ຳລະດັບຕໍ່າ, ແຕ່ມັນຍັງບໍ່ທັນສອດຄ່ອງ ພໍທີ່ຈະຮັບມືກັນ ກັບສະພາບການໄຫຼຂອງນ້ຳໃນລະດັບຕ່ຳສຸດ ທີ່ໄດ້ເກີດຂື້ນ. ຜົນຕາມມາ ຂໍ້ຕົກລົງ ຍັງເປັນສາເຫດຂອງຄວາມເຄັ່ງຕຶງພາຍໃນຂອງສອງປະເທດ ດັ່ງກ່າວ.

*" ການປ່ຽນແປງທີ່ບໍ່ໄດ້ຄາດຫວັງ ດ້ານຂໍ້ມູນຂ່າວສານ, ເງື່ອນໄຂຕ່າງໆ ແລະ ບູລິມະສິດ ທີ່ອາດເກີດຂື້ນໄດ້ຕະຫຼອດເວລາ"*

ສະຖາບັນຄຸ້ມຄອງອ່າງແມ່ນໍ້າ ສາມາດແກ້ໄຂບັນຫາການປ່ຽນແປງຂອງລະບົບ ອຸທົກກະສາດ ຢູ່ໃນສາມວິທີທາງດ້ວຍກັນ. ວິທີທໍາອິດ ແມ່ນກົນໄກຕ່າງໆ ສາມາດສ້າງຂຶ້ນພາຍໃນຂໍ້ຕົກລົງເຊິ່ງເລງໃສ່ການແບ່ງປັນນໍ້າ, ຍົກຕົວຢ່າງ : ການກໍານົດເປີເຊັນ ຂອງອັດຕາການໄຫຼຂອງນໍ້າແທນທີ່ຈະເບິ່ງດ້ານປະລິມານນໍ້າທີ່ຈໍາກັດ. ວິທີທີສອງ, ບັນດາຂໍ້ຕົກລົງແມ່ນສາມາດສ້າງຂຶ້ນ ໂດຍທຸກພາກສ່ວນໄດ້ມີທາງເລືອກ ໃນວິທີການທີ່ເຂົາເຈົ້ານໍາໃຊ້ ນໍ້າທີ່ແບ່ງປັນສັດສ່ວນທີ່ຊັດເຈນ. ຕົວຢ່າງ: ຂໍ້ຕົກລົງ ຈອນສຕັນ Johnston ທີ່ບໍ່ເປັນທາງການ ລະຫວ່າງປະເທດຈໍແດນ ແລະ ປະເທດ ອິດສະລາເອລໃນປີ 1956 ໄດ້ພິຈາລະນາການແບ່ງປັນນໍ້າ ສໍາລັບການກະສິກໍາ ທີ່ໃຊ້ລະບົບຊົນລະປະທານ ພາຍໃນອ່າງແມ່ນໍ້າຈໍແດນ. ເຖິງ ຢ່າງນັ້ນກໍ່ຕາມ, ປະເທດອິດສະລາເອລ ໄດ້ນໍາໃຊ້ສ່ວນໃຫຍ່ຂອງນໍ້າທີ່ເຂົາເຈົ້າໄດ້ຮັບ ໃນທາງທີ່ແຕກຕ່າງກັນ. ນອກຈາກນັ້ນ, ປະເທດຈໍແດນ ແລະ ອິດສະລາເອລ ຍັງສືບຕໍ່ຍຶດໝັ້ນແນວທາງການແບ່ງປັນນໍ້າ ຂອງຈອນສຕັນ Johnston ໃນຂະນະທີ່ມີການປ່ຽນແປງຢ່າງຫລວງຫລາຍ ຕໍ່ຕົວຊີ້ບອກທີ່ກ່ຽວຂ້ອງກັບນໍ້າພາຍໃນອ່າງແມ່ນໍ້າ ຕະຫຼອດເວລາ 50 ປີ.

ວິທີທາງສຸດທ້າຍ, ສະຖາບັນການຈັດຕັ້ງ ສາມາດອອກແບບເພື່ອຄຸ້ມຄອງຮ່ວມກັນການປ່ຽນແປງຂອງເງື່ອນໄຂຕ່າງໆ. ຕົວຢ່າງ, ສົນທິສັນຍາແມ່ນໍ້າ ການຈີ (GANGES) ຈັດສັນນໍ້າ ໃຫ້ປະເທດອິນເດຍ ແລະ ປະເທດ ບັງກາລະເທດອີງຕາມເວລາທີ່ປ່ຽນແປງ, ຂຶ້ນກັບເງື່ອນໄຂ ທາງອຸທົກກະສາດທີ່ມີຢູ່ໃນແຕ່ລະປີ, ຄະນະກໍາມະການຄຸ້ມຄອງຮ່ວມ ດ້ານການນໍ້າໃຊ້ລະບົບສາຍນໍ້າຮ່ວມກັນ ລະຫວ່າງປະເທດ ສະຫະລັດ ອາເມລິກາ ແລະ ການາດາ, ແລະ ລະຫວ່າງ ປະເທດສະຫະລັດອາເມລິກາ ແລະ ປະເທດແມັກຊີໂກ ອະນຸຍາດໃຫ້ດັດແປງແກ້ໄຂຢ່າງເປັນທາງການ ເຊິ່ງໄດ້ຖືກມານໍາໃຊ້ເພື່ອນໍາເອົາປະເດັນຕ່າງໆ ເຊັ່ນ: ຄຸນນະພາບນໍ້າ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງນໍ້າໃຕ້ດິນ ເຊິ່ງກາຍ ເປັນບັນຫາບູລິມະສິດ ຕະຫຼອດມາ.

ການອອກແບບ ສະຖາບັນການຈັດຕັ້ງ ທີ່ມີໂຄງສ້າງການຄຸ້ມຄອງຮ່ວມ ສາມາດຂະຫຍາຍອອກໄປສູ່ປະເທດ ທີ່ບໍ່ທັນໄດ້ເຂົ້າຮ່ວມລົງສັນຍາ ໂດຍການລວບລວມເອົາ ຂໍ້ກໍານົດຕ່າງໆທີ່ສະໜອງຕໍ່ ຄວາມຕ້ອງການຂອງເຂົາເຈົ້າ, ສິດ, ການມີສ່ວນຮ່ວມ ແລະ ທ່າແຮງໃນການເຂົ້າເຖິງຊັບພະຍາກອນ. ນອກນີ້ ຍັງມີຫຼາກຫຼາຍວິທີທາງທີ່ເປັນໄປໄດ້ ເພື່ອບັນລຸຜົນສໍາເລັດນີ້. ສົນທິສັນຍາແມ່ນໍ້າ ນາຍ Nile ປີ 1959 ລະຫວ່າງ ປະເທດ ອີຢິບ ແລະ ຊູດານ, ໄດ້ເປັນຕົວຢ່າງໜຶ່ງທີ່ໃຫ້ໂອກາດໃນການກໍານົດຄວາມຕ້ອງການ ຂອງບັນດາປະເທດລຽບຕາມແຄມນໍ້າ ໃນອະນາຄົດ. ໂດຍການພົວພັນກັບສົນທິສັນຍາ ຣາຍRhine ປີ 1999, ບໍ່ແມ່ນໝົດທຸກປະເທດຢູ່ໃນອ່າງແມ່ນໍ້າ ໄດ້ເປັນສະມາຊິກພາຄີ, ຄະນະກໍາມະການປະສານງານ ໄດ້ຖືກແຕ່ງຕັ້ງຂຶ້ນເພື່ອຮັບປະກັນວ່າ ປະເທດທີ່ບໍ່ເປັນສະມາຊິກພາຄີໃນອ່າງແມ່ນໍ້າ ດັ່ງອອດສະຕຼຍ, ແບນຢຽມ, ລິສແຕສເຕນ ແລະ ອີຕາລີ ໄດ້ເຂົ້າຮ່ວມ ໃນການຈັດຕັ້ງປະຕິບັດ ກອບນະໂຍບາຍນໍ້າ ຂອງສະຫະພາບ ຢູໂຣບ ເຊິ່ງເປັນສ່ວນໜຶ່ງຂອງ ພາລະບົດບາດຂອງ ກອງເລຂາສົນທິສັນຍາ ຣາຍ.

*ການແລກປ່ຽນຂໍ້ມູນ ແລະ ການບໍາລຸງຮັກສາ ຕິດຕໍ່ສື່ສານແບບເປີດ.*

ບັນດາຮູບແບບການຄຸ້ມຄອງນໍ້າໄດ້ກາຍເປັນສິ່ງທີ່ສະຫຼັບສັບຊ້ອນຂຶ້ນກ່ວາເກົ່າ, ຂໍ້ມູນຈຶ່ງ ເປັນປັດໃຈໜຶ່ງທີ່ ສໍາຄັນທີ່ສຸດ. ຂໍ້ມູນຂ່າວສານສາມາດນໍາມາໃຊ້ເປັນບັນຫາຫຼັກເຂົ້າໃນການເຈລະຈາ ແລະ ການແລກປ່ຽນຂໍ້ມູນສາມາດ ນໍາໄປສູ່ການພັດທະນາດ້ານການເຈລະຈາ. ຍົກຕົວຢ່າງ: ການສຶກສາດ້ານ ວິສະວະກໍາ ໄດ້ເຮັດໃຫ້ຫຼີກລຽງຍຸດຕິໃນ ການເຈລະຈາ ຂອງສົນທິສັນຍາ ຈອນສ໌ຕັນJohnston ເມື່ອໄດ້ມີການຄົ້ນຄ້ວາພົບວ່າຄວາມຕ້ອງການນໍ້າຂອງປະເທດ ຈໍແດນແມ່ນມະຫາສານຫຼາຍກ່ວາທີ່ຄາດການໄວ້, ຈຶ່ງເຮັດໃຫ້ມີຊ່ອງວ່າງໃນການຕໍ່ລອງກັນເກີດຂຶ້ນ. ໃນທາງກົງກັນຂ້າມ, ການ

ຂາດເງື່ອນໄຂຂອງການຕົກລົງກັນສຳລັບຂໍ້ມູນ ທີ່ໃຊ້ໃນການເຈລະຈາຢູ່ເຂດແມ່ນ້ຳການຈີສ Ganges ໄດ້ຢຸດສະງັກຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດເປັນເວລາຫຼາຍໆປີ.

*"ຮູບແບບຂອງການຄຸ້ມຄອງນ້ຳໄດ້ກາຍເປັນສິ່ງທີ່ສະຫຼັບສັບຊ້ອນ, ໃນຂະນະທີ່ຂໍ້ມູນໄດ້ກາຍເປັນປັດໃຈທີ່ສຳຄັນທີ່ສຸດ"*

ວິທີການໜຶ່ງທີ່ໜ້າສົນໃຈ ໃນການເອົາຊະນະຄວາມແຕກຕ່າງຂອງເງື່ອນໄຂການວັດແທກ ແລະ ວິທີການຕ່າງໆ ແມ່ນໄດ້ສະໜອງໃຫ້ໂດຍການສ້າງຕັ້ງຄະນະກຳມາທິການສາກົນ ສຳລັບອຸທົກກະສາດຂອງ ແມ່ນ້ຳຣາຍ໌ Rhine. ໃນຄະນະກຳມາທິການດັ່ງກ່າວ, ແມ່ນມີ 6 ອ່າງແມ່ນ້ຳຂອງ ປະເທດສະມາຊິກ, ບັນດາສະຖາບັນຄົ້ນຄ້ວາວິທະຍາສາດ ຂອງແຕ່ລະອ່າງແມ່ນ້ຳໃນປະເທດ ດັ່ງກ່າວຮ່ວມມືກັນໃນການພັດທະນາ ຕົວແບບຈຳລອງດ້ານອຸທົກວິທະຍາ ແລະ ມາດຕະການວັດແທກທາງອຸທົກວິທະຍາ ເພື່ອພັດທະນາອ່າງແມ່ນ້ຳ ຣາຍ໌ ແບບຍືນຍົງ. ຄະນະກຳມາທິການສາກົນ ສຳລັບການປົກປັກຮັກສາແມ່ນ້ຳ ຣາຍ໌ (ICPR) ໄດ້ເຊັນສັນຍາ ລະຫວ່າງຄະນະກຳມາທິການ ແລະ ສະຖາບັນຄົ້ນຄ້ວາ ໃນການເຮັດຄົ້ນຄ້ວາ ແລະ ເລຂາທິການໃຫ່ຍຂອງ ຄະນະກຳມາທິການສຳລັບປົກປັກຮັກສາແມ່ນ້ຳ ຣາຍ໌ ກໍ່ໄດ້ເຂົ້າຮ່ວມ ກອງປະຊຸມຂອງຄະນະ ກຳມາທິການເປັນປະຈຳ.

ບັນຫາຂໍ້ມູນໃນເມື່ອມີການຄຸ້ມຄອງຢ່າງມີປະສິດທິຜົນແລ້ວ ມັນຈະສາມາດສະໜອງຂອບເຂດໜ້າວຽກໃນການພັດທະນາຮູບແບບຂອງການຮ່ວມມືໃນປະຈຸບັນຫຼາຍກ່ວາການເກີດບັນຫາໂຕ້ຖຽງກັນ. ຍົກຕົວຢ່າງເຊັ່ນ: ການລວບລວມຂໍ້ມູນສາມາດເຮັດໃຫ້ພາກສ່ວນທີ່ສາມາດ ເກີດຄວາມເຊື່ອໝັ້ນ ຫຼື ອາດຈະດີກ່ວາ, ເຊິ່ງຄະນະກຳມາທິການຮ່ວມກວດກາປະເມີນຜົນຕົວຈິງ ໄດ້ມີບັນດາຜູ້ຕາງໜ້າຈາກບັນດາປະເທດສະມາຊິກອ່າງແມ່ນ້ຳເຂົ້າຮ່ວມ. ບາງເທື່ອ, ຕົວຢ່າງທີ່ດີທີ່ສຸດອາດຈະແມ່ນແຜນການ 5 ປີທຳອິດ ຂອງຄະນະກຳມາທິການແມ່ນ້ຳຂອງ ເຊິ່ງປະກອບມີໂຄງການເກັບກຳ ລວບລວມຂໍ້ມູນທັງໝົດ, ການປ້ອງກັນບັນຫາຂັດແຍ່ງດ້ານຂໍ້ມູນໃນອະນາຄົດ ທີ່ມີປະສິດທິພາບ ແລະ ການໃຫ້ໂອກາດແກ່ບັນດາປະເທດສະມາຊິກ ໃນການພັດທະນາການ ຮ່ວມມື ແລະ ສ້າງຄວາມເຊື່ອໝັ້ນ.

ເຖິງແມ່ນວ່າ ການແລກປ່ຽນຂໍ້ມູນຈະເປັນເລື່ອງທີ່ຫຍຸ້ງຍາກ, ແຕ່ຄວາມຈິງແລ້ວມັນແມ່ນບາດກ້າວໜຶ່ງໃນການກຳນົດຂອບເຂດອັນກ້ວາງຂວາງຂອງການຕິດຕໍ່ສື່ສານ ເຊິ່ງຄວນຈະເປັນເປົ້າໝາຍທີ່ຍາກບັນລຸໃນທີ່ສຸດ. ການພັດທະນາຊ່ອງທາງທີ່ເປັນທາງການ ແລະ ບໍ່ເປັນທາງການເພື່ອແລກປ່ຽນຂໍ້ມູນຂ່າວສານ, ຄວາມຄິດເຫັນ ແລະ ທັດສະນະ ລະຫວ່າງປະເທດສະມາຊິກ ສາມາດຊ່ວຍປ້ອງກັນບໍ່ໃຫ້ເກີດບັນຫາຄວາມຂັດແຍ່ງ ກ່ອນທີ່ມັນຈະເກີດຂຶ້ນ ແລະ ສາມາດອຳນວຍ ຄືກັນກັບເວທີສຳລັບການແກ້ໄຂບັນຫາທີ່ຂັດແຍ່ງກັນໄດ້. ການພັດທະນາຊ່ອງທາງດັ່ງກ່າວ ໂດຍຜ່ານການຈັດຕັ້ງອົງການຄຸ້ມຄອງຮ່ວມຍັງສາມາດ ກຳຈັດ ຄວາມຕ້ອງການຕໍ່ກົດລະບຽບການຈັດແບ່ງໃຫ້ ເປັນລະບົບ ໃນການແລກປ່ຽນຊັບພະຍາກອນໃນປະຈຸບັນ ແລະ ຄວາມບໍ່ແນ່ນອນຂອງຊັບພະຍາກອນໃນອະນາຄົດ, ໂດຍເຮັດໃຫ້ຫຼຸດຜ່ອນຄ່າຊື້ນເປືອງຕ່າງໆ ໃນການສ້າງຂໍ້ຕົກລົງ ແລະ ສິ່ງຕ່າງໆທີ່ຈະໄດ້ພິຈາລະນາ ລະອຽດໃນຂໍ້ຕົກລົງຕ່າງໆນັ້ນ.

ຍົກຕົວຢ່າງ ຄະນະທີມງານດ້ານຊັບພະຍາກອນນ້ຳຂອງປະເທດ ອິດສລາເອລ-ອາຣັບ, ຜົນໄດ້ ຮັບແບບຫຼາຍຝ່າຍໃນການເຈລະຈາເພື່ອສັນຕິພາບໃນປີ 1991 ແມ່ນບໍ່ປະສົບຜົນສຳເລັດໃນການພັດທະນາ ຖານຂໍ້ມູນແບບດຽວ ເກີດຄວາມສົງໃສກັນໃນປະເທດບັນດາປະເທດສະມາຊິກ ແລະ ບັນດາຂໍ້ມູນທີ່ອາດ ມີຄວາມອ່ອນໄຫວທາງດ້ານ ການເມືອງ. ເຖິງຢ່າງນີ້ກໍ່ຕາມ, ບັນດາປະເທດສະມາຊິກໄດ້ເຫັນດີໃນການສ້າງສູນຂໍ້ມູນອິດສະຫຼະ, ເຊິ່ງເປັນບ່ອນທີ່ຂໍ້ມູນ ຈະໄດ້ຮັບການ ລວບລວມໄວ້ໂດຍມີຮູບແບບທີ່ຄືກັນ, ເຊິ່ງມີຄວາມມຸ້ງຫວັງໃຫ້ສາມາດລວມລວມເຂົ້າກັນໃຫ້ຫຼາຍຂຶ້ນໃນອະນາຄົດ.

ດັ່ງນັ້ນ, ເຖິງແມ່ນວ່າຈະມີຄວາມຫຍຸ້ງຍາກໃນການສ້າງຕັ້ງ, ແຜນການຄຸ້ມຄອງເພື່ອການປັບຕົວ ແລະ ກວດຄືນອີກ ຈຶ່ງສາມາດພັດທະນາຂື້ນ ເພື່ອປັບໃຫ້ເຂົ້າກັນ ຫຼື ເປັນແນວທາງ ລວມທັງການມີສ່ວນຮ່ວມກັນທາງດ້ານ ການເມືອງ.

*ການກຳນົດບັນດາກົນໄກການແກ້ໄຂບັນຫາຂໍ້ຂັດແຍ່ງ*

ເຖິງແມ່ນວ່າອົງການຈັດຕັ້ງແມ່ນ ໄດ້ຮັບການອອກແບບຂື້ນແລ້ວກໍ່ຕາມ,ແຕ່ມັນຈະເກີດມີການບໍ່ມີ ຄວາມເປັນເອກະພາບກັນໃນດ້ານການບໍລິຫານງານ ແລະ ການຊີ້ແຈງບັນຫາຕ່າງໆ. ເພາະສະນັ້ນແລ້ວ, ສິ່ງສຸດທ້າຍ ໃນການອອກແບບອົງການຈັດຕັ້ງນັ້ນແມ່ນ ການສ້າງກົນໄກການແກ້ໄຂບັນຫາຂໍ້ຂັດແຍ່ງທີ່ເປັນເອກະພາບກັນ. ເຄື່ອງມື ແລະ ເຕັກນິກຫຼາກຫຼາຍຢ່າງແມ່ນ ສາມາດນຳມາໃຊ້ແກ້ໄຂບັນຫາຂໍ້ຂັດແຍ່ງດັ່ງກ່າວ ແລະ ບັນດາຂໍ້ຕົກລົງດ້ານບັນຫານ້ຳຂ້າມຜ່ານຊາຍແດນ ທີ່ມີຢູ່ຍັງສາມາດ ເປັນຕົວແທນທີ່ສຳຄັນອີກດ້ວຍ.

ຂໍ້ຂັດແຍ່ງສາມາດອ້າງອີງເຖິງ ບັນດາຄະນະກຳມະການເຝົ້າລະວັງ ທີ່ໄດ້ຮັບການສ້າງຕັ້ງຂື້ນລ່ວງໜ້າ. ເປັນອົງການທີ່ມີການຕັດສິນບັນຫາ ແລະ ບັງຄັບໃຊ້. ຫຼາຍໆຕົວຢ່າງແມ່ນ ສະແດງອອກເປັນຕົ້ນແມ່ນຄະນະກຳມາທິການ ຮ່ວມລະດັບສາກົນ ແລະ ຄະນະກຳມາທິການນ້ຳ ແລະ ເຂດຊາຍແດນສາກົນສຳລັບການຮ່ວມກັນນຳໃຊ້ນ້ຳ ລະຫວ່າງປະເທດສະຫະລັດອາເມລິກາ ແລະ ປະເທດແມັກຊິໂກ ຕາມລຳດັບ. ອີກວິທີທາງໜຶ່ງ, ຄະນະກຳມາທິການ ລະດັບພາກພື້ນ ແລະສາກົນເປັນຕົ້ນແມ່ນ ອົງການສະຫະປະຊາຊາດ ແລະ ສະມາຄົມພັດທະນາອາຟຼິກາໃຕ້ ແມ່ນສາມາດສ້າງຕັ້ງຂື້ນເຊິ່ງເປັນຄະນະກຳມະການໄກ່ເກ່ຍ ຖ້າມີບັນຫາຕ່າງໆທີ່ບໍ່ສາມາດແກ້ໄຂໂດຍບັນດາປະເທດສະມາຊິກເອງ. (ເບິ່ງກໍລະນີ 4.1)

ນອກຈາກນັ້ນແລ້ວ, ບັນດາປະເທດສະມາຊິກບໍ່ຄວນມອງຂ້າມຮູບແບບຂອງການເຈລະຈາແກ້ໄຂບັນຫາຂໍ້ຂັດແຍ່ງ ທີ່ເປັນເອກະລັກສະເພາະທ້ອງຖິ່ນ ເຊິ່ງມີຄວາມພ້ຽບພ້ອມທີ່ຈະສາມາດນຳມາໃຊ້ໂດຍຕາມເງື່ອນໄຂຂອງ ແຕ່ລະປະເທດ ຫຼື ຊຸມຊົນທີ່ຢູ່ໃນລະດັບອ່າງແມ່ນ້ຳ. ບັນຫາສຳຄັນ ອີກປະການໜຶ່ງບໍ່ແມ່ນວິທີການທີ່ຖືກເລືອກເທົ່ານັ້ນ, ແຕ່ມັນຍັງຕ້ອງແມ່ນ ວິທີການທີ່ຖືກກຳນົດໄດ້ຢ່າງຈະແຈ້ງ ກ່ອນໜ້າທີ່ ບັນຫາຕ່າງໆທີ່ຈະເກີດຂື້ນ.

### *5.1.3 ຄວາມມີປະສິດທິພາບຂອງອົງການຈັດຕັ້ງ*

ນອກຈາກບັນຫາ ການສ້າງອົງກອນການຈັດຕັ້ງຂ້າມຜ່ານຊາຍແດນທີ່ມີປະສິດທິພາບແລ້ວ, ຄວາມມີປະສິດທິພາບທີ່ແທ້ຈິງ ຂອງແຕ່ລະອົງກອນນັ້ນ ຈະຂື້ນກັບຄວາມຫຼາກຫຼາຍຂອງການມີສ່ວນຮ່ວມຂອງທ້ອງຖິ່ນ ແລະ ສະພາບແວດລ້ອມຂອງພາກພື້ນ. ນອກຈາກນັ້ນແລ້ວ, ໃນການສ້າງອົງການຈັດຕັ້ງອ່າງໂຕ່ງ ຫຼື ການປັບປຸງອົງການຈັດຕັ້ງທີ່ມີຢູ່ແລ້ວໃຫ້ມີປະສິດທິພາບຕື່ມນັ້ນ, ທຸກພາກສ່ວນທີ່ໄດ້ເຂົ້າຮ່ວມຄວນພິຈາລະນາວ່າ ເຂົາໃຫ້ຄວາມຫມາຍຄືແນວໃດ ຄຳວ່າ: “ປະສິດທິພາບ” ເຖິງແມ່ນວ່າ ໃນຄວາມເປັນຈິງແລ້ວອົງກອນນັ້ນ ມີຄວາມພ້ຽບພ້ອມທາງດ້ານການເງິນ ແລະ ການເມືອງ ໃຫ້ການສະຫນັບສະຫນູນຢູ່ກໍຕາມ.

ໂດຍທົ່ວໄປແລ້ວ, ມັນມີ 2 ວິທີທີ່ຈະກ້າວໄປສູ່ຄວາມມີປະສິດທິພາບຄື: ໂດຍຜ່ານການຍິນຍອມ ແລະ ໂດຍຜ່ານການບັນລຸເປົ້າໝາຍ. ການຍິນຍອມກັນ ໝາຍເຖິງການຍຶດໝັ້ນໃນການປະຕິບັດພັນທະທີ່ໄດ້ຕົກລົງກັນ, ເປັນຕົ້ນແມ່ນການບຳລຸງຮັກສາ ມາດຕະຖານຄຸນນະພາບນ້ຳ, ການປ່ອຍນ້ຳອອກຈາກເຂື່ອນ, ຫຼື ການຈ່າຍທີ່ເໝາະສົມ ໃຫ້ກັບອົງກອນຄຸ້ມຄອງອ່າງໂຕ່ງ. ການຍິນຍອມກັນກັບການຕົກລົງຮ່ວມມືກັນເຊິ່ງ ແນ່ນອນແລ້ວແມ່ນຈະຕ້ອງມີຄວາມຍິນດີ ແລະ ພໍໃຈຂອງແຕ່ລະຝ່າຍ, ແຕ່ສິ່ງສຳຄັນທີ່ຄວນຈຳໄວ້ວ່າ ການຍິນຍອມກັບຂໍ້ຕົກລົງອັນຫນຶ່ງ ນັ້ນແມ່ນບໍ່ຄືກັນກັບການ ມີອົງການຈັດຕັ້ງທີ່ບັນລຸເປົ້າໝາຍຂອງມັນ. ອົງກອນຈັດຕັ້ງຂ້າມຊາຍແດນແມ່ນຖືກສ້າງຕັ້ງຂື້ນ ເພື່ອບັນລຸບັນດາເປົ້າໝາຍທີ່ເຫັນດີຮ່ວມກັນ. ດັ່ງທີ່ໄດ້ກ່າວມາກ່ອນໜ້ານີ້, ບັນດາເປົ້າໝາຍເຫຼົ່ານີ້ອາດຈະສະເພາະເຈາະຈົງ ເປັນຕົ້ນ

ແມ່ນການແລກປ່ຽນ ຂໍ້ມູນການໄຫຼຂອງນ້ຳ ໂດຍມີຫົວໜ່ວຍ ແລະ ຮູບແບບທີ່ຕົກລົງເຫັນດີກັນແລ້ວ ຫຼື ການກຳນົດແບບລວມໆເຊັ່ນ: ການສົ່ງເສີມການພັດທະນາອ່າງໂຕ່ງ ຫຼື ການຮ່ວມມືກັນປົກປັກຮັກສາສິ່ງແວດລ້ອມ.

*"ການຍິນຍອມເຮັດຕາມໂດຍການຕົກລົງກັນນັ້ນບໍ່ຄືກັນກັບການທີ່ສະຖາບັນຕ່າງໆມີເປົ້າໝາຍເປັນຂອງມັນເອງ"*

ມັນມີຄວາມເປັນໄປໄດ້ສຳລັບທຸກໆພາກສ່ວນໃຫ້ ມີການຍິນຍອມໂດຍຜ່ານການຕົກລົງເຫັນດີກັນ, ແຕ່ມັນຍັງອາດເປັນຜົນສະທ້ອນ ໃຫ້ອົງການຈັດຕັ້ງລົ້ມເຫຼວໃນການບັນລຸເປົ້າໝາຍຂອງມັນ. ໃນທາງກັບກັນ ມັນຍັງເປັນໄປໄດ້ ສຳລັບ ບັນດາເປົ້າໝາຍລວມຂອງອົງກອນທີ່ຈະບັນລຸ ແມ້ວ່າຈະບໍ່ມີການຍິນຍອມ ກັບພັນທະເຈາະຈົງໃດໜຶ່ງ.

ໃນທາງປະຕິບັດການວັດແທກ ຄວາມມີປະສິດທິພາບແມ່ນມີຄວາມຫຍຸ້ງຍາກ. ເຖິງຢ່າງນັ້ນກໍ່ຕາມ, ບາດກ້າວທຳອິດແມ່ນ ທຸກພາກສ່ວນຈະຕ້ອງມີຄວາມເຂົ້າໃຈສິ່ງທີ່ພວກເຂົາໃຫ້ຄວາມໝາຍຂອງຄຳວ່າ ປະສິດທິພາບ, ຄວາມມີປະສິດທິພາບສາມາດປະເມີນໄດ້ແນວໃດ? ແລະ ການຈັດຕັ້ງຂອງເຂົາເຈົ້າ ແມ່ນສາມາດປັບຕົວຄືແນວໃດ ໃນເມື່ອເຂົາເຈົ້າບໍ່ມີປະສິດທິພາບ ຄືກັນກັບແຜນທີ່ໄດ້ວາງໄວ້ ຫຼື ຖ້າເປົ້າໝາຍ ມີການປ່ຽນແປງໄປ.[25]

## *5.2 ການພັດທະນາອົງການຈັດຕັ້ງຄຸ້ມຄອງອ່າງແມ່ນ້ຳຂ້າມຜ່ານຊາຍແດນ*

### *5.2.1 ພາລະກິດໃນການເຈລະຈາ, ພາລະບົດບາດ ແລະ ເປົ້າໝາຍ*

ການກຳນົດທີ່ສຳຄັນ ທຳມະຊາດ ຂອງອົງກອນຈັດຕັ້ງຄຸ້ມຄອງນ້ຳ ແມ່ນການເຂົ້າຮ່ວມຂອງປະຊາຊົນ ໃນການສ້າງຕັ້ງອົງກອນຂຶ້ນ (ເບິ່ງໝວດທີ 3). ບັນດາຄຳຖາມ ກ່ຽວກັບການເຂົ້າຮ່ວມ ແລະ ອົງການຄຸ້ມຄອງໃນພື້ນທີ່ຊຸມຊົນ ທີ່ອຸດົມສົມບູນໃນອາຟຼິກາເໜືອແມ່ນມີຂຶ້ນ ຄືກັບຄຳຖາມທີ່ມີໃນລະດັບສາກົນ. ໃຜເປັນຜູ້ຕັດສິນໃຈບັນຫາອັນໃດ ຈະຖືກແກ້ໄຂ? ມີບັນດາປັດໃຈນຳເຂົ້າ ໜ້ອຍ-ຫລາຍປານໃດ ທີ່ມວນຊົນຄວນຈະມີ ແລະ ຢູ່ໃນລະດັບໃດ? ບັນຫາຂໍ້ແກ້ໄຂຂອງຊຸມຊົນທ້ອງຖິ່ນທີ່ໄດ້ພັດທະນາຂຶ້ນໃນຫຼາຍໆສັດຕະວັດ ເພື່ອຕອບບັນດາຄຳຖາມດັ່ງກ່າວນີ້ແມ່ນໄດ້ມີ ການທົບທວນຄືນເພີ່ມຂຶ້ນ ແລະ ມັນເປັນຕົວຢ່າງທີ່ມີຄຸນຄ່າໃນການເຈລະຈາສາກົນກ່ຽວກັບນ້ຳ.

ກ່ຽວຂ້ອງກັບ ຄຸນຄ່າທີ່ເປັນທ່າແຮງຂອງບັນດາປະເພນີທ້ອງຖິ່ນ ໃນການກຳນົດບັນດາຮູບແບບການ ມີສ່ວນຮ່ວມແມ່ນເປັນແນວຄວາມຄິດຂອງຜູ້ເຂົ້າຮ່ວມສຳຮອງ, ເຊິ່ງນຳສະເໜີໄວ້ວ່າ ການຄຸ້ມຄອງທີ່ມີປະສິດທິພາບທີ່ສຸດຄວນຈະແມ່ນການເຂົ້າມາກ່ຽວຂ້ອງໜ້ອຍທີ່ສຸດຂອງຄົນພາຍນອກ. ແຕ່ໃນທາງປະຕິບັດ, ເຮັດແນວໃດ ຫຼັກການຕ່າງໆ ຈະຖືກນຳມາໃຊ້ໄດ້? ລະບົບຄຸ້ມຄອງແຕ່ເທິງລົງລຸ່ມ? ລະບົບຄຸ້ມຄອງ ແຕ່ລຸ່ມຂຶ້ນເທິງ? ຫຼື ບາງຢ່າງທີ່ຢູ່ລະຫວ່າງກາງ?

ວິທີການເຂົ້າຮ່ວມຂອງມວນຊົນແມ່ນເຫັນວ່າມີແນວໂນ້ມເພີ່ມຂຶ້ນຄືມີຄວາມໂປ່ງໃສຫຼາຍຂຶ້ນກວ່າ ການເຈລະຈາທີ່ເອົານັກຊ່ຽວຊານເປັນໃຈກາງ. ເຖິງຢ່າງໃດກໍ່ຕາມຊຸມຊົນ, ບັນດາປະເທດຕ່າງໆ ແມ່ນມີຄວາມສົນໃຈທີ່ບໍ່ຄືກັນ. ຍົກຕົວຢ່າງ: ບັນດາຜູ້ມີສ່ວນຮ່ວມນຳໃຊ້ນ້ຳປະກອບມີ: ຜູ້ນຳໃຊ້ນ້ຳລະດັບຄົວເຮືອນ, ຄວາມສົນໃຈດ້ານສິ່ງແວດລ້ອມ, ຊາວກະສິກຳ, ຜູ້ພັດທະນາໄຟຟ້ານ້ຳຕົກ, ການປະມົງ ແລະ ນັກທ່ອງທ່ຽວອາດເປັນໄປໄດ້ທີ່ສອງປັດໃຈຂອງ ສິ່ງທີ່ກ່າວມານັ້ນແມ່ນປົກກະຕິແລ້ວຈະມີຄວາມບໍ່ເຫັນດີກັນຫຼືຂັດແຍ່ງກັນ. ຄວາມສະຫຼັບສັບຊ້ອນຂອງຄວາມສົນໃຈທີ່ຫຼາກຫຼາຍ ແລະ ບັນດາ ຜູ້ມີສ່ວນຮ່ວມທີ່ຫຼາຍຂຶ້ນພາຍໃນໜຶ່ງປະເທດ ເຊິ່ງອາດເກີດມີຄວາມສົນໃຈທີ່ຫຼາກຫຼາຍ ໃນບັນດາປະເທດໃກ້ຄຽງ ແລະ ມີຄວາມຫຍຸ້ງຍາກໃນການຕັດສິນໃຈວ່າຜູ້ໃດ ຄວນຈະມີການເຂົ້າຮ່ວມໃນການເຈລະຈາໃຫ້ມີ ຄວາມຈະແຈ້ງ.

ວິທີການຕ່າງໆໃນການແກ້ໄຂຄວາມສະຫຼັບສັບຊ້ອນ ຂອງວຽກງານການມີສ່ວນໃນການຄຸ້ມຄອງ ນ້ຳຂ້າມຜ່ານຊາຍແດນແມ່ນໄດ້ອະທິບາຍໃນໝວດທີ 3. ການນຳໃຊ້ ວິທີການຕ່າງໆເຫຼົ່ານີ້ ແມ່ນສາມາດອະນຸຍາດ ສຳລັບບັນດາ ຜູ້ທີ່ມີ ສ່ວນຮ່ວມເຂົ້າຮ່ວມຢູ່ໃນກອບໜ້າວຽກຂອງການຄຸ້ມຄອງຕາມລະດັບຂັ້ນ. ຍົກຕົວຢ່າງ: ພາຍໃນສະຫະພາບເອີຣົບ, ເຊິ່ງໂດຍທົ່ວໄປແລ້ວແມ່ນ ຍຶດໝັ້ນຕໍ່ສົນທິສັນຍາອາຣັດສ໌(Arhus)1998ວ່າດ້ວຍການເຂົ້າເຖິງຂ່າວສານ, ການເຂົ້າຮ່ວມຂອງ ມວນຊົນໃນການຕັດສິນບັນຫາ ແລະ ການເຂົ້າເຖິງຄວາມຍຸດຕິທຳ ກ່ຽວກັບ ບັນຫາຄຸ້ມຄອງສິ່ງແວດລ້ອມ, ອີງກອນເຊັ່ນວ່າ: ຄະນະກຳມາທິການແຜນງານສິ່ງແວດລ້ອມສຳລັບແມ່ນນ້ຳດານນຸບໄດ້ສະແດງບົດບາດຄືກັນກັບຄະນະກຳມະການອ່າງໂຕາງນ້ຳສາກົນເຊິ່ງການ ປຸກລະດົມການເຂົ້າຮ່ວມຂອງມວນຊົນ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບ ລັດຖະບານ (NGO) ໂດຍຜ່ານຂະບວນການວາງແຜນທຸກລະດັບ.

ຄ້າຍຄືກັນນີ້, ຄະນະກຳມາທິການຮ່ວມສາກົນ (IJC) ລະຫວ່າງປະເທດ ສະຫະລັດອາເມລິກາ ແລະ ປະເທດການາດາ ກໍ່ໄດ້ສ້າງຕັ້ງຂື້ນ ໂດຍສົນທິສັນຍາວ່າດ້ວຍ ນ້ຳຂ້າມຜ່ານຊາຍແດນໃນປີ 1909, ຊຶ່ງໄດ້ເຊື້ອເຊີນເອົາມວນຊົນເຂົ້າຮ່ວມໃນຫຼາຍໆ ບັນຫາຂອງການຄຸ້ມຄອງ ແລະ ການຕິດຕາມກວດກາ ການນຳໃຊ້ນ້ຳຮ່ວມກັນຂອງປະເທດ ທັງສອງ. ການເຂົ້າຮ່ວມຂອງບັນດາຜູ້ມີສ່ວນຮ່ວມທັງໝົດນີ້ ອາດຈະຊ່ວຍປ້ອງກັນຄວາມຂັດແຍ່ງ ໃນອະນາຄົດພາຍໃນສອງປະເທດ ແລະ ອາດຈະເປັນຜົນໄປ ເຖິງບັນຫາລະດັບສາກົນ.

ໃນທາງກົງກັນຂ້າມ, ໃນປະເທດອາຟຼິກກາໃຕ້ ເຊິ່ງບ່ອນທີ່ການເຂົ້າຮ່ວມດັ່ງກ່າວບໍ່ໄດ້ກຳນົດໄວ້ໂດຍ ກົດໝາຍ, ບັນດາຊຸມຊົນໃນອ່າງແມ່ນ້ຳ ໄດ້ພັດທະນາແຜນງານຕ່າງໆຂື້ນເຊັ່ນ: ແຕ່ລະສາຍນ້ຳ ແມ່ນມີຄົນທີ່ ນຳໃຊ້ມັນເຂົ້າຮ່ວມ, ເຊິ່ງຕັ້ງເປົ້າໝາຍທີ່ຈະສົ່ງເສີມການຄຸ້ມຄອງ ຊັບພະຍາກອນທຳມະຊາດຂອງແມ່ນ້ຳ ໂອກາວານໂກ (Okavango River) ແບບຍືນຍົງໂດຍການມີການເຂົ້າຮ່ວມ ຂອງຊຸມຊົນທ້ອງຖິ່ນ ແລະ ຕໍ່ ມາໄດ້ມີການພັດທະນາ ກົນໄກຕ່າງໆ ເພື່ອສົ່ງເສີມ ແລະ ອຳນວຍຄວາມສະດວກ ໃນການເຂົ້າຮ່ວມລະ ຫວ່າງຊຸມຊົນ ແລະ ຜູ້ມີສ່ວນຮ່ວມອື່ນໆ ໃນລະດັບທ້ອງຖິ່ນ, ພາກພື້ນ ແລະ ລະດັບຊາດ.

ໃນກໍລະນີທີ່ເປັນທາງການຫຼາຍກ່ວານີ້, ຄະນະກຳມະການຄຸ້ມຄອງອ່າງໂຕ່ງແມ່ນ້ຳນິນ (Nile Basin) ໄດ້ຮວບຮວມເອົາບັນດາຄວາມຕ້ອງການຂອງລັດພາຄີ ເຊັ່ນ: ກະຊວງ ແລະ ອຸດສະຫະກຳ, ກະຊວງແຜນການ ແລະ ການເງິນ, ກະຊວງສິ່ງແວດລ້ອມ, ກະຊວງການຕ່າງປະເທດ ແລະ ກະຊວງກະສິກຳ ທີ່ກ່ຽວຂ້ອງກັບນ້ຳ, ອີງຕາມປະເພດຂອງແຕ່ລະໂຄງການ. ຄະນະກຳມະການຄຸ້ມຄອງອ່າງໂຕ່ງແມ່ນ້ຳນິນ ແມ່ນຍັງ ລວມເອົາໂຄງການການ ມີສ່ວນຮ່ວມ ຂອງບັນດາຜູ້ມີສ່ວນໄດ້ສ່ວນເສຍ ແລະ ການສ້າງຄວາມໝັ້ນໃຈ ດ້ວຍການນຳເອົາທັດສະນະຂອງອົງການຈັດຕັ້ງ ທີ່ບໍ່ຂື້ນກັບລັດຖະບານ ແລະ ອົງ ການສັງຄົມສົງເຄາະຕ່າງໆ ເຂົ້າໃນການກຳນົດວິໄສທັດຂອງອ່າງໂຕ່ງ.ອົງການບໍລິຫານອ່າງໂຕ່ງແມ່ນ້ຳນິນ ແມ່ນຂະຫຍາຍໄປສູ່ ການມີສ່ວນຮ່ວມນັບແຕ່ນັ້ນມາ (ເບິ່ງກໍລະນີ 3.1).

ຕົວຈິງແລ້ວ, ບັນດາຜູ້ຕາງໜ້າຂອງແຕ່ລະກຸ່ມທີ່ສົນໃຈທັງຫມົດຄວນຈະມີບ່ອນນັ່ງຢູ່ໃນໂຕະເຈລະຈາ. ເຖິງຢ່າງນັ້ນກໍ່ຕາມ, ວິທີການດັ່ງກ່າວນີ້ໂດຍລວມແລ້ວແມ່ນບໍ່ສາມາດເຮັດໄດ້ ຍ້ອນຄວາມ ສະຫຼັບສັບຊ້ອນຂອງມັນ. ຊຸມຊົນສາມາດມີບົດບາດທີ່ສຳຄັນ ໃນການກຳນົດບັນຫາທີ່ມີຢູ່ທັງກ່ອນໜ້າ ແລະ ບັນຫາທີ່ອາດຈະມີ ພາຍຫຼັງ ອົງການ ຈັດຕັ້ງຖືກສ້າງຕັ້ງຂື້ນ, ທັງໂດຍທາງກົງ ແລະ ທາງອ້ອມໂດຍຜ່ານຜູ້ຕາງໜ້າລັດຖະບານຫຼືກຸ່ມຜູ້ສະໜັບສະໜູນອື່ນໆ. ເຖິງຢ່າງໃດກໍຕາມ,ເມື່ອບັນຫາ ຫຼືບັນດາບັນຫາຕ່າງໆຖືກກຳນົດຂື້ນແລ້ວ, ການເຈລະຈາອາດຖືກຈັກຂຶ້ນເພື່ອໃຫ້ຜູ້ເຈລະຈາທາງດ້ານ ວິຊາການມີຂໍ້ມູນໄວ້ໃນມືເພື່ອເປັນບ່ອນອ້າງອີງໃຫ້ແກ່ນັກທູດ.ອີກທາງໜຶ່ງ,ບັນດາຂອບເຂດໜ້າວຽກທົ່ວໄປ

ສຳລັບການຮ່ວມມືອາດຈະຖືກນຳມາເຈລະຈາໃນລະດັບທີ່ສູງກ່ວາ, ໂດຍລາຍລະອຽດເຮັດຂຶ້ນໂດຍຜ່ານການ ປຶກສາຫາລື ດ້ານວິຊາການຕ່າງຫາກເຊິ່ງສາມາດລວມເອົາທັງການ ເຂົ້າຮ່ວມຂອງມວນຊົນໃນຫຼາຍໆ ລະດັບ.

ເປົ້າໝາຍແມ່ນ ເພື່ອຮັບປະກັນວ່າຄວາມສົນໃຈຂອງບັນດາຜູ້ມີສ່ວນໄດ້ສ່ວນເສຍແມ່ນບໍ່ພຽງແຕ່ ໄດ້ຍິນຢູ່ໃນການກຳນົດບັນຫາຕ່າງໆທີ່ຈະແກ້ໄຂເທົ່ານັ້ນ, ແຕ່ຍັງຈະປະກົດຢູ່ໃນຂະບວນການເຈລະຈາ, ຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ. ໃນທາງປະຕິບັດມັນມີຄວາມຈຳເປັນໃນການຊອກຫາ ຂໍ້ປະນີປະນອມກັນ ຊຶ່ງໃນນັ້ນຜູ້ມີສ່ວນຮ່ວມ ມີກົນໄກໃນ ການອອກຄວາມຄິດຄວາມເຫັນກ່ຽວກັບຄວາມຕ້ອງການ ຂອງເຂົາເຈົ້າ ເຖິງແມ່ນວ່າເຂົາເຈົ້າບໍ່ໄດ້ມີສ່ວນຮ່ວມໂດຍກົງ ໃນຂະບວນການເຈລະຈາ ແລະ ຈັດຕັ້ງປະຕິບັດ ທີ່ເປັນທາງການກໍ່ຕາມ.

> *"ບັນດາຜູ້ມີສ່ວນຮ່ວມຕ້ອງມີຄວາມສາມາດອອກຄວາມຄິດຄວາມເຫັນກ່ຽວກັບຄວາມຕ້ອງການ ຂອງເຂົາເຈົ້າ ເຖິງແມ່ນວ່າຈະບໍ່ມີສ່ວນກ່ຽວຂ້ອງ ໂດຍກົງໃນຂະບວນການເຈລະຈາ ແລະ ຈັດຕັ້ງປະຕິບັດຢ່າງເປັນທາງການ"*

### *5.2.2 ການສ້າງຄວາມສົມດູນລະດັບພາກພື້ນ.*

ເພື່ອຮັບປະກັນການປັບຕົວຕໍ່ການປ່ຽນແປງຂອງອົງການຈັດຕັ້ງໃນໄລຍະຍາວ, ມັນມີຄວາມສຳຄັນ ທີ່ພໍໆກັນເພື່ອຫຼີກລ້ຽງຄວາມບໍ່ສົມດູນກັນ ແລະ ທັດສະນະຂອງຄວາມບໍ່ສົມດູນກັນ ໃນອົງການຈັດຕັ້ງຂ້າມຜ່ານຊາຍແດນ ແລະ ການຈັດຕັ້ງປະຕິບັດຂອງພວກມັນ. ຫລາຍໆກົນໄກຖືກນຳໃຊ້ເພື່ອບັນລຸຜົນສຳເລັດເຫຼົ່ານີ້, ເຖິງແມ່ນວ່າບັນດາ ປະເທດສະມາຊິກ ທີ່ເຂົ້າຮ່ວມມີອຳນາດບໍ່ເທົ່າທຽມກັນນອກອົງການຈັດຕັ້ງ ຂ້າມຜ່ານຊາຍແດນດັ່ງກ່າວນັ້ນ.

ການສ້າງຕັ້ງ ອົງການສູງກ່ວາລະດັບຊາດ ເຊິ່ງໄດ້ເບິ່ງບັນຫາການບໍລິຫານຂອງອົງການຈັດຕັ້ງ ກໍແມ່ນໜຶ່ງກົນໄກ. ຕົວຢ່າງ: ຄະນະກຳມະການຮ່ວມລະດັບສາກົນ ປະກອບມີຈຳນວນ ຕົວເລກທີ່ເທົ່າທຽມກັນຂອງຜູ້ຕາງໜ້າ ຈາກປະເທດ ສະຫະລັດອາເມລິກາ ແລະ ປະເທດການາດາ ແລະ ມີຫ້ອງການຕັ້ງຢູ່ທັງສອງປະເທດ. ໃນທຳນອງດຽວກັນເຊັ່ນ: ຄະນະກຳມາທິການກ່ຽວກັບນ້ຳ ແລະ ຊາຍແດນ ລະຫວ່າງຊາດ (IBWC) ລະຫວ່າງປະເທດສະຫະລັດອາເມລິກາ ແລະ ປະເທດແມັກຊິໂກ ໄດ້ມີສອງຫົວໜ້າກຳມາທິການ, ຜູ້ໜຶ່ງມາ ຈາກສະຫະລັດອາເມລິກາ ແລະ ອີກຜູ້ໜຶ່ງມາຈາກປະເທດແມັກຊິໂກ ໂດຍມີທີ່ຕັ້ງຫ້ອງການຢູ່ເມືອງທີ່ມີເຂດຊາຍແດນຂອງສອງປະເທດຕິດກັນ, ເຊິ່ງໃຊ້ເປັນເປັນສະຖານທີ່ທາງເລືອກໃນການຈັດກອງປະຊຸມຂອງຫົວໜ້າກຳມາທິການ. ໃນອາຊີຕາເວັນອອກສ່ຽງໃຕ້, ຄະນະກຳມາທິການແມ່ນ້ຳຂອງສາກົນໄດ້ມີການຜັດປ່ຽນກັນເປັນເຈົ້າພາບ ຂອງທີ່ຕັ້ງສຳນັກງານໃຫຍ່ ລະຫວ່າງປະເທດສະມາຊິກເພື່ອ ຫຼຸດຜ່ອນຄວາມ ຕ້ອງການຂອງປະເທດ ທີ່ເປັນເຈົ້າພາບເຊິ່ງອາດຈະມີຂຶ້ນ. ໃນເຂດ ອາຟຼິກາຕາເວັນຕົກ, ບັນດາປະເທດພາຄີແມ່ນ້ຳເຊເນການ ໄດ້ມີ ການລົງທຶນໃນການຄຸ້ມຄອງ ແລະ ສ້າງໂຄງລ່າງພື້ນຖານຮ່ວມກັນ ດີກວ່າການລົງ ທຶນ ຝ່າຍດຽວ, ເຊິ່ງເປັນວິທີທາງໜຶ່ງ ໃນການສ້າງຄວາມສົມດູນດ້ານອຳນາດ. ໃນເຂດອາຟຼິກາໃຕ້ ບັນດາ ປະເທດ SADC ໄດ້ລິເລີ່ມສ້າງຫ້ອງການ ໜຶ່ງໃນແຕ່ລະ SADC.

ສິ່ງເຫຼົ່ານີ້ແມ່ນບັນດາຕົວຢ່າງຂອງການແກ້ໄຂບັນຫາການປົກຄອງຕໍ່ຄຳຖາມຂອງຄວາມສົມດູນໃນ ພາກພື້ນ. ເຖິງຢ່າງໃດກໍ່ຕາມ, ຄວາມສົມດູນໃນພາກພື້ນຍັງສາມາດ ໄດ້ຮັບການສະໜັບສະໜູນ ໂດຍທຳມະຊາດຂອງແຕ່ລະ ອົງການຈັດຕັ້ງ. ການກຳນົດຂອບເຂດແບບ ກວ້າງຂວາງ ຂອງອົງການຈັດຕັ້ງໃດໜຶ່ງ ນອກເໜືອຈາກນ້ຳ (ເບິ່ງໝວດທີ 2) ສາມາດນຳໄປສູ່ການສຳພັນ ຂອງອຳນາດທີ່ເທົ່າທຽມກັນຫຼາຍຂຶ້ນ ແລະ ຫຼຸດຜ່ອນຄວາມຕ້ອງການ ໃນການນຳໃຊ້ມາດຕະການ ທາງດ້ານການບໍລິຫານຄຸ້ມຄອງເພື່ອສ້າງ ຄວາມສົມດູນ ຍົກຕົວຢ່າງ: ບ່ອນທີ່ປະເທດທີ່ຢູ່ຕອນເທິງອາດມີ

ອຳນາດ ໃນການນຳໃຊ້ການໄຫຼຂອງນ້ຳ, ປະເທດທີ່ຢູ່ ຕອນລຸ່ມສາມາດຄວບຄຸມທ່າເຮືອ ແລະ ທາງຂຶ້ນ-ລົງຂອງປາ. ການຮັບປະກັນວ່າ ອົງການຄຸ້ມຄອງແມ່ນ ກວມເອົາທັງດ້ານ ພະລັງງານໄຟຟ້ານ້ຳຕົກ ແລະ ການປະມົງມີການພົວພັນ ຄວາມເທົ່າທຽມກັນ.

*"ການກຳນົດຂອບເຂດແບບກ້ວາງຂວາງຂອງສະຖາບັນຄຸ້ມຄອງອ່າງໂຕ່ງສາມາດນຳໄປສູ່ການມີສະຖຽງລະພາບທາງອຳນາດທີ່ເທົ່າທຽມກັນຫຼາຍຂຶ້ນ"*

### *5.2.3 ການເຊື່ອມໂຍງກັບສະຖາບັນລະດັບຊາດ*

ບັນດາອົງການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ອາດເບິ່ງຄືວ່າເປັນອົງການຈັດຕັ້ງທີ່ ເປັນອິດສະຫຼະ. ເຖິງຢ່າງນັ້ນກໍ່ດີ, ໃນຄວາມເປັນຈິງແລ້ວພວກມັນມີການພົວພັນໂດຍກົງກັບອົງການຈັດຕັ້ງລະດັບຊາດຂອງບັນດາປະເທດທີ່ເປັນຕົວແທນ. ຄວາມສຳພັນກັນລະຫວ່າງອົງການຈັດຕັ້ງລະດັບຊາດ ແລະລະດັບຂ້າມຜ່ານຊາຍແດນແມ່ນສາມາດນຳເອົາໜຶ່ງຂອງສອງແບບມາໃຊ້. ໃນແບບທຳອິດບັນດາອົງການຈັດຕັ້ງຂ້າມຜ່ານຊາຍແດນສາມາດສ້າງຕັ້ງຂຶ້ນເພື່ອກຳນົດສິດທິພື້ນຖານ ຫຼືຄວາມຮັບຜິດຊອບຕ່າງໆກ່ຽວກັບການນຳໃຊ້ຊັບພະຍາກອນ ໃນຂະນະທີ່ບັນດາປະເທດສະມາຊິກຈັດຕັ້ງປະຕິບັດຂໍ້ຕົກລົງ. ຍົກຕົວຢ່າງ: ອົງການຈັດຕັ້ງຂ້າມຜ່ານຊາຍແດນອາດຈະພິຈາລະນາເຖິງປະລິມານຂອງນ້ຳທີ່ແຕ່ລະປະເທດ ມີສິດນຳໃຊ້ຫຼືການສ້າງມາດຕະຖານຕ່າງໆສຳລັບຄຸນນະພາບນ້ຳ, ແຕ່ມັນຍັງຂຶ້ນກັບລະບຽບກົດໝາຍພາຍໃນຂອງແຕ່ລະປະເທດ ແລະ ໂຄງສ້າງການຕັດສິນໃຈຂອງແຕ່ລະປະເທດເພື່ອກຳນົດວິທີທີ່ມັນຈະບັນລຸພັນທະຂອງໃຜມັນ ຫຼື ນຳໃຊ້ສິດທິຂອງມັນເອງ.

*ກໍລະນີ 5.1 ສັນຍາແມ່ນ້ຳຂອງຍັງຂາດຄວາມຕ້ອງການສຳລັບກົດລະບຽບແຫ່ງຊາດ"*[26]

ສັນຍາແມ່ນ້ຳຂອງ(ສັນຍາກ່ຽວກັບການຮ່ວມມືເພື່ອການພັດທະນາແບບຍືນຍົງຂອງອ່າງແມ່ນ້ຳຂອງ) ໄດ້ເຊັນ ສັນຍາກັນໂດຍລັດຖະບານຂອງປະເທດກຳປູເຈຍ, ສປປລາວ, ລາຊະອານາຈັກໄທ, ສສ ຫວຽດນາມ ໃນວັນທີ 5 ເມສາ 1995. ຄວາມກົດດັນທາງດ້ານການເມືອງພູມີພາກ ແລະ ກາລະໂອກາດໄດ້ເປັນປັດໃຈທີ່ສຳຄັນ ທີ່ມີຜົນຕໍ່ຄວາມພະຍາຍາມໃນການຮ່ວມມືໃນອ່າງແມ່ນ້ຳຂອງເຊິ່ງສາ ມາດບົ່ງບອກໃນສາມໄລຍະເຊັ່ນ:

- ໄລຍະທີ 1: ຄະນະກຳມະການແມ່ນ້ຳຂອງ-ຄະນະກຳມະການສຳລັບ ການປະສານງານ ເພື່ອການກວດກາ ໃນອ່າງແມ່ນ້ຳຂອງຕອນລຸ່ມ (1978 - 1995) ເຊິ່ງລວມມີ ປະເທດ ກຳປູເຈຍ, ສ ປ ປ ລາວ, ລາຊະອານາຈັກໄທ ແລະ ສສ ຫວຽດນາມ.
- ໄລຍະທີ 2: ຄະນະກຳມະການຮ່ວມແມ່ນ້ຳຂອງ- ຄະນະກຳມະການຮ່ວມເພື່ອການປະສານງານ ສຳລັບການກວດກາຂອງແມ່ນ້ຳຂອງຕອນລຸ່ມ (1978 -1995) ເຊິ່ງລວມມີ ສປປລາວ, ປະເທດໄທ ແລະ ຫວຽດນາມ (ແຕ່ບໍ່ມີການເຂົ້າຮ່ວມຂອງປະເທດກຳປູເຈຍ).
- ໄລຍະທີ 3: ຄະນະກຳມາທິການແມ່ນ້ຳຂອງສາກົນ (MRC) (ແຕ່ປີ 1995-ປະຈຸບັນ) ລວມມີ ປະເທດ ກຳປູເຈຍ, ສ ປ ປ ລາວ, ປະເທດໄທ ແລະ ຫວຽດນາມ ເປັນປະເທດສະມາຊິກ; ມີປະເທດຈີນ ແລະ ມຽນມາເປັນຄູ່ຮ່ວມເຈລະຈາ.

ສັນຍາແມ່ນ້ຳຂອງສົ່ງເສີມການມີວິໄສທັດຮ່ວມກັນ ເພື່ອຈະເລີນທາງດ້ານເສດຖະກິດ, ຄວາມເທົ່າ ທຽມກັນໃນ ສັງຄົມ ແລະ ຄວາມຍືນຍົງທາງສິ່ງແວດລ້ອມໃນອ່າງແມ່ນ້ຳຂອງ. ມັນແມ່ນສັນຍາຂອງ ຂອບເຂດໜ້າວຽກທີ່ ສະທ້ອນເຖິງຫຼັກການທາງດ້ານກົດໝາຍນ້ຳສາກົນ, ການຮ່າງຂະບວນການ ສຳລັບວິທີການ ແລະ ກົດລະບຽບທາງດ້ານການພັດທະນາ ເພື່ອການນຳໃຊ້ ຜົນປະໂຫຍດທາງດ້ານນ້ຳ ແລະ ຊັບພະຍາກອນທຳມະຊາດ ໃນອ່າງແມ່ນ້ຳຂອງຢ່າງເທົ່າທຽມກັນ ແລະ ສ້າງຕັ້ງຄະນະກຳມາທິການ ແມ່ນ້ຳຂອງເປັນອົງການຈັດຕັ້ງ ລັດຖະບານລະດັບສາກົນ.

ເຖິງແມ່ນວ່າສັນຍາແມ່ນ້ຳຂອງປີ 1995 ບໍ່ມີການສະໜອງໃຫ້ແກ່ການໃຫ້ສັດຕະຍາບັນຂອງສົນ ທິສັນຍາ ແລະ ການຮ່ວມມື ຂອງສັນຍາ ແລະ ວິທີການ ແລະ ກົດລະບຽບຂອງມັນໃນລະບົບການ ຈັດຕັ້ງ ແລະ ກົດໝາຍ ລະດັບຊາດຂອງບັນດາປະເທດ ໃຫ້ສັດຕະຍາບັນໃນການລົງນາມໃນສົນທິສັນຍາໂດຍອົງການລະດັບຊາດ ແລະ transpositionໃນກົດໝາຍທ້ອງຖິ່ນແມ່ນມາດຕະຖານ ການປະຕິບັດ ພາຍໃຕ້ກົດໝາຍສາກົນ (ເບິ່ງໝວດທີ4). ການຂາດປັດໃຈຕ້ອງການດັ່ງກ່າວໃນສັນຍາແມ່ນ້ຳຂອງແມ່ນເຫັນເປັນຈຸດບົກຜ່ອງທີ່ສຳຄັນໃນການພະຍາຍາມ ເພື່ອຮັບປະກັນຂອງການຈັດຕັ້ງລະດັບຊາດທີ່ຈະປະຕິບັດຢ່າງໃຫ້ມີປະສິດທິຜົນ ແລະ ອົງການຈັດຕັ້ງລະບຽບ ກົດໝາຍເພື່ອການຈັດຕັ້ງປະຕິບັດພາຍໃຕ້ສັນຍາດັ່ງກ່າວ.

ເຖິງຢ່າງນັ້ນກໍ່ຕາມ, ກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ, ຄະນະກຳມະການ ຊີ້ນຳ, ຄະນະກຳມະການແຫ່ງຊາດ ແລະ ອົງການຈັດຕັ້ງລັດຖະບານທີ່ກ່ຽວຂ້ອງໄດ້ມີການ ປະສານງານ ໃນການພັດທະນານະໂຍບາຍເພື່ອຫຼຸດຜ່ອນຂີດຈຳກັດ ທາງດ້ານອົງການຈັດຕັ້ງ, ການປະສານງານໃນປະຈຸບັນ, ໂດຍສະເພາະແມ່ນນະໂຍບາຍດ້ານການປະມົງ, ອຸທົກກະໄພ ແລະ ການເດີນເຮືອ ແລະ ການພັດທະນາກົດລະບຽບຕ່າງໆເພື່ອການຄຸ້ມຄອງຜົນກະທົບຕໍ່ສິ່ງແວດລ້ອມ ຂ້າມຜ່ານຊາຍແດນ.

ຮູບແບບທີສອງ, ສະຖາບັນການຈັດຕັ້ງຂ້າມຜ່ານຊາຍແດນໄດ້ສ້າງໂຄງຮ່າງການຈັດຕັ້ງເຊັ່ນວ່າ: ອົງການຈັດຕັ້ງຄຸ້ມຄອງອ່າງແມ່ນ້ຳສາກົນ ໂດຍຜ່ານການຕັດສິນໃຈທີ່ໄດ້ດຳເນີນໃນດ້ານ ຄວາມຕ້ອງການ, ເງື່ອນໄຂ ແລະ ຄວາມເຂົ້າໃຈຕ່າງໆ. ບັນດາຜູ້ຕາງໜ້າ ຈາກອົງການຈັດຕັ້ງລະດັບຊາດ ສາມາດປະກອບສ່ວນຢ່າງຫລວງຫລາຍ ແລະ ອາດນຳໃຊ້ໂອກາດເພື່ອ ຮັບປະກັນວ່າແຜນງານລະດັບຊາດຂອງເຂົາເຈົ້າ ໄດ້ຮັບຄວາມພິຈາລະນາເຂົ້າໃນ ການຮ່ວມມືສາກົນ. ຜູ້ຕາງໜ້າອົງການຈັດຕັ້ງລະດັບຊາດ ອາດເປັນຕົວແທນເຮັດວຽກໃຫ້ແກ່ ອຳນາດການປົກຄອງອ່າງແມ່ນ້ຳ ຫລືຖືກເຊີນເຂົ້າຮ່ວມ ເພື່ອສະໜອງ ຂໍ້ມູນ, ວິເຄາະ, ການແນະນຳ ແລະ ຍຸດທະສາດ. ຄືດັ່ງໃນການເຈລະຈາ, ທຳມະຊາດຂອງອົງການຈັດຕັ້ງທີ່ຖືກເລືອກ ເພື່ອເຂົ້າຮ່ວມ ຈະມີຜົນສະທ້ອນຢ່າງຫລວງຫລາຍ ຕໍ່ການຕັດສິນໃຈ ແລະ, ມີຄວາມສຳຄັນ ໃນດ້ານຫົວຂໍ້ທີ່ໄດ້ນຳສະເໜີ.

ສະນັ້ນ ໃນການເຈລະຈາ ຈຶ່ງມີຄວາມສຳຄັນທີ່ ມີຄວາມຫລາກຫລາຍຂອງ ຜູ້ມີສ່ວນຮ່ວມ, ລວມທັງ ອົງການຈັດຕັ້ງ ລັດຖະບານ ແລະ ອົງການສັງຄົມ ເຊິ່ງໄດ້ປະກອບສ່ວນ ບໍ່ພຽງແຕ່ຊອກຫາວິທີທາງ ເພື່ອແກ້ບັນຫາ ແຕ່ຍັງເບິ່ງບັນຫາເພື່ອການພິຈາລະນາຢ່າງຖີ່ຖ້ວນ. ການເຂົ້າຮ່ວມຢ່າງກ້ວາງຂວາງ ອາດມີຄວາມສຳຄັນ ໂດຍສະເພາະ ສຳລັບປະເທດກຳລັງພັດທະນາ ເຊິ່ງໃນລະດັບທ້ອງຖິ່ນ ການຕັດສິນໃຈດ້ານນ້ຳ ແລະຊັບພະຍາກອນທີ່ດິນ ແມ່ນໄດ້ດຳເນີນ ຜ່ານກົດໝາຍທີ່ບໍ່ເປັນທາງການ ເຊິ່ງອາດບໍ່ໄດ້ເບິ່ງຢ່າງລະອຽດໃນການຈັດຕັ້ງທີ່ເປັນທາງການ.

### *5.2.4 ຄວາມຕ້ອງການສ້າງຄວາມອາດສາມາດ ແລະ ການສ້າງຄວາມອາດສາມາດ.*

ອົງການຈັດຕັ້ງຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ໄດ້ເອົາໃຈໃສ່ບັນຫາ ກ່ຽວກັບການພັດທະນາ ແລະ ນຳໃຊ້ນ້ຳຮ່ວມກັນ-ບັນຫາຕ່າງໆທີ່ສາມາດແກ້ໄຂເປັນປະຈຳ ໂດຍ ນັກວິສະວະກອນ ແລະ ນັກອຸທົກວິທະຍາ ທີ່ຈະເປັນຄົນໃຫ້ຄຳແນະນຳຕໍ່ນັກການທູດ ແລະ ນັກກົດໝາຍ. ເຖິງຢ່າງໃດ ກໍ່ຕາມ, ຄືດັ່ງຮູ້ດີແລ້ວວ່າຊັບພະຍາກອນນ້ຳ ໄດ້ມີການພັດທະນາຂຶ້ນສ່ວນໃຫຍ່ຂອງພາກພື້ນ, ມັນຍັງມີການຫັນປ່ຽນຈາກການພັດທະນານ້ຳ (ຕົວຢ່າງ: ການລົງທຶນໃນການຊອກຫາແຫຼ່ງນ້ຳໃໝ່) ໄປສູ່ການຄຸ້ມຄອງນ້ຳ (ການລົງທຶນເພື່ອການປັບປຸງ ຈັດຕັ້ງປະຕິບັດໃນການນຳໃຊ້ນ້ຳ), ການ ຫັນປ່ຽນດັ່ງກ່າວນີ້ ແມ່ນເກີດຂື້ນທ່າມກາງທ່າອ່ຽງການປ່ຽນແປງທີ່ສຳຄັນເພື່ອເຊື່ອມໂຍງບັນຫາຕ່າງໆທາງດ້ານ ສິ່ງແວດລ້ອມ ແລະ ສັງຄົມໂດຍການພົວພັນເຖິງການ ຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ.

*“ ໄດ້ມີການຫັນປ່ຽນຈາກການພັດທະນານ້ຳໄປສູ່ການຄຸ້ມຄອງນ້ຳ”*

ໃນຂະນະທີ່ວິສະວະກຳ ແລະ ອຸທົກກະສາດ ຍັງແມ່ນເປັນຈຸດໃຈກາງໃຫ້ແກ່ເກືອບທັງໝົດ ຂອງບັນຫາຊັບພະຍາກອນນ້ຳຂ້າມຜ່ານຊາຍແດນ, ໃນປະຈຸບັນມັນມີຄວາມສຳຄັນຢູ່ບ່ອນວ່າ ຂະແໜງການອື່ນໆເຊັ່ນ: ນິເວດວິທະຍາ, ເສດຖະກິດ ແລະ ສັງຄົມວິທະຍາ ແມ່ນຍັງມີການກ່າວເຖິງໜ້ອຍ - ແມ່ນເປັນຕົວແທນໃນ ຄະນະທີມງານ ເຈລະຈາ ລະດັບຊາດ ແລະ ລວມໃນໂຄງຮ່າງການຈັດຕັ້ງ ແລະ ກິດຈະກຳຂອງອົງການຈັດຕັ້ງອ່າງແມ່ນ້ຳ. ໃນລັກສະນະຄ້າຍຄືກັນນີ້, ບັນຫາຂ້າມຜ່ານຊາຍແດນແມ່ນໄດ້ປ່ຽນແປງໄປ, ໃນປະຈຸບັນ ມັນມີຄວາມສຳຄັນຢູ່ບ່ອນວ່າ ຄຳຄິດຄຳເຫັນ ຈາກຫຼາຍພາກສ່ວນ ແລະ ຄວາມສົນໃຈໄດ້ຍິນເພີ່ມຂຶ້ນ. ແມ້ວ່າມີການປ່ຽນແປງດັ່ງກ່າວກໍຕາມ ໃນທີ່ສຸດ ກໍລະນີບັນຫາ ກິດຈະການ ນ້ຳແມ່ນຍັງດຳເນີນການ ໂດຍນັກວິສະວະກອນ ແລະ ນັກອຸທົກກະສາດ ທີ່ເປັນພາກສ່ວນລັດຖະບານ.

ຄຳຖາມທຳອິດໃນການການຮັບປະກັນ ໃນການສ້າງຄວາມອາດສາມາດທີ່ເໝາະສົມນັ້ນ ແມ່ນ ຜູ້ທີ່ມີບົດບາດນັ້ນໄດ້ມີຄວາມເຂົ້າໃຈກ່ຽວກັບຫລາຍໆຄວາມກ່ຽວພັນກັນລະຫວ່າງ ກົດລະບຽບຕ່າງໆທີ່ມີ ຄວາມຈຳເປັນຢ່າງແທ້ຈິງແລ້ວ ຫຼືບໍ່ - ຄຳຖາມທີ່ນັກຈະຖືກຖາມ ກັບປະເພດທີ່ຮັ່ງມີ ແລະ ກໍຄືກັບບັນດາ ປະເທດ ທີ່ທຸກຈົນ. ຜູ້ມີບົດບາດ ແລະ ປະຫວັດຄວາມເປັນມາທີ່ຕ້ອງການ ແມ່ນຂຶ້ນກັບບັນຫາຕ່າງໆ ທີ່ມີຢູ່.ຄວາມຕ້ອງການດ້ານຄວາມອາດສາມາດດ້ານໃດແດ່ ທີ່ຈະຖືກສ້າງຈະມີຄວາມແຕກຕ່າງກັນໃນແຕ່ລະອ່າງໂຕ່ງແລະແຕ່ລະປະເທດທີ່ນອນໃນແຕ່ລະອ່າງໂຕ່ງ. ບາງຄຳຖາມທີ່ອາດຈະຖາມ ກ່ຽວກັບ ບັນຫາດັ່ງກ່າວ ລວມມີ:

- ມີນັກຊ່ຽວຊານທີ່ມີຄວາມຊຳນານງານ ໃນຫົວຂໍ້ທີ່ເໝາະສົມແລ້ວບໍ່?
- ມີຜູ້ມີສ່ວນຮ່ວມທີ່ບໍ່ແມ່ນພາກລັດ ມີຄວາມຮອບຮູ້ ແລະ ເຕັມໃຈເຂົ້າຮ່ວມອອກຄຳເຫັນ ແລ້ວບໍ່?
- ຂອບເຂດໃດທີ່ນັກເຈລະຈາ ແລະ ນັກຊ່ຽວຊານທາງດ້ານການແກ້ໄຂບັນຫານ້ຳຄວນຈະຖືກກຳນົດຂຶ້ນ?
- ນັກເຈລະຈາ ແລະ ນັກຊ່ຽວຊານມີຄວາມຮອບຮູ້ ຫນ້ອຍ-ຫລາຍປານໃດ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງໃນບັນຫານ້ຳ? ແລະ ໃນທາງກັບກັນ
- ຊ່ຽວຊານດ້ານນ້ຳມີ ຄວາມຮອບຮູ້ຫນ້ອຍ-ຫລາຍປານໃດໃນການເຈລະຈາ ແລະ ການແກ້ໄຂຂໍ້ຂັດແຍ່ງ?

*"ຄວາມອາດສາມາດສະເພາະທີ່ຕ້ອງການຈະສ້າງຈະມີຄວາມແຕກຕ່າງກັນໃນແຕ່ລະອ່າງໂຕ່ງ ແລະ ແຕ່ລະປະເທດທີ່ນອນຢູ່ແຕ່ລະໃນອ່າງໂຕ່ງ"*

ອີງຕາມຊ່ອງວ່າງຕ່າງໆທີ່ໄດ້ກຳນົດ, ບັນດາຜູ້ບໍລິຫານ ສາມາດໝູນໃຊ້ ຫລາຍໆກົນໄກ ເພື່ອສ້າງຄວາມ ອາດສາມາດທີ່ເໝາະສົມ. ບາງກົນໄກແມ່ນການສຶກສາແບບເປັນທາງການ, ການແລກປ່ຽນບຸກຄະລາກອນ ແລະ ການ ທັດສະນະສຶກສາ, ສອງອ່າງໂຕ່ງ ປະສົບກັບບັນ ຫາທີ່ຄ້າຍຄືກັນ (ຕົວຢ່າງ: ລະຫວ່າງ ອ່າງໂຕ່ງໃນເຂດ ພາກເໜືອ ແລະ ພາກໃຕ້). ສິ່ງທ້າທາຍໃນການສ້າງຄວາມອາດສາມາດໄດ້ຂະຫຍາຍອອກນອກເໜືອການພັດທະນາຂອງອົງການຈັດຕັ້ງອ່າງໂຕ່ງ ແລະ ຕ້ອງການ ເພື່ອຮັບປະກັນຕະຫຼອດໄລຍະເວລາ ອາຍຸການດຳເນີນງານຂອງອົງການຈັດຕັ້ງ ນັ້ນໆ.

## 5.3 ການລະດົມທາງດ້ານການເງິນ

ເຖິງແມ່ນວ່າທຸກຝ່າຍ ແມ່ນມີຄວາມເຕັມໃຈທີ່ຈະໃຫ້ການຮ່ວມມື ໃນການສ້າງຕັ້ງອົງການຈັດຕັ້ງເພື່ອພັດທະນາ ແລະ ຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ, ສິ່ງທ້າທາຍທີ່ສຳຄັນແມ່ນ ການເຈລະຈາດ້ານການເງິນ ແລະ ການຈັດຕັ້ງປະຕິບັດ ໃນທີ່ສຸດຈະເຮັດຄືແນວໃດ?.

### 5.3.1 ສິ່ງທ້າທາຍສຳລັບປະເທດທີ່ກຳລັງພັດທະນາ

ໃນປະເທດທີ່ຮັ່ງມີກ່ວາ,ຊັບພະຍາກອນທີ່ເຈລະຈາກັນແລະກອງທຶນຂອງອົງການຈັດຕັ້ງນ້ຳຂ້າມຜ່ານຊາຍແດນ ແມ່ນມາຈາກຫຼາຍໆປະເທດທີ່ເຂົ້າຮ່ວມ. ອີກດ້ານໜຶ່ງ, ໃນຂະນະທີ່ ປະເທດກຳລັງພັດທະນາ ແມ່ນມີປະເພນີທີ່ຫຼາກຫຼາຍໃນການຄຸ້ມຄອງນ້ຳ ແລະ ໄດ້ພັດທະນາກົນໄກທີ່ດີຂຶ້ນສຳລັບການຈັດການຂໍ້ຂັດແຍ່ງກ່ຽວກັບນ້ຳ, ພວກເຂົາອາດຈະຂາດຊັບພະຍາກອນທຶນຮອນ ແລະ ກົນໄກ ເພື່ອຈັດຕັ້ງປະຕິບັດບັນດາຕົວແບບເຫຼົ່ານີ້ໃນລະດັບສາກົນ. ໃນບາງກໍລະນີ, ເຖິງແມ່ນວ່າ ຈະມີທຶນເພີ່ມຂຶ້ນ ເພື່ອນຳໃຊ້ເຂົ້າໃນຊ່ວງການເຈລະຈາ ຂອງການພັດທະນາອົງກອນ ແຕ່ມັນກໍຍັງເກີດ ມີບັນຫາຢູ່. ບັນດາຜູ້ໃຫ້ທຶນ ບາງທີກໍ່ຍັງມີບົດບາດໃນການມີສ່ວນຮ່ວມດ້ານນີ້, ໂດຍສະເໜີການຊ່ວຍເຫຼືອ ທາງດ້ານການເງິນ ເພື່ອນຳເຂົ້າໃນການກະຕຸ້ນການຮ່ວມມື, ການເຈລະຈາເບື້ອງຕົ້ນ. ໃນປີທີ່ຜ່ານມາ, ການສະໜັບສະໜູນ ຂອງຜູ້ ໃຫ້ທຶນດັ່ງກ່າວ ໄດ້ມີລັກສະນະເປັນອົງການດ່ຽວ ແລະ ຮ່ວມກັນ ເຊິ່ງໄດ້ຈາກອົງການຈັດຕັ້ງສາກົນ, ອົງການຈັດຕັ້ງ ລະດັບພາກພື້ນ ແລະ ອົງການຈັດຕັ້ງລັດຖະບານ (ຕົວຢ່າງ: UNDP, USAID, NATO, EU Technical Aid to Commonwealth of Independent States (TACIS), the Global Environment Facility's International Waters Program for the Kura Araks; the UN and the Group of Non Aligned Countries for the Ganges; the World Bank, the Global Environment Facility and USAID for the Syr Darya Basin).

ພາລະບົດບາດຂອງອົງການສາກົນ ໃນການສ້າງຂໍ້ຕົກລົງດ້ານການ ນຳໃຊ້ນ້ຳຂ້າມຜ່ານຊາຍແດນຮ່ວມກັນ ແມ່ນ ບາງເທື່ອກໍ່ມີຄວາມຂັດແຍ່ງກັນ. ດ້ານໜຶ່ງອີກ, ການຊ່ວຍເຫຼືອທຶນຈາກພາຍນອກ ອາດເປັນ ວິທີທາງໜຶ່ງໃນທາງເຈລະຈາ ເພື່ອຂັບເຊື່ອນວຽກງານຕໍ່ໄປ (ໃນຕົວຈິງແລ້ວ ຄ່າໃຊ້ຈ່າຍ ຕ່າງໆໃນການຮ່ວມມືປະເພດນີ້ ແມ່ນ ສູງສົມຄວນ) , ແລະ ການມີສ່ວນຮ່ວມຂອງພາກສ່ວນທີສາມ ແມ່ນຜູ້ສາມາດສະໜອງ ສິ່ງຈູງໃຈທີ່ ຕ້ອງການ ເພື່ອນຳເອົາບັນດາປະເທດໃກ້ຄຽງເຂົ້າມາຮ່ວມໃນໂຕະເຈລະຈາ. ການມີສ່ວນຮ່ວມຂອງທະນາຄານໂລກ ໃນການເຮັດສົນທິສັນຍາອ່າງໂຕ່ງ ອິນດັສ ລະຫວ່າງ ປະເທດອິນເດຍແລະ ປາກິດສະຖານ ຖືວ່າ ແມ່ນ ໄດ້ມີບົດບາດທາງບວກທີດີທີ່ສຸດ ຕະຫລອດມາຂອງຜູ້ມີສ່ວນຮ່ວມຈາກພາຍນອກ (ເບິ່ງກໍລະນີ4.1). ເຊັ່ນດຽວກັນ, ອົງການຈັດຕັ້ງແມ່ນ້ຳຂອງເບິ່ງຄືວ່າຈະແລເຫັນ ແຕກຕ່າງອອກໄປ ຖ້າຫາກປາສະຈາກການ ສະໜັບສະໜູນ ທຶນຈາກພາຍນອກ.

ການຊ່ວຍເຫຼືອດ້ານການເງິນຈາກພາຍນອກແມ່ນອາດມາພ້ອມໆກັບວາລະ ແລະ ຄຸນຄ່າພາຍນອກ ຕ່າງໆ ແລະ ບັນດາຜູ້ໃຫ້ທຶນອາດຈະເປັນ ຫຼື ມີສ່ວນກ່ຽວຂ້ອງກັບການ ອຳນວຍຄວາມສະດວກ ໃນການເຈລະຈາໂດຍອີງຕາມຄວາມຕ້ອງການຂອງເຂົາເຈົ້າຫຼາຍກ່ວາທີ່ຈະກົດດັນຄວາມຕ້ອງການຂອງບັນດາປະເທດພາຄີ,ນອກຈາກນັ້ນແລ້ວ, ການມີສ່ວນຮ່ວມຂອງພາກສ່ວນທີສາມ ອາດເຮັດໃຫ້ການຮ່ວມມື ຫຍຸ້ງຍາກຂຶ້ນ ຖ້າຄວາມຍຸຕິທຳ ບໍ່ໄດ້ຮັບການສ້າງຕັ້ງ ຢ່າງຄັກແນ່. ຍົກຕົວຢ່າງ: ການຂາດຄວາມຍຸຕິທຳຂອງພາກສ່ວນທີສາມແມ່ນໄດ້ສັງເກດເຫັນ ເປັນບັນຫາໜຶ່ງ ໃນການແກ້ໄຂບັນຫາການຮ່ວມມືໃນເຂດ ອ່າງໂຕ່ງຕີກຼີດ- ຢູເພຣທ໌ (Tigris-Euphrates). ບັນດາຜູ້ໃຫ້ທຶນເອງຄວນຈະມີ

ຄວາມຮອບຄອບໃນລະດັບໃດ ທີ່ເຂົາເຈົ້າໄດ້ໃຫ້ທຶນ ສະໜັບສະໜູນ, ໃນເມື່ອການຂາດການມີສ່ວນຮ່ວມ ໃນການສະໜອງທຶນ ໂດຍປະເທດສະມາຊິກ ອາດຈະເປັນສັນຍາໃຫ້ຮູ້ເຖິງ ການຂາດຄວາມເປັນເຈົ້າການ ແລະ ເປັນສາເຫດໃຫ້ມີການປະຕິບັດພັນທະບໍ່ເຕັມທີ່ຕໍ່ອົງການຈັດຕັ້ງຂອງອ່າງໂຕ່ງ.

*"ການມີສ່ວນຮ່ວມຂອງພາກສ່ວນ ທີ່ສາມາດເຮັດໃຫ້ການຮ່ວມມືມີຄວາມຫຍຸ້ງຍາກຖ້າບໍ່ມີການລະບຸຜົນປະໂຫຍດ ທີ່ຈະໄດ້ຮັບແບບຊອບທຳຢ່າງຈະແຈ້ງກ່ອນ".*

ໃນກໍລະນີນີ້, ມັນໄດ້ມີການໂຕ້ຖຽງກັນວ່າການມີສ່ວນຮ່ວມຂອງພາກສ່ວນທີສາມ ໃນອົງການຈັດຕັ້ງຂ້າມຜ່ານຊາຍແດນຄວນຈະສິ້ນສຸດລົງ ຫຼັງຈາກໄລຍະການເຈລະຈາເພື່ອເປີດໂອກາດໃຫ້ໃຫ້ບັນດາປະເທດສະມາຊິກມີຄວາມເປັນເຈົ້າການແລະຄ່ອຍໆພັດທະນາອົງການຈັດຕັ້ງໃຫ້ເໝາະສົມ ກັບ ຄວາມຕ້ອງການຂອງເຂົາເຈົ້າ ແລະ ຊັບພະຍາກອນທີ່ມີຢູ່. ແຕ່ພັດມີຄຳຖາມຕາມມາວ່າ ເຮັດແນວໃດທີ່ຈະກ້າວ ຜ່ານໄປສູ່ການສະໜັບສະໜູນທຶນ ແບບຍືນຍົງ ໃນໄລຍະຍາວ. ການແລກປ່ຽນ ຜົນປະໂຫຍດຮ່ວມກັນລະຫວ່າງ ອົງການຜູ້ໃຫ້ທຶນ ແລະ ພາກສ່ວນລັດຖະບານ ແມ່ນໜຶ່ງຂອງການແກ້ໄຂ ບັນຫາທີ່ອາດ ເປັນໄປໄດ້ ແລະ ວິທີການນີ້ໄດ້ນຳໃຊ້ ຢ່າງມີປະສິດທິພາບແລ້ວ ຢູ່ໃນອ່າງໂຕ່ງ ນ້ຳນິນ. ການເຊື່ອມໂຍງກັນ ຂອງການສະໜັບສະໜູນດ້ານການເງິນ ກໍ່ແມ່ນອີກກົນໄກໜຶ່ງ. ວິທີການໃດກໍ່ຕາມທີ່ໄດ້ຮັບຮອງນຳເປົ້າໝາຍຂອງຜູ້ໃຫ້ທຶນລວມທັງບັນດາປະເທດສະມາຊິກຄວນຈະຮັບປະກັນຄວາມເປັນເຈົ້າການຂອງທ້ອງຖິ່ນກ່ຽວກັບຂະບວນການ ລວມທັງຄວາມຍືນຍົງໄລຍະຍາວ ຂອງອົງການນັ້ນໆ.

### *5.3.2 ຄວາມຍືນຍົງທາງດ້ານການເງິນ ສຳລັບການຄຸ້ມຄອງ, ອົງການຈັດຕັ້ງ ແລະ ຂໍ້ຕົກລົງຕ່າງໆ ອ່າງແມ່ນ້ຳຂ້າມຜ່ານຊາຍແດນ.*

ຍຸດທະສາດທີ່ຖືກຕ້ອງ ສຳລັບການສະໜອງການເງິນ ຂອງອົງການຄຸ້ມຄອງນ້ຳຂ້າມຜ່ານ ຊາຍແດນ ແບບຍືນຍົງຈະຂຶ້ນກັບລັກສະນະຂອງການຈັດຕັ້ງນັ້ນ ກ່ອນອື່ນໝົດ ແລະ ສ່ວນໃຫຍ່. ບາງອົງ ການຈັດຕັ້ງແມ່ນສາມາດເຊື່ອມໂຍງດ້ານການເງິນຂອງເຂົາເຈົ້າ ເພື່ອການພັດທະນາການຮ່ວມມື ແລະ ການບໍລິຫານຊັບສົມບັດ ທາງເສດຖະກິດ ເປັນຕົ້ນແມ່ນ ເຂື່ອນໄຟຟ້າ. ຕົວຢ່າງ: ໃນຂໍ້ຕົກລົງລະຫວ່າງ ສະຫະລັດອາເມລິກາ ແລະ ປະເທດການາດາ ໃນແມ່ນ້ຳ ໂຄລຳເບຍ. ອາເມລິກາ ໄດ້ຊ່ວຍເຫຼືອທາງດ້ານການເງິນ ໃຫ້ກັບເຂື່ອນໄຟຟ້າ ໃນການາດາ ໂດຍການຜະລິດພະລັງງານ ໄຟຟ້າຢ່າງຫລວງຫລາຍ ແຕ່ວ່າ ຍັງໄດ້ມີໜ້າທີ່ເພື່ອການກວດການ້ຳຖ້ວມ ໃນຫຼັງເຂື່ອນໄຟຟ້າໃນສະຫະລັດອາເມລິກາ. ສະຫະລັດອາເມລິກາ ໄດ້ຈ່າຍເງິນໃຫ້ ການາດາ ບົນພື້ນຖານຢ່າງຕໍ່ເນື່ອງ ທັງສຳລັບຄ່າໄຟຟ້າ ແລະຄ່າປ້ອງກັນນ້ຳຖ້ວມ, ແລະການເຄື່ອນໄຫວການເງິນນີ້ ແມ່ນໄດ້ຖືກນຳໃຊ້ໃນພາກສ່ວນ ເພື່ອຮັກສາການຈັດຕັ້ງຂ້າມຜ່ານຊາຍແດນ ໃນ ໂຄລຳເບຍ.

*ຕາຕະລາງ 5.3 ກົນໄກດ້ານການເງິນ ໃນການຄຸ້ມຄອງການຂ້າມຜ່ານຊາຍແດນ*

| ກົນໄກດ້ານການ ເງິນ | ຜົນດີ | ຜົນເສຍຫາຍ |
|---|---|---|
| ງົບປະມານທົ່ວໄປ ແລະ ຕາມລາຍລະອຽດການໃຊ້ຈ່າຍ( ເຊັ່ນ: ຄ່າໃຊ້ຈ່າຍຂຶ້ນໄວ້ເພື່ອສະໜັບ ສະໜູນການຈັດຕັ້ງອ່າງແມ່ນ້ຳຂອງຜ່ານພາສີ ໃນການນຳໃຊ້ນ້ຳໃນອ່າງ, ພາສີສິ່ງແວດລ້ອມທົ່ວໄປ, ຫຼື ລາຍຈ່າຍລະອຽດຂອງພາກລັດ | ຄຸ້ມຄອງໂດຍແຕ່ລະປະເທດທີ່ຢູ່ແຄມຝັ່ງແມ່ນ້ຳ. | ສຳລັບປະເທດທີ່ທຸກຍາກກ່ວາມັນອາດຈະເປັນໄປບໍ່ໄດ້ ຫຼື ເປັນໄປໄດ້ ເພື່ອຊອກຫາສິ່ງທົດແທນແລກປ່ຽນລະຫວ່າງການລົງທຶນຍາວນານໃນການຄຸ້ມຄອງສະຖາບັນແລະຄວາມຕ້ອງການດ້ານການເງິນໄລຍະສັ້ນຄວາມຕ້ອງການທຶນໃນໄລຍະສັ້ນ. |
| ການພັດທະນາສະຖາບັນພົວພັນກັບແຫຼ່ງງົບປະມານການເງິນທີ່ສ້າງຂຶ້ນຜ່ານການຮ່ວມມືໃນລະດັບພາກພື້ນ | ໃຫ້ວິທີການທີ່ງ່າຍເພື່ອຮັບປະກັນວ່າສະຖາບັນການຈັດຕັ້ງສາມາດຫາເງິນໄດ້ເອງ ແລະ ມີຂໍ້ຕົກລົງທີ່ຍືນຍົງດ້ວຍຕົນເອງ. | ມີແຕ່ທາງດຽວທີ່ເປັນໄປໄດ້ໃນເມື່ອມີແຫຼ່ງການເງິນ ທີ່ຊັດເຈນຈາກການຮ່ວມມືຊັດເຈນໃນການຮ່ວມມືຢູ່ໃນພາກພື້ນ (ເຊັ່ນວ່າ: ການຜະລິດພະລັງງານໄຟຟ້າ ຫຼື ການໃຫ້ການບໍລິຫານໃນການຄຸ້ມຄອງນ້ຳຖ້ວມ. |
| ຄ່າໃຊ້ຈ່າຍສຳລັບການບໍລິການສິ່ງແວດລ້ອມ ແລະ ຄວາມໝັ້ນຄົງ (ໂດຍປະເທດທີສາມ) | ດຳເນີນຂໍ້ຕົກລົງຕ່າງໆ ໃນເມື່ອປະເທດໜຶ່ງອາດສາມາດຈ່າຍຄ່າບໍລິການທາງລະບົບນິເວດໃຫ້ແກ່ປະເທດອື່ນ. | ມີແຕ່ທາງດຽວທີ່ເປັນໄປໄດ້ໃນເມື່ອມີການ ລະບຸຈະ ແຈ້ງຂອງການ ຄ່າບໍລິການລະບົບ ນິເວດວິທະຍາ,ທີ່ໄດ້ຮັບສ່ວນໃຫ່ຍແລ້ວ ມັນເປັນການຫຍຸ້ງຍາກ ໃນ ການກຳນົດ ແລະ ໂຄງສ້າງຂອງການບໍລິການລະບົບນິເວດ |
| ການຈ່າຍໃຫ້ແກ່ການບໍລິການສິ່ງແວດລ້ອມ ແລະ ການປົກປັກຮັກສາ (ໂດຍປະເທດທີສາມ) | ນຳສະເໜີກົນໄກຈາກປະເທດອື່ນ ຫຼື ຜູ້ເຂົ້າຮ່ວມອື່ນເພື່ອທົດແທນສະມາຊິກພາຍໃນ ສຳລັບການຕັດສິນໃຈເພື່ອການສ້າງການບໍລິການທີ່ມີຜົນປະໂຫຍດ | ຮຽກຮ້ອງໃຫ້ມີການເຂົ້າຮ່ວມຂອງພາກສ່ວນທີສາມ ໃນຂໍ້ຕົກລົງ ຊຶ່ງເປັນການ ຊ່ວຍຂໍ້ຕົກລົງແຕ່ຍັງຕ້ອງໄດ້ລວມເອົາຜູ້ເຂົ້າຮ່ວມອື່ນ ເພື່ອໃຫ້ເປັນຂໍ້ຕົກລົງປະສົມ ແລະ ໝາກຜົນດັ່ງກ່າວອາດເຮັດໃຫ້ມີຜູ້ຕ່າງໜ້າຈາກພາກສ່ວນອື່ນກ່ວາພາກສ່ວນຫຼັກ ຖ້າຜູ້ເຂົ້າຮ່ວມທ້ອງຖິ່ນຫາກບໍ່ມີພຽງພໍໃນການເຂົ້າຮ່ວມການເຈລະຈາ. |

ເມື່ອກິດຈະກຳຂອງສະຖາບັນການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ບໍ່ສາມາດເຊື່ອມຕໍ່ໂດຍກົງກັບ ລາຍຮັບດ້ານການເງິນ, ການຊອກຫາແຫລ່ງທຶນເຫັນວ່າ ມີຄວາມຫຍຸ້ງຍາກຫຼາຍ. ເຖິງຢ່າງໃດກໍ່ຕາມ ເຫັນໄດ້ວ່າມີຫລາຍທາງເລືອກ. ໃນບາງກໍລະນີ ປະເທດທີ່ຢູ່ແຄມນ້ຳໃນອ່າງທີ່ຮັ່ງມີ ອາດເລືອກ ເພື່ອປະກອບສ່ວນຊ່ວຍຢ່າງບໍ່ສົມສ່ວນ ຕໍ່ການບໍລິຫານງານຂອງ ສະຖາບັນທີ່ໃຊ້ຮ່ວມກັນ ໃນທິດທາງທີ່ແທດເໝາະ ຫລື ຍ້ອນຄວາມຕ້ອງການຫລາຍທີ່ບໍ່ເທົ່າກັນ ທີ່ມີສຳລັບ ສິ່ງແວດລ້ອມ ແລະ ການບໍລິການ ທີ່ໄດ້ຈາກການຮ່ວມມືໃນການຄຸ້ມຄອງ. ຄ້າຍຄືກັນ ປະເທດທີ່ຢູ່ແຄມແມ່ນ້ຳຕອນລຸ່ມ ແມ່ນບາງເທື່ອມີຄວາມສາມາດໃນການປະກອບສ່ວນ ທີ່ບໍ່ສົມສ່ວນນີ້ ຕໍ່ສະຖາບັນການຄຸ້ມຄອງ ເພາະວ່າເຂົາເຈົ້າເຫັນຜົນປະໂຫຍດທີ່ໃຫຍ່ຫລວງ. ສິ່ງດັ່ງກ່າວ ເປັນກໍລະນີໃນການບໍລິຫານງານ ທີ່ມີຫລາຍສະຖາບັນການຈັດຕັ້ງຂ້າມຜ່ານຊາຍແດນ ທີ່ພົວພັນກັບ ການຜະລິດພະລັງງານໄຟຟ້າ, ການຕິດຕາມຄຸນນະພາບນ້ຳ ແລະ ນ້ຳຖ້ວມ.

ຕົວຢ່າງເຫລົ່ານີ້ ອາດກ້າວໄປສູ່ ແນວຄວາມຄິດຂອງ ການຈ່າຍສຳລັບການບໍລິການທາງລະບົບນິເວດ. ໃນຂະນະທີ່ ການຈ່າຍສຳລັບການບໍລິການທາງລະບົບນິເວດ [27] ໄດ້ຮັບຄວາມນິຍົມນຳໃຊ້ເພີ້ມຂື້ນ ໃນລະດັບຊາດ, ແຕ່ສິ່ງເຫລົ່ານີ້ ຍັງບໍ່ທັນໄດ້ຖືກສືບເນື່ອງ ຄືກັນກັບ ຍຸດທະສາດສຳລັບການເງິນ ຫລື ການພັດທະນາ ສະຖາບັນການຈັດຕັ້ງນ້ຳຂ້າມຜ່ານຊາຍແດນ.ວິທີທາງໜຶ່ງທີ່ອາດເປັນໄປໄດ້ ຈາກແນວຄວາມຄິດຂອງ ປະເທດທີ່ກຳລັງພັດທະນາ ແມ່ນຕ້ອງໄດ້ໃຫ້ລາຍລະ ອຽດໝາກຜົນ ຂອງການຮ່ວມມືໃນການຄຸ້ມຄອງ ຄືກັນກັບ ຊັບສົມບັດ ສາທາລະນະ ແລະສາກົນ - ບົນພື້ນຖານ ຜົນບວກໄດ້ຮັບທາງສິ່ງແວດລ້ອມ, ຄວາມໝັ້ນຄົງລະດັບພາກພື້ນ ຫລື ປັດໃຈອື່ນໆ - ອາດເລືອກເອົາ ຜູ້ເຂົ້າຮ່ວມສາກົນ ແລະ ທີ່ບໍ່ໄດ້ເປັນສະມາຊິກຂອງອ່າງແມ່ນ້ຳ ເຂົ້າຮ່ວມເພື່ອປະກອບສ່ວນ. ຕົວຢ່າງ ວິທີທາງຂອງ 'ການຈ່າຍສຳລັບລະບົບນິເວດ ແລະ ການຮັບປະກັນການບໍລິການ' ອາດຊ່ວຍຍ້າຍ ວິທີທາງການເງິນ ຈາກຮູບແບບ ຜູ້ໃຫ້ທຶນຫລັກ - ຜູ້ຮັບ, ຕໍ່ກັບຮູບແບບ ຜູ້ໃຫ້ການບໍລິການ-ຜູ້ຊົມໃຊ້ ທີ່ໄດ້ສ້າງຂື້ນເພື່ອຄວາມເທົ່າທຽມຂອງຄູ່ຮ່ວມງານ. ແຕ່ເຖິງຢ່າງໃດກໍຕາມ ມັນຍັງເປັນສິ່ງສຳຄັນ ທີ່ຄວນລວມເອົາຫລາຍຫລາຍ ຜູ້ເຂົ້າຮ່ວມໃນລະດັບທ້ອງຖິ່ນ ເຂົ້າໃນຂະບວນການຕັດສິນບັນຫາ ເພື່ອຮັບປະ ກັນວ່າ ຜົນຂອງຂໍ້ຕົກລົງ ແລະການບໍລິຫານການເງິນ ໄດ້ຖືກສະໜັບສະໜູນຢ່າງກ້ວາງຂວາງ.



# ໝວດທີ 6

## ການຈັດຕັ້ງປະຕິບັດ ການຮ່ວມມື ໃນການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ

ການຈັດຕັ້ງປະຕິບັດ ການຄຸ້ມຄອງຊັບພະຍາກອນນ້ຳ ຂ້າມຜ່ານຊາຍແດນ ແມ່ນຈະເປັນ ສິ່ງທ້າທາຍເລື້ອຍໆ, ທັ້ງໆທີ່ມີຜົນປະໂຫຍດຮ່ວມກັນຢ່າງຈະແຈ້ງ, ເສີມສ້າງຄວາມເຂັ້ມແຂງຂອງ ຜູ້ທີ່ມີສ່ວນຮ່ວມ ແລະກອບນະໂຍບາຍ ຢ່າງແຂງແຮງ. ການຈັດຕັ້ງການປົກຄອງອ່ອນແອ, ຂາດການຊຸກຍູ້ຜັກດັນທາງການເມືອງ, ຂາດສິ່ງຈູງໃຈໃຫ້ແກ່ທັງ ສະຖາບັນການຈັດຕັ້ງແລະບຸກຄົນ, ຫລື ການປ່ຽນແປງສະພາບການ, ແນວຄວາມຄິດ ແລະ ບູລິມະສິດແບບງ່າຍດາຍ ສາມາດເຮັດໃຫ້ການ ຈັດຕັ້ງປະຕິບັດບໍ່ໄດ້ດີ ທັງທີ່ມີການວາງແຜນງານທີ່ດີ. ເພື່ອບັນລຸໄດ້ທຸກໆ ສິ່ງທ້າທາຍຮຽກຮ້ອງ ໃຫ້ມີຄວາມລະມັດລະວັງ, ຫົວຄິດປະດິດສ້າງ, ແລະ ດັດປັບໄດ້.

*“ການຈັດຕັ້ງປະຕິບັດ ການຄຸ້ມຄອງຊັບພະຍາກອນນ້ຳ ຂ້າມຜ່ານຊາຍແດນ ແມ່ນຈະເປັນສິ່ງທ້າທາຍເລື້ອຍໆ”*

### *6.1. ບົດບາດຂອງການຈັດຕັ້ງປະຕິບັດການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ*

ສາມຂັ້ນຕອນທີ່ກວມລວມໄດ້ອະທິບາຍເຖິງການປະສານງານໃນການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ (ເບິ່ງໝວດທີ1)

***ໄລຍະທີ 1 - ສ້າງແຮງຈູງໃຈ:*** ຕາມແບບດັ້ງເດີມ, ບັນດາລັດຕ່າງໆ ໄດ້ເນັ້ນໜັກໃສ່ ການພັດທະນານ້ຳ ພາຍໃນເຂດຄຸ້ມຄອງຂອງເຂົາເຈົ້າເອງ. ການປະສານງານໃນການຄຸ້ມຄອງນ້ຳ ຂ້າມຜ່ານຊາຍແດນ ຮຽກຮ້ອງໃຫ້ມີການປ່ຽນຈຸດສູມທີ່ສຳຄັນ, ຄ່າໃຊ້ຈ່າຍ ແລະ ຄວາມພະຍາຍາມເພື່ອສ້າງຄວາມ ເຊື່ອໝັ້ນທີ່ຈຳເປັນ, ການຮ່ວມມື ແລະ ສະຖາບັນການຈັດຕັ້ງ. ປະເທດໃກ້ຄຽງຕິດກັບແມ່ນ້ຳ ບາງຄັ້ງ ກັບການສະໜັບສະໜູນຂອງ ຝ່າຍທີ່ 3 ກຸ່ມອິດສະລະ ຕ້ອງມີຄວາມຕັ້ງໃຈໃນການລິເລີ້ມຂະບວນການນີ້. ສ່ວນໃຫຍ່ ຂໍ້ຂັດແຍ່ງທີ່ມີຢູ່ ຫລື ຄວາມຕ້ອງການ ເພື່ອສະກັດກັ້ນການເກີດຂໍ້ຂັດແຍ່ງ, ສ້າງຄວາມຕັ້ງໃຈຂອງ ບັນດາລັດ ເພື່ອ ເລີ້ມຂະບວນການປຶກສາຫາລື ແລະເຈລະຈາ. ເຖິງຢ່າງໃດກໍຕາມ ພາກປະຕິບັດໄດ້ຮັບຮູ້ຜົນປະໂຫຍດຮ່ວມກັນຢ່າງຫລວງຫລາຍ (ດ້ານເສດຖະກິດ, ສິ່ງແວດລ້ອມ,ການເມືອງທາງພູມສາດ, ອື່ນໆ) ທີ່ໄດ້ມາຈາກ ແລະ ການນຳໃຊ້ຮ່ວມກັນ ຈາກການສົ່ງເສີມການຮ່ວມມື ໃນການຄຸ້ມຄອງຊັບພະຍາກອນນ້ຳໃນລະດັບອ່າງ. ສະພາບການປ່ຽນແປງດິນຟ້າອາກາດ ກັບຄວາມບໍ່ແນ່ນອນ ແລະສິ່ງທ້າທາຍ ທີ່ມີຕໍ່ການຄຸ້ມຄອງນ້ຳ ຈະເພີ້ມເຕີມຄວາມສຳຄັນຂອງ - ແລະ ພາກປະພຶກສຳລັບ - ເສີມສ້າງການຮ່ວມມືຂອງອ່າງແມ່ນ້ຳ.

***ໄລຍະ 2 - ການອອກແບບ:*** ເມື່ອລັດຕ່າງໆ ໄດ້ຕົກລົງເພື່ອຄິດຕາມ ການຮ່ວມມື ໃນການຄຸ້ມຄອງນ້ຳ, ຮູບແບບຂອງການຮ່ວມມືຈະຕ້ອງໄດ້ສ້າງຂຶ້ນ ແລະ ອອກແບບ. ມັນໄດ້ມີຫລາຍວິທທາງ ເຊິ່ງບັນດາປະເທດແຄມແມ່ນ້ຳ ສາມາດສົ່ງເສີມການຮ່ວມມື, ຈາກການແລປ່ຽນຂໍ້ມູນແບບງ່າຍດາຍ ໃຫ້ແກ່ສົນທິສັນຍາທີ່ໄດ້ສັດທະຍາບັນ ແລະຮ່ວມກັນກັບຫລາຍສະຖາບັນ ແລະ ການລົງທຶນດ້ານ ການກໍ່ສ້າງໂຄງລ່າງ. ລະດັບທີ່ແທດເໝາະ ແລະຮູບແບບການຮ່ວມມື ຈະສ່ົງຜົນຢ່າງຫລວງຫລາຍ ໃຫ້ແກ່ທຳມະຊາດ ແລະຂະໜາດ ຂອງຜົນປະໂຫຍດທີ່ເປັນທ່າແຮງ ທີ່ສາມາດຍາດໄດ ໂດຍການຮ່ວມມື

ແລະ ລວມຄ່າໃຊ້ຈ່າຍ. ສະນັ້ນ ບັນດາລັດຕ່າງໆ ແລະຜູ້ມີສ່ວນຮ່ວມ ຕ້ອງໄດ້ເຂົ້າຮ່ວມໃນການປຶກສາຫາລື ຫລາຍຝ່າຍ ເພື່ອກໍານົດຄວາມຫລາກຫລາຍທີ່ຄົບຊຸດຂອງຜົນປະໂຫຍດ ແລະຄວາມສ່ຽງ ( ດ້ານເສດຖະກິດ, ສັງຄົມ ແລະ ດ້ານສິ່ງແວດລ້ອມ). ເມື່ອເປົ້າໝາຍຂອງການຮ່ວມມືໄດ້ຈະແຈ້ງຂື້ນຕື່ມ ຄວາມຈໍາເປັນທາງດ້ານໂຄງສ້າງການຈັດຕັ້ງທັງເປັນທາງ ການ ແລະ ບໍ່ເປັນທາງການ, ທາງກົດໝາຍ ແລະຜ່ານຂະບວນການປຶກສາຫາລື ສາມາດເຈລະຈາ ແລະອອກແບບໄດ້.

***ໄລຍະ3 - ການຈັດຕັ້ງປະຕິບັດ:*** ຄືດັ່ງທີ່ຮັບຮູ້ວ່າ ສິ່ງທີ່ທ້າທາຍ ໄດ້ຂື້ນກັບຂະໜາດຂອງຂໍ້ຕົກລົງ, ຖ້າການສ້າງຂໍ້ຕົກລົງທີ່ໃຫຍ່ໂຕ ມັກຈະມີສິ່ງທ້າທາຍຫລາຍຂື້ນ ເພື່ອຈັດຕັ້ງປະຕິບັດ ສິ່ງດັ່ງກ່າວໃຫ້ມີປະສິດທິຜົນ. ການຈັດຕັ້ງປະຕິບັດ ຮຽກຮ້ອງໃຫ້ມີພັນທະທີ່ແທ້ຈິງ ຈາກ ລັດຖະບານ ແລະຜູ້ມີສ່ວນຮ່ວມຕ່າງໆ, ແລະມີຄວາມຫຍຸ້ງຍາກທີ່ຈະດຸນດ່ຽງ ລະຫວ່າງຜູ້ຖືຫລັກການ ຕໍ່ກັບພັນທະລະບຽບໃດໜຶ່ງສະເພາະ ໃນຂະນະທີ່ ມີຫລາຍຮູບແບບການບໍລິຫານຈັດການ ທີ່ເໝາະສົມໃນການປະຕິບັດ ແລະປັບເຂົ້າໃນການປ່ຽນແປງຕາມສະພາບການ.

*" ການຈັດຕັ້ງປະຕິບັດ ຕ້ອງການພັນທະທີ່ແທ້ຈິງຈາກບັນດາລັດຖະບານ ແລະ ຜູ້ມີສ່ວນຮ່ວມ"*

## *6.2 ການບໍລິຫານ ການຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ*

ມັນບໍ່ພຽງທີ່ຈະປະກາດຫລັກການ ແລະລະບຽບການ ຢ່າງງ່າຍດາຍ ໃນຂໍ້ຕົກລົງໃດໜຶ່ງ; ຂໍ້ຕົກລົງຕ້ອງໄດ້ຖືກຈັດການຜ່ານຂະບວນການຈັດຕັ້ງປະຕິບັດທີ່ແນ່ນອນ. ຂະບວນການບໍລິຫານດັ່ງກ່າວ ແມ່ນມີຄວາມສໍາຄັນຕໍ່ ຜົນປະໂຫຍດຂອງ ການປະສານງານ ໃນການຄຸ້ມຄອງອ່າງແມ່ນໍ້າຂ້າມຜ່ານຊາຍແດນ. ມັນຄວນເປັນຂະບວນທີ່ຖືກສ້າງຂຶ້ນທີ່ດີທີ່ຊອກຫາເພື່ອກໍານົດ ແລະຈັດລຽງ ຄວາມສົນໃຈຂອງອໍານາດການປົກຄອງລັດ ແລະຄວາມສົນໃຈຂອງຜູ້ມີສ່ວນຮ່ວມ.[28] ລັກສະນະຂອງການຈັດຕັ້ງປະຕິບັດແມ່ນຂື້ນກັບລັກສະນະຂອງຂໍ້ຕົກລົງ, ແລະ ດ້ານເນື້ອໃນຂອງອ່າງແມ່ນໍ້າ ທາງການເມືອງ, ເສດຖະກິດ ແລະ ສິ່ງແວດລ້ອມ.

ການຈັດຕັ້ງປະຕິບັດ ຂໍ້ຕົກລົງສາກົນ ແມ່ນໄດ້ກໍານົດໂດຍທົ່ວໄປຄືກັນກັບ ກິດຈະກໍາທີ່ ລັດໃດໜຶ່ງຄວນດໍາເນີນ ເພື່ອບັນລຸໄດ້ພັນທະຂອງຕົນ ແລະ ເພື່ອໄດ້ຮັບຜົນຕາມຈຸດປະສົງ ແລະ ເປົ້າໝາຍຂອງສົນທິສັນຍາ.[29] ສະນັ້ນ, ການຈັດຕັ້ງປະຕິບັດ ໄດ້ພົວພັນທັງ ລະບຽບການໃນການຈັດຕັ້ງປະຕິບັດ ແລະ ເປົ້າໝາຍທີ່ຕ້ອງໄດ້ຮັບ, ທີ່ໄດ້ສົນທະນາໃນໝວດທີ 5.

ເພື່ອປະຕິບັດໃຫ້ໄດ້ຕາມພັນທະຂອງພວກເຂົາເຈົ້າ, ບັນດາລັດ ອາດຮຽກຮ້ອງໃຫ້ ຍຶດຖື ພາກປະຕິບັດໃດໜຶ່ງທີ່ແນ່ນອນ, ຢຸດເຊົາຈາກ ຫລືດໍາເນີນກິດຈະກໍາໃດໜຶ່ງ (ເຊັ່ນການແລກປ່ຽນຂໍ້ມູນ, ການແຈ້ງເຕືອນ ຫຼື ສ້າງຄວາມພະຍາຍາມທີ່ດີ ເພື່ອເຂົ້າຮ່ວມໃນການປຶກສາຫາລື ຕາມເວລາ ຂອງໂຄງການໃດໜຶ່ງທີ່ແນ່ນອນ), ເພື່ອໃຫ້ໄດ້ຮັບໝາກຜົນສະເພາະ (ເຊັ່ນ ການຮັກສາ ປະລິມານ ຫຼື ຄຸນນະພາບນໍ້າ ໃຫ້ໄດ້ມາດຕະຖານທີ່ໄດ້ຕົກລົງກັນ), ຫຼື ດໍາເນີນການພັດທະນາຮ່ວມ ຫຼື ແຜນ ການພັດທະນາອ່າງແມ່ນໍ້າ.[30]

ຄວາມບໍ່ສໍາເລັດໃນການຈັດຕັ້ງປະຕິບັດຂໍ້ຕົກລົງ ເພື່ອປະຕິບັດຕາມຂໍ້ກໍານົດດັ່ງກ່າວ ຫລື ເພື່ອປະຕິບັດໃຫ້ໄດ້ເປົ້າໝາຍ ເຊິ່ງມີຜົນຕາມມາທາງ ກົດໝາຍ ແລະ ການເມືອງ ຢ່າງຈິງຈັງ. ມັນໄດ້ມີຄວາມແຕກຕ່າງ ທາງການພົວພັນຢ່າງກ້ວາງຂວາງ ລະຫວ່າງລັດຕ່າງໆ - ລັດທີ່ມີນໍ້າ ທີ່ຍັງຈະຮັກສາການແບ່ງປັນ - ແລະ ບໍ່ໄດ້ຊຸກຍູ້ ຄວາມພະຍາຍາມໃນ

ການຮ່ວມມືໃນອານາຄົດ. ສິ່ງດັ່ງກ່າວ ສາມາດເຮັດໃຫ້ ບໍ່ເຫັນຄວາມສຳຄັນຂອງ ພື້ນຖານຂອງການຮ່ວມມືຂອງຫລາຍຝ່າຍ, ແລະເຮັດໃຫ້ເກີດຂໍ້ຂັດແຍ່ງໃໝ່.[31]

ເປົ້າໝາຍລວມຂອງຂໍ້ຕົກລົງອ່າງແມ່ນ້ຳຂ້າມຜ່ານຊາຍແດນ ແມ່ນເພື່ອປັບປຸງ ປະສິດທິຜົນ ແລະ ຄວາມສະເໝີພາບ ໃນການຄຸ້ມຄອງ ຊັບພະຍາກອນນ້ຳໃນລະດັບອ່າງແມ່ນ້ຳ ເພື່ອໃຫ້ໄດ້ຮັບສິ່ງດັ່ງກ່າວ ຮຽກຮ້ອງໃຫ້ ມີການຮ່ວມມື ແລະຈັດຕັ້ງປະຕິບັດ ການວາງແຜນ, ການພັດທະນາ, ແລະການຄຸ້ມຄອງ ແລະ ອະນຸລັກຊັບພະຍາກອນທີ່ພົວພັນກັບນ້ຳ ແລະນຳໃຊ້ຮ່ວມກັນໂດຍວິທີການຮ່ວມມື ແລະປະສົມປະສານ, ສອດຄ່ອງກັບ ສົນທິສັນຍາສາກົນ ແລະ ກົດໝາຍລະດັບຊາດ, ນະໂຍບາຍ, ຈຸດປະສົງ ແລະ ເປົ້າໝາຍ.[32]

ແມ່ນຫຍັງສາມາດພົບເຫັນໄດ້ ຈາກນິຍາມນີ້ ທີ່ການບໍລິຫານການປົກຄອງນ້ຳຂ້າມຜ່ານຊາຍແດນ ພາຍໃນອ່າງແມ່ນ້ຳຂະໜາດໃຫຍ່ ແມ່ນມີລັກສະນະຄົບຊຸດຢ່າງໃຫຍ່ຫລວງ. ຄຳວ່າເຊັ່ນ: ປະສານງານ, ສົ່ງເສີມ, ຈັດຕັ້ງປະຕິບັດ, ທີ່ມີການພົວພັນກັບນ້ຳ, ການເຂົ້າຮ່ວມ, ປະສົມປະສານ ແລະ ສອດຄ່ອງທັງໝົດນີ້ ແມ່ນນຳສະເໜີເພື່ອແປ. ບໍ່ມີຂໍ້ແນະນຳໂດຍກວມລວມ ສຳລັບການແປຄຳສັບດັ່ງກ່າວ. ໃນເວລາທີ່ ສິ່ງດັ່ງກ່າວໄດ້ນຳມາ ເພື່ອສ້າງກອບໜ້າວຽກ ສຳລັບການຄຸ້ມຄອງຊັບພະຍາກອນນ້ຳ ໃນລະດັບອ່າງແມ່ນ້ຳ, ສະນັ້ນ ມັນເປັນສິ່ງຈຳເພື່ອສ້າງຄວາມເຊື່ອໝັ້ນ ແລະ ສ້າງວິໄສທັດທີ່ໃຊ້ຮ່ວມກັນ ຂອງເປົ້າໝາຍ ຂອງບັນດາລັດຕ່າງໆ.

ແມ່ນຫຍັງເປັນ ອົງປະກອບຫລັກ ສຳລັບການຈັດຕັ້ງປະຕິບັດທີ່ປະສົບຜົນສຳເລັດ ຂອງຂໍ້ຕົກລົງ ໃນການຮ່ວມມືການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ? ພວກເຮົາສາມາດເສີມສ້າງຄວາມເຂັ້ມແຂງ ດ້ານຈັດຕັ້ງປະຕິບັດໄດ້ ດ້ວຍວິທີໃດ, ແລະ ພວກເຮົາສາມາດວັດແທກຜົນສຳເລັດໄດ້ ດ້ວຍວິທີໃດ ?

## *6.3 ອົງປະກອບຫລັກຂອງການຈັດຕັ້ງປະຕິບັດທີ່ມີປະສິດທິພາບ*

ຈາກອ່າງແມ່ນ້ຳໜຶ່ງໄປສູ່ອີກອ່າງໜຶ່ງ ໄດ້ມີກອບ ແລະ ຂະໜາດ ທີ່ແຕກຕ່າງກັນ ສຳລັບການຈັດການ ໃນການຄຸ້ມຄອງອ່າງແມ່ນ້ຳຂ້າມຜ່ານຊາຍແດນ. ແຕ່ວ່າ ມັນຍັງມີຫຼາຍອົງປະກອບທີ່ສຳຄັນທີ່ຈະຕ້ອງໄດ້ແກ້ໃຂ ໃນເວລາຈັດຕັ້ງປະຕິບັດຂໍ້ຕົກລົງຕ່າງໆ ເພື່ອການຄຸ້ມຄອງຊັບພະຍາກອນນ້ຳ ໃນອ່າງໃດໜຶ່ງໃຫ້ຍືນຍົງ. ສິ່ງດັ່ງກ່າວໄດ້ລວມມີ:

- ການປົກຄອງ
- ການຄຸ້ມຄອງຂໍ້ມູນຄວາມຮູ້
- ການເຂົ້າຮ່ວມ
- ການຕິດຕາມກວດກາ
- ການຄຸ້ມຄອງທີ່ປັບຕົວໄດ້

### *6.3.1 ການບໍລິຫານການປົກຄອງ: ສະຖາບັນການຈັດຕັ້ງ, ກົດລະບຽບ ແລະ ການຄຸ້ມຄອງ*

ອົງປະກອບທຳອິດທີ່ສຳຄັນ ແມ່ນການບໍລິຫານປົກຄອງ - ລະບົບການເມືອງ, ສັງຄົມ, ເສດຖະກິດ ແລະ ການບໍລິຫານ ທີ່ພັດທະນາ, ຄຸ້ມຄອງ ຊັບພະຍາກອນນ້ຳ ແລະ ການໃຫ້ການບໍລິການນ້ຳ.[33] ການບໍລິຫານການປົກຄອງແມ່ນຕ້ອງໄດ້ຊີ້ແຈ້ງຢ່າງຈະແຈ້ງຜ່ານການຈັດຕັ້ງສະຖາບັນ ດັ່ງທີ່ໄດ້ກຳນົດໃນສົນທິສັນຍາ, ອົງການຈັດຕັ້ງ, ຂະບວນການ ແລະ ກົດລະບຽບໃນການຄຸ້ມຄອງ, ແຕ່ວ່າສຳຄັນກວ່ານັ້ນ ການບໍລິຫານປົກຄອງ ຍັງຕ້ອງໄດ້ພົວພັນເຖິງ ຜົນການຈັດຕັ້ງປະຕິບັດ ຂໍ້ຕົກລົງດັ່ງກ່າວ.

ເພື່ອເຮັດໃຫ້ມີປະສິດທິຜົນ, ລະບົບດັ່ງກ່າວນີ້ ຕ້ອງມີສ່ວນຮ່ວມ (ລວມເອົາທຸກຜູ້ມີສ່ວນຮ່ວມທີ່ແທດເໝາະ), ເຊື່ອຖືໄດ້ (ໂດຍເບິ່ງ ດ້ານສິດທິ ແລະຄວາມຮັບຜິດຊອບ ຂອງທຸກພາກສ່ວນ) ແລະດັດປັບໄດ້ ຕໍ່ການປ່ຽນແປງຂອງສະຖານະພາບ.34 ແຜນການເງິນທີ່ຖືກຕ້ອງ ແລະ ກົນໄກການແກ້ໄຂ ການຖົກຖຽງ ແບບພົ້ນຄົງ ມີ 2 ສິ່ງທ້າທາຍຂອງການບໍລິຫານປົກຄອງ ທີ່ສຳຄັນສຳລັບການຈັດຕັ້ງປະຕິບັດທີ່ມີປະສິດທິຜົນ. ດັ່ງທີ່ໄດ້ສົນທະນາໃນບົດທີ່ 5, ໂຄງສ້າງ ຂອງສະຖາບັນທີ່ແທດເໝາະ, ທັງແບບທາງການແລະບໍ່ເປັນທາງການ, ຈະເຮັດໃຫ້ໄດ້ຮັບເປົ້າໝາຍສະເພາະຂອງການຮ່ວມມືຂ້າມຜ່ານຊາຍແດນ ແລະ ບົນເນື້ອໃນທີ່ມີເອກະລັກສະເພາະ ເຊິ່ງສິ່ງດັ່ງກ່າວໄດ້ຈັດຕັ້ງ ປະຕິບັດ.

ຕົວຢ່າງທີ່ດີ ຂອງວິວັດທະນາການຂອງ ການປົກຄອງຂ້າມຜ່ານຊາຍແດນ ຜ່ານການຈັດຕັ້ງປະຕິບັດຂໍ້ຕົກລົງສາກົນ ດ້ານການຄຸ້ມຄອງນ້ຳ ແມ່ນການພັດທະນາການຮ່ວມມື ທີ່ມີຜົນປະໂຫຍດຮ່ວມກັນ ກັບຫຼາຍກວ່າ 150 ແມ່ນ້ຳ ແລະ ສາຍນ້ຳ ຕາມແຄມຊາຍແດນ ການາດາ ແລະ ສະຫະລັດ ອາເມລິກາ ໃນຄວາມຍາວ 8,900 ກມ.35 ສົນທິສັນຍາເຂດຊາຍແດນນ້ຳ ປີ 1909 ແມ່ນກອບນະໂຍບາຍຂໍ້ຕົກລົງ ທີ່ໄດ້ວາງພື້ນຖານຫລັກການ ແລະ ຂະບວນທີ່ໄດ້ບໍລິຫານ ການນຳໃຊ້ນ້ຳທັງໝົດໃນເຂດຊາຍແດນ ລະຫວ່າງ 2 ປະເທດ, ໂດຍສະເພາະ ບົນພື້ນຖານປະລິມານ ແລະ ຄຸນນະພາບ ຂອງນ້ຳ, ການເດີນເຮືອ ແລະ ການແກ້ໄຂຂໍ້ຂັດແຍ່ງ. ພາຍໃນກອບນະໂຍບາຍທາງກົດໝາຍ, ສອງປະເທດໄດ້ເຂົ້າຮ່ວມ ໃນຫລາຍລາຍລະອຽດ ການຈັດຕັ້ງປະຕິບັດຂໍ້ຕົກລົງ (ເບິ່ງກໍລະນີ 6.1).

ບົດອະທິບາຍ 6.1 ອົງປະກອບຫລັກ ຂອງສົນທິສັນຍາ ລະຫວ່າງ ສະຫະລັດອາເມລິກາ ແລະ ການາດາໄດ້ເຊື່ອມເຂົ້າຢູ່ໃນກອບແຜນງານຂອງສົນທິສັນຍານ້ຳຂ້າມຜ່ານຊາຍແດນ ປີ 1909

ຂໍ້ຕົກລົງລະດັບຊາດ

- ສົນທິສັນຍາ ແມ່ນ້ຳ ຫວູດປີ 1925
- ສົນທິສັນຍາ ແມ່ນ້ຳ ແຣນນ ປີ 1939
- ສົນທິສັນຍາ ການຜັນນ້ຳ ເນຍກາລາ ປີ 1950
- ຂໍ້ຕົກລົງ ເສັ້ນທາງໃນການເດີນເຮືອ ປີ 1954
- ສັນຍາແມ່ນ້ຳໂຄລຳເບຍ 1961
- ຂໍ້ຕົກລົງໃນການສ້າງເຂດຄຸນນະພາບນ້ຳ 1972

ຂໍ້ຕົກລົງຄຸນນະພາບຂອງອາກາດ 1991ສະພາບຂອງຂໍ້ຕົກລົງ

- ປີ 2005 ຂໍ້ຕົກລົງໃນການສ້າງພື້ນທີ່ເສັ້ນທາງເດີນເຮືອ ເພື່ອຄວາມຍືນຍົງຂອງ ຊັບພະຍານ້ຳໃນອ່າງແມ່ນ້ຳ ລະຫວ່າງ 8 ເຂດປົກຄອງໃນອາເມລິກາ ແລະ ແຂວງຂອງ ອອນຕາລີໂອ( Qntario ) ແລະ ຄິວເບັກ (Qeubec)
- ປີ 2005 ການສ້າງສະຖານທີ່ເສັ້ນທາງເດີນເຮືອ ຊັບພະຍາກອນນ້ຳໃນອ່າງແມ່ນ້ຳ

ກຳມາທິການຮ່ວມສາກົນ ໄດ້ສ້າງຕັ້ງຂື້ນພາຍໃຕ້ກອບນະໂຍບາຍ ຂອງສົນທິສັນຍານ້ຳຂ້າມຜ່ານຊາຍແດນ ໄດ້ຖືກຢັ້ງຢືນວ່າສາມາດປັບຕົວໄດ້ສູງ. ຜ່ານເວລາຫລາຍທົດສະວັດ ໃນການບໍລິຫານງານ ທີ່ມີຜົນສຳເລັດ, ສິ່ງດັ່ງກ່າວໄດ້ຖືກເສີມຂະຫຍາຍ ພາລະບົດບາດຢ່າງມີປະສິດທິຜົນ ຕາມເຂດຊາຍແດນ, ເພື່ອຄຸ້ມຄອງການຈັດຕັ້ງປະຕິບັດ ຂອງການແບ່ງປັນນ້ຳ ແລະ ການຄຸ້ມຄອງຄຸນນະພາບນ້ຳແບບຄົບຊຸດ, ແລະ ການພັດທະນາ ແລະ ຄຸ້ມຄອງເຂດຊາຍແດນຊັບ ພະຍາກອນນ້ຳ.

ເຊັ່ນດຽວກັນ ກອບນະໂຍບາຍທາງກົດໝາຍ ທີ່ໄດ້ນຳໃຊ້ເປັນເວລາຍາວນານ ໄດ້ມີການພັດທະນາບົນພື້ນຖານ ກຳມາທິການສາກົນ ສຳລັບການປົກປັກຮັກສາແມ່ນ້ຳ ຣາຍເນີ (Rhine) ຊີ້ງວ່າມີປະສົບການດ້ານການຂະຫຍາຍຕົວໃນ ກອບຂອງການຄຸ້ມຄອງຄຸນະພາບນ້ຳແບບດັ້ງເດີມ ແລະ ພາລະບົດບາດໃນການ ຄວບຄຸມມົນລະພິດ ກ້າວໄປເຖິງພາລະ ບົດບາດ ໃນການປ້ອງກັນລະບົບນິເວດ ແລະ ການປ້ອງກັນນ້ຳຖ້ວມ ຢ່າງກ້ວາງຂວາງ.[36] contours ທີ່ແນ່ນອນ ຂອງ ການຂະຫຍາຍພາລະບົດບາດ ແມ່ນຈະເປັນຕົ້ນຕໍຂອງການທົບທວນ ຢ່າງເປັນປະຈຳ ແລະ ການພັດທະນາ ທີ່ມີຄວາມ ຄືບໜ້າຂອງ ພື້ນຖານຂອງຂໍ້ຕົກລົງ, ສົນທິສັນຍາ ສຳລັບການປ້ອງກັນ ແມ່ນ້ຳ ຣາຍເນີ ( Rhine) ປີ 1996 ໄດ້ຕໍ່ຕ້ານມົນ ລະພິດ ຈາກການນຳໃຊ້ສານເຄມີ.[37]

ຍັງມີຫລາຍໆຕົວຢ່າງ ຂອງອົງການຄຸ້ມຄອງອ່າງແມ່ນ້ຳ ທີ່ໄດ້ມີຄວາມຄືບໜ້າກັບພາລະບົດບາດ ການປົກຄອງ ລະດັບອ່າງ ທີ່ວາງໄວ້ສູງ, ແຕ່ກຳລັງພົບກັບສິ່ງທ້າທາຍ ຢ່າງຈິງຈັງ ໃນການຈັດຕັ້ງປະຕິບັດ ແລະ ພັນທະທາງການເມືອງ ລະຫວ່າງຫລາຍລັດ.[38]

ແມ່ນ້ຳຂອງແມ່ນເປັນຕົວຢ່າງຂອງຮູບແບບທີ່ປະສົມແຕ່ວ່າມີການພັດທະນາຢ່າງຕໍ່ເນື່ອງ ພ້ອມທັງໝາກຜົນ.[39] ໃນຊ່ວງໄລຍະ 10 ປີຜ່ານມາ ສະມາຊິກພາຄີໃນຂໍ້ຕົກລົງ ແມ່ນ້ຳຂອງປີ 1995 (ເບິ່ງກໍລະນີ 5.1) ໄດ້ເຂົ້າຮ່ວມໃນ ຫລາຍ ຂໍ້ຕົກລົງຍ່ອຍ, ຂະບວນການ ແລະ ຂໍ້ແນະນຳ ທາງວິຊາການ ອື່ນໆ ຄືກັນກັບຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດ:

- ຂະບວນໃນການແລກປ່ຽນ ແລະ ນຳໃຊ້ຂໍ້ມູນ ແລະ ຂ່າວສານ ຮ່ວມກັນ ໃນປີ 2001;
- ບົດແນະນຳທາງວິຊາການ ດ້ານຄຸ້ມຄອງ ແລະ ຮັກສາລະບົບຂໍ້ມູນຂ່າວສານ ຂອງຄະນະກຳມາທິການ ແມ່ນ້ຳຂອງສາກົນ 2002;
- ຂະບວນການ ໃນການຕິດຕາມການນຳໃຊ້ນ້ຳ (ການນຳໃຊ້ນ້ຳ ພາຍໃນອ່າງແມ່ນ້ຳ ແລະ ການຜັນນ້ຳ ລະຫວ່າງອ່າງ) 2003
- ຂະບວນການໃນການແຈ້ງການ ກ່ອນການປຶກສາຫາລືແລະ ຮ່າງຂໍ້ຕົກລົງ 2003;
- ຂະບວນການ ໃນການຮັກສາ ການໄຫຼວຽນຂອງແມ່ນ້ຳຂອງສາຍຫລັກ 2006;
- ຂະບວນການໃນການຮັກສາຄຸນນະພາບນ້ຳ( ຍັງລໍຖ້າ );

ເຖິງຢ່າງໃດກໍຕາມມີຫຼາຍໆຂໍ້ຕົກລົງໄດ້ມີລັກສະນະກວມລວມຍາກໃນການຈັດຕັ້ງປະຕິບັດ ແລະ ຂາດຄວາມ ລະອຽດໃນກົນໄກບັງຄັບໃຊ້ໃນການຈັດຕັ້ງປະຕິບັດ.[40] ຕົວຢ່າງ ໃນເດືອນມິຖຸນາ 2006 ກອງປະຊຸມຄະນະຊີ້ນຳ ຂອງ ຄະນະກຳມາທິການແມ່ນ້ຳຂອງ (MRC) ສາມາດເຫັນດີພຽງແຕ່ ເພື່ອຕົກລົງດ້ານຂະບວນການເພື່ອຮັກສາ ການໄຫຼຂອງ ແມ່ນ້ຳຂອງ. ຂັ້ນຕອນຈັດຕັ້ງປະຕິບັດຈະແຈ້ງ ແລະ ມີຜົນບັງຄັບໃຊ້ ຍັງແມ່ນຄວາມຕ້ອງການເພື່ອຮັກສາການໄຫລຂອງ ແມ່ນ້ຳເພື່ອສິ່ງແວດລ້ອມ.[41]

ສະຫະພາບຢູໂຣບ EU ໄດ້ປະເຊີນກັບສິ່ງທ້າທາຍ ໃນຄວາມພະຍາຍາມຂອງເຂົາເຈົ້າ ເພື່ອຮັບປະກັນ ການ ຈັດຕັ້ງປະຕິບັດກອບນະໂຍບາຍນ້ຳຂ້າມຜ່ານຊາຍແດນ (WFD) ໃນລະດັບຊາດ (ເບິ່ງກໍລະນີ 4.2). ບັນດາປະເທດແຄມ ຊາຍ ຝັ່ງຂອງ ໄທກຣິດ-ອີລັບເຟຣດ (Tigris-Euphrates) ບໍ່ໄດ້ຮັບຜົນສຳເລັດໃນການສ້າງຕັ້ງ ກົນໃກການປົກຄອງໃນ ລະດັບອ່າງ ທັ້ງທີ່ເຂົາເຈົ້າມີຄວາມພະຍາຍາມສ້າງຫລາຍເທື່ອ (ເບິ່ງ ກໍລະນີ 6.1)

*ກໍລະນີ 6.1 ຄະນະກຳມະການ ວິຊາການຮ່ວມ ຂອງ ໄທກຣິດ-ຢູເຟຣດ ( Tigris-Euphrates) - ຄວາມຫລົ້ມເຫລວ* ***deadlocked*** [42]

ແມ່ນ້ຳໄທກຣິດ - ຢູເຟຣດ( Tigris-Euphrates) ໄດ້ຖືກອ້າງອີງເຖິງເລື້ອຍໆວ່າ ຄວາມສີວິໄລຂອງສອງແມ່ນ້ຳ ທີ່ໃຊ້ຮ່ວມກັນໂດຍ ປະເທດອີລານ, ອີລັກ, ສີເລຍ ແລະ ຕຸລະກີ,ການໄຫຼຂອງນ້ຳເກືອບທັງໝົດໃນແຕ່ລະວັນ ແມ່ນໄຫຼລົງສູ່ທະເລ ໃນສອງແມ່ນ້ຳທີ່ ແຍກກັນ, ແຕ່ໂດຍທົ່ວໄປໄດ້ເບິ່ງເປັນຄື ແມ່ນ້ຳສາຍດຽວ. ສິ່ງດັ່ງກ່າວ ໄດ້ສະແດງໃຫ້ເຫັນ ຄວາມແຕກຕ່າງທີ່ງ່າຍທີ່ໄດ້ພິສູດເຖິງການຈັດຕັ້ງປະຕິບັດການຮ່ວມມືຂ້າມຜ່ານຊາຍແດນໃນອ່າງແມ່ນ້ຳ.

ບໍ່ມີຂໍ້ຕົກລົງ ສຳລັບທົ່ວອ່າງແມ່ນ້ຳ ໃນແມ່ນ້ຳ ໄທກຣິດ-ຢູເຟຣດ (Tigris-Euphrates), ເຖິງແມ່ນວ່າ ຄວາມຄິດຂອງ ຄະນະກຳມະການວິຊາການຮ່ວມ (JTC) ໄດ້ສົນທະນາໂດຍ ອີລັກ, ສີເລຍ, ແລະ ຕຸລະກີ ດັ່ງທີ່ໄດ້ລະບຸ, ໃນຊ່ວງຕົ້ນປີ 1965. ການປຶກສາຫາລືເປັນທາງການ ລະຫວ່າງ ປະເທດອີລານ ແລະ ຕຸລະກີ ໃນການສ້າງຄະນະກຳມະການວິຊາການຮ່ວມ ດ້ານນ້ຳໃນລະດັບພາກພື້ນໃນປີ 1980, ສີເລຍ ເຂົ້າຮ່ວມໃນປີ 1983. ຄະນະກຳມະການວິຊາການຮ່ວມ (JTC) ແມ່ນ ຄະນະກຳມະການຮ່ວມ ຂອງ ຜູ້ຊ່ຽວຊານທີ່ມີ ບົດບາດເພື່ອກຳນົດວິທີການ ແລະ ນິຍາມ ຂອງການນຳໃຊ້ນ້ຳ ທີ່ເໝາະສົມ ສຳລັບແຕ່ລະປະເທດ. ຫຼັງຈາກກອງປະຊຸມ 16 ຄັ້ງ ພວກເຂົາເຈົ້າຍັງບໍ່ສາມາດ ມີຄວາມເປັນເອກະພາບ ໃນດ້ານຫລັກການ ແລະນິຍາມ, ແລະໜ້າວຽກຂອງ JTC ໄດ້ສິ້ນສຸດລົງໃນປີ 1992.

ໜຶ່ງໃນເຫດຜົນຫລັກ ສຳລັບຄວາມບໍ່ປະສົບຜົນສຳເລັດ ແມ່ນການຂາດຄວາມສາມາດ ຂອງສາມປະເທດ ເພື່ອໃຫ້ໄດ້ຂໍ້ຕົກລົງ ຄືກັນກັບ ສອງແມ່ນ້ຳ ໄທກຣິດ-ຢູເຟຣດ (Tigris-Euphrates, ທີ່ພິຈາລະນາເປັນຄື ແມ່ນ້ຳດຽວ, ເຊິ່ງໃນກໍລະນີທີ່ ແມ່ນ້ຳອາດໄດ້ຈັດສັນສຳລັບທົ່ວອ່າງ ຫລື ການສົນທະນາຄວນຈຳກັດພຽງແຕ່ແມ່ນ້ຳ ຢູເຟຣດ (Euphrates).

ບາງການພິຈາລະນາການຮ່ວມມືສາມຝ່າຍ ພາຍໃຕ້ຄະນະຊີ້ນຳນີ້ ບໍ່ໄດ້ຮັບຜົນສຳເລັດ, ທັກທ້ວງວ່າຍ້ອນແນວຄວາມຄິດ ເຫັນທີ່ແຕກຕ່າງກັນອີງໃສ່ໜ້າທີ່ພື້ນຖານຂອງຄະນະກຳມະການວິຊາການຮ່ວມ. ຕູຣະກີ ເປັນປະເທດທີ່ມີຄວາມກ້າວໜ້າ ໃນລະບົບຂໍ້ມູນທາງອຸທົກກະສາດ ແລະ ເສດຖະກິດ, ໄດ້ພິຈາລະນາໃຫ້ ຄະນະກຳມະການ ວິຊາການຮ່ວມ ເປັນອົງການທີ່ປຶກສາ, ໃນເມື່ອຊີເຣຍ ແລະ ອີລານ ຈະສ້າງຂໍ້ຕົກລົງການແບ່ງປັນນ້ຳຮ່ວມກັນ. ຜູ້ອື່ນໆ ໄດ້ຄັດຄ້ານວ່າ ຄະນະກຳມະການ ວິຊາການຮ່ວມເປັນເວທີທີ່ຜົນສຳເລັດຍ້ອນການຈັດກອງປະຊຸມແບບບໍ່ປະຈຳ ຢ່າງໜ້ອຍສຳລັບການປຶກສາຫາລືໃນຂັ້ນໃດໜຶ່ງ ແລະ ການຮ່ວມມືກັບປະເທດທີ່ຢູ່ແຄມແມ່ນ້ຳ.

ໃນເວລາທີ່ບໍ່ທັນມີ ຂໍ້ຕົກລົງອ່າງແມ່ນ້ຳ, ໄດ້ມີຂໍ້ຕົກລົງຂອງສອງຝ່າຍຈຳນວນໜຶ່ງ. ຕົວຢ່າງ, ໃນປີ 1990 ສີເລຍ ແລະ ອີລານ ໄດ້ຕົກລົງເຊັນສັນຍາລະຫວ່າງສອງປະເທດ ໂດຍອີງໃສ່ສອງປະເທດ ໄດ້ແບ່ງປັນນ້ຳທີ່ໄດ້ຮັບນ້ຳຈາກ ຕວກກີ ໃນພື້ນຖານໃຫ້ (ອີລານ) 58% ແລະ (ສີເລຍ) 42%. ຜູ້ທີ່ໄດ້ຕິດຕາມ ປະຫວັດ ແລະການເມືອງຂອງຄວາມຮ່ວມມື ໃນອ່າງແມ່ນ້ຳ ແມ່ນເຫັນໄດ້ຄວາມສຳຄັນ, ແຕ່ເຖິງຢ່າງໃດກໍຕາມ ມັນຍັງຕ້ອງໄດ້ຕິດຕາມ ການດຳເນີນການ ຂໍ້ຕົກລົງດັ່ງກ່າວ.[43]

## *6.3.2 ການຄຸ້ມຄອງແຫລ່ງຂໍ້ມູນ ຄວາມຮູ້*

ພື້ນຖານຂໍ້ມູນຄວາມຮູ້ຢ່າງສົມບູນ ແລະ ເຊື່ອໝັ້ນ ແມ່ນຄວາມສຳຄັນອັນໜຶ່ງອີກ ເພື່ອຈັດຕັ້ງປະຕິບັດ ການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນແບບຮ່ວມມື. ຂໍ້ມູນຄວາມຮູ້ດັ່ງກ່າວຕ້ອງໄດ້ ແຈ້ງແນວຄວາມຄິດຂອງບັນດາປະເທດແຄມຊາຍຝັ່ງ ເຖິງຄ່າໃຊ້ຈ່າຍ ແລະ ຜົນປະໂຫຍດ ຂອງການປະສານງານ, ແລະສະນັ້ນ ສິ່ງດັ່ງກ່າວ ເປັນອົງປະກອບທີ່ສຳຄັນເປັນແຮງຜັກດັນ ໃນການຄຸ້ມຄອງຂ້າມຜ່ານຊາຍແດນ ການແລກປ່ຽນຄວາມເຂົ້າໃຈໃນລະບົບແມ່ນ້ຳ ລະຫວ່າງຜູ້ທີ່ມີສ່ວນຮ່ວມຫລັກ ຄືກັນກັບ ນັກວາງແຜນອ່າງແມ່ນ້ຳ ເປັນສິ່ງສຳຄັນ ສຳລັບການຫຼຸດຜ່ອນຂໍ້ມູນ ທີ່ມີຄວາມຄ້າຍຄືກັນທີ່ມີຄວາມຜິດພາດດ້ານບົດບາດທາງເພດ, ແລະ ເພື່ອຊອກຫາທາງເລືອກ ທີ່ມີປະກົດການເປັນພື້ນຖານ ສຳລັບການຄຸ້ມຄອງການຮ່ວມມື.

ຂໍ້ມູນຄວາມຮູ້ທີ່ນຳໃຊ້ໄດ້ ມາຈາກຫຼາຍຮູບແບບ, ຈາກຂໍ້ມູນສະເພາະໃນປະເພນີທາງວິທະຍາສາດຂອງຊາວຕາເວັນຕົກ ຕໍ່ກັບຄວາມຮູ້ທີ່ບໍ່ເປັນທາງການຂອງຊົນເຜົ່າ[44]. ໃນພາກທີ 40 ຂອງວາລະທີ 21 ທີ່ກ່າວເຖິງຄວາມສຳຄັນຂອງຂໍ້ມູນຄວາມຮູ້ ແລະ ຂໍ້ມູນຂ່າວສານ ສຳລັບການພັດທະນາແບບຍືນຍົງ:

*"ໃນການພັດທະນາແບບຍືນຍົງ ໝົດທຸກຄົນເປັນຜູ້ນຳໃຊ້ ແລະ ຜູ້ສະໜອງຂໍ້ມູນ ທີ່ໄດ້ຖືກພິຈາລະນາ ໃນຂອບເຂດທີ່ "ກ້ວາງຂວາງ, ສິ່ງດັ່ງກ່າວລວມທັງ ຂໍ້ມູນ, ຂ່າວສານ, ປະສົບການ ແລະ ຄວາມຮູ້ທີ່ໄດ້ຖືກສັງລວມຢ່າງແທດເໝາະ. ຄວາມຕ້ອງການສຳລັບຂ່າວສານ ແມ່ນເພີ່ມຂຶ້ນໃນທຸກລະດັບ, ຈາກລະດັບຜູ້ທີ່ອາວຸໂສໃນການຕັດສິນ ໃນລະດັບຊາດ ແລະ ສາກົນ, ຈາກລະດັບຮາກຖານ ແລະ ລະດັບບຸກຄົນ"* [45].

ແຜນຄຸ້ມຄອງຂໍ້ມູນຄວາມຮູ້ທີ່ມີປະສິດທິຜົນ ແມ່ນບໍ່ຕ້ອງການເຕັກໂນໂລຢີໃນລະດັບສູງ ແຕ່ຄວນສະທ້ອນໃຫ້ເຫັນຍຸດທະສາດ ທີ່ສອດຄ່ອງກັບຄວາມຮູ້ຄວາມສາມາດ, ສອດຄ່ອງກັບຄົນແລະເວລາ. ໃນອະນາຄົດຕໍ່ໄປ ຄວນຈະເນັ້ນໃສ່ການເກັບກຳ ແລະ ການແລກປ່ຽນຂໍ້ມູນຄວາມຮູ້ໃນຮູບແບບການຮ່ວມມື ທີ່ໄດ້ສ້າງຄວາມໝັ້ນໃຈ ໃນພື້ນຖານຂໍ້ມູນຄວາມຮູ້, ຫຼຸດຜ່ອນການເກັບກຳຂໍ້ມູນ ແລະວິເຄາະ ທີ່ຊ້ຳກັນ (ແລະແພງ), ແລະເຕີມຊ່ອງຫວ່າງຂອງຂໍ້ມູນຄວາມຮູ້ ທາງຍຸດທະສາດ. ຄຳຖາມທີ່ສຳຄັນສຳລັບການຄຸ້ມຄອງຂໍ້ມູນຄວາມຮູ້ ເພື່ອການປະສານງານການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນລວມມີ:

- *ຈຸດສູມຂອງຂ່າວສານ/ຄວາມຮູ້ແມ່ນຫຍັງ?*

ມັນຈະລວມຂໍ້ມູນຕ່າງໆ ດ້ານອຸທົກກະສາດ, ສະພາບແວດລ້ອມ ແລະ ເສດຖະກິດສັງຄົມ; ຂ່າວສານໃນການສ້າງຮູບແບບ, ແລະຄວາມຍືນຍົງທາງສິ່ງແວດລ້ອມ ແລະ ການດຳລົງຊີວິດ; ກອບນະໂຍບາຍດ້ານການຈັດຕັ້ງ ແລະສິ່ງທົດແທນ; ແລະຄຸນຄ່າທາງເສດຖະກິດ ຂອງລະບົບນິເວດ ແລະສິ່ງຄົມ ໃນຊັບພະຍາກອນທຳມະຊາດ.

- *ຜູ້ທີ່ຈະໄດ້ນຳໃຊ້ຂ່າວສານ/ຄວາມຮູ້ແມ່ນໃຜ?*

ຜູ້ນຳໃຊ້ຫລັກສ່ວນໃຫຍ່ ແມ່ນຈະລວມ ຜູ້ຊີ້ນຳດ້ານນະໂຍບາຍ, ນັກຄົ້ນຄ້ວາວິໄຈ ແລະ ຜູ້ຕາງໜ້າຈາກຝ່າຍອົງການສັງຄົມ ຕ້ອງສ້າງຂຶ້ນໃນຮູບແບບ ທີ່ສາມາດເຂົ້າເຖິງໄດ້ງ່າຍ ແລະ ຕ້ອງການສຳລັບຜູ້ມີສ່ວນຮ່ວມ.

- *ຜູ້ນຳໃຊ້ຈະເຮັດໃຫ້ເກີດປະໂຫຍດແນວໃດ?*

ການເຜີຍແຜ່ກົນໄກ ແລະ ຂ່າວສານ ກ່ຽວກັບການເຜີຍແຜ່ນະໂຍບາຍ ຄວນຖືກອອກແບບ ແລະ ທົບທວນເປັນປະຈຳ.

### *6.3.3 ການເຂົ້າຮ່ວມ: ການສື່ສານ, ຄວາມເຊື່ອໝັ້ນ ແລະ ຄວາມເປັນເຈົ້າການ*

ການເຂົ້າຮ່ວມ ໄດ້ສ້າງຄວາມເຊື່ອໝັ້ນ ຄວາມເປັນເຈົ້າການ ແລະ ຄວາມເຂົ້າໃຈທີ່ເປັນເອກະພາບ ລະຫວ່າງຜູ້ມີສ່ວນຮ່ວມ - ຄຸນຄ່າຂອງຂະບວນການ ບໍ່ສາມາດອະທິບາຍໄດ້ຢ່າງລະອຽດ. ການເຂົ້າຮ່ວມ ໃຫ້ຄວາມກະຈ່າງແຈ້ງເຖິງເປົ້າໝາຍ, ເສີມສ້າງປະສິດທິຜົນ, ຫລຸດຜ່ອນຂໍ້ຂັດແຍ່ງ, ແລະເປັນສິ່ງຈຳເປັນ ເພື່ອຮັກສາການຄຸ້ມຄອງ ໃນການປະສານງານນ້ຳຂ້າມຜ່ານຊາຍແດນ.

ການສື່ສານ ແມ່ນມີຄວາມສຳຄັນໂດຍສະເພາະ ທີ່ໄດ້ອະທິບາຍໃນໝວດທີ 3. ການສື່ສານ ອາດຈະບໍ່ແມ່ນພຽງແຕ່ການກະຈາຍຂໍ້ມູນ, ຫລື ການແລກປ່ຽນຂໍ້ມູນ, ແຕ່ຍັງໄດ້ດຳເນີນ ການປຶກສາຫາລື ທີ່ແທ້ຈິງ ໃນການວາງແຜນ ແລະ ການຕັດສິນບັນຫາ, ຫຼາຍໆກໍລະນີການສຶກສາ ໄດ້ສະແດງໃຫ້ເຫັນວ່າ ຂໍ້ມູນໃນແຜນກິດຈະກຳ ແລະ ຜົນກະທົບ

ຈາກທາງອື່ນ ແມ່ນໄດ້ມາຈາກຫລາຍຊາດ ແລະຊຸມຊົນ ຜ່ານເຄືອຂ່າຍທີ່ໄດ້ສ້າງໄວ້, ລັດຖະບານ ແມ່ນມີຄວາມເປັນໄປໄດ້ໜ້ອຍ ໃນການສ້າງລະບຽບການສື່ສານ ແລະເປັນຕົ້ນໃນການສ້າງການເຊື່ອມໂຍງທີ່ດີ [46].

ຂະບວນການວາງແຜນທີ່ມີປະສິດທິຜົນຮຽກຮ້ອງໃຫ້ມີເວທີເພື່ອການປຶກສາຫາລືທີ່ມີສ່ວນຮ່ວມ ເຊິ່ງລວມມີ ທັງພາກລັດ, ອົງການຈັດຕັ້ງສາກົນ ທີ່ບໍ່ຂຶ້ນກັບລັດຖະບານ, ສະຖາບັນການຄົ້ນຄ້ວາສຶກສາ ແລະ ອົງການສັງຄົມ ທີ່ສາມາດໃຫ້ເຫັນ ແນວຄວາມຄິດທີ່ແຕກຕ່າງກັນ. ສິ່ງທ້າທາຍຫລັກ ສຳລັບອົງການຈັດຕັ້ງ ອ່າງແມ່ນ້ຳຂ້າມຜ່ານຊາຍແດນ ແມ່ນເພື່ອລວມເອົາແນວຄວາມຄິດ ແລະ ຄວາມກັງວົນຂອງຜູ້ມີສ່ວນຮ່ວມທັງໝົດ ແລະ ເພື່ອຮັບປະກັນວ່າ ແນວຄວາມຄິດດັ່ງກ່າວຢ່າງໜ້ອຍໄດ້ຖືກຮັບຟັງ.

*" ຂະບວນການວາງແຜນທີ່ມີປະສິດທິຜົນ ຮຽກຮ້ອງໃຫ້ມີ ເວທີ ສຳລັບການປຶກສາຫາລືທີ່ມີສ່ວນຮ່ວມ"*

ການປຶກສາຫາລືແມ່ນ ສາມາດປະກອບສ່ວນທີ່ສຳຄັນຕໍ່ການປັບປຸງການນຳໃຊ້ ແລະ ກົນໄກການປົກຄອງຊັບພະຍາກອນນ້ຳ ໃນການຄຸ້ມຄອງອ່າງແມ່ນ້ຳຂ້າມຜ່ານຊາຍແດນ, ດ້ວຍການເຂົ້າຮ່ວມຂອງປະຊາຊົນຈາກຫລາຍຝ່າຍທີ່ນຳໃຊ້ນ້ຳ ແລະ ຫລາຍຄວາມສົນໃຈເພື່ອເປີດກ້ວາງການນຳໃຊ້ນ້ຳຮ່ວມກັນ ໃນອະນາຄົດຖ້າວ່າ ການປຶກສາຫາລືມີຜົນດີສາມາດຫຼຸດຜ່ອນຂໍ້ຂັດແຍ່ງ, ສາມາດນຳສະເໜີ ຄວາມສົນໃຈຂອງກຸ່ມທີ່ຖືກຜົນກະທົບ ແລະ ສາມາດບັນລຸໄດ້ຕາມຄວາມຕ້ອງການທີ່ຫລາກຫລາຍຂອງທ້ອງຖິ່ນ ແລະ ພາກພື້ນ[47].

ຢູ່ໃນອ່າງແມ່ນ້ຳຂອງ, ກຸ່ມສຳຫຼວດພາກພື້ນ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແມ່ນໄດ້ຖືກສ້າງຂຶ້ນ ແລະດຳເນີນ ການປຶກສາຫາລື ຮ່ວມກັບຜູ້ເຂົ້າຮ່ວມຈາກຫລາຍຝ່າຍເວທີໃນການປຶກສາຫາລື ນ້ຳໃນພາກພື້ນແມ່ນ້ຳຂອງເພື່ອປະກອບໃຫ້ມີຜູ້ຕາງໜ້າຈາກຫລາຍຝ່າຍພາກລັດ, ທະນາຄານພັດທະນາອື່ນໆ, ບໍ່ແມ່ນພາກລັດ ແລະ ພາກທຸລະກິດ. ສ້າງໂຄງການໃຫ້ດີເພື່ອໝາກຜົນຂອງສະພາບການທະນາຄານພັດທະນາ, ບໍ່ມີສະຖານະພາບ ແລະ ການສະແດງດ້ານທຸລະກິດ[48]. ກິດຈະກຳລິເລີ່ມຂອງ ອ່າງແມ່ນ້ຳນາຍ (Nile Basin), ຄືກັນກັບສິ່ງທີ່ໄດ້ນຳສະເໜີ, ສະໜັບສະໜູນການເຂົ້າຮ່ວມ ໂດຍຜ່ານຫລາຍວິທີທາງ ສ່ວນຫລາຍສາມາດສັງເກດ ໃນການປຶກສາ ຫາລື ຂອງອ່າງແມ່ນ້ຳ ນາຍ (ເບິ່ງໃນຂໍ້ 3.1) ຄະນະກຳມະການຮ່ວມສາກົນ (IJC) ໂດຍການຮ່ວມມືກັບເຈົ້າເມືອງ ຈາກ ຫລາຍເມືອງ ໃນ Great Lake ແລະ ເຂດອ່າງແມ່ນ້ຳໄລແຮນ St Lawrence ທີ່ຢູ່ລະຫ່ວາງ ອາເມລິກາ ກັບ ປະເທດ ການາດາ, ໄດ້ເປີດການເຜີຍແຜ່ການເຂົ້າຮ່ວມຂອງມວນຊົນທີ່ສາມາດເຕົ້າລວມໄດ້ຫລາຍກ່ວາ 4,100 ຄົນ(ເບິ່ງໃນຂໍ້ 3.2)

ໃນເອີລົບ, EU WFD ສາມາດລວມເຂົ້າໃນ ພາກສ່ວນທີ່ສົນໃຈໃນການຈັດຕັ້ງປະຕິບັດ. ໂດຍສະເພາະໃນການຜະລິດ, ທົບທວນ ແລະ ປັບປຸງແຜນການຄຸ້ມຄອງອ່າງແມ່ນ້ຳ, ສະມາຊິກຂອງລັດຕ່າງໆ ແມ່ນຕ້ອງໄດ້ໃຫ້ຄຳແນະນຳພາຍໃນ 6 ເດືອນ ຫລັງຈາກນຳໄປປຶກສາຫາລື ກັບມວນຊົນ[49]. ສົນທິສັນຍາ ຮາຍ Rhine ປີ 1999 (ມາດຕາທີ່ 14) ໄດ້ເປີດກ້ວາງການຮ່ວມມື ໂດຍອະນຸຍາດໃຫ້ ບັນດາລັດຕ່າງໆ ອົງການຈັດຕັ້ງລະຫວ່າງລັດຖະບານ ຫລື ອົງການຈັດຕັ້ງທີ່ບໍ່ສັງກັດລັດ ທີ່ມີຄວາມສົນໃຈ ເຂົ້າຮ່ວມເປັນຜູ້ສັງເກດການ ເພື່ອຮັບຮອງເປົ້າໝາຍ ແລະ ຫລັກເກນຂອງສົນທິສັນຍາ.

### *6.3.4 ການກວດກາ*

ການກວດກາ ແລະ ການລາຍງານ ແມ່ນເປັນເຄື່ອງມືທີ່ບໍ່ສາມາດທົດແທນໄດ້ ເພື່ອກຳນົດວ່າ ກິດຈະກຳແຜນງານບັນລຸໄດ້ຕາມຈຸດປະສົງທີ່ວາງໄວ້ ແລະເພື່ອປະເມີນວ່າແຜນງານຕ່າງໆ ໄດ້ມີຜົນກະທົບທີ່ບໍ່ຄາດຄິດ ທາງເສດຖະກິດສັງຄົມ ແລະກາຍະພາກ, ແລະເພື່ອໃຫ້ທິດທາງທີ່ແທດເໝາະຕໍ່ການຕອບຮັບ ການຄຸ້ມຄອງທີ່ດັດປັບໄດ້

ການປະເມີນ ລະບົບການຄຸ້ມຄອງ ແມ່ນຄວາມຕ້ອງການ ການຈັດຕັ້ງປະຕິບັດທີ່ມີປະສິດທິຜົນ. ສິ່ງເຫຼົ່ານັ້ນຕ້ອງຮັບປະກັນວ່າການກຳນົດແຜນງານມີຄວາມກະຈ່າງແຈ້ງ, ແລະມີໄລຍະເວລາເປັນຕົວຊີ້ວັດ ສຳລັບທັງການປະເມີນຂອງການດຳເນີນງານຂອງອົງການຈັດຕັ້ງ, ຄວາມໝັ້ນຄົງ ຂອງອ່າງແມ່ນ້ຳໄດ້ຖືກສ້າງຕັ້ງຂຶ້ນ. ມັນຍັງສາມາດນຳໃຊ້ການວັດແທກດັ່ງກ່າວ ເພື່ອຕິດຕາມຜົນທີ່ໄດ້ຮັບ, ແລະເພື່ອຮັບປະກັນວ່າມີ ວິທີການແກ້ໄຂ ໄດ້ຖືກເອົານຳໄປໃຊ້ ຕາມຄວາມຕ້ອງການ,.ໃນດ້ານເນື້ອໃນ ການປະເມີນແບບຍຸດທະສາດ ໝາຍເຖິງລະບຽບການ, ຂະບວນການ, ກອບວິທີດຳເນີນການ ແລະ ສົນທິສັນຍາ ຕ້ອງມີການກະກຽມ ແລະ ຈັດຕັ້ງປະຕິບັດ ແລະຜົນກະທົບດັ່ງກ່າວ ໄດ້ຖືກຕິດຕາມ ແລະ ລາຍງານ. ການປະເມີນຜົນກະທົບ ຂອງຂໍ້ຕົກລົງດ້ານນະໂຍບາຍ ແລະ ການຈັດຕັ້ງປະຕິບັດຂໍ້ຕົກລົງດັ່ງກ່າວ ຕ້ອງໄດ້ດຳເນີນເປັນປະຈຳ ເພື່ອນຳໃຊ້ເປັນທິດທາງ ໃນການປັບປຸງກອບນະໂຍບາຍ ແລະການວາງແຜນຍຸດທະສາດໃນອະນາຄົດ.

ຫລາຍວິທີການ ໄດ້ຖືກນຳໃຊ້ເພື່ອຕິດຕາມການປ່ຽນແປງສິ່ງແວດລ້ອມ, ຈາກວິທີການງ່າຍຂອງຄຸນນະພາບນ້ຳ, ໄປຫາວິທີການທີ່ຄົບຊຸດກ່ວາ, ຕົວຊີ້ວັດ ສຳລັບການພັດທະນາແບບຍືນຍົງ, ຂໍ້ຕົກລົງດ້ານຄຸນະພາບນ້ຳ ໃນເຂດໜອງນ້ຳ Great Lakes ລະຫ່ວາງ ອາເມລິກາ ແລະ ການາດາ ເຊິ່ງໄດ້ລວມມີ ຈຸດປະສົງສະເພາະ ເພື່ອຟື້ນຟູ ແລະ ຮັກສາຄວາມດຸນດ່ຽງທາງດ້ານເຄມີ, ຟີຊິກ ແລະ ຊີວະວິທະຍາ ຂອງລະບົບນິເວດໃນໜອງນ້ຳ Great Lakes.ສິ່ງດັ່ງກ່າວໄດ້ມີການປັບປຸງ ແລະ ທົບທວນ ເປັນໄລຍະ (1972, 1978, 1987, ແລະ 2006) ເພື່ອສ້າງຄວາມເຂັ້ມແຂງຂອງແຜນງານ, ການຈັດຕັ້ງປະຕິບັດ ແລະ ເຕັກໂນໂລຊີ ເພື່ອເພີ້ມຄວາມເຊື່ອໝັ້ນ ໃນການຈັດຕັ້ງປະຕິບັດ ຄຽງຄູ່ກັບຄວາມກ້າວໜ້າທາງວິທະຍາສາດ. IJC ໄດ້ຕິດຕາມ ແລະ ການປະເມີນ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ແລະ ໃຫ້ຂໍ້ແນະນຳ ໃຫ້ແກ່ສອງລັດຖະບານ.

ແຜນຈັດຕັ້ງປະຕິບັດ ຂອງແມ່ນ້ຳຣີນ (1987) ໄດ້ຮັບຮອງ ປາໄຊມອນ ເປັນຕົວບົ່ງຊີ້ ທີ່ມີລັກສະນະພິເສດ ຂອງຄຸນະພາບນ້ຳ ແລະ ການຟື້ນຟູຊີວະນາໆພັນ. ແຜນງານ ເຜີຍແຜ່ ປາໄຊມອນ ໃນປີ 2000 ໄດ້ນຳປາໄຊມອນທຳມະຊາດມາລ້ຽງຄືນ ທີ່ໄດ້ສູນຫາຍໄປຍ້ອນສາຍເຫດ ຄຸນນະພາບນ້ຳຫລຸດລົງ ແລະ ການເພີ່ມຕະກອນ ມົນລະພິດໃນນ້ຳ. ການພົບເຫັນການເພີ້ມຂຶ້ນຂອງປະຊາກອນໄຊມອນທີ່ໄດ້ຈາກການຕິດຕາມ ແມ່ນຕົວຊີ້ວັດໜຶ່ງຂອງຜົນສຳເລັດຂອງແຜນງານ ດັ່ງກ່າວ[50].

EU WFW ໄດ້ສະເໜີກົນໄກໃນການກວດກາ ເພື່ອຮັບປະກັນມາດຕະຖານ[51]ການປັບຕົວແບບຕໍ່ເນື່ອງ. ສະມາຊິກຂອງລັດຕ່າງໆ ໄດ້ປະຕິບັດພັນທະ ເພື່ອບັນລຸໃຫ້ໄດ້ ສະພາບໜ້ານ້ຳທີ່ມີ ເຄມີ ແລະ ລະບົບນິເວດທີ່ດີ ພາຍໃນ 15 ປີ [52] . ມາດຕະຖານທີ່ຈະໄດ້ຮັບ ສະພາບລະບົບນິເວດທີ່ດີ ແມ່ນໄດ້ກຳນົດໄວ້ແລ້ວ, ແລະ ສະພາບທາງເຄມີທີ່ດີທີ່ຈະໄດ້ຮັບ ຖ້າຄວາມເຂັ້ມຂຸ້ນຂອງມົນລະພິດໃນໜ້ານ້ຳ ຫາກບໍ່ເກີນມາດຕະຖານຄຸນນະພາບສິ່ງແວດລ້ອມທີ່ໄດ້ກຳນົດໄວ້. ລາຍລະອຽດຕ່າງໆ ຂອງພື້ນຖານຂໍ້ມູນ ໄດ້ຖືກທົບທວນເປັນປະຈຳ ແລະ ໄດ້ປັບປຸງເພື່ອຕິດຕາມການຈັດຕັ້ງປະຕິບັດ.

ໃນບາງຂົງເຂດການກວດກາ ໄດ້ຖືກນຳໃຊ້ ເພື່ອເກັບກຳຂໍ້ມູນຄົບຊຸດຂອງ 'ຕົວຊີ້ວັດຂອງຄວາມຍືນຍົງຂອງອ່າງແມ່ນ້ຳ' ແລະ ຂໍ້ມູນໄດ້ຖືກເກັບກຳເພື່ອ ປະເມີນຜົນກະທົບ ຂອງຫລາຍແຜນງານການພັດທະນາ ແລະ ການອະນຸລັກ ໃນບັນດາຕົວຊີ້ວັດ. ໃນບົດລາຍງານຂອງ ອ່າງແມ່ນ້ຳຂອງ ໃນປີ 2003, ຄະນະກຳມາທິການແມ່ນ້ຳຂອງສາກົນ

ໄດ້ນຳສະເໜີສະພາບໂດຍລວມ ຂອງການພັດທະນາ ແລະ ຜົນກະທົບທີ່ສະສົມ ໃນດ້ານພື້ນຖານລັກສະນະ ທາງອຸທົກກະສາດ, ສິ່ງແວດລ້ອມ ແລະ ເສດຖະກິດ ຂອງອ່າງແມ່ນ້ຳ. ນອກນັ້ນຍັງໄດ້ວາງແຜນເພື່ອປັບປຸງບົດລາຍງານເຫລົ່ານັ້ນເພື່ອເຜີຍແຜ່ຢ່າງເປັນປະຈຳບໍ່ໃຫ້ເກີນ 3ປີ, ແລະເພື່ອຂະຫຍາຍຂື້ນເພື່ອລວມເອົາການວິເຄາະການປ່ຽນແປງ[53].

### *6.3.5 ການຄຸ້ມຄອງທີ່ປັບຕົວໄດ້*

ການຄຸ້ມຄອງທີ່ປັບຕົວໄດ້ ແມ່ນໄດ້ໃຫ້ນິຍາມໂດຍ ການປະເມີນຜົນລະບົບນິເວດ ສະທັດສະວັດຄືກັນກັບຂະບວນ ການທີ່ມີລະບົບໃດໜຶ່ງ ເພື່ອປັບປຸງການຄຸ້ມຄອງນະໂຍບາຍ ແລະການ ຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງໂດຍການຮຽນຮູ້ຈາກໝາກຜົນ ຂອງການນຳໃຊ້ນະໂຍບາຍ ແລະ ການຈັດຕັ້ງປະຕິບັດໃນໄລຍະຜ່ານມາ.

ການຄຸ້ມຄອງທີ່ປັບຕົວໄດ້ລິເລີ້ມເຂົ້າໃຈ ໃນຊຸມປີ 1970 [54] ຄືກັນກັບ ຮູບແບບໃນການຄຸ້ມຄອງ ຊັບພະຍາກອນທຳມະຊາດ ທີ່ມີຈຸດເລັງເພື່ອຫລຸດຜ່ອນຄວາມບໍ່ແນ່ນອນ ແລະ ສົ່ງເສີມ ຍຸດທະສາດໃນການຄຸ້ມຄອງ ທີ່ສາມາດຕອບສະໜອງຕໍ່ ສິ່ງທີ່ເກີດຂື້ນໂດຍບໍ່ໄດ້ຄາດຄິດ. ການຄຸ້ມຄອງທີ່ປັບຕົວໄດ້ ປາກົດວ່າແທດເໝາະຕໍ່ສິ່ງທ້າທາຍຂອງການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ເຊິ່ງລວມທັງ ຄວາມບໍ່ແນ່ນອນທາງອຸທົກກະສາດ (ໂດຍສະເພາະພາຍໃຕ້ການປ່ຽນແປງດິນຟ້າອາກາດ), ການມີສ່ວນຮ່ວມຂອງຫລາຍຝ່າຍ, ການປ່ຽນແປງວັດຖຸປະສົງ ແລະຄວາມຕ້ອງການເພື່ອຮັກສາສາຍພົວພັນທີ່ ເປີດຮັບ ແລະ ສ້າງສັນ ລະຫວ່າງປະເທດຕ່າງໆທີ່ຢູ່ແຄມແມ່ນ້ຳ. ,

ຂະບວນການໄດ້ຮຽກຮ້ອງໃຫ້ ທົບທວນເປົ້າໝາຍໃນການຄຸ້ມຄອງ, ການຕິດຕາມ ແລະ ການປະເມີນຜົນ ຂອງໝາກຜົນ, ການເຂົ້າຮ່ວມຂອງ ຜູ້ທີ່ມີສ່ວນຮ່ວມ, ແລະ ກົນໄກ ເພື່ອນຳໃຊ້ຂໍ້ມູນໃໝ່ດັ່ງກ່າວ ເພື່ອປັບປຸງນະໂຍບາຍການຄຸ້ມຄອງ, ຍຸດທະສາດ ແລະ ການຈັດຕັ້ງປະຕິບັດ ຄືກັນກັບຜົນກະທົບທີ່ໄດ້ພົບເຫັນຢ່າງຈະແຈ້ງ, ແລະ ຕາມເງື່ອນໄຂ, ຄວາມຮູ້ ແລະການປ່ຽນແປງ ບຸລິມະສິດທາງສັງຄົມ.

ການຄຸ້ມຄອງທີ່ດັດປັບໄດ້ ບໍ່ແມ່ນວິທີການທີ່ມີຫຼາຍຈຸດປະສົງ ສຳລັບກອບການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນຊຶ່ງໃນສະຖານະ ພາບທີ່ດີທີ່ສຸດຈະເປັນສິ່ງທ້າທາຍ. ແຕ່ຄວາມຈິງແລ້ວ ມັນຈະເປັນ ເລື່ອງງ່າຍໃນການຍົກເລີກ ຂະບວນຄຸ້ມຄອງທີ່ປັບຕົວໄດ້ ແຕ່ອາດເຮັດໃຫ້ຫລຸດຜ່ອນຄວາມເຊື່ອໝັ້ນ, ໂດຍສະເພາະ ຄວາມອ່ອນໄຫວທາງດ້ານການເມືອງ ຫຼື ຂໍ້ຂັດແຍ່ງ. ການດຳເນີນຈາກທິດສະດີ ຫາການຄຸ້ມຄອງທີ່ປັບຕົວໄດ້ ຍັງຮຽກຮ້ອງໃຫ້ຕ້ອງມີຄວາມສະໝັກໃຈ ຂອງ ບຸກຄົນ ແລະການຈັດຕັ້ງ ເພື່ອກຳນົດ ແລະປັບປຸງ ນະໂຍບາຍທີ່ບໍ່ມີປະສິດທິຜົນ, ແລະ ເພື່ອເຫັນຄວາມສຳຄັນ ແລະປັບປຸງສະພາບການທີ່ເກີດຂື້ນແບບບໍ່ໄດ້ຕັ້ງໃຈ.

> *"ຄວາມສົນໃຈຂອງແຕ່ລະຝ່າຍ, ຄຸນຄ່າທີ່ແຕກຕ່າງກັນ ແລະ ການປັບປ່ຽນບໍ່ໄດ້ ໄດ້ຈຳກັດການຈັດຕັ້ງປະຕິບັດ ຍຸດທະສາດການຄຸ້ມຄອງແບບດັດປັບໄດ້"*

ຫຼັກການພື້ນຖານ ໃນຂະບວນຄຸ້ມຄອງທີ່ປັບຕົວການປະສານງານແບບສືບເນື່ອງ, ການທົບທວນ ແລະ ການປະເມີນຜົນຄືນ,ເປັນສິ່ງຈຳເປັນໃນການຈັດຕັ້ງປະຕິບັດການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ. ການດຳເນີນຕໍ່ທີ່ຂັດກັບຄວາມຕ້ອງການນ້ຳສູງຂຶ້ນ ແລະ ການເພີ່ມຂຶ້ນຂອງຄວາມບໍ່ແນ່ນອນຂອງສະພາບອາກາດ ແມ່ນຄວາມຕ້ອງການໃນການຈັດປຶກສາຫາລື ແລະ ການວິເຄາະ ນະໂຍບາຍ ໃນການຄຸ້ມຄອງນ້ຳໂດຍຫຼາຍຂະແໜງການຢ່າງເຂັ້ມງວດຈະເປັນສິ່ງດຽວທີ່ມີຄວາມສຳຄັນ.

## *6.4 ການຈັດຕັ້ງປະຕິບັດ ແລະ ການແບ່ງປັນຜົນປະໂຫຍດ*

ອົງປະກອບຕ່າງໆດ້ານການປົກຄອງ, ການຄຸ້ມຄອງຄວາມຮູ້, ການມີສ່ວນຮ່ວມ, ການປະເມີນຜົນ ແລະ ການຄຸ້ມຄອງທີ່ດັດປັບໄດ້ ແມ່ນເປັນອົງປະກອບຫລັກ ສຳລັບການຈັດຕັ້ງປະຕິບັດ ການຮ່ວມມືໃນການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ. ສິ່ງດັ່ງກ່າວ ໄດ້ປະກອບເປັນ ກອບນະໂຍບາຍເພື່ອຮັກສາການຮ່ວມມື ໃນການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ແລະ ການແບ່ງປັນຜົນປະໂຫຍດຢ່າງທ່ຽງທຳ ລະຫວ່າງປະເທດຢູ່ແຄມນ້ຳ.

ອົງປະກອບດັ່ງກ່າວ ໄດ້ມີການພົວພັນກັນ ແລະ ສົ່ງເສີມເຊິ່ງກັນແລະກັນ.. ກົນໄກການປົກຄອງທີ່ດີ ໄດ້ຮຽກຮ້ອງໃຫ້ມີຄວາມໂປ່ງໃສ, ເປັນຫລັກຖານໃຫ້ແກ່ການຕັດສິນໃຈ, ແລະໂຄງສ້າງທີ່ ລວມມີຫລາກຫລາຍຜູ້ເຂົ້າຮ່ວມ, ເຊື່ອຖື ແລະດັດປັບໄດ້ ເພື່ອເຂົ້າກັບສະພາບການທີ່ປ່ຽນແປງ. ການຄຸ້ມຄອງຄວາມຮູ້ຂໍ້ມູນທີ່ດີ ໄດ້ຊ່ວຍໃນການຕັດສິນໃຈ ແລະ ໃຫ້ໂອກາດຜູ້ມີສ່ວນຮ່ວມ ເພື່ອປະກອບ ສ່ວນຕໍ່ຂະບວນການຄຸ້ມຄອງຢ່າງຫລວງຫລາຍ. ການມີສ່ວນຮ່ວມ ສົ່ງເສີມການເຂົ້າຮ່ວມ, ການສ້າງຄວາມ ເຂັ້ມແຂງຂອງຜູ້ມີສ່ວນຮ່ວມ ໃນຂະບວນການຄຸ້ມຄອງ: ແລະ ຮັບປະກັນໃຫ້ມີຄວາມເຂົ້າໃຈ ກ່ຽວກັບຄຸນຄ່າ ແລະ ການກະຈາຍຜົນປະໂຫຍດ ແລະຄ່າໃຊ້ຈ່າຍເພີ້ມຂຶ້ນ ທີ່ລວມເອົາທັງ ນະໂຍບາຍ ແລະການດຳເນີນການ ການຄຸ້ມຄອງນ້ຳ. ການກວດກາໄດ້ຕິດຕາມການປະເມີນຜົນກະທົບຂອງຂະບວນການ ຕາມສິ່ງທີ່ໄດ້ໃນ ເປົ້າໝາຍການຄຸ້ມຄອງ ແລະ ໃຫ້ແນວທາງ ສຳລັບການປ່ຽນແປງໃນອະນາຄົດ. ສຸດທ້າຍ ການຄຸ້ມຄອງທີ່ປັບຕົວໄດ້ເປັນກົນໄກ ສຳລັບການສືບຕໍ່ໃນ ການຮຽນຮູ້ ແລະ ປັບປຸງປະສິບການ.

ທຸກໆອົງປະກອບ ທີ່ໄດ້ຖືກຈັດຕັ້ງປະຕິບັດພາຍໃຕ້ຂໍ້ຫຍຸ້ງຍາກທາງການເມືອງ, ສັງຄົມ ແລະ ເສດຖະກິດ. ການຈັດຕັ້ງປະຕິບັດ ບໍ່ສາມາດດຳເນີນຕາມທຸກຂັ້ນຕອນ ແຕ່ສາມາດໃຊ້ເປັນ ວິທີທາງ ທີ່ໃຊ້ໄດ້ໃນຕົວຈິງ ເພື່ອຍາດໄດ້ເປົ້າໝາຍລວມ ຂອງການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ ເລັ່ງໃສ່ເພື່ອການແບ່ງປັນທີ່ສະເໝີພາບ ແລະຜົນປະໂຫຍດທີ່ຍືນຍົງ.

## ກໍລະນີ ແລະບົດອະທິບາຍ

*ບົດອະທິບາຍ1.1* ຄວາມໝາຍຂອງ ຄໍາສັບ ແມ່ນໍ້າຂ້າມຝ່າຍຊາຍແດນ
*ບົດອະທິບາຍ2.1* ຕົວຢ່າງກົນໄກສໍາລັບການແບ່ງປັນຜົນປະໂຫຍດ.
*ບົດອະທິບາຍ 4.1* ປະເພດຂອງສົນທິສັນຍາສາກົນ
*ບົດອະທິບາຍ4.2* ເຄື່ອງມືທີ່ບໍ່ແມ່ນຂໍ້ຜູກມັດ ແລະ ການຄຸ້ມຄອງນໍ້າຮ່ວມກັນ
*ບົດອະທິບາຍ 6.1* ອົງປະກອບຫລັກ ຂອງສົນທິສັນຍາ ລະຫວ່າງ ສະຫະລັດອາເມລິກາ ແລະ ການາດາໄດ້ເຊື່ອມເຂົ້າຢູ່ໃນກອບແຜນງານຂອງສົນທິສັນຍານໍ້າຂ້າມຜ່ານຊາຍແດນ ປີ 1909

*ກໍລະນີ 2.1* ແມ່ນໍ້າ ອິນດັສ-ເສີມຂະຫຍາຍການສື່ສານ, ພ້ອມທັງເຕົ້າໂຮມປະເທດທີ່ຢູ່ໃກ້ຄຽງກັນ
*ກໍລະນີ 2.2* ການຄຸ້ມຄອງແບບປະສົມປະສານຂອງແມ່ນໍ້າ ເຊນີການ.
*ກໍລະນີ 3.1* ບົດໂດຍສັງລວມ-ການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍໃນອ່າງແມ່ນໍ້າໄນ.
*ກໍລະນີ 3.2* ຂ່າວສານ ແລະ ການມີສ່ວນຮ່ວມໃນ ທະເລສາບຂອງອາເມລິກາເໜືອ
*ກໍລະນີ 4.1* ການໄກ່ເກ່ຍ ແລະ ການສະໜັບສະໜູນ ການເຈລະຈາ ໃນ ສົນທິສັນຍາ Indus Waters Treaty
*ກໍລະນີ 4.2* ການຕັ້ງຖິ່ນຖານ ຕາມມາດຕາຖານ ການບັງຄັບໃຊ້ກົດໝາຍ ແລະ ຂໍ້ພິພາກ ນໍ້າ ພາຍໃຕ້ກອບຂອງສະຫະພາບເອີລົບ
*ກໍລະນີ 5.1* ສັນຍາແມ່ນໍ້າຂອງຍັງຂາດຄວາມຕ້ອງການສໍາລັບກົດລະບຽບແຫ່ງຊາດ
*ກໍລະນີ 6.1* ຄະນະກໍາມະການ ວິຊາການຮ່ວມຂອງ ໄທກຣິດ-ຢູເຟຣດ (Tigris-Euphrates)-ຄວາມຫລົ້ມເຫລວ

# ຕາຕະລາງ ແລະ ແຜນວາດ


*ຕາຕະລາງ 1.1* ການລຽງລະດັບຂອງບົດຕ່າງໆ ຕໍ່ກັບຂັ້ນຕອນຂອງການພັດທະນາ

*ຕາຕະລາງ 2.1* ປະເພດຂອງຜົນປະໂຫຍດທີ່ໄດ້ຈາກການຮ່ວມມື

*ຕາຕະລາງ3.1* ແຜນວາດຂອງຜູ້ມີສ່ວນໄດ້ສ່ວນເສຍ ແລະ ຂັ້ນຕອນຂອງການມີສ່ວນຮ່ວມ ໃນການອອກແບບໂຄງການ ຈາກປະຊາຊົນຜູ້ມີສ່ວນໄດ້ສ່ວນເສຍຜ່ານການດຳເນີນການຈັດຕັ້ງປະຕິບັດໂຄງການ.

*ຕາຕະລາງ 3.2* ບົດບາດທີ່ສ້າງຂຶ້ນຂອງອົງການຈັດຕັ້ງສັງຄົມໃນຂັ້ນຕອນທີ່ແຕກຕ່າງກັນຂອງຂະບວນການ ການຄຸ້ມຄອງນ້ຳຂ້າມຜ່ານຊາຍແດນ

*ຕາຕະລາງ 3.3* ບົດບາດສຳລັບອົງການສາກົນທີເຄືອນໄຫວເປັນພາກສ່ວນທີສາມ

*ຕາຕະລາງ5.1* ໜ້າທີ່ ແລະ ເປົ້າໝາຍຂອງ ອົງການຈັດຕັ້ງຂ້າມຜ່ານຊາຍແດນ

*ຕາຕະລາງ5.2* ຕົວຢ່າງຂອງເງື່ອນໄຂຄວາມຕ້ອງການພື້ນຖານສຳລັບສົນທິສັນຍາກ່ຽວກັບການ ແບ່ງປັນ

*ຕາຕະລາງ 5.3* ກົນໄກດ້ານການເງິນ ໃນການຄຸ້ມຄອງການຂ້າມຜ່ານຊາຍແດນ

*ແຜນວາດ 1.1* ອ່າງແມ່ນ້ຳທີ່ກວມເອົາຫຼາຍປະເທດ

*ແຜນວາດ 2.1* ການຮັບຮູ້ການມາບັນຈົບກັນ, ບູລິມະສິດ ແລະ ວາລະຕ່າງໆ

*ແຜນວາດ 2.2* ຄວາມຕໍ່ເນື່ອງທາງດ້ານການຮ່ວມມື

*ແຜນວາດ 3.1* ຮູບພາບທາງດ້ານອຳນາດ ແລະ ຜົນປະໂຫຍດສຳລັບ ກຸ່ມຜູ້ມີສ່ວນໄດ້ສ່ວນເສຍຕ່າງໆ ທີ່ແຕກຕ່າງກັນ ແລະ ວິທີຂອງພວກເຂົາຜ່ານຫຼັກສູດຂອງໂຄງການ

*ແຜນວາດ 3.2* ບາດກ້າວຕ່າງໆໃນການກຳນົດຜູ້ມີສ່ວນຮ່ວມ, ການສັງລວມຄວາມຄິດ ຄວາມສົນໃຈຂອງຜູ້ມີສ່ວນຮ່ວມ ແລະ ການປະເມີນຂະບວນການ.

# ເອກະສານອ້າງອີງ:

1 Giordano, M. and Wolf, A. (2002). "The World's Freshwater Agreements: Historical Developments and Future Opportunities". In: *International Freshwater Treaties Atlas.* United Nations Environment Programme.

2 Technical Advisory Committee. (2000). *Integrated Water Resources Management*. TAC Paper 4. Stockholm: Global Water Partnership.

3 See, for example, Whittington, D. and Song, J. (2004). "Why Have Some Countries on International Rivers been Successful Negotiating Treaties? A Global Perspective". *Water Resources Research* 40(5).

4 See, for example, Wolf, A. (1999). "Criteria for Equitable Allocations: the Heart of International Water Conflict". *Natural Resources Forum* 23.

5 See, for example, Sadoff, C. and Grey, D. (2002). "Beyond the River: the Benefits of Cooperation on International Rivers". *Water Policy* 4(5): 389–403.

6 Institutions here are broadly defined as the social structures that influence behaviour including, for example, organizations, agreements, norms and incentives.

7 Sadoff, C. and Grey, D. (2002). "Beyond the river: the benefits of cooperation on international rivers". *Water Policy* 4(5): 389–403.

8 From "Case Study –The Senegal Basin" by Madiodio Niasse, see http://www.iucn.org/themes/wani/

9 This cross-boundary dynamic will also hold true at sub-national levels.

10 Sadoff, C. and Grey, D. (2005). "Cooperation on International Rivers: A Continuum for Securing and Sharing Benefits". *Water International* 30(4): 420–427.

11 Sadoff and Grey, 2005, *op. cit.*

12 These seven basic principles were derived from an examination of 149 international treaties relating to the management of international water resources. See Wolf, 1999, *op. cit*.

13 See, for example, World Commission on Dams. (2000). *Dams and Development: A New Framework for Decision-Making*. The report of the World Commission on Dams. London: Earthscan; Phillips, D.J.H, Daoudy, M., Ojendal, J., McCaffrey S. and Turton, A.R. (2006). "Transboundary Water Cooperation as a Tool for Conflict Prevention and Broader Benefit Sharing". Stockholm: Swedish Ministry of Foreign Affairs. Accessible at: www.egdi.gov.se; Anders Jägerskog, "Benefit Sharing in International River Basins" in *Stockholm Water Front*, May 2006.

14 Adapted from Sadoff, Grey and Leb (2006), prepared for the Second Meeting of the Regional Working Group on the Joint Multipurpose Program of the Eastern Nile Subsidiary Action Program, May 29–June 01, 2006, Alexandria, Egypt.

15 From "Case Study – The Nile Basin" by Christina Leb online at http://www.iucn.org/themes/wani/

16 See the official website at http://www.nilebasindiscourse.org

17 From "Case Study – The North American Great Lakes" by Christina Leb online at http://www.iucn.org/themes/wani/

18 ODI/ARCADIS/EuroConsult. (2001). *Transboundary Water Management as an International Public Good*. Prepared for the Ministry of Foreign Affairs, Sweden. Stockholm: Norstedts tryckeri AB.

19 ODI/ARCADIS/EuroConsult, 2001, *op. cit.*

20 Technical Advisory Committee, 2000, *op. cit.*

21 From "Case Study – Indus Waters Treaty" by Saafconsult B.V. online at http://www.iucn.org/themes/wani/

22 From "Case Study – EU Water Framework Directive" by Christina Leb online at http://www.iucn.org/themes/wani/

23 Keohane, R.O. (1989). *International Institutions and State Power*. Boulder: Westview Press.

24 Adapted from Young, O.R. (1999). *Governance in World Affairs*. Ithaca and London: Cornell University Press.

25 See Mitchell, R. (2007). “Compliance Theory”. In Bodansky, D., Brunnée, J. and Hey, E. (Eds), *The Oxford Handbook of International Environmental Law*.

26 From “Case Study – Mekong River Basin” by Sokhem Pech online at http://www.iucn.org/themes/wani/

27 Smith, M., de Groot, D. and Bergkamp, G. *Pay – Establishing payments for watershed services*. IUCN, Gland, Switzerland. 109 pp.

28 Lusthau, C, Adrien, M.H. Anderson, G, Carden, F. and Montalván, G.P. (2002). *Organizational Assessment: A Framework for Improving Performance.* Canada: IDRC/IDB.

29 Chayes, A.H., Chayes, A. and Mitchell, R.B. (1995). “Active Compliance Management in Environmental Treaties”. In: Lang, W., *Sustainable Development and International Law*, London: Graham & Trottman Ltd; and Vinogradov, S., Wouters, P. and Jones, P. (2003). *Transforming Potential Conflict into Cooperation Potential: The Role of International Water Law*. PC -> CP Series No. 2, UNESCO/IHP/WWAP, SC-2003/WS/67.

30 United Nations Convention on the Law of the Non-Navigational Uses of International Watercourses, opened for signature 21 May 1997, 36 ILM 700 (1997).

31 Chayes *et al.*, 1995, *op. cit.*

32 Nilsson, M. and Segnestam, L. (2001). “Development and Natural Resources in the Mekong Region: The Institutional Challenge”. In: Badenoch, N. and Dupar, M. (Eds), *Mekong Regional Environmental Governance: Perspectives on Opportunities and Challenges*. Washington DC: World Resources Institute.

33 Julia Bucknall, 2007. *Making the most of scarcity: accountability for better water management results in the Middle East and North Africa*. The World Bank: Washington, DC.

34 Bucknall *et al.*, 2007, *op. cit.*

35 See Paisley R. (2002). “Adversaries into Partners: International Water Law and the Equitable Sharing of Downstream Benefits”. *Melbourne Journal of International Law* 3: 280–298.

36 Vinogradov *et al.*, 2003, *op. cit.*

37 Harald Irmer *et al.* (2001). *Rhine 2020 – Programme on the sustainable development of the Rhine, Conference of Ministers*. Koblenz, Germany: International Commission for the Protection of the Rhine.

38 Paisley, 2002*, op. cit*.

39 Sokhem Pech and Kengo, S. (2006). The Governance of the Tonle Sap Lake, Cambodia: Integration of Local, National and International Levels”. *Int’l Journal of Water Resources Development* 22(3): 299–416.

40 Gooch J., 2005. *The Mekong Agreement in light of International Principles Relating to Sustainable Use of Transboundary Watercourses,* Master Thesis, Faculty of Law, University of Lund,

41 MRC. (2006a). “Press Release: MRC countries agree on procedures for Mekong flows”. MRC Secretariat, No.07/06, Ho Chi Minh City, Viet Nam, 22 June 2006.

42 From “Case Study – Tigris-Euphrates” by Christina Leb online at http://www.iucn.org/themes/wani/

43 Kalpakian, J. (2004). *Identity, Conflict and Cooperation in International River Systems*. Burlington, VT: Ashgate Publishing Ltd.

44 For example see Sokhem Pech and Kengo, S. (2006). “*Key Fisheries Issues in the Mekong Region” Proc. Mekong Regional Waters Dialogues,* Vientiane, 6–7 July 2006.

45 United Nations Commission for Environment and Development (UNCED), 2002. *World Summit on Sustainable Development Plan of Implementation.*

46 Ward, H. (2006). “International Linkages and Environmental Sustainability: The Effectiveness of the Regime Network”. *Journal of Peace Research* 43(2): 149–166.

47 Sokhem P and Kengo S., 2006, *op. cit.*

48 IUCN, TEI, IWMI & M-power. (2006). Letter to World Bank and ADB – Feedback on WB/ADB Joint Working Paper on Future Directions for Water Resources Management in the Mekong River Basin, Mekong Water Resources Assistance Strategy (MWRAS), available at www.mpowernet.org accessed on 24 October 2006.

49 Mouratiadou, I. and Mora, D. (2007). “Mapping Public Participation in the Water Framework Directive: A case study of the Pinios River Basin, Greece”. *Ecological Economics* 62: 72.

50 See “Case Study – EU Water Framework Directive” by Christina Leb online at http://www.iucn.org/themes/wani/

51 Reichert, G. (2005). “The European Community’s Water Framework Directive: A Regional Approach to the Protection and Management of Transboundary Freshwater Resources”. In: Laurence Boisson de Chazournes and Salman Salman (Eds), *Les ressources en eau et le droit international – Water Resources and International Law*. Leiden/Boston: Martinus Nijhoff Publishers.

52 See Water Framework Directive Article 2 (28), and Annex V, table 2.1.2.

53 MRC. (2006b). Information and Knowledge Management Programme, Programme Document (December 2006), Mekong River Commission Secretariat, Vientiane, Laos.

54 Holling, C.S. (Ed.) (1978). *Adaptive environmental assessment and management*. Chichester, UK: John Wiley.

# ຜູ້ປະກອບຮູບພາບ

ຮູບທີ 1.1 © Hollandse Hoogte

ຮູບທີ 2.1 © Hollandse Hoogte

ຮູບທີ 3.1 © IUCN/Daniel Yawson

ຮູບທີ 4.1 © UN Photo by Sophia Paris